# ແຜນດຳເນີນງານໂລກ
# ເພື່ອການອະນຸລັກ ແລະ ການນຳໃຊ້ຊັບພະຍາກອນພັນທຸ
# ກຳພືດ ເພື່ອ ເປັນອາຫານ ແລະການກະສິກຳ ແບບຍືນຍົງ

## ອົງການອາຫານ ແລະ ການກະເສດ
## ຂອງ ສະຫະປະຊາຊາດ

# ແຜນດຳເນີນງານໂລກ
# ເພື່ອການອະນຸລັກ ແລະ ການນຳໃຊ້ຊັບພະຍາກອນພັນທຸກຳພືດ
# ເພື່ອເປັນອາຫານ ແລະການກະເສດ ແບບຍືນຍົງ
# ແລະ ຖະແຫຼງການລິບຊິກ.

ຊຶ່ງໄດ້ຮັບຮອງເອົາໂດຍກອງປະຊຸມວິຊາການສາກົນ
ກ່ຽວກັບຊັບພະຍາກອນພັນທຸກຳພືດທີ່ເມືອງ ລິບຊິກ, ປະເທດເຢລະມັນ,
17 - 23 ມີຖຸນາ 1996.

ອົງການ ອາຫານ ແລະການກະເສດ ສະຫະປະຊາຊາດ, 1996.

ຈັດພິມຄືນໃໝ່ ປີ 1997.
ຄວາມຄິດເຫັນ ແລະການສະເໜີໃນເອກະສານທີ່ໄດ້ຈັດພິມນີ້
ບໍ່ໃຫ້ຖືວ່າເປັນຄວາມເຫັນໃດໆເລີຍ ຂອງອົງການອາຫານ ແລະການກະເສດຂອງ
ສະຫະປະຊາຊາດ.

M - 10
ISBN 92 - 5 -104027 - 3

ສະຫງວນລິກຂະສິດ. ເວັ້ນເສຍວ່າຈະໄດ້ຮັບອະນຸຍາດຈາກຜູ້ຖືລິກຂະສິດເສຍກ່ອນ ຫ້າມພິມເຜີຍແຜ່ເນື້ອໃນຂອງເອກະສານນີ້ອີກໃໝ່ ຫຼືເກັບຮັກສາໃນລະບົບທີ່ສາມາດຖອດອອກໃຊ້ ຫຼືສົ່ງຖ່າຍທອດບໍ່ວ່າດ້ວຍວິທີການເອເລັກໂຕຣນິກ, ເມການິກ, ຖ່າຍພາບ ຫຼືດ້ວຍວິທີຫຍັງກໍຕາມ ຄຳຮ້ອງຂໍອະນຸຍາດຈະຕ້ອງເວົ້າແຈ້ງກ່ຽວກັບ ຈຸປະສົງ ແລະຂອບເຂດຂອງການຈັດພິມທີ່ຈະຕ້ອງຍື່ນໄປຫາຜູ້ອຳນວຍການ, ພະແນກຖະແຫຼງຂ່າວ, ອົງການອາຫານ ແລະການກະເສດຂອງ ສປຊ, Viale delie, Tome di Caracalia, 00100 Rome, Italy.

FAO 1996.

## <u>ລາຍຊື່ ສັບຫຍໍ້</u>

| | |
|---|---|
| CGIAR | ຄະນະທີ່ ປຶກສາ ດ້ານ ການຄົ້ນຄວ້າ ກະສິກໍາ |
| CSD – UN | ຄະນະກໍາມາທິການ ເພື່ອການພັດທະນາແບບຍືນນານ |
| FAO | ອົງການອາຫານ ແລະການກະເສດ |
| IFAD | ກອງທຶນ ກະສິກໍາ ເພື່ອການພັດທະນາ ສາກົນ |
| IPGRI | ສະຖາບັນ ແຫລ່ງຊັບພະຍາກອນ ພັນທຸກໍາພືດ ສາກົນ |
| IUCN | ອົງການ ອະນຸລັກໂລກ |
| NARS | ຂະແໜງການ ບໍລິການ ຄົ້ນຄວ້າ ກະສິກໍາ ແຫ່ງຊາດ |
| NGO | ອົງການ ບໍ່ຂື້ນກັບລັດຖະບານ |
| PGRFA | ແຫລ່ງຊັບພະຍາກອນ ພັນທຸກໍາພືດ ເພື່ອອາຫານແລະການກະສິກໍາ |
| SINGER | ລະບົບເຄື່ອຄາຍຂໍ້ມູນຂ່າວສານດ້ານແຫລ່ງພັນທຸກໍາ ຂອງ ຄະນະທີ່ ປຶກສາ ດ້ານ ຄົ້ນຄວ້າ ກະສິກໍາ |
| UNDP | ແຜນງານ ການ ພັດທະນາ ຂອງ ອົງການ ສະຫະປະຊາຊາດ |
| UNDRO | ຫ້ອງການປະສານງານຂອງອົງການສະຫະປະຊາຊາດດ້ານໄພພິບັດ |
| UNEP | ແຜນງານ ດ້ານ ສິ່ງແວບລ້ອມ ຂອງອົງການ ສະຫະປະຊາຊາດ |
| UNESCO | ອົງການ ດ້ານ ສືກສາ,ວິທະຍາສາດ ສັງຄົມ ຂອງ ສະຫະປະຊາຊາດ |
| UNHCR | ຫ້ອງການ ຄະນະກໍາມາທິການ ຂັ້ນສູງ ຂອງຜູ້ ຫລົ້ໄພ |
| WFP | ແຜນງານ ສະບຽງອາຫານໂລກ |
| WIEWS | ຂໍ້ມູນຂ່າວສານໂລກ ແລະ ລະບົບ ເຕື່ອນໄພ ຕໍ່ ບັນດາ ແຫລ່ງຊັບພະຍາກອນ ພັນທຸກໍາພືດ |

<u>ສາລະບານ</u>

**ຖະແຫຼງການ ລິບຊິກ ກ່ຽວກັບການອະນຸລັກ ແລະການນຳໃຊ້ຊັບພະຍາກອນ** ໜ້າທີ່
**ພັນທຸກຳພືດແບບຍືນຍົງ ເພື່ອເປັນອາຫານ ແລະການກະສິກຳ** 10

**ແຜນດຳເນີນງານໂລກ ເພື່ອ ການອະນຸລັກ ແລະ ການນຳໃຊ້ຊັບພະຍາກອນ**
**ພັນທຸກຳພືດ ເພື່ອເປັນອາຫານ ແລະການກະສິກຳ ແບບຍືນຍົງ** 14
ແນວຄວາມຄິດ ພາຍໃຕ້ແຜນດຳເນີນງານໂລກ ສຳລັບອາຫານ
ແລະກະສິກຳ ສະເພາະດ້ານ 16
ບັນດາເປົ້າໝາຍ ແລະຍຸດທະສາດຂອງແຜນດຳເນີນງານໂລກ 17
ໂຄງຮ່າງ ແລະການຈັດຕັ້ງຂອງແຜນດຳເນີນງານໂລກ 20

**ບັນດາໜ້າວຽກ ບຸລິມະສິດ** 21
**ການອະນຸລັກ ແລະ ພັດທະນາແນວພັນ ໃນຖິ່ນກຳເນີດໃນເຂດທຳມະຊາດຂອງມັນ** 21
1. ການສຳຫລວດແລະການຂຶ້ນບັນຊີຊັບພະຍາກອນພັນທຸກຳພືດ
   ເພື່ອອາຫານແລະການກະສິກຳ. 22
2. ການສະໜັບສະໜູນ ວຽກຄຸ້ມຄອງ ແລະປັບປຸງ ຊັບພະຍາກອນພັນທຸກຳພືດເພື່ອ
   ອາຫານແລະການກະສິກຳ ຢູ່ ພື້ນຂອງຊາວ ກະສິກອນ. 24
3. .ການຊ່ວຍເຫຼືອຊາວກະສິກອນໃນສະພາບ ເກີດໄພພິບັດ ເພື່ອກອບກູ້ ຄືນລະບົບ
   ການກະສິກຳ. 30
4. ສົ່ງເສີມໃຫ້ມີການອະນຸລັກໃນຖິ່ນກຳເນີດແນວພັນພືດປ່າດັ້ງເດີມ
   ໃນຕະກູນພືດທີ່ປູກຝັງແລ້ວ ແລະພືດປ່າເພື່ອນຳໄປຜະລິດເປັນອາຫານ . 33

**ການອະນຸລັກແນວພັນພືດ ນອກຖິ່ນກຳເນີດຈາກເຂດທຳມະຊາດຂອງມັນ** 38
5. ສືບຕໍ່ການອະນຸລັກ ແນວພັນນອກຖິ່ນກຳເນີດໃຫ້ຍືນຍົງ 38
6. ການປູກຟື້ນຊີບບັນດາແນວພັນທີ່ອະນຸລັກ ນອກຖິ່ນກຳເນີດຈາກເຂດ
   ທຳມະຊາດ ທີ່ຕົກໃນຄວາມສ່ຽງ 42
7. ສະໜັບສະໜູນແຜນການແລະເປົ້າໝາຍຂອງການເກັບຕົວຢ່າງຊັບພະຍາ
   ກອນພັນທຸກຳພືດ ເພື່ອອາຫານ ແລະການກະສິກຳ 47
8. ຂະຫຍາຍກິດຈະກຳ ດ້ານການອະນຸລັກ ແນວພັນນອກຖິ່ນກຳເນີດ . 49

**ການນຳໃຊ້ຊັບພະຍາກອນພັນທຸກຳພືດ** 52

9. ຂະຫຍາຍວຽກ ການຈຳແນກຄູນລັກສະນະພິເສດ ຂອງແນວພັນ, ການປະເມີນຕີລາຄາ ແລະ ການ ໝາຍເລກ ຕົວຢ່າງແນວພັນ ຕົ້ນຕໍ ເພື່ອສະດວກໃນການໃຊ້. 52

10. ເພີ່ມທະວີການ ສົ່ງເສີມ ແລະການເຜີຍແຜ ດ້ານພັນທຸກຳ ຢ່າງກ້ວາງຂວາງ 57

11. ສົ່ງເສີມການກະສິກຳ ແບບຍືນຍົງ ຜ່ານການຜະລິດພືດຫລາກຫຼາຍເພື່ອ ການກະຈາຍ ອອກສູ່ທາງ ກວ້າງ. 59

12. ສົ່ງເສີມໃຫ້ມີການພັດທະນາ ແລະການຄ້າຂາຍ ບັນດາຊະນິດພັນພືດ ທີ່ມີການນຳໃຊ້ແບບບໍ່ເຕັມສ່ວນ. 63

13. ການສະໜັບສະໜູນຕໍ່ການຜະລິດ ແລະ ແຈກຢາຍ ເມັດພັນພືດ. 65

14. ພັດທະນາ ການຕະຫຼາດໃໝ່ສຳລັບແນວພັນທ້ອງຖິ່ນ ແລະ ຜະລິດຕະພັນທີ່ "ຮັ່ງມີດ້ານຄວາມຫຼາກຫຼາຍ 68

**ບັນດາສະຖາບັນ ແລະການສ້າງຄວາມເຂັ້ມແຂງ** 70

15. ກໍ່ສ້າງແຜນງານ ແຫ່ງຊາດທີ່ເຂັ້ມແຂງ; 70

16. ສົ່ງເສີມຕາໜ່າງ ສຳລັບຊັບພະຍາກອນ ພັນທຸກຳພືດ ສຳລັບ ອາຫານ ແລະກະສິກຳ 75

17. ກໍ່ສ້າງລະບົບຂ່າວສານ ຄົບຊຸດສຳລັບ ຊັບພະຍາກອນ ພັນທຸກຳພືດ ເພື່ອ ອາຫານ ແລະ ການ ກະສິກຳ 79

18. ພັດທະນາລະບົບການ ຕິດຕາມ ແລະການເຕືອນໄພ ແຕ່ຫົວທີ່ ກ່ຽວກັບການສູນເສຍຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ. 83

19. ການຂະຫຍາຍ ແລະ ປັບປຸງວຽກ ການສຶກສາ ແລະການຝຶກອົບຮົມ 85

20. ສົ່ງເສີມສ້າງຈິດສຳນຶກ ໃຫ້ມວນຊົນ ກ່ຽວກັບ ການອະນຸລັກ ແລະ ການນຳໃຊ້ ຊັບພະຍາກອນ ພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ 88

**ການຈັດຕັ້ງປະຕິບັດ ແລະການເງິນ ຂອງແຜນດຳເນີນງານໂລກ** 92

## ຄຳນຳ

ແຜນດຳເນີນງານໂລກສະບັບທຳອິດ ເພື່ອການອະນຸລັກ ແລະນຳໃຊ້ຊັບພະຍາກອນພັນທຸກຳພືດ ເພື່ອເປັນອາຫານ ແລະການກະເສດແບບຍືນຍົງ ໄດ້ຖືກຮັບຮອງເອົາຢ່າງເປັນທາງການໂດຍຕາງໜ້າ 150 ປະເທດຢູ່ທີ່ກອງປະຊຸມວິຊາການສາກົນຄັ້ງທີສີ່ດ້ານຊັບພະຍາກອນພັນທຸກຳພືດ ຊຶ່ງໄດ້ຈັດຂຶ້ນທີ່ເມືອງ ລິບຊິກ, ປະເທດ ເຢຍລະມັນ ໃນວັນທີ 17 - 23 ມິຖຸນາ 1996. ໃນກອງປະຊຸມດຽວກັນນີ້ຍັງໄດ້ຮັບຮອງເອົາຖະແຫຼງການ ລິບຊິກ ຊຶ່ງມີຈຸດສຸມກ່ຽວກັບຄວາມໝາຍສຳຄັນຂອງຊັບພະຍາກອນພັນທຸກຳພືດ ເພື່ອຮັບປະກັນໃຫ້ມີສະເຖຍລະພາບກ່ຽວກັບສະບຽງອາຫານ ພ້ອມທັງຮຽກຮ້ອງໃຫ້ບັນດາປະເທດຜັນຂະຫຍາຍແຜນດຳເນີນງານ.

ແຜນດຳເນີນງານໂລກນີ້ ເປັນຜົນງານຂອງ 155 ປະເທດທັງພາກລັດ ແລະເອກະຊົນທີ່ໄດ້ຮ່ວມກັນກະກຽມຢ່າງຕັ້ງໜ້າ. ແຜນດຳເນີນປະກອບດ້ວຍກິດຈະກຳບູລິມະສິດທີ່ໄດ້ຖືກກຳນົດໃນລະດັບທ້ອງຖິ່ນ, ລະດັບຊາດ, ຂົງເຂດ ແລະສາກົນ. ມັນກາຍເປັນການປະຕິບັດງານແບບປະສົມປະສານ ເພື່ອໃຫ້ເກີດການຮ່ວມມືແບບເປັນລະບົບ, ສົມເຫດສົມຜົນ, ມີຄວາມດຸ່ນດ່ຽງ ແລະສະເໝີພາບ ຊຶ່ງມາເຖິງຕອນນີ້ບັນດາປະເທດຈະຕ້ອງຜັນຂະຫຍາຍດ້ວຍຊັບພະຍາກອນແຫ່ງຊາດຂອງຕົນເອງໂດຍລວມ, ແຕ່ມີບາງປະເທດຈະຕ້ອງການການສະໜັບສະໜູນເພີ່ມເຕີມກອງປະຊຸມໄດ້ເນັ້ນວ່າຄວນມີ ງົບປະມານທຶນ ເພື່ອຊ່ວຍບັນດາປະເທດກຳລັງພັດທະນາ ແລະປະເທດທີ່ມີເສດຖະກິດໄລຍະຂ້າມຜ່ານ ໄປສູ່ເສດຖະກິດການຕະຫຼາດ ໃນການຜັນຂະຫຍາຍແຜນນັ້ນ. ແຜນດຳເນີນງານຍັງຮັບຮູ້ຄວາມຈຳເປັນທີ່ຕ້ອງເຮັດຂີດເສັ້ນໃຫ້ ສິດທິຊາວໄຮ່ນາຜູ້ປູກຝັງ ກາຍເປັນຄວາມຈິງ.

ຊັບພະຍາກອນພັນທຸກຳພືດ ແມ່ນ ໜຶ່ງໃນຈຳນວນຊັບພະຍາກອນຂອງໜ່ວຍໂລກທີ່ເປັນພື້ນຖານ ແລະສຳຄັນທີ່ສຸດ ທີ່ ກຳລັງ ມີ ຄວາມສ່ຽງຢ່າງຮ້າຍແຮງ, ການສູນເສຍ ຊັພະຍາກອນນີ້ຈະກະທົບຕໍ່ຄົນເຮົາ ແລະເປັນໄພອັນຕະລາຍໃຫ້ແກ່ຄົນໃນລຸ້ນຫລັງ. ການຂາດຄວາມສາມາດທີ່ຈະອະນຸລັກ ແລະນຳໃຊ້ຊັບພະຍາກອນເລົ່ານີ້ໃຫ້ໄດ້ຜົນສູງສຸດ ຈະສ້າງຜົນສະທ້ອນໃນທາງລົບຕໍ່ຄວາມພະຍາຍາມ ເພື່ອໃຫ້ມີຄວາມພຽງພໍດ້ານອາຫານ ແລະການພັດທະນາແບບຍືນຍົງ: ນັບວ່າເປັນຄັ້ງທຳອິດທີ່ແຜນດຳເນີນງານໂລກນີ້ ຈະສ້າງ ແຮງກະຕຸ້ນ, ແລະກອບເຮັດວຽກເພື່ອເອື້ອອຳນວຍໃຫ້ກິດຈະກຳຕ່າງໆ ດ້ານການອະນຸລັກ ແລະການນຳໃຊ້ຊັບພະຍາກອນມີພື້ນຖານອັນໜັກແໜ້ນ. ສິ່ງດັ່ງກ່າວ ມັນຈະເປັນອັນປະກອບສ່ວນຢ່າງສຳຄັນໃຫ້ແກ່ການຜັນຂະຫຍາຍສົນທິສັນຍາດ້ານຊີວະນາໆພັນ ໃນຂົງເຂດອາຫານ ແລະການກະເສດ. ນີ້ແມ່ນໂອກາດອັນໜຶ່ງທີ່ພວກເຮົາບໍ່ສາມາດ ໄຊ້ໄປໃດ້ຢ່າງຟູມເຟືອຍ.

ອົງການອາຫານແລະການກະເສດ ແມ່ນມີຄວາມຕັດສິນໃຈຜັນຂະຫຍາຍແຜນດຳເນີນງານໂລກ ພາຍໃຕ້ການຊີ້ນຳຂອງ ຄະນະກຳມາທິການລະຫວ່າງລັດຖະບານດ້ານຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະການກະເສດ ຊຶ່ງເປັນ ພາກສ່ວນໜຶ່ງຂອງລະບົບພິພົບ

ຂອງອົງການອາຫານແລະການກະເສດ ເພື່ອການອະນຸລັກ ແລະ ການນຳໃຊ້ຊັບພະຍາກອນ ພັນທຸກຳພືດແບບຍືນຍົງ.

ກອງປະຊຸມ ລິບຊິກ ໄດ້ເໜັ້ນເຖິງຄວາມໝາຍສຳຄັນໃຫ້ມີການເຂົ້າຮ່ວມຢ່າງກ້ວາງຂວາງ ໃນການພັນຂະຫຍາຍແຜນດຳເນີນງານນີ້. ດັ່ງນັ້ນ ຂ້າພະເຈົ້າໄດ້ລາຍງານຜົນກອງປະຊຸມນັ້ນໃຫ້ແກ່ການພົບປະສຳຄັນໆ ລະດັບສາກົນ, ພາກພື້ນ ແລະລະດັບຊາດ ທີ່ເວົ້າເຖິງບັນຫາອາຫານ, ການກະເສດ, ແລະຊີວະນາໆພັນ ທີ່ກຳໄດ້ຮຽກຮ້ອງໃຫ້ບັນດາສະມາຊິກຈົ່ງໄດ້ພະຍາຍາມສຸດຂີດໃນການປະກອບສ່ວນຂອງຕົນ.

ຂ້າພະເຈົ້າ ຂໍຮຽກຮ້ອງມາຍັງທຸກຖ້ວນໜ້າ - ລັດຖະບານ ແລະສະຖາບັນແຫ່ງຊາດ, ການຈັດຕັ້ງສາກົນດ້ານວິຊາການແລະການເງິນ,ອົງການບໍ່ສັງກັດລັດ,ພາກສ່ວນລັດແລະເອກະຊົນແລະສຳຄັນທີ່ສຸດແມ່ນຊາວໄຮ່ນາແລະກູ່ມຜູ້ຜະລິດໃຫ້ເຂົ້າມາມີສ່ວນຮ່ວມຢ່າງແຂງແຮງ.

ທ່ານ ຊັກ ດີອຸຟ (Jacques Diouf)
ອຳນວຍການໃຫຍ່.

## ຖະແຫຼງການ ລິບຊິກ ກ່ຽວກັບການອະນຸລັກ ແລະການນໍາໃຊ້ຊັບພະຍາກອນພັນທຸກໍາພືດແບບຍືນຍົງ ເພື່ອເປັນອາຫານ ແລະການກະສິກໍາ

1. ໂດຍຮັບຮູ້ແຈ້ງເຖິງຄວາມສໍາຄັນພິເສດຂອງຊັບພະຍາກອນພັນທຸກໍາພືດ ເພື່ອເປັນອາຫານ ແລະການກະສິກໍາ, ໂດຍສະເພາະຄວາມສໍາຄັນ ເພື່ອໃຫ້ມີສະບຽງອາຫານຢ່າງພຽງພໍສໍາລັບຄົນໃນລຸ້ນປັດຈຸບັນ ແລະອານາຄົດ, ຕາງໜ້າ 150 ລັດ, ແລະ 54 ອົງການຈັດຕັ້ງໂດຍຕອບຄໍາເຊີນຂອງອົງການ ອົງການອາຫານແລະການກະເສດ ຈຶ່ງພ້ອມກັນພົບປະທີ່ເມືອງ ລິບຊິກ (Leipzig) ນະກອງປະຊຸມວິຊາການສາກົນ ຄັ້ງທີIV ກ່ຽວກັບຊັບພະຍາກອນພັນທຸກໍາພືດ. ພວກເຮົາໄດ້ພ້ອມກັນສະແດງຄວາມຕັດສິນໃນອີກຄັ້ງໃໝ່ທີ່ຢາກອະນຸລັກ ແລະນໍາໃຊ້ແບບຍືນຍົງບັນດາຊັບພະຍາກອນເລົ່ານັ້ນ ແລະຮັບປະກັນໃຫ້ມີການຮ່ວມກັນໄດ້ຮັບຜົນປະໂຫຍດແບບຍຸດຕິທໍາ ແລະສະເໝີພາບໃນການນໍາໃຊ້ຊັບພະຍາກອນພັນທຸກໍາ ເພື່ອເປັນອາຫານ ແລະການກະສິກໍາ, ພ້ອມດຽວກັນກໍຮັບຮູ້ຄວາມປາດຖະໜາຢາກມີສ່ວນຮ່ວມໄດ້ຮັບຜົນປະໂຫຍດແບບສະເໝີພາບຊຶ່ງໄດ້ມາຈາກການໝູນໃຊ້ຄວາມຮູ້ ການປະດິດຄິດສ້າງ ແລະການປະຕິບັດທີ່ເປັນປະເພນີ ຊຶ່ງຖືໄດ້ວ່າມີຄວາມສໍາຄັນ ເພື່ອອະນຸລັກຊັບພະຍາກອນພັນທຸກໍາພືດ ເພື່ອເປັນອາຫານກະສິກໍາ ກໍຄືການນໍາໃຊ້ມັນແບບຍືນຍົງ. ພວກເຮົາລ້ວນແຕ່ໄດ້ຕັດສິນໃຈວ່າຄວາມພະຍາຍາມທັງຫຼາຍນີ້ ສາມາດເປັນການປະກອບສ່ວນທີ່ສໍາຄັນ ເພື່ອບັນລຸບັນດາຈຸດປະສົງ ແລະເອື້ອອໍານວຍແກ່ການ ປະຕິບັດ ສົນທິສັນຍາ ວ່າດ້ວຍຊີວະນາໆພັນ ແລະ ວາລະ ທີ່ 21 (Convention on Biodiversity ແລະ Agenda 21).

2. ພ້ອມໆກັບ ການຮັບຮູ້ວ່າບັນດາລັດມີສິດອະທິປະໄຕ ຕໍ່ບັນດາ ຊັບພະຍາກອນພັນທຸກໍາພືດ ເພື່ອເປັນອາຫານ ແລະການກະເສດ, ພວກເຮົາກໍຍັງໄດ້ເນັ້ນເຖິງ ຄວາມຮັບຜິດຊອບລວມ ແລະສະເພາະໃນດ້ານຊັບພະຍາກອນດັ່ງກ່າວ.

3. ບັນດາຊັບພະຍາກອນເລົ່ານີ້ເປັນພື້ນຖານໃຫ້ແກ່ວິວັດທະນາການ ທາງດ້ານທໍາມະຊາດ ແລະໂດຍສະເພາະ ບັນດາແນວພັນພືດ ທີ່ມີຄວາມສໍາຄັນສໍາລັບ ການຢູ່ລອດ ແລະຄວາມຢູ່ດີກິນດີຂອງມວນມະນຸດ.ທຸກປະເທດ ຕ້ອງການຊັບພະຍາກອນ ພັນທຸກໍາພືດ ເພື່ອຮັບປະກັນດ້ານສະບຽງອາຫານ ແລະການຜະລິດກະສິກໍາແບບຍືນຍົງ ແລະແທດເໝາະກັບການປ່ຽນແປງທາງສິ່ງແວດລ້ອມ, ໃນນັ້ນກໍມີບັນຫາການປ່ຽນແປງ ທາງດ້ານພູມອາກາດ. ພວກເຮົາລ້ວນແຕ່ຮັບຮູ້ຄຸນຄ່າ ອັນແທ້ຈິງຄວາມຫລາກຫລາຍ ຊີວະນາໆພັນ ແລະຄວາມສໍາຄັນດ້ານນິເວດ, ສັງຄົມ, ເສດຖະກິດ, ວິທະຍາສາດ, ການສຶກສາ , ວັດທະນາທໍາ ແລະຄວາມສວຍງາມ.

4. ຊັບພະຍາກອນພັນທຸກຳພືດ ເພື່ອເປັນອາຫານ ແລະການກະສິກຳ ແມ່ນຜະລິດຕະພັນທີ່ໄດ້ມາຈາກ ການວິວັດທະນາການທຳມະຊາດ ແລະການ ເຂົ້າແຊກແຊງຂອງມະນຸດ. ພວກເຮົາຮັບຮູ້ເຖິງບົດບາດຂອງຫຼາຍໆລຸ້ນຄົນກະສິກອນທັງຊາຍ ແລະຍິງ ກໍຄືຜູ້ແຜ່ພັນພືດພ້ອມທັງບົດບາດຂອງຊຸມຊົນພື້ນເມືອງ ແລະທ້ອງຖິ່ນທີ່ຕ່າງກໍໄດ້ມີສ່ວນເກັບຮັກສາ ແລະປັບປຸງຊັບພະຍາກອນພັນທຸກຳພືດ. ຍ້ອນຄວາມພະຍາຍາມເລົ່ານັ້ນ, ສ່ວນໃຫຍ່ເຮົາຈຶ່ງຍັງສາມາດເກັບກູ້, ຮັກສາມ້ຽນປັບປຸງ ແລະນຳໃຊ້ແບບຍືນຍົງບັນດາຊັບພະຍາກອນພັນທຸກຳພືດຮອດທຸກວັນນີ້ ເພື່ອຜົນປະໂຫຍດທາງດ້ານອາຫານ ແລະການກະເສດ.

5. ເຖິງຢ່າງໃດກໍຕາມ, ພວກເຮົາຮັບຮູ້ເຖິງໄພແຫ່ງຄວາມສ່ຽງທີ່ມີຕໍ່ຄວາມໝັ້ນຄົງຂອງຊັບພະຍາກອນພັນທຸກຳພືດ ພ້ອມທັງເຫັນນຳກັນວ່າຕ້ອງມີ ການ ພັດທະນາ ວິທີການຮັກສາ ແລະນຳໃຊ້ຄວາມຫຼາກຫຼາຍດ້ານພັນທຸກຳໃຫ້ຍືນຍົງ. ຄວາມຫຼາກຫຼາຍເລົ່ານີ້ພວມຖືກສູນເສຍໄປຢູ່ພາກສະໜາມກໍຄືລະບົບນິເວດອື່ນໆ ເກືອບວ່າໃນທຸກໆປະເທດແມ່ນແຕ່ຢູ່ທີ່ທະນາຄານເຊື້ອພັນ ກໍມີການສູນເສຍ. ເຖິງແມ່ນວ່າຈຳນວນທະນາຄານເຊື້ອພັນ ໄດ້ເພີ່ມຂຶ້ນຢ່າງໄວວາໃນໄລຍະບໍ່ເທົ່າໃດທົດສະວັດມານີ້, ແຕ່ ຫຼາຍໆແຫ່ງແມ່ນບໍ່ໄດ້ມາດຕະຖານ ຫລື ມາ ຖານມີຕ່ຳສຸດຂອງສາກົນ ຕົວຢ່າງແນວພັນ ທີ່ເກັບໄວ້ໃນສາງ ຈຳນວນຫຼວງຫຼາຍຕົກຢູ່ໃນສະພາບທີ່ໜ້າເປັນຫ່ວງທີ່ໄດ້ຖືກ ເກັບຮັກສາໄວ້ນັ້ນຈຳເປັນ ຕ້ອງໄດ້ນຳເອົາໄປປູກ ຟື້ນຊົບ ມັນຊີ້ໃຫ້ເຫັນວ່າພືດພັນທີ່ໄດ້ເກັບມ້ຽນ ແລະຮັກສາໃນອະດີດນັ້ນ ປັດຈຸບັນແມ່ນຕົກໃນໄພອັນຕະລາຍ.

6. ຍັງມີສະພາບແຕກໂຕນ ແລະຈຸດອ່ອນຫຼາຍປະການລະຫວ່າງ ລະດັບ ຄວາມສາມາດຂອງສະຖາບັນລະດັບຊາດ ແລະສາກົນກ່ຽວກັບການເກັບຮັກສາ, ການກຳນົດລັກສະນະ, ປະເມີນ ແລະ ການນຳໃຊ້ບັນດາຊັບພະຍາກອນພັນທຸກຳພືດແບບຍືນຍົງ ເພື່ອແນໃສ່ເພີ່ມທະວີສະພາບຄວາມຄ້ຳປະກັນອາຫານ ແລະປະກອບໃຫ້ແກ່ການພັດທະນາແບບຍືນຍົງໃນໂລກ. ຄວນປັບປຸງສາຍພົວພັນທີ່ເປັນສຳຄັນລະຫວ່າງການຮັກສາ ແລະການນຳໃຊ້. ຄວາມຫຼາກຫຼາຍດ້ານພັນທຸກຳພືດທີ່ມີຢູ່ປັດຈະບັນຍັງບໍ່ທັນຖືກໝູນໃຊ້ເທົ່າທີ່ຄວນ ເພື່ອໃຫ້ມີການຜະລິດອາຫານທີ່ເພີ່ມຂຶ້ນ ຫຼືເພື່ອເຮັດໃຫ້ສະພາບຍືນຍົງຂອງລະບົບການຜະລິດມີອັນປັບປຸງແຕ່ຢ່າງໃດ. ດັ່ງນັ້ນຈຶ່ງເຫັນຄວນໃຫ້ມີການສຳຫຼວດຄືນຄວາມສາມາດ, ໂຄງປະກອບຂອງສະຖາບັນກໍຄືບັນດາແຜນງານ ເພື່ອທັງໝົດນັ້ນຈະໄດ້ແກ້ໄຂຂໍ້ບົກຜ່ອງຕ່າງໆນັ້ນ. ມັນມີຄວາມຈຳເປັນທີ່ຈະຕ້ອງເພີ່ມທະວີຄວາມສາມາດລະດັບຊາດ, ໂດຍສະເພາະໃນໝູ່ປະເທດກຳລັງພັດທະນາ.

7. ພວກເຮົາຮັບຮູ້ເຖິງການທີ່ປະເທດຕ່າງໆ ແລະປະຊາຊົນເຮົາຕ້ອງອາໃສຊື່ງກັນແລະກັນມີການພົວພັນກັນກ່ຽວກັບຊັບພະຍາກອນພັນທຸກຳພືດເພື່ອເປັນອາຫານ ແລະການກະສິກຳ. ການເຂົ້າເຖິງ ແລະການແບ່ງປັນຊັບພະຍາກອນພັນທຸກຳ ແລະເຕັກໂນໂລຊີແມ່ນເລື່ອງຈຳເປັນເພື່ອໃຫມີສະພາບຄວາມໝັ້ນຄົງທາງສະບຽງອາຫານໂລກ ແລະເພື່ອຕອບສະໜອງຄວາມຕ້ອງການຂອງປະຊາກອນໂລກ ນັບມື້ນັບເພີ່ມທະວີ .ຄວນເອື້ອອຳນວຍ ການເຂົ້າເຖິງ ແລະແບ່ງປັນ

ເຕັກໂນໂລຊີກັບບັນດາປະເທດກຳລັງພັດທະນາ,ຄວນປະຕິບັດ ແລະ/ຫຼືອຳນວຍຄວາມສະດວກດ້ວຍຮູບແບບທີ່ເປັນທຳ ແລະໃຕ້ເງື່ອນໄຂທີ່ເອື້ອອຳນວຍທີ່ສຸດ. ລວມທັງເງື່ອນໄຂຜ່ອນຜັນໃຫ້ປະເທດກຳລັງພັດທະນາຕາມການຕົກລົງຂອງທຸກຝ່າຍ ກ່ຽວຂ້ອງກັບການແລກປ່ຽນທີ່ເຫັນພ້ອມກັນ. ໃນກໍລະນີທີ່ກ່ຽວຂ້ອງກັບໃບສິດທິບັດ ແລະສິດທິດ້ານຊັບສິນທາງປັນຍາອື່ນໆ ນັ້ນ ເວລາມີການເຂົ້າເຖິງ ແລະຖ່າຍທອດເຕັກໂນໂລຊີ ນັ້ນກໍຄວນມີເງື່ອນໄຂທີ່ຮັບຮູ້ແລະສອດຄ່ອງກັບການປ້ອງກັນຢ່າງພຽງພໍ ແລະມີປະສິດຕິຜົນຕໍ່ສິດທິດ້ານຊັບສິນທາງປັນຍາ. ພວກເຮົາຕ່າງກໍເໜັ້ນຄວາມຈຳເປັນທີ່ຕ້ອງສົ່ງເສີມໃຫ້ມີການຮ່ວມມືສາກົນ ແລະໃນພາກພື້ນລະຫວ່າງປະເທດ ກໍຄືລະຫວ່າງອົງການລະຫ່ວາງລັດຖະບານ, ອົງການບໍ່ສັງກັດລັດ ແລະພາກສ່ວນເອກະຊົນ.

8. ສະເພາະຢ່າງຍິ່ງພວກເຮົາຮັບຮູ້ ເຖິງຄວາມຈຳເປັນອັນຮີບດ່ວນ ເພື່ອສືບຕໍ່ໃຫ້ມີການອະນຸລັກນອກຖິ່ນກຳເນີດ ຊັບພະຍາກອນພັນທຸກຳພືດ. ສິ່ງສຳຄັນນັ້ນຄວາມຫຼາກຫຼາຍຂອງຊັພະຍາກອນເຊື້ອພັນພືດ ທີ່ ເປັນປະໂຫຍດ ແລະມີຄຸນຄ່າຫຼາຍສຳລັບນັກປັບປຸງພັນ, ຊາວກະສິກອນ, ແລະຊຸມຊົນພື້ນບ້ານ ແລະ ທ້ອງຖິ່ນ ທີ່ຕ້ອງການ ການສະໜອງຂໍ້ມູນທີ່ດີ. ພວກເຮົາຮັບຮູ້ເຖິງ ຄວາມຈຳເປັນ ຄວາມຕ້ອງການ ການ ສະໜັບສະໜູນ ແລະສິ່ງລະດົມຈູງໃຈທີ່ຫຼາຍສົມຄວນໃນໄລຍະຍາວແກ່ບັນດາແຜນງານລະດັບຊາດ ແລະສາກົນ ເພື່ອ ປັບປຸງພັນພືດລວມທັງສະໜັບສະໜູນບັນດາຂໍ້ລິເລີ່ມ ເພື່ອໝູນໃຊ້ ແລະເສີມຂະຫຍາຍພັນທຸກຳ ຮັບໃຊ້ການພັດທະນາ ໂດຍ ນັກປັບປຸງພັນພືດ. ພວກເຮົາຮຽກຮ້ອງໃຫ້ມີສາຍພົວພັນ ຂອງຄູ່ຮ່ວມງານແບບໃໝ່ ແລະມີໄດ ປະສິດທິຜົນກວ່າເກົ່າລະຫວ່າງນັກວິທະຍາສາດ ແລະຊາວນາ ເພື່ອຈະໄດ້ສືບຕໍ່ເສີມຂະຫຍາຍຜົນງານ ທີ່ໄດ້ຈາກຄວາມພະຍາຍາມ ຂອງຊາວ ກະສິກອນໃນການຄຸ້ມຄອງ ແລະ ປັບປຸງຊັບພະຍາກອນພັນທຸກຳພືດ ຂອງເຂົາເຈົ້າ, ສະເພາະຢ່າງຍິ່ງ ຢູ່ທີ່ເຂດຫ່າງໄກ.

9. ຈຸດປະສົງຕົ້ນຕໍຂອງພວກເຮົາແມ່ນເສີມຂະຫຍາຍຄວາມໝັ້ນຄົງດ້ານອາຫານໂລກ ໂດຍໃຫ້ມີການຮັກສາ ແລະ ການນຳໃຊ້ຊັບພະຍາກອນພັນທຸກຳພືດແບບຍືນຍົງ ເພື່ອເຮັດໄດ້ແນວນັ້ນຈະຕ້ອງມີການປະສົມປະສານໃຊ້ຫຼາຍໆວິທີ ໂດຍການອີງໃສ່ຄວາມຮູ້ດັ້ງເດີມທີ່ເປັນປະເພນີ ແລະເຕັກໂນໂລຊີໃໝ່ຄວບຄູ່ກັນ. ໝາຍເຖິງຄວາມຈຳເປັນຕ້ອງກຳນົດໃຫ້ໄດ້ວິທີການເພື່ອຈະໄດ້ແບ່ງປັນຜົນປະໂຫຍດແບບທ່ຽງທຳ ແລະສະເໝີພາບຈາກການຮັກສາ ແລະນຳໃຊ້ຊັບພະຍາກອນພັນທຸກຳພືດແບບຍືນຍົງ.

10. ຢູ່ທີ່ກອງປະຊຸມວິຊາການລະດັບສາກົນຄັ້ງທີIV ເພື່ອຊັບພະຍາກອນພັນທຸກຳພືດ, ເພື່ອແນ່ໃສ່ບັນລຸຈຸດປະສົງຕ່າງໆຂອງພວກເຮົາ, ຈິ່ງມີການຮັບຮອງເອົາແຜນດຳເນີນງານໂລກເພື່ອຮັກສາ

ແລະນຳໃຊ້ຊັບພະຍາກອນພັນທຸກຳພືດແບບຍືນຍົງ ເພື່ອເປັນອາຫານ ແລະການກະສິກຳ. ແຜນດັ່ງກ່າວມີໂຄງຮ່າງ ການປະຕິບັດ

11. ວຽກທີ່ກົມກຽວສົມເຫດສົມຜົນ ເພື່ອຈະໄດ້ດຳເນີນການອະນຸລັກ ໃນຖິ່ນກຳເນີດ ແລະ ອະນຸລັກນອກຖິ່ນກຳເນີດ ແລະເພື່ອນຳໃຊ້ຊັບພະຍາກອນພັນທຸກຳພືດແບບຍືນຍົງ; ນອກນັ້ນກໍ່ແມ່ນເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນ. ມັນຈະປະກອບສ່ວນຊ່ວຍສ້າງກຳລັງແຮງ ລວມຈາກກິດຈະກຳຕ່າງໆ ທີ່ພວມດຳເນີນຢູ່ ແລະຈະໃຫ້ການນຳໃຊ້ຊັບພະຍາກອນທີ່ມີຢູ່ປັດຈະບັນໃຫ້ມີປະສິດຕິພາບກວ່າເກົ່າ. ພວກເຮົາແນ່ໃຈວ່າການຕັດສິນໃຈລະດັບຊາດແບບໄລຍະຍາວ ເພື່ອປະສານບັນດາແຜນການ ແລະແຜນງານແຫ່ງຊາດນັ້ນ ແມ່ນມີຄວາມສຳຄັນພິເສດ. ຊຶ່ງເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້ສຳລັບກໍ່ໃຫ້ມີການຮ່ວມມືໃນຊາດ ກໍ່ຄືໃນພາກພື້ນ ແລະສາກົນ.

12. ແຜນດຳເນີນງານໂລກນີ້ ເປັນປັດໃຈສຳຄັນອັນນຶ່ງສຳລັບລະບົບໂລກ ເພື່ອການຮັກສາ ແລະນຳໃຊ້ຊັບພະຍາກອນພັນທຸກຳພືດຂອງ ອົງການອາຫານແລະການກະເສດ. ລະບົບໂລກດັ່ງກ່າວນີ້ປະກອບດ້ວຍປັດໃຈອື່ນໆ ລວມມີເອກະສານ ລະບຸເຖິງ ໜ້າວຽກລະດັບສາກົນ ກ່ຽວກັບຊັບພະຍາກອນພັນທຸກຳພືດ ຊຶ່ງກຳລັງມີການສຶກສາເພື່ອດັດແກ້ໃນປັດຈຸບັນ. ພວກເຮົາມີຄວາມເຊື່ອວ່າມັນມີຄວາມສຳຄັນທີ່ຈະຕ້ອງສຳເລັດການດັດແກ້ເອກະສານ "ໜ້າວຽກສາກົນກ່ຽວກັບຊັບພະຍາກອນພັນທຸກຳພືດ ແລະດັດແກ້" ລະບົບໂລກ (Global System) ເພື່ອໃຫ້ສອດຄ່ອງກັບສົນທິສັນຍາດ້ານຄວາມຫຼາກຫຼາຍຂອງຊີວະນາໆພັນ.

13. ພວກເຮົາຈະປະຕິບັດຕາມການຕັດສິນໃຈຂອງພວກເຮົາ ດ້ວຍການເຮັດຕາມຂັ້ນຕອນອັນຈຳເປັນເພື່ອຜັນຂະຫຍາຍແຜນດຳເນີນງານໂລກ ໃຫ້ສອດຄ່ອງກັບຄວາມສາມາດຕົວຈິງຂອງປະເທດ.

14. ພວກເຮົາໄດ້ນັດພົບກັນທີ່ ລິບຊິກ ໂດຍຄຳນຶງເຖິງຄວາມຮັບຜິດຊອບ ແລະບັນຫາຫຍຸ້ງຍາກຂ້າງໜ້າທີ່ຕ້ອງຜ່ານຜ່າ, ແຕ່ຫາກແນ່ໃຈວ່າຈະຕ້ອງມີຄວາມຄືບໜ້າ ຊຶ່ງສາມາດບັນລຸໄດ້. ພວກເຮົາເນັ້ນຄວາມຈຳເປັນທີ່ຕ້ອງລວມເອົາບັນຫາການຮັກສາ ແລະນຳໃຊ້ຊັບພະຍາກອນພັນທຸກຳພືດ ເພື່ອເປັນອາຫານ ແບບຍືນຍົງແລະຖືວ່ານັ້ນເປັນປັດໃຈສຳຄັນຍິ່ງ ເພື່ອໃຫ້ມີຄວາມໝັ້ນຄົງດ້ານສະບຽງອາຫານ. ພວກເຮົາຂໍໃຫ້ມີການເອົາໃຈໃສ່ຕິດຕາມແຜນດຳເນີນງານໂລກທີ່ກອງປະຊຸມສຸດຍອດໂລກດ້ານສະບຽງອາຫານ ຊຶ່ງຈະເປີດຂຶ້ນໃນເດືອນ ພະຈິກ 1996. ພວກເຮົາເຊື້ອເຊີນທຸກໆຄົນຮ່ວມໃນພາລະກິດລວມຂອງຊຸມເຮົາ ທີ່ໄດ້ຮັບຮອງເອົາໃນວັນທີ 23 ມິຖຸນາ 1996.

# ແຜນດໍາເນີນງານໂລກ ເພື່ອ ການອະນຸລັກ ແລະ ການນໍາໃຊ້ຊັບພະຍາກອນພັນທຸກໍາພືດ ເພື່ອເປັນອາຫານ ແລະການກະສິກໍາ ແບບຍືນຍົງ

## ອາລໍາພະບົດ

1.ຊັບພະຍາກອນພັນທຸກໍາພືດ ເພື່ອເປັນອາຫານ ແລະການກະສິກໍາເປັນພື້ນຖານດ້ານຊີວະວິທະຍາ ເພື່ອໃຫ້ເກີດມີຄວາມໝັ້ນຄົງດ້ານສະບຽງອາຫານຂອງໂລກ ແລະເພື່ອຄໍ້າຊູການດໍາລົງຊີວິດຂອງແຕ່ລະຄົນເຮົາເທິງໜ່ວຍພິພົບ. ຊັບພະຍາກອນເລົ່ານີ້ ໄດ້ຮັບໄຊ້ເປັນວັດຖຸດິບສໍາຄັນທີ່ສຸດຂອງນັກປັບປຸງພັນ ແລະເປັນ ຂາເຂົ້າ ທີ່ຈໍາເປັນທີ່ສຸດຂອງຊາວໄຮ່ນາ. ດັ່ງນັ້ນຈຶ່ງເວົ້າໄດ້ວ່າຊັພະຍາກອນພັນທຸກໍາພືດເປັນສິ່ງຈໍາເປັນສໍາລັບການຜະລິດກະສິກໍາແບບຍືນຍົງ. ຖ້າຫາກເຮົາສາມາດຄຸ້ມຄອງໄດ້ໂດຍດີແລ້ວ ຊັບພະຍາກອນເລົ່ານີ້ກໍບໍ່ເຫືອດຫາຍ ເພາະວ່າມັນບໍ່ມີການຂັດແຍ່ງດ້ານລົບລະຫວ່າງການອະນຸລັກຮັກສາ ແລະການນໍາໃຊ້. ການອະນຸລັກ, ການນໍາໃຊ້ແບບຍືນຍົງ ແລະການແບ່ງປັນຜົນປະໂຫຍດທີ່ຍຸດຕິທໍາ ແລະສະເໝີພາບ ສິ່ງທີ່ເປັນຄຸນປະໂຫຍດຈາກການນໍາໃຊ້ຊັບພະຍາກອນນັ້ນ ໄດ້ສ້າງຄວາມເປັນຫວ່ງຂັ້ນສາກົນທີ່ຫລີກລ້ຽງບໍ່ໄດ້. ນອກນັ້ນແລ້ວ, ມັນກໍຍັງແມ່ນເປົ້າໝາຍພື້ນຖານຂອງສົນທິສັນຍາດ້ານຄວາມຫຼາກຫຼາຍຂອງຊີວະນາໆພັນ.
ພ້ອມດຽວກັນນັ້ນພວກເຮົາຮັບຮູ້ເຖິງ ສິດອະທິປະໄຕຂອງລັດທີ່ມີຕໍ່ຊັບພະຍາກອນດ້ານຊີວະສາດຂອງຕົນນັ້ນ, ພວກເຮົາພ້ອມກັນຍົກໃຫ້ເຫັນຄວາມຈໍາເປັນໃຫ້ມີແຜນດໍາເນີນງານໂລກ ເພື່ອແກ້ໄຂບັນຫາຊັບພະຍາກອນພັນທຸກໍາພືດ ເພື່ອເປັນອາຫານ ແລະການກະເສດ ຊຶ່ງແມ່ນການກະທໍາທີ່ເໝາະສົມສະທ້ອນເຖິງຄວາມເປັນຫ່ວງເປັນໄຍຂອງຊຸມຊົນສາກົນແລະຄວາມຮັບຜິດຊອບໃນພາກພື້ນ.

2. ໃນປີ 1983, ກອງປະຊຸມ ອົງການອາຫານແລະການກະເສດ ໄດ້ຈັດຕັ້ງ ຄະນະກໍາມາທິການລະຫວ່າງລັດຖະບານກ່ຽວກັບຊັບພະຍາກອນພັນທຸກໍາພືດ (ປັດຈຸບັນເອີ້ນວ່າ ຄະນະກໍາມາທິການດ້ານຊັບພະຍາກອນພັນທຸກໍາ ເພື່ອເປັນອາຫານ ແລະການກະສິກໍາ), ແລະໄດ້ຮັບຮອງ
ເອົາເອກະສານ ສາກົນ ທີ່ບໍ່ມີຜົນບັງຄັບກ່ຽວກັບ ວຽກພັນທຸກໍາພືດ ຊຶ່ງພວມໄດ້ຮັບການທົບທວນຄືນ ໂດຍຄະນະກໍາມາທິການໂດຍໃຫ້ສອດຄ່ອງ ກັບສົນທິສັນຍາດ້ານ ຄວາມຫຼາກຫຼາຍທາງຊີວະນາໆພັນ. ປັດຈຸບັນ ລະບົບໂລກ ໄດ້ມ ການຮັກສາ ແລະນໍາໃຊ້ຊັບພະຍາກອນພັນທຸກໍາພືດ ເພື່ອເປັນອາຫານ ແລະການກະສິກໍາ ລວມມີສົນທິສັນຍາເອງ ແລະຂໍ້ຕົກລົງສາກົນອື່ນໆ ລວມທັງໜ້າວຽກສາກົນ ທີ່ເວົ້າເຖິງກົນໄກ ວິຊາການ ແລະເຄື່ອງມືໃຊ້ໄດ້ໃນຂອບເຂດທົ່ວໂລກໃນແຕ່ລະຂັ້ນຕອນຂອງການພັດທະນາ.

3.ແຜນດໍາເນີນງານໂລກແມ່ນສ່ວນນຶ່ງຂອງລະບົບ ອົງການອາຫານແລະການກະສິກໍາ ທົ່ວ ໂລກເພື່ອການຮັກສາ ແລະນໍາໃຊ້ຊັບພະຍາກອນພັນທຸກໍາພືດແບບຍືນຍົງ ສໍາລັບເປັນອາຫານ ແລະ

ການກະສິກຳ ແລະກໍເປັນປັດໃຈສຳຄັນອັນໜຶ່ງສຳລັບ ຄະນະກຳມາທິການໃນການບັນລຸພາລະທີ່ຖືກມອບໝາຍ ເຖິງແມ່ນວ່າຈະຕ້ອງການປັດໃຈສຳຄັນອື່ນໆ ເພື່ອສຳເລັດໜ້າທີ່ນັ້ນກໍຕາມ. ອີງຕາມ ວາລະທີ່ 21 ຄະນະກຳມາທິການຮຽກຮ້ອງໃຫ້ມີການພັດທະນາແຜນດຳເນີນງານໂລກແບບຕໍ່ເນື່ອງ ກ່ຽວກັບຊັບພະຍາກອນພັນທຸກຳພືດ ເພື່ອເປັນອາຫານ ແລະການກະສິກຳ ພ້ອມທັງໃຫ້ມີບັນດາ ແຜນງານ ແລະກິດຈະກຳ ທີ່ແນໃສ່ແກ້ໄຂ ແລະ ຜ່ານຜ່າຂໍ້ຈຳກັດຕ່າງໆພ້ອມທັງປະເຊີນໜ້າກັບສະຖານະການທັງຫຼາຍຕາມການລາຍງານອີງການອາຫານແລະການກະສິກຳ ກ່ຽວກັບສະພາບຊັບພະຍາກອນພັນທຸກຳພືດຂອງໂລກ ທີ່ກຳລັງປະເຊີນຢູ່. ການດັດປັບແຜນການໃຫ້ທັນສະພາບຂອງແຕ່ລະ ໄລຍະນັ້ນຈະຊ່ວຍໃຫ້ ຄະນະກຳມາທິການສາມາດສະເໜີຄຳເຫັນສິ່ງທີ່ຄວນເປັນບໍລິມະສິດ ແລະຄວນສົ່ງເສີມ ແລະຄວນລົງເລິກບັນຫາ ແລະປັບປຸງການປະສານງານໃຫ້ຄອງຕົວ.

4.ແຜນດຳເນີນງານໂລກ ຈະກວມເອົາທັງຫົວຂໍ້ ຍ່ອຍດ້ານ ຊັບພະຍາກອນ ພັນທຸກຳພືດທີ່ລົງເລິກດ້ານອາຫານ ແລະການກະເສດ ສະເພາະ. ກອງປະຊຸມຂອງຄູ່ພາຄີສົນທິສັນຍາ ກ່ຽວກັບຄວາມຫຼາກຫຼາຍ ດ້ານຊີວະນາໆພັນ ຊຶ່ງປະຊຸມກັນໃນສະໄໝທີ II ໃນປີ 1995 ໄດ້ປະກາດໃຫ້ ມີການສະໜັບສະໜູນ ເພື່ອພັດທະນາແຜນອັນໜຶ່ງ “ສຳລັບອາຫານ ແລະການກະເສດ” ໂດຍຜ່ານຂະບວນການ ກະກຽມກອງປະຊຸມໃຫ່ຍ ຂອງວິຊາ ການສາກົນດ້ານ ຊັບພະຍາກອນພັນທຸກຳພືດຄັ້ງທີ IV.

5.ຢູ່ທີ່ກອງປະຊຸມ, ຄັ້ງທີ VI, ຄະນະກຳມາທິການໄດ້ຕົກລົງ “ວ່າຄວນເໜັ້ນ ພາຍໃຕ້ເງື່ອນໄຂການກະສິກຳຍືນຍົງ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະການກະສິກຳ ຈະມີສ່ວນປະກອບໃຫ້ແກ່ການ ມີອາຫານຢ່າງພຽງພໍ ໃນໂລກໄດ້ ພ້ອມທັງຄວນເໜັ້ນ ລັກສະນະພິເສດ ແລະ ຄວາມຮຽກຮ້ອງຕ້ອງ ການຂອງ ການກະສິກຳ.” ກອງປະຊຸມ ສະໄໝວິສາມັນ ຄັ້ງທີ II ຂອງຄະນະກຳມາທິການ “ໄດ້ເຫັນດີວ່າ ບັນຫາປ່າໄມ້ຈະບໍ່ເອົາລວມ ເຂົ້າໃນແຜນດຳເນີນງານໂລກນີ້ ຊຶ່ງຈະຍົກເອົາໄປພິຈາລະນາ ເພື່ອຮັບຮອງເອົາຢູ່ທີ່ກອງປະຊຸມ ທີ່ ລິບຊີກ, ທັງນີ້ກໍຍ້ອນ ມີຄວາມເຂົ້າໃຈກັນວ່າບັນຫາດັ່ງກ່າວນີ້ ສາມາດນຳເອົາໄປສຶກສານຳກັນໄດ້ໃນອານາຄົດ ຊຶ່ງຈະຢູ່ໃຕ້ຂອບເຂດວຽກງານຂອງ ກຳມະການປົກຄອງ ດ້ານປ່າໄມ້ຄະນະ ຊຶ່ງ ຄະນະ ກຳມາທິການດ້ານການພັດທະນາແບບຍືນຍົງ.” ໃນ ອານາຄົດ ການປັບປຸງ ແລະເຮັດແຜນນັ້ນໃຫ້ລະອຽດ ອາດຈະເອົາ ຫົວຂໍ້ຍ່ອຍຂອງບັນຫາຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະກະເສດເຂົ້ານຳ.

6.ແຜນດຳເນີນງານໂລກຈະປະກອບສ່ວນຢ່າງໃຫຍ່ຫຼວງ ແລະເພີ່ມທະວີຄວາມສຳຄັນໃຫ້ແກ່ຄວາມພະຍາຍາມສົ່ງເສີມໃຫ້ມີສະບຽງອາຫານໃນໂລກແບບຮັບປະກັນ.

## ແນວຄວາມຄິດ ພາຍໃຕ້ແຜນດຳເນີນງານໂລກ ສຳລັບອາຫານ ແລະກະສິກຳ ສະເພາະດ້ານ

7.ແຜນດຳເນີນງານໂລກດ້ານພັນທຸກຳພືດ ເພື່ອອາຫານ ແລະກະເສດທີ່ໄດ້ຮັບການໄຕ່ຕອງຢ່າງລະອຽດຈະຖືກຮັບປະກັນ ກໍຍ້ອນຄວາມສຳຄັນອັນໃຫຍ່ຫຼວງຂອງຊັບພະຍາກອນເລົ່ານັ້ນ ທີ່ມີຕໍ່ການຮັບປະກັນສະບຽງອາຫານໃຫ້ແກ່ໂລກ, ແລະເບິ່ງແບບກ້ວາງຂວາງໄປກວ່ານັ້ນໃນແງ່ຄວາມຫຼາຍຫຼາຍຊີວະສາດແລ້ວ, ແຜນດັ່ງກ່າວຍັງມີບາງປັດໃຈສຳຄັນດ້ານຮູບແບບສະເພາະທາງດ້ານຊີວະນາໆພັນອີກດ້ວຍ.

(ກ). ຫຼາຍໆຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະກະເສດແມ່ນໄດ້ມາຈາກການກະທຳຂອງມະນຸດ: ໝາຍຄວາມວ່າຊັບພະຍາກອນນັ້ນ ຊາວກະສິກອນຕັ້ງໃຈເລືອກ ແລະປັບປຸງນັບແຕ່ຕອນຕົ້ນໆຂອງການປູກຝັງມາແລ້ວ. ແລະໄລຍະຫຼັງໆມານີ້, ນັກປັບປຸງພັນພືດກໍໄດ້ແຜ່ຂະຫຍາຍຄວາມຫຼາກຫຼາຍນີ້ຢ່າງໄດ້ຜົນແບບຍິ່ງໃຫຍ່. ການຄຸ້ມຄອງຊັບພະຍາກອນຕ່າງໆແບບຍືນຍົງນັ້ນມັນຮຽກຮ້ອງໃຫ້ມີຍຸດທະສາດສະເພາະທີ່ມີຄວາມອ່ອນໄຫວຕໍ່ລັກສະນະສະເພາະຕົວຂອງຊັບພະຍາກອນນັ້ນໆ. ແຕກຕ່າງໄປຈາກຊັບພະຍາກອນທຳມະຊາດສ່ວນຫຼວງຫາຍ, ຊັບພະຍາກອນເລົ່ານີ້ຮຽກຮ້ອງໃຫ້ຄົນເຮົາຕ້ອງບໍລິຫານຄຸ້ມຄອງແບບຕັ້ງໜ້າ ແລະຕໍ່ເນື່ອງ.

(ຂ). ຄວາມຫຼາກຫຼາຍຂອງການອະນຸລັກແນວພັນຊັບພະຍາກອນພັນທຸກຳພືດພື້ນເມືອງ ເພື່ອອາຫານ ແລະກະສິກຳ, ສະເພາະຢ່າງຍິ່ງພັນພືດເພື່ອເປັນອາຫານມັກຈະສຸມຢູ່ເຂດໃດນຶ່ງສະເພາະຂອງໂລກ ທີ່ແຕກຕ່າງໄປຈາກເຂດທີ່ອຸດົມໄປດ້ວຍຊີວະນາໆພັນປະເທດອື່ນໆ. ອັນທີ່ເອີ້ນວ່າ "ສູນຊີວະນາໆພັນ" ນັ້ນສ່ວນໃຫຍ່ມັກລວມສູນຢູ່ບັນດາປະເທດກຳລັງພັດທະນາ.

(ຄ). ຍ້ອນການກະເສດໄດ້ແຜ່ຂະຫຍາຍ ແລະຍ້ອນມີການພົວພັນລະຫວ່າງພືດພັນສຳຄັນໆ ແລະຍ້ອນການເຄື່ອນຍ້າຍຂອງມະນຸດ ຈຶ່ງເຮັດໃຫ້ຫຼາຍໆ ພັນທຸກຳ ຂອງພືດ ແລະຊະນິດພັນທຸກຳ ແລະພົນລະເມືອງໄດ້ແຜ່ລາມໄປສູ່ທຸກໆພາກພື້ນຂອງໂລກ ນັບແຕ່ບູຮານນະການມາ. ມັນໄດ້ຖືກສືບຕໍ່ພັດທະນາ ແລະປັບປຸງມາຕະຫຼອດຢ່າງບໍ່ໄດ້ຢຸດຢັ້ງ ໂດຍຊາກະສິກອນທັງທີ່ຢູ່ພາຍໃນ ແລະນອກສູນກາງປະຫວັດສາດເຄົ້າໃນການນຳເອົາພືດພັນນຳມາໃຊ້. ນອກນັ້ນແລ້ວໄດ້ມີການເກັບ ແລະແລກປ່ຽນຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະກະເສດຢ່າງເປັນລະບົບມາແລ້ວ ປະມານ 500 ປີ. ເພິ່ນໄດ້ສືບຕໍ່ເກັບມ້ຽນຊັບພະຍາກອນ ດັ່ງກ່າວຈຳນວນ ຫຼາຍໆລ້ານໄວ້ໃນສູນ ພັນທຸກຳ ຫຼາຍຮ້ອຍ ແຫ່ງໃນໂລກ ເພື່ອຈຸດປະສົງ ອະນຸລັກຮັກສາ ແລະເພື່ອນຳໃຊ້.

(ງ). ບັນດາປະເທດຕ້ອງເພິ່ງພາກັນຫຼາຍສົມຄວນ ເມື່ອເວົ້າເຖິງຊັບພະຍາກອນ ພັນທຸກຳ ຂອງພືດພັນ. ລະບົບການຜະລິດອາຫານ ແລະກະເສດຍິ່ງຕ້ອງອາໃສຢ່າງຫຼວງຫຼາຍຕໍ່ຊັບພະຍາກອນພັນທຸກຳຂອງພືດ ທີ່ໄດ້ຖືກນຳໃຊ້ໂດຍຄົນເຮົາມາແລ້ວຢູ່ແຫ່ງຕ່າງໆ ແລ້ວຕໍ່ມາກໍໄດ້ຖືກພັດທະນາຢູ່ປະເທດ ຫຼືເຂດອື່ນໆຕົ້ມນັບເປັນເວລາຫຼາຍຮ້ອຍ ຫຼືພັນປີມາແລ້ວ. ດັ່ງນັ້ນວິທີ

ແລະຮູບການ "ແບ່ງປັນຜົນປະໂຫຍດ" ຈາກຊັບພະຍາກອນພັນທຸກຳ ເພື່ອອາຫານ ແລະກະເສດ ຈຶ່ງແຕກຕ່າງໄປໂດຍພື້ນຖານຈາກຮູບແບບ ຊຶ່ງອາດຈະເໝາະສົມເພື່ອນຳໃຊ້ກັບພືດ "ປ່າ" ຫຼືພືດຢາສະໝຸນໄພ ຊຶ່ງຫາກໍໄດ້ຄົ້ນພົບ.

(ຈ). ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະກະເສດຍັງບໍ່ທັນໄດ້ຖືກຮັກສາ ແລະນຳໃຊ້ຢ່າງພຽງພໍ.

(ສ). ກິດຈະກຳພົວພັນເຖິງການອະນຸລັກແນວພັນດັ້ງເດີມ ແລະແນວພັນຈາກຖິ່ນອື່ນ ແລະການນຳໃຊ້ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະກະເສດສ່ວນໃຫຍ່ແມ່ນຖືກປະຕິບັດໄປແບບເສັ້ນຂະໜານໂດຍບໍ່ມີການພົວພັນ ແລະປະສານກັນຢ່າງພຽງພໍ. ດັ່ງນັ້ນແຜນດຳເນີນງານໂລກຈະຕ້ອງແກ້ໄຂສະພາບດັ່ງກ່າວນີ້.

(ຊ). ເຖິງແມ່ນວ່າປັດຈຸບັນຈະມີຫຼາຍໆແຫຼ່ງທຶນ ເພື່ອຮັບໄຊ້ການອະນຸລັກ ແລະນຳໃຊ້ຊັບພະຍາກອນພືດແບບຍືນຍົງ ເພື່ອອາຫານ ແລະກະເສດກໍຕາມ, ແຕ່ວຽກງານດັ່ງກ່າວກໍ່ຍັງມີສະພາບແຕກໂຕນ, ດ້ານໜ້າວຽກກວມກັນ ຂາດປະສິດຕິພາບ ແລະຊ້ຳຊ້ອນແບບບໍ່ຈຳເປັນໃນບັນດາໜ້າວຽກທີ່ໄດ້ຮບທຶນສະໜັບສະໜູນ. ນອກນັ້ນແລ້ວບັນດາແຜນງານລະດັບຊາດ ເຫັນວ່າມີລະດັບພັດທະນາທີ່ບໍ່ເທົ່າທຽມກັນຫຼາຍ, ນອກຈາກນັ້ນກໍມີຄວາມແຕກຕ່າງໃນຂອບເຂດວຽກງານອະນຸລັກ ແລະນຳໃຊ້ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະກະເສດ. ແຜນດຳເນີນງານໂລກທີ່ໄດ້ຮັບການເຫັນດີນຳກັນສາມາດຊ່ວຍສຸມຊັບພະຍາກອນໃສ່ຂົງເຂດບູລິມະສິດ ຊຶ່ງກຳນົດໄດ້ໃນລະດັບຕ່າງໆ ພ້ອມທັງເພີ່ມທະວີປະສິດຕິຜົນໂດຍລວມກ່ຽວກັບຄວາມພະຍາຍາມໃນຂອບເຂດໂລກ.

## <u>ບັນດາເປົ້າໝາຍ ແລະຍຸດທະສາດຂອງແຜນດຳເນີນງານໂລກ</u>

8.ທີ່ກອງປະຊຸມສະໄໝທີ VI ປີ 1995, ຄະນະກຳມາທິການໄດ້ເຫັນດີນຳຮ່າງທົ່ວໄປ ແລະວິທີການຂອງລາຍງານສະພາບຊັບພະຍາກອນພັນທຸກຳພືດຂອງໂລກ ກໍຄືເຫັນດີນຳແຜນດຳເນີນງານຂອງໂລກ. ກຳມາທິການໄດ້ເນັ້ນວ່າແຜນດຳເນີນງານໂລກນັ້ນຕ້ອງເລັ່ງໃສ່ການປະຕິບັດ. ຍ້ອນວ່າມັນຈະມີຍຸດທະສາດເພື່ອຊີ້ນຳໃຫ້ມີການຮ່ວມມືສາກົນ ທີ່ກ່ຽວຂ້ອງກັບຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະກະເສດໃນຊຸມປີຂ້າງໜ້າ, ມັນຈະຕ້ອງອີງໃສ່ ເປົ້າໝາຍ ແລະຫຼັກການຕ່າງໆ ທີ່ຖະແຫຼງອອກມາຢ່າງຈະແຈ້ງໄດ້ຕາມຄວາມໝາຍ ແລະນອກຈາກສິ່ງອື່ນໆແລ້ວຕ້ອງມີຍຸດທະສາດ ແລະຂໍ້ມູນສຳລັບແຕ່ລະກິດຈະກຳທີ່ເປັນບູລິມະສິດ ຊຶ່ງສະເໜີຂຶ້ນມາ. ຖ້າຫາກເຫັນດີນຳກັນກັບເປົ້າໝາຍແມ່ນຈະອ້າງອີງ ແລະນຳໃຊ້ບັນດາຂໍ້ຕົກລົງສາກົນທີ່ກ່ຽວຂ້ອງຕາມແຕ່ຄວາມເໝາະສົມ.

9.ເປົ້າໝາຍຕົ້ນຕໍຂອງແຜນດຳເນີນງານໂລກແມ່ນເພື່ອ:

- ຮັບປະກັນໃຫ້ມີການອະນຸລັກຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະກະເສດ ສຳລັບເປັນພື້ນຖານໃຫ້ແກ່ຄວາມໝັ້ນຄົງດ້ານສະບຽງອາຫານ;
- ເພື່ອສົ່ງເສີມໃຫ້ມີການນຳໃຊ້ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະກະເສດ ແບບຍືນຍົງແນໃສ່ສະໜັບສະໜູນການພັດທະນາ ແລະຫຼຸດຜ່ອນຄວາມອຶດຫິວ ແລະທຸກຍາກ ໂດຍສະເພາະໃນປະເທດກຳລັງພັດທະນາ;
- ເພື່ອສົ່ງເສີມໃຫ້ມີການແບ່ງປັນຜົນປະໂຫຍດແບບຍຸດຕິທຳ ແລະສະເໝີພາບເມື່ອເວົ້າເຖິງພັນທຸກຳພືດ ເພື່ອອາຫານ ແລະກະເສດ ໂດຍຈະມີການຮັບຮູ້ຄວາມຕ້ອງການໃຫ້ແບ່ງປັນຜົນປະໂຫຍດແບບບໍ່ມີການເອົາປຽບກັນ ໃນເມື່ອມີການນຳໃຊ້ຄວາມຮູ້ແບບປະເພນີ ກໍຄືການຜະລິດແຕ່ ແລະການປະຕິບັດຕ່າງໆ ທີ່ພົວພັນເຖິງການອະນຸລັກ ພັນທຸກຳພືດ ເພື່ອອາຫານ ແລະກະເສດ ແລະການນຳໃຊ້ມັນແບບຍືນຍົງ.

  - ເນັ້ນຄືນຄວາມຮຽກຮ້ອງຕ້ອງການ ແລະບັນດາສິດສ່ວນບຸກຄົນຂອງຊາວໄຮ່ນາ ກໍຄືສິດລວມໝູ່ ເມື່ອໃດຫາກມີການຮັບຮູ້ໃນກົດໝາຍແຫ່ງຊາດ ເພື່ອຈະບໍ່ໃຫ້ມີການເອົາລັດເອົາປຽບ ເພື່ອເຂົ້າເຖິງ ເຊື້ອພັນ ຂໍ້ມູນຂ່າວສານ, ເຕັກໂນໂລຊີ ແລະຊັບພະຍາກອນດ້ານທຶນ ແລະລະບົບຄົ້ນຄ້ວາ ແລະການຕະຫຼາດ ຊຶ່ງເປັນສິ່ງຈຳເປັນເພື່ອສືບຕໍ່ຄຸ້ມຄອງ ແລະປັບປຸງຊັບພະຍາກອນພັນທຸກຳ.

  - ພັດທະນາ ແລະ/ຫຼືສ້າງຄວາມເຂັ້ມແຂງບັນດານະໂຍບາຍ ແລະມາດຕະການດ້ານກົດໝາຍຕາມເຫັນສົມຄວນ ເພື່ອສົ່ງເສີມໃຫ້ມີຄວາມຍຸດຕິທຳ ແລະສະເໝີພາບ ເມື່ອແບ່ງປັນຜົນປະໂຫຍດຈາກການນຳໃຊ້ ພັນທຸກຳພືດ ເພື່ອອາຫານ ແລະກະເສດ ຫາກມີການແລກປ່ຽນລະຫວ່າງຊຸມຊົນນຳກັນກໍຄືໃນຂອບເຂດສາກົນ.
- ຊ່ວຍບັນດາປະເທດ ແລະສະຖາບັນທີ່ຮັບຜິດຊອບການອະນຸລັກ ແລະນຳໃຊ້ ພັນທຸກຳພືດ ເພື່ອອາຫານ ແລະກະສິກຳ ກຳນົດບູລິມະສິດເພື່ອປະຕິບັດການ.
- ສ້າງຄວາມເຂັ້ມແຂງສະເພາະຢ່າງຍິ່ງແກ່ແຜນງານແຫ່ງຊາດ ກໍຄືແຜນງານໃນ ພາກພື້ນ ແລະສາກົນລວມທັງຄວາມສາມາດດ້ານການສຶກສາ ແລະຝຶກອົບຮົມໃນວຽກອະນຸລັກ ແລະນຳໃຊ້ ພັນທຸກຳພືດ ເພື່ອອາຫານ ແລະກະເສດ ພ້ອມທັງເສີມຂະຫຍາຍຄວາມສາມາດຂອງສະຖາບັນ.

10.ແຜນດຳເນີນງານໂລກນີ້ແມ່ນອີງໃສ່ຄວາມເຂົ້າໃຈທີ່ວ່າປະເທດຕ່າງໆ ໂດຍພື້ນຖານແມ່ນເພິ່ງພາກັນໃນດ້ານພັນທຸກຳພືດ ເພື່ອອາຫານ ແລະກະເສດ ແລະເປັນດັ່ງນັ້ນກໍລ້ວນມີການຮ່ວມມືສາກົນຫຼາຍສົມຄວນ ຊຶ່ງຈຳເປັນໃນການຕອບສະໜອງເປົ້າໝາຍຕ່າງໆຂອງແຜນງານນັ້ນຢ່າງມີປະສິດຕິຜົນ ແລະປະສິດຕິພາບ.ພາຍໃຕ້ຂອບເຂດດັ່ງກ່າວນັ້ນຈຶ່ງໄດ້ພັດທະນາແຜນດຳເນີນງານໂລກຂຶ້ນມາ ຊຶ່ງມີກອບວຽກງານປະກອບດ້ວຍຫຼັກບັນຫາພື້ນຖານທີ່ພົວພັນຊຶ່ງກັນ ແລະກັນເຊັ່ນ:

(ກ). ພັນທຸກຳພືດ ເພື່ອອາຫານ ແລະກະສິກຳ ຈຳນວນຫຼວງຫຼາຍ ແລະຊຶ່ງມີຄວາມສຳຄັນຫຼວງຫຼາຍ ສຳລັບ ຄວາມໝັ້ນຄົງ ດ້ານສະບຽງ ອາຫານໂລກ ແມ່ນຖືກ ເກັບຮັກສາແບບ

ຢູ່ນອກຖິ່ນກຳເນີດ ນອກເຂດທຳມະຊາດຂອງມັນ. ດັ່ງນັ້ນໃນຊຸມປີ ຂ້າງໜ້ານີ້ມັນມີຄວາມຈຳເປັນຕ້ອງ ພັດທະນາ ການເກັບຮັກສາ ໃຫ້ມີປະສິດຕິຜົນ. ປັດໃຈຍຸດທະສາດສຳຄັນອີກອັນໜຶ່ງຂອງແຜນດຳເນີນງານໂລກ ແມ່ນ ການຮັບປະກັນໃຫ້ຊັບພະຍາກອນພັນທຸກຳທີ່ໄດ້ເກັບມ້ຽນໄວ້ແລ້ວນັ້ນບໍ່ໃຫ້ຕົກເຮ່ຍເສຍຫາຍ ພ້ອມທັງເຮັດໃຫ້ຊັບພະຍາກອນພັນທຸກຳສາມາດຟື້ນຊີບຄືນໃໝ່ ແລະແຜ່ຂະຫຍາຍ ເທົ່າຕົວ. ມາເຖິງປັດຈຸບັນການເກັບຮັກສາສ່ວນຫຼາຍແມ່ນຢູ່ໃຕ້ເງື່ອນໄຂບໍ່ຮັບປະກັນ ແລະສິ່ງທີ່ໄດ້ເກັບມ້ຽນໄວ້ແລ້ວ, ອາດມີເຖິງໜຶ່ງລ້ານລາຍການທີ່ຕ້ອງຟື້ນຊີບຄືນໃໝ .

(ຂ). ໃນວຽກງານການອະນຸລັກຈະສ້າງສາຍພົວພັນກັນລະຫວ່າງການອະນຸລັກ, ການນຳໃຊ້ຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ ແບບກ້ວາງຂວາງກວ່າ ແມ່ນຄວາມຈຳເປັນເພື່ອໃຫ້ເກີດຜົນໄດ້ທີ່ສູງສຸດ.

(ຄ). ການເພີ່ມທະວີຄວາມສາມາດໃນທຸກໆລະດັບ ແມ່ນຍຸດທະສາດສຳຄັນເພື່ອປະຕິບັດແຕ່ລະກິດຈະກຳຂອງແຜນໂລກ. ແຜນງານນີ້ແມ່ນສະແຫວງ ການສົ່ງເສີມການນຳໃຊ້ໃຫ້ເກີດຜົນ ແລະມີປະສິດຕິພາບພ້ອມທັງພັດທະນາສະຖາບັນສົ່ງເສີມຊັບພະຍາກອນມະນຸດແບບມີແຜນການ, ການຮ່ວມມື ແລະກົນໄກດ້ານການເງິນ.

(ງ). ການ ສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານເລືອກເຟັ້ນຂອງ ນັກປັບປຸງພັນທັງພາກລັດແລະເອກະຊົນຊຶ່ງເປັນໜ້າວຽກສຳລວດເພື່ອໃຫ້ຊັພະຍາກອນແຫລ່ງພັນພືດເພື່ອອາຫານ ແລະການກະສິກຳ ໃຫ້ໄດ້ຮັບການປັບປຸງໄປຕະຫຼອດ.

(ຈ) .ການອະນຸລັກແນວພັນພື້ນເມືອງແລະການພັດທະນາຊັບພະຍາກອນແຫລ່ງພັນພືດເພື່ອອາຫານແລະການກະສິກຳ ຈະເກີດຂຶ້ນໄດ້ໃນສອງສະພາບ: ຢູ່ພື້ນທີ່ປູກຝັງ ແລະຢູ່ຕາມທຳມະຊາດ. ຊາວກະສິກອນ ແລະຊຸມຊົນຂອງພວກເຂົາ ມີບົດບາດສຳຄັນຍິ່ງໃນບັນຫານີ້ ມັນມີຄວາມສຳຄັນຫຼາຍທີ່ຕ້ອງເຂົ້າໃຈດີກວ່າເກົ່າແລະປັບປຸງປະສິດທິຜົນຂອງວຽກຄຸ້ມຄອງຊັບພະຍາກອນແຫລ່ງພັນພືດເພື່ອອາຫານແລະການກະສິກຳ ຢູ່ກັບພື້ນທີ່ຂອງຊາວກະສິກອນ. ການປັບປຸງປະສິດທິຜົນຂອງຊາວໄຮ່ນາ/ຊຸມຊົນດ້ານະດັບການອະນຸລັກ,ຄຸ້ມຄອງ,ພັດທະນາແລະນຳໃຊ້ຊັພະຍາກອນແຫລ່ງພັນພືດເພື່ອອາຫານແລະການກະສິກຳແມ່ນ ມີຄວາມສຳຄັນຍິ່ງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການແບ່ງປັນຜົນປະໂຫຍດອັນໄດ້ມາຈາກການນຳໃຊ້ບັນດາຊັບພະຍາກອນທັງຫຼາຍນັ້ນ. ເພີ່ມທະວີຄວາມສາມາດຂອງຊາວໄຮ່ນາ ແລະຊຸມຊົນຂອງເຂົາເຈົ້າ ໂດຍໃຫ້ມີສາຍພົວພັນກັບອົງກອນສົ່ງເສີມ, ພາກສ່ວນມະຫາຊົນ, ອົງກອນບໍ່ສັງກັດລັດຖະບານ, ແລະສະຫະກອນຂອງຊາວກະສິກອນຈະຊ່ວຍຊຸກຍູ້ສົ່ງເສີມໃຫ້ມີຄວາມໝັ້ນຄົງດ້ານສະບຽງອາຫານ ສະເພາະຢ່າງຍິ່ງສຳລັບຊາວ ເຂດຊົນນະບົດຈຳນວນຫຼວງຫຼາຍ ຜູ້ທີ່ຢູ່ໃນເຂດທີ່ການຜະລິດກະສິກຳຢູ່ໃນລະດັບຕ່ຳ. ແນວພັນພືດປ່າຈາກຕະກູນດຽວກັບພືດທີ່ໄດ້ເອົາມາເພາະປູກແລ້ວ ຈະຕ້ອງໄດ້ຮັບການປົກປ້ອງໃຫ້ໄດ້ດີກວ່າເກົ່າ ໂດຍຜ່ານການນຳໃຊ້ດິນທີ່ໄດ້ຮັບການປັບປຸງ.

(ສ). ຍຸດທະສາດການອະນຸລັກ ແລະນຳໃຊ້ລະດັບຊຸມຊົນ, ຊາດ, ພາກພື້ນ ແລະລະຫວ່າງຊາດມັນຈະຮັບປະກັນໃຫ້ເກີດປະສິດຕິຜົນທີ່ສຸດ ຖ້າຫາກມັນຊ່ວຍຊູກັນ, ແລະເມື່ອໃດຫາກເໝາະກໍໃຫ້ມີການປະສານຊຶ່ງກັນ ແລະກັນ ໃນເວລາວາງແຜນ ແລະນຳເອົາໄປປະຕິບັດເພື່ອຮັບປະກັນໃຫ້ໄດ້ຜົນສູງສຸດ.ການອະນຸລັກແລະນຳໃຊ້ຊັພະຍາກອນແຫລ່ງພັນພືດເພື່ອອາຫານແລະການກະສິກຳ ຮຽກຮ້ອງໃຫ້ມີຮູບແບບວິທີເຮັດວຽກແບບປະສົມປະສານ ລວມທັງຕ້ອງມີຄວາມພະຍາຍາມອະນຸລັກນຳໃຊ້ແນວພັນດັ້ງເດີມ ແລະຈາກຖິ່ນອື່ນ.

## ໂຄງຮ່າງ ແລະການຈັດຕັ້ງຂອງແຜນດຳເນີນງານໂລກ

11.ແຜນດຳເນີນງານໂລກມີ 20 ຂົງເຂດກິດຈະກຳບູລິມະສິດ. ເພື່ອຈຸດປະສົງໃນແງ່ປະຕິບັດ ແລະການສະເໜີເທົ່ານັ້ນ. ເພິ່ນໄດ້ແບ່ງມັນອອກເປັນສີ່ໝວດໃຫຍ່. ໝວດທີນຶ່ງ ກ່ຽວຂ້ອງກັບການອະນຸລັກ ແລະ ພັດທະນາແນວພັນໃນຖິ່ນກຳເນີດ; ໝວດທີສອງ ກ່ຽວກັບອະນຸລັກແນວພັນຢູ່ນອກຖິ່ນກຳເນີດເຂດທຳມະຊາດຂອງມັນ; ໝວດທີສາມ ກ່ຽວກັບການນຳໃຊ້ຊັບພະຍາກອນພັນທຸກຳພືດ; ແລະໝວດທີສີ່ ແມ່ນກ່ຽວກັບສະຖາບັນ ແລະການສ້າງຄວາມສາມາດ. ຍ້ອນວ່າແຜນດຳເນີນງານໂລກ ເປັນລາຍການ ກິດຈະກຳ ທີ່ລ້ວນແຕ່ພົວພັນ ປະສົມປະສານກັນ ຈຶ່ງໃຫ້ຖືວ່າການຈັດກິດຈະກຳເຂົ້າເປັນສີ່ໝວດນັ້ນແມ່ນພຽງແຕ່ເພື່ອຄວາມສະດວກໃນການສະເໜີບັນຫາ ແລະໃຫ້ຜູ້ອ່ານອອກຫາຂົງເຂດທີ່ຕົນເອງສົນໃຈໄດ້ງ່າຍເທົ່ານັ້ນ. ຫຼາຍກິດຈະກຳແມ່ນພົວພັນ ແລະກ່ຽວຂ້ອງກັບຫຼາຍກວ່າໜຶ່ງໝວດ

12.ສຳລັບແຕ່ລະກິດຈະກຳບູລິມະສິດ, ມັນຈະແບ່ງອອກເປັນ ຫຼືພາກຕົ້ນຕໍຈຳນວນນຶ່ງ ເພື່ອຄວາມສະດວກໃນການສະເໜີບັນຫາຂອງກິດຈະກຳບູລິມະສິດທີ່ສະເໜີຂຶ້ນມາ. ມີບາງກໍລະນີທີ່ຂໍ້ສະເໜີແນະນຳ ຊຶ່ງໄດ້ເອົາໄວ້ໃຕ້ຫົວຂໍ້ນຶ່ງນັ້ນ ອາດເອົາໄປໄວ້ໃຕ້ຫົວຂໍ້ນຶ່ງອີກກໍໄດ້ຄືກັນ. ຍ້ອນວ່າບໍ່ເຫັນມີຄວາມຈຳເປັນທີ່ຕ້ອງໃຫ້ນິຍາມກ່ຽວກັບແຕ່ລະພາກແບບຫັດກູມ. ຈຶ່ງເຂົ້າໃຈວ່າເຮົາຄວນສະແດງບາງຄວາມເຫັນໃນແນວອະທິບາຍດັ່ງຕໍ່ໄປນີ້:

(ກ). ພາກຕີລາຄາແມ່ນໃຫ້ຂໍ້ສະຫຼຸບກ່ຽວກັບການເບິ່ງ ແລະເຂົ້າໃຈບັນຫາວ່າອັນໃດຄືກິດຈະກຳບູລິມະສິດ ຊຶ່ງໄດ້ອີງໃສ່ຂໍ້ຄົ້ນພົບຜ່ານຂະບວນການກະກຽມ, ແລະ

(ຂ). ພາກກ່ຽວກັບບັນດາຈຸດປະສົງໄລຍະຍາວ ແລະກາງນັ້ນແມ່ນບົ່ງແຈ້ງບັນດາຈຸດປະສົງສຸດທ້າຍ ແລະລະຫວ່າງກາງຕາມອັນດັບ ຊຶ່ງຈະຕ້ອງບັນລຸຜ່ານກິດຈະກຳບູລິມະສິດ. ການບົ່ງແຈ້ງເປົ້າໝາຍຕ່າງໆ ສາມາດຊ່ວຍຊຸມຊົນສາກົນຕີລາຂອບເຂດການປະຕິບັດກິດຈະກຳຜ່ານໄປຄືແນວໃດ.

(ຄ). ພາກນະໂຍບາຍ/ຍຸດທະສາດສະເໜີວ່າ ນະໂຍບາຍແຫ່ງຊາດ ແລະສາກົນຄວນເປັນຄືແນວໃດ ພ້ອມທັງເວົ້າເຖິງວິທີການຍຸດທະສາດ ເພື່ອປະຕິບັດບັນດາຈຸດປະສົງຂອງກິດຈະກຳບູລິມະສິດ. ໃນບາງກໍລະນີກໍມີການແນະນຳສະເໜີໃຫ້ມີນະໂຍບາຍສາກົນໃໝ່, ແລະໃນບາງບ່ອນກໍໄດ້ສະເໜີໃຫ້ມີການປັບປຸງແປງວິທີການເຮັດວຽກ, ກໍຄືບູລິມະສິດ ແລະວິໄສທັດ.

(ງ). ພາກກ່ຽວກັບຄວາມສາມາດໄດ້ຊີ້ໃຫ້ເຫັນວ່າຄວນພັນທະນາ ຫຼືສະໜອງໃຫ້ສະຖາບັນຄື ແນວໃດ.

(ຈ). ພາກຄົ້ນຄ້ວາ/ເຕັກໂນໂລຊີ ຊຶ່ງລວມມີທັງເລື່ອງພັດທະນາ ແລະຖ່າຍທອດເຕັກໂນໂລຊີ ໄດ້ຊີ້ແຈງໃຫ້ເຫັນບັນດາຂົງເຂດ, ຄົ້ນຄ້ວາ ແລະປະຕິບັດການທາງດ້ານວິທະຍາສາດ, ວິທີການ ຫຼືເຕັກໂນໂລຊີທີ່ເໝາະສົມ ເພື່ອປະຕິບັດກິດຈະກຳບູລິມະສິດ.

(ສ). ພາກການປະສານງານ ແລະປຶກສອງເວົ້າເຖິງວິທີການທີ່ບັນຫາຕ່າງໆນັ້ນຄວນດຳເນີນໄປ ແບບໃດ ໃນເມື່ອມີການວາງແຜນ ແລະປະຕິບັດກິດຈະກຳບູລິມະສິດ.

(ຊ). ພາກທີ່ມີຊື່ວ່າ "ກິດຈະກຳນີ້ພົວພັນຢ່າງໃກ້ຊິດກັບລາຍການກິດຈະກຳອື່ນໆ ໃນແຜນດຳ ເນີນງານໂລກ ນັ້ນມັນພົວພັນກັບພາກກນີ້. ແຜນດຳເນີນງານໂລກຖືກອອກແບບມາ ເພື່ອໃຫ້ ເປັນແບບແຜນແບບປະສົມປະສານ. ມັນຈະປະຕິບັດຢ່າງເກີດຜົນໄດ້ກໍຕໍ່ເມື່ອກິດຈະກຳຕ່າງໆ ຊ່ວຍຊູຊຶ່ງກັນ ແລະກັນ. ດັ່ງນັ້ນຜົນສຳເລັດຂອງກິດຈະກຳບູລິມະສິດອື່ນພັນ. ຕົວຢ່າງ, " ການ ສືບຕໍ່ໃຫ້ມີການເກັບແນວພັນດັ້ງເດີມ ຊຶ່ງມີຢູ່ປັດຈຸບັນ" (ກິດຈະກຳ 5) ມັນຈະຕ້ອງອີງອາໃສກິດ ຈະກຳອື່ນໆ ພາຍໃຕ້ວຽກງານ "ສ້າງລະບົບຂໍ້ມູນຂ່າວສານທີ່ຄົບຖ້ວນ ເພື່ອ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ (ກິດຈະກຳ 17). ຍ້ອນສະພາບ ອີງອາໃສ ກັນດັ່ງກ່າວ, ບໍ່ແມ່ນວ່າ ກິດຈະກຳ ທັງໝົດທີ່ຈຳເປັນ ເພື່ອບັນລຸວຽກອະນຸລັກ ແນວພັນພືດ ນອກຖິ່ນກຳເນີດ ຈາກເຂດ ທຳມະຊາດຂອງມັນ ຈະສາມາດຢູ່ໃຕ້ຫົວຂໍ້ ກິດຈະກຳ ບູລິມະສິດ ນັ້ນເທົ່ານັ້ນ. ເມື່ອເຫັນວ່າ ມີການອາໃສ ກັນມີຄວາມສຳຄັນພິເສດ, ເພິ່ນກໍເອົາເຂົ້າ ໃສ່ພາກນີ້.

13.ມີບາງຄັ້ງຄາວ, ບັນດາສະຖາບັນ ຫຼືພາກສ່ວນໃດໜຶ່ງໄດ້ກຳນົດເຖິງກິດຈະກຳຕ້ອງເຮັດ. ເວົ້າ ຄືແນວນີ້ບໍ່ໃຫ້ໝາຍຄວາມວ່າສະຖາບັນນັ້ນບໍ່ໃຫ້ຫຍຸ້ງກ່ຽວກັບກິດຈະກຳອື່ນໆ.ຂໍ້ອ້າງອີງດັ່ງກ່າວແມ່ ນ ພຽງແຕ່ຢາກຍົກໃຫ້ເຫັນເຖິງບົດບາດສະຖາບັນນັ້ນ ວ່າມັນສຳຄັນ ບົ່ງຊີ້ຂຶ້ນມາເພື່ອບໍ່ໃຫ້ເບິ່ງຂ້າມ ສະຖາບັນເລົ່ານັ້ນ ຫຼືອາດຈະເປັນຍ້ອນເຫດຜົນທັງສອງຢ່າງກໍເປັນໄດ້.

## ບັນດາໜ້າວຽກ ບຸລິມະສິດ

## <u>ການອະນຸລັກ ແລະ ພັດທະນາແນວພັນ ໃນຖິ່ນກຳເນີດ</u>

1. ເຮັດການ ສຳຫລວດຄົ້ນຄ້ວາ ແລະຂຶ້ນບັນຊີ ຊັບພະຍາກອນພັນທຸກຳພືດເພື່ອ ອາຫານແລະການກະສິກຳ.
2. ໃຫ້ການສະໜັບສະໜູນ ວຽກຄຸ້ມຄອງ ແລະປັບປຸງ ຊັບພະຍາກອນພັນທຸກຳພືດເພື່ອ ອາຫານແລະການກະສິກຳ ຢູ່ບ່ອນປູກຝັງທີ່ຟາມ.
3. ຊ່ວຍເຫຼືອຊາວກະສິກອນໃນສະພາບຄັບຂັນ ເພື່ອກອບກູ້ລະບົບກະເສດ.

4. ສົ່ງເສີມໃຫ້ມີການອະນຸລັກໃນຖິ່ນກຳເນີດແນວພັນພືດປ່າດັ້ງເດີມໃນຕະກູນພືດທີ່ປູກຝັງແລ້ວ ແລະພືດປ່າເພື່ອນຳໄປຜະລິດເປັນອາຫານ .

## 1. <u>ການສຳຫລວດ ແລະ ການຂຶ້ນບັນຊີ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານແລະການກະສິກຳ.</u>

14 ***ການຕີລາຄາ:*** ການອະນຸລັກແບບສົມເຫດສົມຜົນ (ສຳລັບອະນຸລັກແນວພັນດັ້ງເດີມ ແລະພືດຢູ່ໃນ ແລະ ນອກຖິ່ນກຳເນີດຕາມທຳມະຊາດຂອງມັນ ໃຫ້ດີຄວນເລີ້ມດ້ວຍການສຳຫຼວດ ແລະຂຶ້ນບັນຊີຊັບພະຍາກອນທີ່ພວມມີຢູ່. ເພື່ອຂຽນນະໂຍບາຍ ແລະຍຸດທະສາດໃຫ້ລະອຽດ ເພື່ອອະນຸລັກ ແລະນຳໃຊ້ ຊັບພະຍາກອນພັນທຸກຳພືດເພື່ອ ອາຫານແລະການກະສິກຳ. ໄດ້ນັ້ນ, ຜູ້ຂຽນແຜນງານແຫ່ງຊາດຕ້ອງຮູ້ວ່າຊັບພະຍາກອນທຳມະຊາດທີ່ມີຢູ່ໃນປະເທດຕົນມີຫຍັງແດ່. ຊຸມປະເທດທີ່ໄດ້ໃຫ້ສັດຕະຍາບັນແກ່ສົນທິສັນຍາວ່າດ້ວຍຊີວະນາໆພັນ ໄດ້ຮັບຮູ້ເຫັນພ້ອມນຳວ່າຕົນມີຄວາມຕ້ອງການ ແລະຄວາມຮັບຜິດບາງປະການຕໍ່ບັນຫານີ້. ລາຍງານສະພາບພາຍໃນປະເທດຊີ້ໃຫ້ເຫັນວ່າຍັງຂາດການປະຕິບັດງານແບບເປັນລະບົບໃນຫຼາຍໆພືດ ແລະສາຍພັນປ່າຂອງພືດ.

**15ຈຸດປະສົງໄລຍະຍາວ: ເພື່ອ**ພິສູດ , ຮູ້ທີ່ຕັ້ງ, ຂຶ້ນບັນຊີ ແລະ ເທົ່າທີ່ເປັນໄປໄດ້ໃຫ້ຕີລາຄາຄວາມສ່ຽງໄພທີ່ມີຕໍ່ ຊະນິດແນວພັນ, ຊະນິດນິເວດ , ແນວພັນ, ແລະ ປະຊາກອນ ຂອງພືດທີ່ເໝາະສຳລັບອາຫານ ແລະກະເສດ, ສະເພາະຢ່າງຍິ່ງສຳລັບພວກທີ່ຄາດຄະເນວ່າຈະມີການ ນຳໃຊ້.

16.ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາຍຸດທະສາດ ການອະນຸລັກຕ່າງໆ ທີ່ກົມກືນຊ່ວຍຊູກັນ (ຕົວຢ່າງ: ຊັ່ງຊາເບິ່ງຄວາມຈຳເປັນ ແລະສຳຄັນໃນການເກັບອະນຸລັກພັນທຸກຳຢູ່ນອກເຂດ ຖິ່ນກຳເນີດທຳມະຊາດຂອງມັນ ແລະຫຼືສືບຕໍ່ອະນຸລັກແນວພັນຢູ່ໃນຖິ່ນກຳເນີດເຂດທຳມະຊາດຂອງມັນ) ແລະພັດທະນາບັນດານະໂຍບາຍແຫ່ງຊາດ ທີ່ພົວພັນເຖິງການອະນຸລັກ ແລະນຳໃຊ້ຊັບພະຍາກອນພັນທຸກຳພືດເພື່ອ ອາຫານແລະ ການກະສິກຳ ແບບຍືນຍົງ.

**17.ບັນດາຈຸດປະສົງໄລຍະກາງ:** ເພື່ອພັດທະນາບັນດາວິທີການທີ່ເປັນປະໂຫຍດສຳລັບການສຳຫຼວດ ແລະຂຶ້ນບັນຊີ ຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ

.

**18.ນະໂຍບາຍ/ຍຸດທະສາດ:**ຄວນຖືວ່າວຽກການສຳຫຼວດແລະຂຶ້ນບັນຊີຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ ແມ່ນບາດກ້າວນຶ່ງໃນຂະບວນການອະນຸລັກ ແລະຄວາມພະຍາຍາມຫຼຸດຜ່ອນອັດຕາການສູນເສຍດ້ານຊີວະນາໆພັນ. ປັດສະຈາກປັດໃຈຄວາມສາມາດດ້ານອະນຸລັກ ແລະຫຼືນຳໃຊ້ວຽກງານດັ່ງກໍອາດມີຄຸນປະໂຫຍດຫຼຸດໜ້ອຍລົງ. ດັ່ງນັ້ນວຽກງານສຳຫຼວດ ແລະ

ຂຶ້ນບັນຊີໃຫ້ດີຈະຕ້ອງພົວພັນເຖິງບັນດາຈຸດປະສົງ ແລະແຜນໃດແຜນໜຶ່ງ ທີ່ພົວພັນເຖິງການອະນຸລັກແນວພັນ ໃນຖິ່ນກຳເນີດດັ້ງເດີມ ຫຼືການເກັບ ແລະນຳໃຊ້ແນວພັນຈາກຖິ່ນອື່ນ

19.ຄວນຮັບຮູ້ວ່າຄວາມຮູ້ທ້ອງຖິ່ນ ແລະພື້ນເມືອງແມ່ນປັດໃຈສຳຄັນໃນກິດຈະກຳສຳຫຼວດ ແລະຂຶ້ນແຜນ ແລະຕ້ອງເອົາໃຈໃສ່ບັນຫານີ້ຢ່າງເໝາະສົມ.

**20.ຄວາມສາມາດ:** ບັນດາປະເທດຄວນສະໜອງ ແລະອາດຕ້ອງການການສະໜັບສະໜູນທາງການເງິນ ແລະວິຊາການເພື່ອສຳຫຼວດ ແລະບັນຊີ ຊັບພະຍາກອນພັນທຸກຳພືດເພື່ອ ອາຫານແລະການກະສິກຳ ແບບຍືນຍົງ.

21.ປະເທດຕ່າງໆຄວນສະໜອງ ແລະອາດຕ້ອງການ ການຊ່ວຍເຫຼືອເພື່ອສາມາດເຂົ້າເຖິງສິ່ງອຳນວຍຄວາມສະດວກຂອງລະບົບຂໍ້ມູນຂ່າວສານດ້ານພູມສາດ ກໍຄືຂໍ້ມູນຕ່າງໆທີ່ມີຢູ່ ແລະຕາມແຜນການ ແລະ ຄວາມເໝາະສົມຕົວຈິງ.

22.ການອົບຮົມ ແລະການສ້າງຄວາມສາມາດຄວນຈັດໃຫ້ມີໂດຍສະເພາະໃນດ້ານຈຳແນກປະເພດພືດພັນ, ຊີວະສາດດ້ານປະຊາກອນພືດ, ການນຳໃຊ້ພືດໃນສັງຄົມມະນຸດ, ແລະການສຳຫຼວດດ້ານນິເວດພາກພື້ນ ແລະການສຳຫຼວດ ລະບົບນິເວດກະສິກຳ

23.**ການຄົ້ນຄ້ວາ/ເຕັກໂນໂລຊີ:** ຄວນໃຫ້ການສະໜັບສະໜູນຢ່າງພຽງພໍ ເພື່ອພັດທະນາວິທີການທີ່ດີກວ່າ ເພື່ອເຮັດການສຳຫຼວດ ແລະຕີລາຄາຄວາມຫຼາກຫຼາຍພາຍໃນບັນດາລະບົບນິເວດກະສິກຳ ທັງພາຍໃນແຕ່ລະ ປະເພດ ແລະແຕ່ລະ ຊະນິດແນວພັນ.

24.ຂໍ້ມູນຂ່າວສານທີ່ມີຢູ່ຄວນເອົາໄປນຳໃຊ້ໃນການຄົ້ນຄ້ວາເພື່ອກຳນົດໃຫ້ໄດ້ວ່າຊະນິກແນວພັນພືດພື້ນເມືອງທີ່ມີສາຍພັນຈາກພືດປ່າ ວ່າມີຈຳນວນຫຼາຍປານໃດແລ້ວທີ່ຢູ່ໃນເຂດປົກປ້ອງ.

25.**ການປະສານງານ/ການຄຸ້ມຄອງບໍລິຫານ:** ສ່ວນຫຼວງຫຼາຍຂອງວຽກປະສານງານຕ້ອງເຮັດພາຍໃນປະເທດ. ການປະສານງານລະດັບພາກພື້ນ ແລະສາກົນຈະແມ່ນເລື່ອງຈຳເປັນ ເພື່ອພົວພັນວຽກງານອະນຸລັກແນວພັນ ໃນຖິ່ນກຳເນີດ ແລະແນວພັນ ນອກຖິ່ນອື່ນ ຊຶ່ງມີຢູ່ໃນປັດຈຸບັນ.

26.ຈຳເປັນຕ້ອງສ້າງສາຍພົວພັນເຊື່ອມຕໍ່ລະຫວ່າງຕາໜ່າງແຫ່ງຊາດ ແລະພາກພື້ນກັ່ງວກັບວຽກງານພືດ ແລະຜູ້ນຳໃຊ້ ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະ ການກະສິກຳນັກປັບປຸງພັນ ແລະຊາວໄຮ່ນາ ເພື່ອຈຸດປະສົງແຈ້ງຂ່າວ, ຊີ້ຊ່ອງທາງ ແລະກຳນົດບູລິມະສິດທັງ

ໝົດຂະບວນການອະນຸລັກ. ບັນດາປະເທດຄວນປະສານຮ່ວມມືໃນວຽກງານສຳຫຼວດ ແລະຂຶ້ນບັນຊີເພື່ອຈະໄດ້ສ້າງຄວາມເຂັ້ມແຂງພາຍໃນປະເທດຕົນ.

27.ຄວນເພີ່ມທະວີການປະສານສົມທົບລະຫວ່າງອົງການສາກົນທີ່ກ່ຽວຂ້ອງ ໃນນັ້ນລວມມີອົງການ FAO, UNEP, UNESCO, IUCN ແລະສູນຄົ້ນຄ້ວາກະສິກຳ ນານາຊາດ

**28.ກິດຈະກຳນີ້ກ່ຽວຂ້ອງມີດັ່ງຫລຸ່ມນີ້:**

- ການສົ່ງເສີມວຽກອະນຸລັກພັນໃນພື້ນທີ່ກຳເນີດ ສາຍພັນພືດປ່າ ແລະພືດປ່າ ສຳລັບຜະລິດອາຫານ.
- ການສະໜັບສະໜູນການບໍລິຫານຢູ່ກັບພື້ນທີ່ຂອງຊາວ ກະສິກອນ ແລະການປັບປຸງຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ
- ການສະໜັບສະໜູນການເກັບຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ ທີ່ມີແຜນການ ແລະເປົ້າໝາຍ.
- ການສືບຕໍ່ໃຫ້ມີການເກັບແນວພັນນອກຖິ່ນ ກຳເນີດ
- ການພັດທະນາລະບົບຕິດຕາມແລະການເຕືອນໄພແຕ່ຫົວທີດ້ານການສູນເສຍຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ

## 2. <u>ການສະໜັບສະໜູນ ວຽກຄຸ້ມຄອງ ແລະປັບປຸງ ຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ ຢູ່ ພື້ນຂອງຊາວ ກະສິກອນ.</u>

**29.ການຕີລາຄາ:** ການປັບປຸງແນວພັນໃໝ່ ໄດ້ປະສົບຜົນສຳເລັດຢ່າງໃຫຍ່ຫຼວງໃນການຍົກສະມັດຕະພາບ ແລະປັບປຸງ ພັນທີ່ມີຄວາມສາມາດຕ້ານທານຕໍ່ສັດຕູພືດ ແລະພະຍາດກໍຄືການຍົກຄຸນນະພາບຜະລິດຕະພັນອາຫານ, ໂດຍສະເພາະໃນສິ່ງແວດລ້ອມທີ່ເອື້ອອຳນວຍ. ຊາວໄຮ່ນາເລືອກປູກແນວພັນໃໝ່ ຍ້ອນເຫດຜົນຫຼາຍຢ່າງ ໃນນັ້ນລວມມີສະພາບຕະຫຼາດ, ຄວາມໝັ້ນຄົງດ້ານອາຫານສຳລັບຄອບຄົວ ແລະຄວາມຍືນຍົງດ້ານສິ່ງແວດລ້ອມ.ແຕ່ມັນເປັນເລື່ອງໜ້າເສຍດາຍທີ່ວ່າແນວທາງເລືອກດັ່ງກ່າວນັ້ນ ມັກເປັນຜົນສະທ້ອນໃຫ້ມີສະພາບພັນທຸກຳຢ່າງຫຼວງຫຼາຍ. ອີກດ້ານນຶ່ງໃນບາງປະເທດມີຊາວກະສິກອນສ່ວນໃຫຍ່ ມີທາງເລືອກຂອງເຂົາເຈົ້າເອງ ຫຼືຍ້ອນຄວາມຈຳເປັນໃນຕົວຈິງໄດ້ພາກັນອະນຸລັກ ແລະ ພັດທະນາ ຊັບພະຍາ ກອນພັນທຸກຳພືດເພື່ອ ອາຫານແລະການກະສິກຳໂດຍການເລືອກ ແລະເກັບຮັກສາເມັດພັນ ເພື່ອເປັນແນວປູກໃນລະດູການຕໍ່ໄປ. ສ່ວນຫຼວງ ຫຼາຍຊາວໄຮ່ນາຈຳນວນນັ້ນມັກຈະລົງທຶນຕ່ຳ ໃນການຜະລິດ ແລະສ່ວນຫຼາຍກໍຂາດຄວາມສາມາດເຂົ້າເຖິງຊັບພະຍາກອນພັນ ທຸກຳໃໝ່ທີ່ຫຼາກຫຼາຍ ຊຶ່ງສາມາດນຳໄປປູກແບບປະສົມປະສານກັບແນວພັນປູກ ເພື່ອປັບປຸງຜົນຜະລິດ. ໃນແງ່ປະຫວັດສາດ,ຊາວ ກະສິກອນໃນປະເທດພັດທະນາມີຄວາມສາມາດເຂົ້າເຖິງ ແນວພັນຈຳນວນຫຼວງຫຼາຍໄດ້ປະກອບສ່ວນຊ່ວຍຍົກປະ

ລິມານຜົນຜະລິດ ແລະເຮັດໃຫ້ພືດປູກສາມາດດັດປັບເຂົ້າ ກັບສະພາບໂດຍຜ່ານຂະບວນການເລືອກເຟັ້ນຂອງຊາວໄຮ່ນາ. ມັນຍັງຊ່ວຍໃຫ້ມີການຂະຫຍາຍຕົວຂອງບໍລິສັດແນວພັນທ້ອງຖິ່ນ.

30.ວິທີການເໝາະສົມແລະທີ່ມີຫົວຄິດປະດິດສ້າງດ້ານການປູກຝັງທີ່ມີທ່າແຮງຕ່ຳໃນການຍົກຜະລິດຕະພາບແລະ ຕົ້ນທຶນຕ່ຳ ນັ້ນໃຫ້ໄດ້ຫຼາຍພຽງແຕ່ການປັບປຸງພັນທຸກຳເທົ່ານັ້ນປະກົດວ່າຈະຈຳກັດເຊັ່ນດຽວ. ເຖິງປານນັ້ນກໍຕາມ, ສະມັດຕະພາບທີ່ເພີ່ມຂຶ້ນແມ່ນມີຄວາມສຳຄັນສຳລັບຄວາມໝັ້ນຄົງດ້ານສະບຽງອາຫານ ແລະເພື່ອຫຼຸດຜ່ອນຄວາມກົດດັນທີ່ມີຕໍ່ສະພາບແວດລ້ອມ. ພາກສ່ວນເອກະຊົນ ຫຼືສະຖາບັນຄົ້ນຄ້ວາຂອງລັດ ປັດຈຸບັນຍັງບໍ່ມີຄວາມສາມາດຮັບໃຊ້ພົນລະເມືອງຈຳນວນຫຼວງຫຼາຍທີ່ດ້ອຍໂອກາດດ້ານເສດຖະກິດນີ້ໄດ້ຢ່າງຄົບຖ້ວນ. ຫຼາຍໆລັດຖະບານພວມຊອກຫາວິທີການໃຫ້ຊາວໄຮ່ນາໄດ້ຮັບສິດ ໂດຍສ້າງລະບຽບກົດໝາຍທີ່ເໝາະສົມ.

31.ບັນດາຂໍ້ລິເລີ່ມສຸມໃສ່ການຄຸ້ມຄອງບໍລິຫານຢູ່ພື້ນທີ່ປູກຝັງແລະການປັບປຸງຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ອາດຈະສາມາດຊ່ວຍ ຊາວກະສິກອນຈຳນວນຫຼວງຫຼາຍໄດ້ ພ້ອມທັງສົ່ງເສີມການ ພັດທະນາກະສິກຳ ເພີ້ມຂື້ນ.ສິ່ງດັ່ງກ່າວ ມັນກໍຂື້ນກັບຊາວກະສິກອນເອງ ໃນການຈະຕັດສິນໃຈທີ່ຈະສືບຕໍ່ເສີມຂະຫຍາຍ ແລະໝູນໃຊ້ຜົນຈາກຄວາມພະຍາຍາມກຳລັງສືບຕໍ່ ເພື່ອປັບປຸງແນວພັນພືດດ້ວຍວິທີການຄັດເລືອກແນວພັນຈະນວນຫຼວງຫຼາຍກໍຄືດ້ວຍວິທີ ປັບປຸງພັນອື່ນໆ. ແລະກໍຈຳເປັນຕ້ອງຮັບຮູ້ບົດບາດໃຈກາງຂອງເພດຍິງໃນການຜະລິດກະສິກຳ ໃນບັນດາປະເທດກຳລັງພັດທະນາສ່ວນຫຼວງຫຼາຍ. ຄວາມພະຍາຍາມຊ່ວຍກະສິກອນໃຫ້ສາມາດເຂົ້າເຖິງຊັບພະຍາກອນພັນທຸກຳທີ່ເໝາະສົມໃຫ້ໄດ້ຫຼາຍ ກວ່າ ເກົ່າ ແລະ ການຝຶກອົບຮົມສາມາດຊ່ວຍຊາວໄຮ່ນາໄດ້ໃນຫຼາຍໆຄຸນລັກສະນະຂອງຜະລິດຕະພັນສຳລັບການປູກຝັງ (ເຊັ່ນດ້ານຕ້ານທານກັບພະຍາດ ແລະສັດຕູພືດ) ກໍຄືດ້ານການເພີ່ມທະວີການຜະລິດກະສິກຳ. ຫຼາຍໆລັດຖະບານ, ສະຖາບັນຄົ້ນຄ້ວາ ແລະອົງການບໍ່ສັງກັດ
ລັດຖະບານພວມຄົ້ນຄ້ວາໂຄງການ ແລະສົ່ງເສີມໃຫ້ມີການຄຸ້ມຄອງວຽກຢູ່ກັບບ່ອນປູກຝັງ ແລະປັບປຸງ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານແລະການກະສິກຳ. ແຕ່ມັນກໍຍັງມີຫຼາຍໆຄຳຖາມສຳຄັນໆດ້ານວິຊາການ ແລະວິທີການຕັ້ງຂຶ້ນຍັງມີຂໍ້ຈຳກັດດ້ານ ຄວາມອາດສາມາດຂອງໂຄງການເລົ່ານີ້ ປະກົດການດັ່ງກ່າວໃດ້ສະແດງອອກ ໃຫ້ເຫັນວ່າວຽກງານ ການປັບປຸງ ລະບົບ
ການຜະລິດ ໃນພື້ທີ່ ຂອງຊາວກະສິກອນ ຍັງບໍ່ທັນໃດ້ຮັບຜົນ .

32.**ບັນດາຈຸດປະສົງໄລຍະຍາວ:** ເພື່ອເຂົ້າໃຈ ແລະປັບປຸງປະສິດຕິຜົນຫຼາຍກວ່າເກົ່າກ່ຽວກັບການອະນຸລັກ, ບໍລິຫານ ແລະປັບປຸງ ແລະນຳໃຊ້ ຊັບພະຍາກອນ ພັນທຸກຳພືດເພື່ອອາຫານແລະການກະສິກຳ ຢູ່ກັບ ພື້ນທີ່ປູກຝັງ. ເພື່ອໃຫ້ເກີດຄວາມດຸ່ນດ່ຽງລະຫວ່າງການອະນຸລັກແນວພັນໃນຖິ່ນກຳເນີດ ແລະແນວພັນນອກ ຖິ່ນກຳເນີດ ຈາກເຂດທຳມະຊາດຂອງມັນ. ເພື່ອປະຕິບັດສິດທິ

ຊາວກະສິກອນ ຕາມກຳນົດໄວ້ໃນມະຕິ 5/89 ຂອງ ອົງການອາຫານ ແລະການກະເສດ ໃນລະດັບສາກົນ, ພາກພື້ນ ແລະລະດັບຊາດ. ເພື່ອສົ່ງເສີມໃຫ້ມີຄວາມສະເໝີພາບໃນການແບ່ງປັນຜົນປະໂຫຍດໄດ້ຈາກ ຊັບພະຍາກອນ ພັນທຸກຳພືດເພື່ອອາຫານ ແລະການກະສິກຳ ຢູ່ກັບ ພື້ນທີ່ປູກຝັງດັ່ງທີ່ ໄດ້ລະບຸໄວ້ ໃນສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍຂອງຊີວະນາໆພັນ. ເພື່ອສະໜັບສະໜູນສົ່ງເສີມບັນດາບໍລິສັດ, ລັດ, ເອກະຊົນ ແລະສະຫະກອນກ່ຽວກັບເມັດພັນພືດ ຊຶ່ງແມ່ນສິ່ງທີ່ຕິດຕາມມາທີ່ໄດ້ຜົນຈາກການເລືອກເຟັ້ນ ແລະແຜ່ແນວພັນ. ນອກນັ້ນກໍແມ່ນເພື່ອສົ່ງເສີມໃຫ້ເກີດລະບົບແລກປ່ຽນ ແລະສະໜອງແນວພັນນຳກັນແບບປະເພນີຜ່ານມາ.

**33.ບັນດາຈຸດປະສົງສະເພາະໜ້າ:** ເພື່ອໃຫ້ເກີດຄວາມຮູ້ຫຼາຍກວ່າເກົ່າດ້ານ ວິວັດທະນາການ, ວິທີການ, ຜົນກະທົບ, ແລະຄວາມສາມາດບົ່ມຊ້ອນກ່ຽວກັບການອະນຸລັກ ແລະປັບປຸງພືດຢູ່ກັບຟາມ. ເພື່ອພັດທະນາ ແລະສ້າງຄວາມເຂັ້ມແຂງໃຫ້ບັນດາແຜນງານ ແລະຕາໜ່າງສຳລັບຄຸ້ມຄອງ. ແນວພັນພືດ,ສາຍພັນພືດປ່າ ທີ່ເປັນອາຫານ, ພືດອາຫານທີ່ຖືກເກັບກ່ຽວ ແລະບັນດາຊັບພະຍາກອນພັນທຸກຳຢູ່ ພື້ນທີ່ ຂອງຊາວກະສິກອນ. ເພື່ອຂະຫຍາຍບົດບາດຂອງ ທະນາຄານເຊື້ອພັນ ລະດັບຊາດ, ພາກພື້ນ ແລະສາກົນລວມເອົາທັງການສະໜັບສະໜູນ ແລະສະໜອງວັດສະດຸໃຫ້ບັນດາແຜນງານປັບປຸງຢູ່ບ່ອນປູກຝັງ. ເພື່ອສ້າງແຜນງານ ຢູ່ພື້ນທີ່ ຂອງ ຊາວກະສິກອນ ແລະອີງໃສ່ລະບົບທ້ອງຖິ່ນດ້ານຄວາມຮູ້, ສະຖາບັນ ແລະດ້ານການຄຸ້ມຄອງບໍລິຫານ, ເພື່ອໃຫ້ມີການ ປະກອບສ່ວນຂອງທ້ອງຖິ່ນ ເຂົ້າໃນການວາງແຜນ, ບໍລິຫານ ແລະການປະເມີນຕີລາຄາ. ເພື່ອໃຫ້ພາກສ່ວນສັງຄົມ ແລະ ຂະແໜງການວິທະຍາສາດໃຫ້ຄວາມສົນໃຈຫຼາຍກວ່າເກົ່າກ່ຽວກັບບົດບາດຂອງເພດຍິງ ໃນວຽກການຜະລິດ ແລະຄຸ້ມຄອງຊັບພະຍາກອນໃນຄົວເຮືອນ ເຂດຊົນນະບົດ.

**34.ນະໂຍບາຍ-ຍຸດທະສາດ:** ບັນດາກິດຈະກຳ ໃນພື້ນທີ່ ຂອງຊາວກະສິກອນ ແມ່ນວິທີການທີ່ ແນໃສ່ປັບປຸງແບບແຜນວິທີການປະຕິບັດທີ່ ໃນຊຸມຊົນຈຳນວນໜຶ່ງທີ່ໄດ້ເລືອກມາ. ໜ້າວຽກດັ່ງກ່າວໃຫ້ຖືວ່າມັນຈະໄດ້ດຳເນີນໄປແບບປະສົມປະສານກັນ ບໍ່ແມ່ນປ່ຽນແທນໃຫ້ແກ່ບັນດາລະບົບທີ່ເປັນທາງການກວ່າ ເພື່ອພັດທະນາ ແນວພັນ ແລະສະໜອງເມັດພັນ. ແບບວິທີເຮັດວຽກກັບຊຸມຊົນຊາວໄຮ່ນາຂອງສາກົນຈະຕ້ອງບໍ່ແຂງກະດ້າງຕາຍໂຕ ໂດຍບໍ່ຄວນຈະມີແຜນ ແລະແບບວິທີພຽງແຕ່ນຶ່ງດຽວ. ມັນຈຳເປັນຕ້ອງຊອກຫາ ຕົວຢ່າງທີ່ນຳໃຊ້ການໄດ້ດ້ານອະນຸລັກ ແລະ ນຳ ໃຊ້ຊັບພະຍາກອນພັນທຸກຳພືດ ເພື່ອາຫານ ແລະ ການກະສິກຳ ແບບຍືນຍົງທີ່ຈະອຸ້ມຊູ ວັດທະນາ ທຳ ຂອງ ຊຸມຊົນ ພື້ນເມືອງໃຫ້ຍືນຍົງ ພ້ອມທັງປັບປຸງ ຄຸນນະພາບຊີວິດ.

35.ລັດຖະບານທັງຫຼາຍຄວນຄຳນຶງເຖິງແບບແຜນ ວິທີການ ຜະລິດສິ່ງຊຸກຍູ້ທາງເສດຖະກິດ ແລະນະໂຍບາຍອື່ນໆ ພ້ອມທັງການບໍລິຫານ ການສົ່ງເສີມກະສິກຳ ແລະການຄົ້ນຄວ້າ ຊຶ່ງ ອາດຈະອຳນວຍຄວາມສະດວກ ແລະ ສົ່ງເສີມໃຫ້ມີການຄຸ້ມຄອງ ແບບໃນພື້ນທີ່ຂອງຊາວກະສິກອນ ແລະການ ປັບປຸງຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ.

36.ຖ້າເປັນໄປໄດ້, ຄວນພິຈາລະນາດ້ານສ້າງຄວາມເຂັ້ມແຂງ ລະບົບຄົ້ນຄ້ວາລະດັບຊາດ ໃຫ້ແກ່ທ້ອງຖິ່ນ ເພື່ອຈະໄດ້ມີສ່ວນຮ່ວມໃນທຸກຂັ້ນຕອນຂອງການ ປັບປຸງພັນ, ລວມທັງຂັ້ນຕອນ ການຄັດເລືອກ ແລະນຳມາດັດປັບເພື່ອນຳໃຊ້ລະດັບ ຂັ້ນຊາວບ້ານ.

37.ບັນດາລັດຖະບານ, ອົງກອນໃຫ້ທຶນ, ສູນຄົ້ນຄວ້າກະສິກຳສາກົນ, ອົງການບໍ່ສັງກັດລັດ ແລະອື່ນໆຄວນ ສັງລວມເອົາບັນຫາບົດບາດຍິງຊາຍ ແລະປັດໃຈສັງຄົມ-ວັດທະນະທຳເຂົ້າໃນການອອກແບບ ແລະປະຕິບັດ ແຜນງານດ້ານຄົ້ນຄວ້າກະສິກຳ ແລະກິດຈະກຳກ່ຽວກັບ ຊັບ ພະຍາ ກອນ ພັນທຸ ກຳພືດເພື່ອອາຫານແລະ ການກະສິກອນ

**38ຄວາມສາມາດ:** ຄວນໃຫ້ການອຸ້ມຊູຢ່າງພຽງພໍຕໍ່ສະຖາບັນລະດັບຊຸມຊົນ ແລະກຸ່ມຜູ້ນຳໃຊ້ ໂດຍໃຫ້ການຊ່ວຍເຫຼືອແບບໄດ້ຜົນແກ່ວຽກງານອະນຸລັກທີ່ ພື້ນທີ່ ຊາວ ກະສິກອນ ແລະປັບປຸງພັນ.

**39.ຄວນ**ຄຳນຶງເຖິງຄວາມຮຽກຮ້ອງຕ້ອງການຕ່າງໆ ແລະຈຳນວນຊາວກະສິກອນທີ່ຈະຮັບການບໍລິການ, ທະນາຄານເຊື້ອພັນ ແລະສະຖາບັນແຫ່ງຊາດ ແລະສາກົນຄວນພິຈາລະນາຄວາມເໝາະສົມໃນເລື່ອງເນື້ອທີ່ດິນ/ແນວພັນ ຂອງ ຊາວກະສິກອນ ເພື່ອ ການຂະຫຍາຍພັນ ແລະ/ຫຼືເພື່ອພັດທະນາ ປະຊາກອນສາຍພັນໃໝ່, ນຳເອົາລັກສະນະສະເພາະ ດ້ານ ຂອງ ທ້ອງຖິ່ນ ດັດປັບ ເພື່ອໃຫ້ເກີດກິດຈະກຳປັບປຸງ ໃນພື້ນທີ່ ຂອງຊາວ ກະສິກອນ. ຄວນສົ່ງເສີມໃຫ້ໃຊ້ວິທີການ ປະສົມປະສານ ແລະປັບປຸງແບບທາງກ້າວ ແທນທີ່ຈະໃຊ້ວິທີສັບປ່ຽນແທນຢ່າງຟ້າວຝັ່ງ ຂອງ ຄວາມຫຼາກຫຼາຍໃນພື້ນທີ່ຂອງຊາວກະສິກອນ ທີ່ມີຢູ່ນັ້ນ. ໃຫ້ຖືແບບແຜນວິທີປະຕິບັດທີ່ຈະສົ່ງເສີມໃຫ້ຊາວໄຮ່ນາເຮັດການຄົ້ນຄວ້າ ແລະທົດລອງແນວພັນ ແລະວັດສະດຸຕ່າງໆ ເພື່ອການ ປູກຝັງຊຶ່ງໄດ້ສະໜອງໄປໃຫ້ນັ້ນ, ບໍ່ຄວນສະໜອງໃຫ້ຫຼາຍຈົນ ເກີນໄປເພາະມັນຈະປ່ຽນແທນແຫຼ່ງພັນພືດ ປົກກະຕິ ທີ່ມີຢູ່ນັ້ນ ຫຼືປ່ຽນແທນການບໍລິຫານແນວພັນ ຂອງ ພື້ນທີ່ຊາວ ກະສິກອນ

40.ຄວນພັດທະນາແຜນງານຝຶກອົບຮົມໃນຫຼາຍໆບັນຫາ ເພື່ອໃຫ້ພະນັກງານສົ່ງເສີມ, ອົງການບໍ່ສັງກັດລັດ ແລະອື່ນໆ ໄດ້ອຳນວຍຄວາມສະດວກ ແລະເຮັດໃຫ້ມີກິດຈະກຳຕ່າງໆແບບ ພື້ນທີ່ຊາວກະສິກອນ, ລວມທັງດ້ານ ເຕັກນິກ ການຄັດເລືອກ ແລະ ການປັບປຸງພັນທີ່ເໝາະສົມ ຊ່ວຍຊູ ແລະປັບປຸງວິທີການທີ່ຊາວໄຮ່ນາ.

41.ຈຸດສຸມຂອງແຜນງານຝຶກອົບຮົມ ຄວນແມ່ນເພື່ອຊ່ວຍຊາວກະສິກອນໃຫ້ສາມາດນຳໃຊ້ຄວາມຮູ້ ແລະເຕັກນິກໃໝ່ໃຫ້ໄດ້ດີກວ່າເກົ່າຈົນກາຍເປັນນັກວິຊາການ ແລະໃຫ້ຜູ້ຄົ້ນຄ້ວາ ທີ່ມີຄວາມສາມາດກວ່າເກົ່າໃນການສະໜັບສະໜູນຊາວໄຮ່ນາ. ການອົບຮົມຄວນແນໃສ່ສີ່ເປົ້າໝາຍ: ນັກວິທະຍາສາດ, ພະນັກງານສະໜັບສະໜູນທາງວິຊາການ, ພະນັກງານສົ່ງເສີມ (ລວມທັງອົງກອນບໍ່ສັງກັດ

ລັດ), ແລະກຸ່ມຊາວໄຮ່ນາ. ການສະໜັບສະໜູນວຽກລະດັບສູງຄວນກວມເອົາປະເດັນທີ່ກ່ຽວຂ້ອງໃນຂົງເຂດຊີວະວິທະຍາ ແລະສັງຄົມສາດ ການຝຶກອົບຮົມພະນັກງານສົ່ງເສີມຄວນແນໃສ່ຍົກລະດັບທັກສະໃນການຮູ້ກຳນົດ , ເລືອກເຟັ້ນ ແລະ ປັບປຸງພັນພືດປູກ ແລະຮັກສາແນວພັນໄວ້ທັງນີ້ກໍ່ເພື່ອເປັນຂົວຕໍ່ໃຫ້ລະຫວ່າງນັກວິຊາການຂອງສູນຄົ້ນຄວ້າກະສິກຳແຫ່ງຊາດ ແລະຊາວໄຮ່ນາ.

42.ການອົບຮົມໃຫ້ (ແລະໂດຍ) ຊາວກະສິກອນຄວນເນັ້ນຄວາມສາມາດກຳນົດລັກສະນະ ຂອງພືດ, ການເລືອກ / ປັບປຸງພັນ, ນຳໃຊ້ ແລະຮັກສາແນວພັນທ້ອງຖິ່ນໄວ້. ມັນມີຄວາມສຳຄັນຫຼາຍທີ່ຕ້ອງພັດທະນາທັກສະຊາວກະສິກອນໃນການຄັດເລືອກພືດພັນໃນສະພາບຮູບຮ່າງລຳ ຕົ້ນບໍ່ແມ່ນຈະຮູ້ພຽງແຕ່ພາຍຫຼັງເກັບກ່ຽວພືດເທົ່ານັ້ນ.

43.ແຜນງານຝຶກອົບຮົມຄວນອອກແບບໂດຍມີການສົມທົບຢ່າງໃກ້ຊິດກັບສະຖາບັນຄົ້ນຄວ້າກະສິກຳແຫ່ງຊາດ ແລະຊາວກະສິກອນ ແລະການຈັດຕັ້ງຂອງເຂົາເຈົ້າພ້ອມທັງຄວນອີງໃສ່ຄວາມຮຽກຮ້ອງຕ້ອງການສະເພາະ, ໃນ ມຸມມອງຂອງເຂົາເຈົ້າ. ແຜນງານດັ່ງກ່າວບໍ່ຄວນຖືເບົາບາດ ບາດ ໃຈກາງ ຂອງເພດຍິງຊຶ່ງມີອິດທິພົນແລະນຳພາວຽກການວິວັດທະນາຊຶ່ງສາມາດນຳມາ ເຖິງ ການຜິດແຜນງານນັ້ນ ຄວນຄິດເຖິງວິທີການຕ່າງໆ ໃນການນຳໃຊ້ຊັບພະຍາກອນຊີວະສາດ ໂດຍຍິງ ແລະຊາຍ, ລວມທັງບັນຫາຄວາມເປັນຫ່ວງຂອງເພດຍິງຕໍ່ການນຳໃຊ້ຫຼາຍຄັ້ງ ແລະຄວາມຮຽກຮ້ອງຕ້ອງການດ້ານການປຸງແຕ່ງ ດ້ານຜະລິດຕະພັນພືດ.

**44.ວຽກງານຄົ້ນຄ້ວາ/ເຕັກໂນໂລຊີ:** ຈຳເປັນມີສີ່ປະເພດຄົ້ນຄ້ວາວິທະຍາສາດພື້ນຖານໃນຫຼາຍໆຂະແໜງທີ່ດຳເນີນຢ່າງເປັນລະບົບເຂັ້ມແຂງຄື:

(ກ). ການຄົ້ນຄ້ວາ ດ້ານ ການພົວພັນລະວ່າງມະນຸດແລະພືດສາດ ແລະດ້ານສັງຄົມເສດຖະກິດ ເພື່ອຈະໄດ້ເຂົ້າໃຈ ແລະວິເຄາະຄວາມຮູ້ຂອງຊາວໄຮ່ນາ, ການເລືອກເຟັ້ນ / ປັບປຸງພັນການນຳໃຊ້ ແລະຄຸ້ມ ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ ຊຶ່ງສອດຄ່ອງກັບຄວາມເຫັນດີຂອງຊາວໄຮ່ນາກ່ຽວຂ້ອງ ແລະສອດຄ່ອງກັບຂໍ້ຮຽກຮ້ອງທີ່ນຳໃຊ້ໄດ້ ເພື່ອໃຫ້ມີການປົກປ້ອງຄວາມຮູ້ ແລະເຕັກໂນໂລ ຂອງເຂົາເຈົ້າ.

(ຂ). ການຄົ້ນຄວ້າ ດ້ານ ປະຊາການພືດ ແລະ ການອະນຸລັກເພື່ອເຂົ້າໃຈ ເຖິງໂຄງ ການ ແລະ olynamics ຂອງສະພາບນາໆພັນທາງພັນທຸກຳໃນ ພືດພື້ນເມືອງ /ແນວພັນ ຂອງຊາວໄຮ່ນາ (ລວມທັງການຈຳແນກ ປະຊາກອນພືດນ, ພັນທຸກຳພືດ, ລະດັບການປັບປຸງພັນ, ແລະຄວາມກົດດັນໃຫ້ຕ້ອງຄັດເລືອກ ແນວພັນພືດ);

(ຄ). ການຄົ້ນຄ້ວາເພື່ອປັບປຸງພືດ , ລວມທັງການຄົ້ນຄວ້າດ້ານການຄັດເລືອກພືດແບບເປັນກຸ່ມ ແລະການປະສົມພັນ ແບບງ່າຍດາຍ ເພື່ອຈຸດປະສົງເພີ່ມຜະລິດຕະພາບ ແລະເພື່ອຈະບໍ່ມີການສູນເສຍຄວາມຫລາກຫລາຍຂອງຊີວະນາໆພັນຫຼາຍເກີນໄປ.

(ໆ). ຈະສົ່ງເສີມການຄົ້ນຄ້ວາ ແລະສຶກສາດ້ານການສົ່ງເສີມ ພືດ ທີ່ບໍ່ຄ່ອຍຮູ້ກັນດີ ລວມທັງວຽກງານຜະລິດການຕະຫຼາດ ແລະແຈກຢາຍເມັດພືດ.

45.ເມື່ອໃດຫາກພໍປະຕິບັດໄດ້ ການຄົ້ນຄ້ວາວິທະຍາສາດຄວນຄວບຄູ່ໄປກັບກິດຈະກຳຕ່າງໆ ຢູ່ກັບ ພື້ນທີ່ ຂອງຊາວ ກະສິກອນເພື່ອໃຫ້ເນື້ອໃນ ແລະຈຸດປະສົງຂອງວຽກຄົ້ນຄ້ວານັ້ນເປັນທີ່ເຂົ້າໃຈ ແລະຮັບຮູ້ເປັນຢ່າງດີ. ການຄົ້ນຄ້ວາຄວນຊ່ວຍຊູໃຫ້ແກ່ວຽກງານຕິດຕາມ, ປະເມີນຕີລາຄາ ແລະປັບປຸງວຽກດຳເນີນຢູ່ຟາມ. ການຄົ້ນຄ້ວາຄວນດຳເນີນໄປໃນຮູບແບບມີສ່ວນຮ່ວມ ແລະປະສານສົມທົບເພື່ອສົ່ງເສີມໃຫ້ມີການຕິດຕໍ່ ແລະຮ່ວມມືລະຫວ່າງປະຊາຊົນໃນຊົນນະບົດ ແລະພະນັກງານຈາກບັນດາສະຖາບັນແຫ່ງຊາດ. ເມື່ອໃດຫາກຈຳເປັນ ແລະເຫັນວ່າເໝາະກໍຄວນເອົາສະຖາບັນອື່ນໆ ເຂົ້າມາມີສ່ວນຮ່ວມ.

46.ຄວນພັດທະນາວິທີການ ແລະໃຫ້ການຊ່ວຍເຫຼືອແກ່ວຽກງານເກັບກຳ ແລະສ້າງສາຍພົວພັນລະຫວ່າງ ການອະນຸລັກໃນຖິ່ນກຳເນີດ ຂອງພື້ນທີ່ ຊາວກະສິກອນ ແລະການຄຸ້ມຄອງບໍລິຫານສວນ ແລະການອະນຸລັກ ຊັບພະຍາກອນພືດເພື່ອອາຫານ ແລະ ການກະສິກຳ ກັບທະນາຄານ ເຊື້ອພັນ ແລະສະຖາບັນຄົ້ນຄ້ວາລະດັບຊາດ ແລະພາກພື້ນ.

**47.ການປະສານງານ/ຄຸ້ມຄອງ:** ວຽກປະສານງານລະດັບຊາດ ແລະສາກົນໃນ ພາກພື້ນນີ້ຄວນຈະເອື້ອອຳນວຍ ແລະສົ່ງເສີມໃຫ້ຊຸມຊົນມີຂໍ້ລິເລີ່ມສະເໜີແຜນງານ ຂອງຕົນຂຶ້ນ. ໂຄງການຂະໜາດນ້ອຍລະດັບພື້ນຖານຄວນໄດ້ຮັບບູລິມະສິດໄດ້ຮັບທຶນ ແລະການສະໜັບສະໜູນກ່ອນ. ຄວນໃຫ້ບູລິມະສິດ ແກ່ຊາວໄຮ່ນາທີ່ມີໂຄງການເຕັກນິກ ທີ່ສົ່ງເສີມໃຫ້ສືບຕໍ່ມີສະພາບຫຼາກຫຼາຍທີ່ມີຢູ່ກ່ອນແລ້ວ ແລະຢາກໃຫ້ມີການປະສານສົມທົບລະຫວ່າງຊຸມຊົນກັບສະຖາບັນຄົ້ນຄ້ວາ. ພາຍໃຕ້ເງື່ອນໄຂທີ່ໄດ້ຮັບຜົນເປັນໜ້າພໍໃຈ, ແຜນງານເລົ່ານັ້ນຄວນຈະແກ່ຍາວດົນສົມຄວນ (10 ປີ ຫຼືຫຼາຍກວ່າ) ເມື່ອຈະເຫັນຜົນ.

48.ໃນຄວາມພະຍາຍາມນັ້ນ ຄວນປະສານຢ່າງໃກ້ຊິດກັບສະຖາບັນ ຂະແໜງການຄົ້ນຄວ້າກະສິກຳແຫ່ງຊາດ. ສູນຄົ້ນຄ້ວາກະສິກຳສາກົນຕ່າງໆ, ລວມທັງສະຖາບັນແຫລ່ງ ແຫລ່ງ ພັນທຸກຳພືດ ນານາຊາດ ແລະອົງການບໍ່ສັງກັດລັດຖະບານ ແລະການຈັດຕັ້ງຊາວໄຮ່ນາ. ເມື່ອໃດຫາກເປັນໄປໄດ້ຄວນມີ ແຜນງານຮ່ວມກັບອົງການຕ່າງໆ ເຊັ່ນ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ, ແຜນການສະຫະປະຊາຊາດ ສິ່ງແວບລ້ອມ, ກອງທຶນ ກະສິກຳ ເພື່ອ ການ ພັດທະນາ ສາກົນ, ແລະທະນາຄານໂລກ.

49.**ກິດຈະກຳນີ້ແມ່ນພົວພັນຢ່າງໃກ້ຊິດກັບ:**

- ການສ້າງລະບົບຂໍ້ມູນຂ່າວສານທີ່ຄົບຊຸດດ້ານຊັບພະຍາກອນ ພັນທຸກຳພືດເພື່ອອາຫານ ແລະ ການ ກະສິກຳ
- ການສະໜັບສະໜູນວຽກເກັບ ຊັບພະຍາກອນ ພັນທຸກຳພືດເພື່ອອາຫານ ແລະ ການ ກະສິກຳ ທີ່ມີແຜນການ ແລະຈຸດສຸມ.
- ພັດທະນາຕະຫຼາດໃໝ່ສຳລັບ ແນວພັນ ທ້ອງຖິ່ນ ແລະຜະລິດຕະພັນ "ຮັ່ງມີດ້ານຄວາມ ຫລາກຫລາຍ"
- ຂະຫຍາຍການ ກຳນົດຄູນລັກສະນະ ແລະປະເມີນຕີລາຄາ ພ້ອມທັງຈຳນວນ ແນວພັນທີ່ເກັບມາ ຕົ້ນຕໍເພື່ອຄວາມສະດວກໃນການນຳໃຊ້.
- ເພີ່ມທະວີວຽກງານດ້ານ ການສົ່ງເສີມ ແລະ ການຂະຫຍາຍພື້ນຖານ ດ້ານພັນທຸກຳ
- ສົ່ງເສີມກະສິກຳແບບຍືນຍົງຜ່ານ ຄວາມຫລາກຫລາຍດ້ານ ແນວພັນ ແລະໃຫ້ມີ ການໂຄສະນາ ດ້ານຄວາມຫຼາກຫຼາຍ ຂອງດ້ານ ຢ່າງກວ້າງຂວາງກວ່າເກົ່າ.
- ສົ່ງເສີມການພັດທະນາ ແລະການຕະຫຼາດພືດພັນ ແລະແນວພັນ ພືດ ທີ່ບໍ່ໄດ້ໃຊ້ເຕັມສ່ວນ
- ສະໜັບສະໜູນການຜະລິດ ແລະແຈກຈ່າຍເມັດພືດ.

## 3. ຊ່ວຍເຫຼືອຊາວກະສິກອນໃນສະພາບຄັບຂັນ ເພື່ອກໍ່ສ້າງຄືນລະບົບກະສິກຳ

**50.ການຕີລາຄາ:** ໃນໂລກທັນສະໃໝໃນທຸກວັນນີ້ ໂດຍສະເພາະໃນຂຸມປະເທດກຳລັງພັດທະນາ, ມວນຊົນກຳລັງຕົກຢູ່ໃນສະພາບຄວາມສ່ຽງ ແລະການເປັນເຍື່ອຂອງໄພພິບັດທຳມະຊາດ, ການສູ້ຍັນກັນໃນສັງຄົມ ແລະສົງຄາມ. ບັນຫາຕ່າງໆ ແລະຄວາມເຈັບປວດດັ່ງກ່າວກາຍເປັນສິ່ງທ້າທາຍອັນໃຫຍ່ສຳລັບການດຳລົງຄົງໂຕຂອງລະບົບກະສິກຳທັງຫຼາຍ.ແນວພັນ ພືດທີ່ໄດ້ ປັບຕົວແລ້ວ ຖືກສູນເສຍ ແລະບໍ່ສາມາດກູ້ຄືນໄດ້ຢູ່ລະດັບທ້ອງຖິ່ນ. ການຊ່ວຍເຫຼືອດ້ານອາຫານພ້ອມທັງການນຳເຂົ້າແນວພັນຕ່າງໆ ຊຶ່ງສ່ວນຫຼາຍບໍ່ສາມາດດັດປັບໄດ້ ຈຶ່ງສາມາດເຮັດໃຫ້ ຜະລິດຕະພາບ ຕ່ຳກວ່າເກົ່າເປັນເວລາຫຼາຍປີ. ໃນໄລຍະທີ່ມີຄວາມພະຍາຍາມແກ້ໄຂວິກິດສະເພາະໜ້ານັ້ນ, ໄດ້ມີຄວາມພະຍາຍາມແກ້ໄຂ ບັນຫາດັ່ງກ່າວນັ້ນໄດ້ເຮັດໃຫ້ສະພາບອຶດຫິວຮ້າຍແຮງກວ່າເກົ່າອີກ, ທຳລາຍຄວາມໝັ້ນຄົງດ້ານສະບຽງອາຫານ ແລະເຮັດໃຫ້ຄ່າໃຊ້ຈ່າຍໃນການຊ່ວຍເຫຼືອຂອງຜູ້ໃຫ້ທຶນເພີ່ມຂຶ້ນເປັນເວລາດົນນານ ພາຍຫຼັງວິກິດການ. ຜົນສະທ້ອນຈາກການທີ່ ແນວພັນພືດພື້ນເມືອງ / ແນວພັນຂອງຊາວໄຮ່ນາໄດ້ສູນຫາຍໄປໃນໄລຍະການແກ່ຍາວຄວາມສັບສົນວຸ້ນວາຍແລະເຫັນໄດ້ໃນການອະນຸລັກແນວພັນນອກ ຖິ່ນກຳເນີດຈາກເຂດທຳມະຊາດຂອງມັນ ບໍ່ແມ່ນຢູ່ໃນແຕ່ປະເທດທີ່ມີວິກິດການ. ຖ້າຫາກມີການ ຂະຫຍາຍພັນຢ່າງຖືກຕ້ອງ, ລຳຕົ້ນພືດປະເພດນີ້ ສາມາດກັບຄືນ ສູ່ສະພາບເກົ່າ ເພື່ອຊ່ວຍປະກອບ ຄືນເປັນ ເບັ້ງໄມ້ແນວພັນພືດ ທີ່ໄດ້ດັດປັບພາຍໃນທ້ອງຖິ່ນມາແລ້ວ ຊຶ່ງສິ່ງດັ່ງກ່າວເປັນອົງປະກອບສຳຄັນ ເພື່ອໃຫ້ມີລະບົບກະສິກຳແບບຍືນຍົງໄດ້. ການມີຄູ່ຮ່ວມງານແມ່ນສຳຄັນຫຼາຍ ຕໍ່ ໜ້າວຽກດັ່ງກ່າວ ຊຶ່ງໃນນັ້ນສາມາດລວມທັງລັດຖະບານ ແລະອົງການຈັດຕັ້ງບໍ່ສັງກັດລັດ.

51.**ບັນດາຈຸດປະສົງຍາວນານ:** ເພື່ອຊ່ວຍຟື້ນຟູຊີວິດການເປັນຢູ່ຂອງຊາວໄຮ່ນາ ແລະປະຊາຊົນ ໃນຊົນນະບົດ ໃຫ້ມີທາງເລືອກ ແບບຍືນຍົງ ດ້ານການກະສິກຳ ຜ່ານການປັວແປງຄືນລະບົບກະສິກຳໂດຍອີງອາໃສໃສ່ຊັບພະຍາກອນພັນທຸກຳທີ່ໄດ້ປັບຕົວກັບທ້ອງຖິ່ນມາແລ້ວ ຊຶ່ງລວມໃນນັ້ນ ກໍມີທັງ ການກໍ່ສ້າງແນວພັນ ຄືນໃໝ່ທີ່ເຄີຍ ມີຢູ່ແລ້ວແຕ່ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານ ແລະການກະສິກຳໄດ້ຖືກສູນເສຍຍ້ອນເກີດໄພພິບັດ.

**52.ບັນດາຈຸດປະສົງສະເພາະໜ້າ:** ເພື່ອສ້າງຄວາມສາມາດ ດ້ານການສະໜອງເມັດພັນ ພືດ ໃຫ້ແກ່ທ້ອງຖິ່ນ ຊຶ່ງຈຳເປັນສຳລັບຊ່ວຍສ້າງ ຟື້ນຄືນໃໝ່ລະບົບກະສິກຳພື້ນເມືອງຢູ່ຕາມເຂດ ຊຶ່ງຖືກກະທົບຈາກໄພທຳມະຊາດ, ສົງຄາມ ແລະການຕໍ່ສູ້ພາຍໃນປະເທດ.

53.ເພື່ອສ້າງຄວາມຮັບຜິດຊອບ ໃຫ້ແກ່ ສະຖາບັນ ແລະກົນໄກ ທີ່ກ່ຽວພັນ ການຍຸດຄອງ ແລະ ການຂະຫຍາຍພັນໃໝ່ທີ່ເຫັນວ່າເໝາະສົມ.

**54.ນະໂຍບາຍ/ຍຸດທະສາດ:** ລັດຖະບານໂດຍຮ່ວມມືກັບການຈັດຕັ້ງໃໝ່ຂອງຊາວກະສິກອນ ກ່ຽວ ຂ້ອງ ແລະຊຸມຊົນກໍຄືອົງການ ສປຊ ແລະການຈັດຕັ້ງພາກພື້ນ, ລະຫວ່າງລັດຖະບານ ແລະບໍ່ສັງກັດລັດຄວນມີນະໂຍບາຍອັນຈຳເປັນໃນແຕ່ລະໆດັບ ຊຶ່ງຈະບໍ່ເປັນອຸບປະສັກໃຫ້ແກ່ການປະຕິບັດກິດຈະກຳ ເພື່ອຄວາມໝັ້ນຄົງດ້ານສະບຽງອາຫານໃນກໍລະນີມີໄພພິບັດ.

55.ເພື່ອຫຼຸດຜ່ອນການສູນເສຍທາງ ດ້ານ ພັນທຸກຳ, ບັນດາລັດຖະບານຄວນຮັບປະກັນໃຫ້ມີຄວາມສາມາດ ຟື້ນຄືນ, ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ຢູ່ນອກປະເທດຕົນເອງເຊັ່ນຢູ່ ທະນາຄານເຊື້ອພັນ ຂອງປະເທດໃກ້ຄຽງ, ແລະ/ຫຼື ທະນາຄານເຊື້ອພັນ, ຂົງເຂດ ຫຼືສາກົນ ແລະຢູ່ໃນຕາໜ່າງ ທະນາຄານເຊື້ອພັນ ພືດ . ໃນກໍລະນີທີ່ບໍ່ມີ ການອະນຸລັກ ນອກຖິ່ນກຳເນີດ ນອກປະເທດທີ່ກຳລັງຖືກຜົນກະທົບກໍຄວນຈັດໃຫ້ມີ ການເກັບພັນພື້ນເມືອງ ໃນປະເທດແບບສຸກເສີນ ແລະໄວທີ່ສຸດທີ່ຈະໄວໄດ້ ເມື່ອໃຫ້ສາມາດ ຂະຫຍາຍພັນ ສຳລັບເອົາມານຳໃຊ້ໂດຍທັນທີ ແລະອາດອະນຸລັກໄວ້ໃນ ປະເທດ ,ໄວ້ນອກຖິ່ນກຳເນີດສາກົນ ສຳລັບການນຳໃຊ້ໃນອານາຄົດ.

**56.ຄວາມອາດສາມາດ:** ອົງການ ອາຫານແລະການກະເສດ ຄວນເຮັດສັນຍາກັບສະຖາບັນທີ່ເໝາະສົມ, ສະເພາະຢ່າງຍິ່ງ ແມ່ນເຮັດກັບບັນດາ ສະຖາບັນຄົ້ນຄວ້າກະສິກຳ ແຫ່ງຊາດ ແລະສາກົນເພື່ອຮີບຮ້ອນໃຫ້ໄດ້ມາ ແລະ ຂະຫຍາຍ, ປັວແປງ ແລະສະໜອງວັດຖຸພັນ ແກ່ຊຸມປະເທດທີ່ມີຄວາມຮຽກຮ້ອງຕ້ອງການ. ບັນດາສະຖາບັນເລົ່ານັ້ນ ຄວນຮັບປະກັນວ່າຕົນເອງມີຄວາມສາມາດພຽງພໍ ເພື່ອບັນລຸໜ້າວຽກນັ້ນ. ການຮ່ວມມືກັບບັນດາ ອົງການບໍ່ສັງກັດລັດ ແລະເອກະຊົນ ເພື່ອ

ສາມາດເປັນອົງປະກອບສຳຄັນໃນການແຈກຢາຍຢ່າງເໝາະສົມດ້ານແນວພັນທີ່ປັບຕົວໄດ້ກັບເຂດທີ່ພວມປ່ຽນແປງຈາກໄພພິບັດ.

57.ຕ້ອງສ້າງລະບົບຂ່າວສານຕ່າງໆໃຫ້ພຽງພໍ ເພື່ອຈະກຳໄດ້ວ່າ ແນວພັນໃດ ທີ່ເໝາະສົມ ແລະ ຕິດຕາມ ປະເມີນເພື່ອ ແນະນຳໃຫ້ມີການນຳໃຊ້.

58.ລັດຖະບານຄວນພິຈາລະນາໃຫ້ມີກອງທຶນພຽງພໍ ເພື່ອເລີ່ມຕົ້ນວຽກ ຂະຫຍາຍ ເມັດພັນພືດ ແລະລິເລີ່ມກິດຈະກຳອື່ນໆ ເພື່ອຕອບໂຕ້ກັບເຫດການສຸກເສີນ, ພາຍຫຼັງທີ່ໄດ້ເຂົ້າເຖິງກອງທຶນສຸກເສີນສາກົນແລ້ວ, ລັດຖະບານອາດສາມາດວາງແຜນຢ່າງມີປະສິດຕິຜົນ ເພື່ອຈະໄດ້ກວມເອົາກິດຈະກຳ ທີ່ພົວພັນ ເຖິງການສ້າງຄືນ ຊັບພະຍາກອນ ພັນທຸກຳພືດເພື່ອ ອາຫານ ແລະການກະສິກຳຫຼັງຈາກໄດ້ມີວິກິດການ.

59.ບັນດາລັດຖະບານຄວນສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໄຮ່ນາ ເພື່ອຈະໄດ້ສູ້ ແລະແກ້ໄຂໄພພິບັດ ໂດຍ ການສະໜັບສະໜູນໃຫ້ ມີຕາໜ່າງສະໜອງງແນວພັນທ້ອງຖິ່ນຄືນໃໝ່.

**60.ການຄົ້ນຄ້ວາ/ເຕັກໂນໂລຊີ:** ຄວນທົບທວນຄືນປະສົບການຜ່ານມາກໍຄືທາງເລືອກຕ່າງໆ ທີ່ໄດ້ພັດທະນາຂຶ້ນມາ ເພື່ອເສີມຂະຫຍາຍ ການຕຽມພ້ອມເພື່ອ ກອບກູ້ອະນຸລັກແນວພັນ ນອກຖິ່ນກຳເນີດ ແລະການເກັບເມັດພັນ ແບບສຸກເສີນໃນຍາມມີໄພພິບັດ ລວມໃນນັ້ນກໍມີ ສະພາບສົງຄາມ, ການສູ້ຮົບແຂ່ງແຍ້ງໃນສັງຄົມ, ອຸບປະຕິເຫດອຸດສາຫະກຳ ແລະໃນທຳຊາດ. ຄວາມພະຍາຍາມດັ່ງກ່າວສາມາດເກີດຄຸນປະໂຫຍດໄດ້ຈາກການປະສານງານຢ່າງໃກ້ຊິດ ລະຫວ່າງຊຸມລັດຖະບານບັນດາປະເທດທີ່ຖືກກະທົບ, ລັດຖະບານຜູ້ໃຫ້ທຶນ, ອົງການບໍ່ສັງກັດລັດ ແລະ ເອກກະຊົນ, ສູນຄົ້ນຄ້ວາກະເສດແຫ່ງຊາດ, ໃນຂົງເຂດ ແລະສາກົນ, ຕາໜ່າງຊັບພະຍາກອນພັນທຸກຳໃນຂົງເຂດກໍຄືອົງກອນລະຫວ່າງລັດຖະບານທີ່ກ່ຽວຂ້ອງເຊັ່ນ ອົງການອາຫານ ແລະ ການກະເສດ, ແຜນງານ ສະບຽງອາຫານໂລກ, ຫ້ອງການ ຄະນະກຳມາທິການຂັ້ນສູງຂອງ ຜູ້ຫລົບໄພ ແລະ ຫ້ອງການປະສານງານ ດ້ານໄພພິບັດ ຂອງສະຫະປະຊາຊາດ.

61.ການປະສານງານ/ບໍລິຫານປົກຄອງ: ແຜນງານນີ້ຄວນແມ່ນອົງການ ອາຫານ ແລະ ການ ກະເສດ ເປັນຜູ້ປະສານໃນແງ່ບໍລິຫານປົກຄອງ ໂດຍຮ່ວມມືຢ່າງໃກ້ຊິດກັບ ແຜນງານສະບຽງ ອາ ຫານໂລກຫ້ອງການ ຄະນະ ກຳມາທິການ ຂັ້ນສູງ ຂອງຜູ້ຫລົບໄພ, ຫ້ອງການປະສານງານ ຂອງອົງການສະຫະປະຊາຊາດ ດ້ານໄພພິບັດ, ສະຖາບັນ ແຫລ່ງຊັບພະຍາກອນພັນທຸກຳພືດ ສາກົນ, ສູນຄົ້ນຄ້ວາການກະເສດແຫ່ງຊາດ ແລະລະຫວ່າງຊາດ, ບັນດາຕາໜ່າງຊັບພະຍາກອນພັນທຸກຳພືດໃນພາກພື້ນ, ບັນດາລັດຖະບານຂອງປະເທດທີ່ຖືກກະທົບ, ປະເທດໃຫ້ທຶນ ແລະອົງການບໍ່ສັງກັດລັດ.

62.ມີຄວາມຈຳເປັນຕ້ອງມີການສ້າງຈິດສຳນຶກໃຫ້ມະຫາຊົນ ເພື່ອໃຫ້ຊຸມຊົນປະເທດໃຫ້ທຶນ ແລະ ອົງການບໍ່ສັງກັດລັດເຫັນຄວາມສຳຄັນຂອງ ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະ ການກະສິກຳ ທີ່ ປັບຕົວໄດ້ ເພື່ອຈຸດປະສົງຊ່ວຍເຫຼືອບັນເທົາ ແລະປັວແປງ ແລະ ເພື່ອແຈ້ງໃຫ້ພາກສ່ວນດັ່ງກ່າວຮູ້ກ່ຽວກັບແຜນງານນີ້. ຄວາມພະຍາຍາມນີ້ຄວນຈະຊ່ວຍເພີ່ມທະວີຄວາມຮັບຮູ້ເຖິງຄວາມຈຳເປັນທີ່ຕ້ອງ ມີການຂະຫຍາຍ ບັນດາແນວພັນເທົ່າຕົວ ຢ່າງປອດໄພ ຈາກປະເທດອື່ນ.

63.ກິດຈະກຳນີ້ແມ່ນພົວພັນຢ່າງສະນິດແໜ້ນກັບ:

- ເຮັດໃຫ້ ການອະນຸລັກ ນອກຖິ່ນກຳເນີດ ມີອີກຕໍ່ໄປ
- ສ້າງຕັ້ງລະບົບຂໍ້ມູນຂ່າວສານທີ່ກ້ວາງຂວາງຄົບຖ້ວນສຳລັບັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະການກະສິກຳ
- ສົ່ງເສີມໃຫ້ມະຫາຊົນມີຄວາມສຳນຶກກ່ຽວກັບການອະນຸລັກ ແລະນຳໄປໃຊ້ຄຸນຄ່າຂອງຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ.

## <u>4.ການສົ່ງເສີມການອະນຸລັກສາຍພັນພືດປ່າແລະແນວພັນພືດປ່າໃນຖິ່ນກຳ ເນີດ ຮັບໄຊ້ ການຜະລິດສະບຽງອາຫານ.</u>

64.ຄວາມຫຼາກຫຼາຍ ດ້ານພັນທຸກຳຊີວະນາໆພັນ ນີ້ອັນໄດ້ມາຈາກມີການສຳຜັດ ກັນໄດ້ສ້າງໃຫ້ມີຊີວະນາໆພັນໃໝ່ໆເກີດຂຶ້ນຊຶ່ງມັນກໍເປັນອົງປະກອບສຳຄັນດ້ານເສດຖະກິດບົ່ມຊ້ອນຂອງແລະນິບນິເວດຕ່າງໆແລະບໍ່ສາມາດສືບຕໍ່ຍືນຍົງຕໍ່ໄປໄດ້ແຕ່ພຽງໃນສະພາບການອະນຸລັກແນພັນພືດນອກຖິ່ນກຳເນີດ. ສຳລັບ ປະຊາກອນ ຂອງຊັບພະຍາກອນພັນທຸກຳທີ່ຫຼາກຫຼາຍ ແລະບໍ່ຫາໄດ້ຢູ່ບ່ອນອື່ນນັ້ນເມື່ອໃດຫາກເຫັນວ່າມັນຕົກໃນສະພາບສ່ຽງໄພແລ້ວເມື່ອນັ້ນກໍຕ້ອງປົກປ້ອງມັນແບບການອະນຸລັກແນວພັນໃນຖິ່ນ ກຳເນີດ. ຈຳນວນ 8,500 ສວນອຸດທະຍານໂລກ ແລະເຂດປົກປ້ອງສ່ວນຫຼວງຫຼາຍໄດ້ຖືກສ້າງຂຶ້ນມາໂດຍບໍ່ຄ່ອຍຈະໄດ້ຄຳນຶງເຖິງຄວາມເປັນຫ່ວງເປັນໃຍສະເພາະເຈາະຈົງໃນດ້ານການອະນຸລັກແນວພັນພືດປ່າເພື່ອເປັນອາຫານ. ແຜນບໍລິຫານ ການຄຸ້ມຄອງເຂດປົກປ້ອງແລະອື່ນໆນັ້ນ ປົກກະຕິແລ້ວຈະບໍ່ກວ້າງພໍ ເພື່ອອະນຸລັກຄວາມຫຼາກຫຼາຍທາງພັນທຸກຳຂອງຊະນິດແນວພັນ ເພື່ອຈະໄດ້ຊ່ວຍຊູໃຫ້ມີຮູບແບບອະນຸລັກອື່ນໆ.

65.ຫຼາຍເຂດປົກປ້ອງໄດ້ຕົກໃນສະພາບຄວາມສ່ຽງ ຊຸດໂຊມ ແລະຖືກທຳລາຍ. ຮ້າຍແຮງ ໄປ ກ່າວນັ້ນ ຄື ໃນເຂດປົກປ້ອງເລົ່ານັ້ນ ປັດຈຸບັນມັນບໍ່ມີຄວາມຫຼາກຫຼາຍຂອງຫຼາຍໆ ຊະນິດແນວພັນ ຢ່າງກ້ວາງຂວາງພຽງພໍໃນແງ່ພູມສາດກໍຄືໃນແງ່ຊີວະສາດ. ດັ່ງນັ້ນຈຶ່ງຖືວ່າມີຄວາມຈຳເປັນທີ່ຕ້ອງໃຫ້ມີການອະນຸລັກພາຍໃນເຂດປົກປ້ອງໄປພ້ອມໆກັບຕ້ອງມີມາດຕະ ການ ທີ່ ແນ ໃສ ການ ອະ ນຸ ລັກ ຄວາມ ຫຼາກຫຼາຍທາງພນທຸກຳທີ່ຢູ່ນອກເຂດເລົ່ານັ້ນ.ການອະນຸລັກແນວພັນໃນຖິ່ນກຳ ເນີດ ດັ້ງ

ເດີມ ໝາຍເຖິງການວາງແຜນທີ່ຄົບຖ້ວນ ຊຶ່ງມີທັງດ້ານປົກປ້ອງ, ຜະລິດ ແລະອະນຸລັກຮັກສາພັນທຸກຳທີ່ເຮັດໄປແບບຄວບຄູ່ກັນ.

**66.ຈຸດປະສົງຍາວນານ**:ເພື່ອສົ່ງເສີມໃຫ້ການອະນຸລັກຊັບພະຍາກອນພັນທຸກຳຂອງສາຍພັນພືດປ່າ ແລະພືດພັນປ່າ ເພື່ອໃຊ້ເປັນອາຫານ ຢູ່ໃນເຂດປົກປ້ອງ ກໍຄືຢູ່ເຂດອື່ນໆທີ່ບໍ່ໄດ້ກຳນົດແຈ້ງວ່າເປັນເຂດປົກປ້ອງ.

**67.ຈຸດປະສົງສະເພາະໜ້າ**: ເພື່ອລິເລີ່ມ ການວາງແຜນ ແລະຄຸ້ມຄອງ ຊຶ່ງຄຳນຶງເຖິງ ສາຍພັນພືດປ່າ ແລະ ພືດປ່າ ສຳລັບເປັນອາຫານ. ເພື່ອກຳນົດຢ່າງຈະແຈ້ງວ່າ ສາຍພັນພືດປ່າ ແລະ ພືດປ່າສຳລັບເປັນອາຫານອັນໃດທີ່ຕ້ອງປົກປ້ອງ ໃນເຂດຖິ່ນກຳເນີດຂອງມັນ. ເພື່ອສະລິມຄວາມຮູ້ກ່ຽວກັບການນຳໃຊ້ຂອງຜູ້ຍິງ ໂດຍສະເພາະວ່າເຂົາເຈົ້າໃຊ້ພືດປ່າ ສຳລັບເປັນອາຫານ ແລະເປັນແຫຼ່ງລາຍຮັບ ແລະອາຫານຄືແນວໃດ.

68.ເພື່ອເຂົ້າໃຈໃຫ້ດີກວ່າເກົ່າກ່ຽວກັບບົດບາດ ແຫລ່ງຊັບພະຍາກອນ ພັນທຸກຳພືດເພື່ອ ອາຫານແລະການກະສິກຳ ທີ່ມີຕໍ່ເສດຖະກິດທ້ອງຖິ່ນ, ຄວາມໝັ້ນຄົງດ້ານອາຫານ ແລະສະພາບຍືນຍົງຂອງສິ່ງແວດລ້ອມມີຄືແນວໃດ. ເພື່ອປັບປຸງການຄຸ້ມຄອງບໍລິຫານ ແລະວາງແຜນ ແລະເພື່ອສົ່ງເສີມໃຫ້ມີຄວາມກົມກືນສອດຄ່ອງລະຫວ່າງການອະນຸລັກ ແລະການນຳໃຊ້ແບບຍືນຍົງພາຍໃນສວນອຸດທະຍານ ແລະເຂດປົກປ້ອງຕ່າງໆ ໂດຍນອກຈາກສິ່ງອື່ນໆ ໃຫ້ກ້ວາງຂວາງກວ່າເກົ່າໃນຂະບວນການນີ້.

69.ເພື່ອສ້າງຄວາມເຂົ້າໃຈ ແລະປະສານງານໃຫ້ໄດ້ດີກວ່າເກົ່າລະຫວ່າງ ບັນດາສະຖາບັນ ແລະອົງ ການຈັດຕັ້ງທີ່ເຮັດວຽກງານອະນຸລັກພັນ ພື້ນເມືອງ ກໍຄືວຽກຄຸ້ມຄອງການນຳໃຊ້ດິນພາຍໃນຊາດກໍຄືໃນຂົງເຂດ. ເພື່ອອະນຸລັກຄວາມຫຼາກຫຼາຍດ້ານພັນທຸກຳຂອງ ຊະນິດແນວພັນ ເພື່ອໃຫ້ມັນກົດເກນ ສອດຄ່ອງກັບວຽກອະນຸລັກອື່ນໆ.

70.**ນະໂຍບາຍ/ຍຸດທະສາດ**: ໂດຍອີງຕາມເຄື່ອງມືນິຕິບັນຍັດແຫ່ງຊາດ ແລະດ້ວຍການຮ່ວມມືກັບອົງການສະຫະປະຊາຊາດ ແລະອົງການໃນພາກພື້ນ, ລະຫວ່າງລັດຖະບານ ແລະອົງການບໍ່ສັງກັດລັດ ພ້ອມທັງຈະຄຳນຶງ ເຖິງຄວາມຄິດຄວາມເຫັນ ຂອງຊາວໄຮ່ນາ ແລະ ຊຸມຊົນຢູ່ໃກ້ກັບເຂດປົກປ້ອງ, ລັດຖະບານຄວນ:

(ກ) ໃນບັນດາຈຸດປະສົງ ແລະບູລິມະສິດຂອງວຽກງານອຸດທະຍານແຫ່ງຊາດ ແລະປ່າປົກປ້ອງໃຫ້ລວມມີເລື່ອງອະນຸລັກຢ່າງເໝາະສົມຊັບພະຍາກອນພັນທຸກຳພືດເພື່ອອາຫານແລະກາ

ນ ກະສິກຳຊຶ່ງຈະກວມເອົາທັງພັນຫຍ້າທີ່ເໝາະສົມ , ສາຍພັນພືດປ່າ ແລະ ຊະນິດແນວພັນພືດ ເພື່ອເປັນອາຫານທີ່ເກັບໄດ້ໃນປ່າ.

(ຂ) ຄົ້ນຄິດເຖິງບັນຫາ ເຊື່ອມປະສານ ວຽກງານອະນຸລັກ ແລະ ຄຸ້ມຄອງບໍລິຫານຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ເຂົ້າໃນບັນດາແຜນນຳໃຊ້ດິນ ແຫ່ງຊາດ.

(ຄ) ສະໜັບສະໜູນການເສີມສ້າງບັນດາຈຸດປະສົງລະດັບຊາດ ແລະທ້ອງຖິ່ນ ເພື່ອໃຫ້ເກີດການຄຸ້ມຄອງເຂດປົກປ້ອງ ໂດຍໃຫ້ມີການເຂົ້າຮ່ວມຢ່າງກວ້າງຂວາງສະເພາະຢ່າງຍິ່ງໃຫ້ມີກຸ່ມຄົນທີ່ ອາໃສພັນພືດປ່າ ເພື່ອຜະລິດອາຫານຫຼາຍທີ່ສຸດ ຖ້າຫາກ ເປັນໄປໄດ້.

(ງ) ໃຫ້ການສະໜັບສະໜູນເພື່ອ ກໍ່ສ້າງບັນດາຄະນະທີ່ປຶກສາ ທີ່ເໝາະສົມກັບລະດັບຕ່າງໆ ຊຶ່ງບ່ອນໃດຫາກເຫັນວ່າເໝາະຈິ່ງໃຫ້ມີການເຂົ້າຮ່ວມຂອງຊາວໄຮ່ນາ, ຊຸມຊົນພື້ນເມືອງ, ນັກວິທະຍາສາດຊັບພະຍາກອນພັນທຸກຳພືດ, ເຈົ້າໜ້າທີ່ລັດຖະບານທ້ອງຖິ່ນ ແລະຫົວໜ້າຊຸມຊົນ ເພື່ອຈະໄດ້ນຳພາວຽກຄຸ້ມຄອງເຂດປົກປ້ອງໃຫ້ສອດຄ່ອງກັບລະບຽບຫຼັກການແຫ່ງຊາດ.

(ຈ)ຮັບຮູ້ບັນດາສິດຂອງຊຸມຊົນພື້ນເມືອງຕໍ່ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານແລະການ ກະສິກຳ ພາຍໃນເຂດປົກປ້ອງ.

(ສ) ຮັບຮູ້ວ່າຜູ້ຍິງເປັນແຫຼ່ງຄວາມຮັບຮູ້ສຳຄັນກ່ຽວກັບຄວາມເປັນໄປໄດ້ດ້ານການອະນຸລັກແນວພັນພັນພື້ນເມືອງໃນຖິ່ນກຳເນີດ ແລະການບໍລິຫານຄຸ້ມຄອງ.

(ຊ). ໃຫ້ການສະໜັບສະໜູນຊຸມຊົນພື້ນເມືອງ ແລະໃນຄວາມພະຍາຍາມຂອງເຂົາເຈົ້າ ເພື່ອຄຸ້ມຄອງ ສາຍພັນພືດປ່າ ແລະພືດປ່າເພື່ອເປັນອາຫານທີ່ຢູ່ໃນເຂດປົກປ້ອງ, ຫຼືຢູ່ທີ່ບ່ອນມີການຮັບຮູ້ບັນດາສິດຊົນເຜົ່າພື້ນເມືອງດັ້ງເດີມ;

(ຍ) ສຳຫຼວດເບິ່ງຄືນບັນດາ ຂໍ້ຮຽກຮ້ອງທີ່ໄດ້ຖະແຫຼງອອກໄປ ຊຶ່ງພົວພັນເຖິງຜົນກະທົບຕໍ່ສິ່ງແວດລ້ອມ ຊຶ່ງມີຢູ່ເພື່ອຈະໄດ້ເອົາເຂົ້າໃນການຕີລາຄາຜົນກະທົບທີ່ພໍເປັນໄປໄດ້ຂອງກິດຈະກຳໄດ້ສະເໜີໃນວຽກງານຊີວະນາໆພັນທ້ອງຖິ່ນ. ເພື່ອເປັນອາຫານ ແລະການກະເສດ. ໂດຍສະເພາະທີ່ກ່ຽວຂ້ອງກັບ ສາຍພັນພືດປ່າປ່າ

(ດ) ເອົາບັນດາຈຸດປະສົງການອະນຸລັກພັນທຸກຳເຂົ້າໃນວຽກບໍລິຫານຄຸ້ມຄອງແບບຍືນຍົງຕໍ່ສາຍພັນພືດປ່າ ແລະພືດປ່າເພື່ອຜະລິດອາຫານທີ່ມີຢູ່ເຂດປົກປ້ອງ ແລະໃນເຂດຊັບພະຍາກອນອື່ນໆທີ່ມີການຄຸ້ມຄອງ.

71.ບັນດາລັດຖະບານໂດຍຮ່ວມມືກັບອົງການ ສປຊ ແລະຂົງເຂດທີ່ກ່ຽວຂ້ອງ ກໍຄືອົງການລະຫວ່າງລັດ ແລະບໍ່ຂຶ້ນກັບລັດຖະບານ ພ້ອມທັງຊຸມຊົນຊາວໄຮ່ນາ, ພື້ນເມືອງ ແລະທ້ອງຖິ່ນທີ່ອາໃສຢູ່ເຂດທີ່ບໍ່ແມ່ນເຂດປົກປ້ອງ ຖ້າຫາກພໍເປັນໄປໄດ້ ແລະເຫັນວ່າເໝາະສົມຄວນ:

(ກ) ສ້າງຕັ້ງວຽກອະນຸລັກ ສາຍພັນພືດປ່າ ແລະພືດປ່າເພື່ອຜະລິດອາຫານ ແລະໃຫ້ຖືວ່າເປັນອົງປະກອບນອນໃນແຜນການນຳໃຊ້ດິນ.

(ຂ) ສົ່ງເສີມໃຫ້ຊຸມຊົນທ້ອງຖິ່ນໃຫ້ອະນຸລັກ ແລະຄຸ້ມຄອງບໍລິຫານ ສາຍພັນພືດປ່າ ແລະພືດປ່າເພື່ອຜະລິດເປັນອາຫານ, ແລະໃຫ້ໂອກາດເຂົາເຈົ້າໄດ້ເຂົ້າຮ່ວມໃນການຕັດສິນໃຈໃນວຽກດ້ານອະນຸລັກ ແລະຄຸ້ມຄອງພາຍໃນທ້ອງຖິ່ນ.

72.ເຫັນວ່າ ມີຄວາມເໝາະສົມ ແລະ ການໃຊ້ ນະໂຍບາຍເຂດປົກປ້ອງຄວນຈະສົ່ງເສີມ ແລະເຮັດໃຫ້ໝັ້ນຄົງແທນທີ່ຈະຈຳກັດຮັດແຄບກິດຈະກຳຕ່າງໆຂອງຄົນ ຊຶ່ງເຮັດໃຫ້ສາມາດຮັກສາ ແລະເພີ່ມພູນຄວາມຫຼາກຫຼາຍດ້ານຊີວະນາໆພັນພາຍໃນ ແລະລະຫວ່າງ ຊະນິດແນວພັນ ພືດ. ພ້ອມນັ້ນຄວນສົ່ງເສີມໃຫ້ມີວິທີການມີສ່ວນຮ່ວມໃນບັນຫາຄຸ້ມຄອງບໍລິຫານເຂດປົກປ້ອງ ແລະເຂດກ່ຽວຂ້ອງທັງນີ້ກໍເພື່ອໄກ່ເກ່ຍແກ້ໄຂເປົ້າໝາຍອະນຸລັກ ຊຶ່ງບາງຄັ້ງຄາວຊໍ້າຂັດແຍ່ງກັບຄວາມໝັ້ນຄົງດ້ານຊີວິດການເປັນຢູ່ຂອງຄົນທ້ອງຖິ່ນ.

**73.ຄວາມສາມາດ**: ເຫັນວ່າເໝາະສົມລັດຖະບານຕ່າງໆຄວນ:

(ກ) ພັດທະນາແຜນບູລິມະສິດ ໜຶ່ງ ສະເພາະຢ່າງຍິ່ງໃນດ້ານບັນດາລະບົບນິເວດ ຊຶ່ງກ່ຽວຂ້ອງກັບບ່ອນທີ່ມີຄວາມຫຼາກຫຼາຍດ້ານ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ໃນລະດັບສູງ, ແລະດຳເນີນການສຳຫຼວດຄືນລະດັບຊາດ ເພື່ອຊອກຮູ້ ວິທີການ ບໍລິຫານ ຄຸ້ມຄອງຕ່າງໆ ທີ່ເຫັນວ່າຕ້ອງການເພື່ອປົກປ້ອງລະດັບຄວາມຫຼາກຫຼາຍດ້ານພັນທຸກຳ ທີ່ຕ້ອງການກ່ຽວກັບ ສາຍພັນພືດປ່າ ແລະພືດປ່າເພື່ອຜະລິດເປັນອາຫານ.

(ຂ) ຊ່ວຍເຫຼືອບັນດາຊຸມຊົນທ້ອງຖິ່ນໃນຄວາມພະຍາຍາມຂອງເຂົາເຈົ້າ ໃນການກຳນົດຊອກຮູ້, ຂຶ້ນບັນຊີ ແລະຄຸ້ມຄອງ ສາຍພັນພືດປ່າ ແລະອາຫານຈາກປ່າ.

(ຄ) ຕິດຕາມເບິ່ງດິນນາສວນ, ການແຈກຢາຍ ແລະຄວາມຫຼາກຫຼາຍຂອງ ສາຍພັນພືດປ່າ ແລະພືດປ່າເພື່ອຜະລິດອາຫານ, ເຊື່ອມສານ ແລະເຊື່ອມຕໍ່ຂໍ້ມູນຂ່າວສານຈາກແຜນງານອະນຸລັກ ໃນຖິ່ນກຳເນີດ ກັບແຜນງານອະນຸລັກ ນອກຖິ່ນກຳເນີດ. ແລະຊຸກຍູ້ສົ່ງເສີມບັນດາການຈັດຕັ້ງເອກະຊົນ ແລະບໍ່ສັງກັດລັດໃຫ້ເຮັດເຊັ່ນດຽວ.

**74.ການປະສານງານ ແລະບໍລິຫານຄຸ້ມຄອງ**: ບັນດາລັດຖະບານ ຄວນເຫັນສົມຄວນ:

(ກ) ເຊື່ອມຕໍ່ວຽກວາງແຜນ ການແລະ ການຄຸ້ມຄອງເຂດປົກປ້ອງກັບສະຖາບັນຕ່າງໆ ທີ່ຮັບຜິດຊອບການອະນຸລັກ ແລະນຳໃຊ້ແບບຍືນຍົງ ສາຍພັນພືດປ່າ ແລະ ພືດປ່າເພື່ອຜະລິດອາຫານເຊັ່ນສູນເພື່ອຊັບພະຍາກອນພັນທຸກຳພືດ ຜູ້ປະສານງານແຫ່ງຊາດດ້ານຊັບພະຍາກອນພັນທຸກຳພືດ, ແລະສວນພຶກສາຊາດ.

(ຂ) ແຕ່ງຕັ້ງຜູ້ປະສານຕິດຕໍ່ເທົ່າທີ່ເຫັນວ່າເໝາະສົມ ເພື່ອເອົາຊ່ວຍສ້າງຂອດປະສານງານໃນວຽກແຜນປົກປ້ອງ ການອະນຸລັກ ແນວພັນໃນຖິ່ນ ກຳເນີດ ແລະ ພົວພັນກັບບັນດາປະເທດໃນພາກພື້ນ.

(ຄ) ສ້າງຕັ້ງບັນດາກົນໄກເພື່ອສຳຫຼວດເບິ່ງຄືນ ແລະດັດປັບບັນດາແຜນອະນຸລັກຢ່າງເປັນລະບົບ.

**75.ກິດຈະກຳນີ້ແມ່ນພົວພັນຢ່າງສະໜິດແໜ້ນກັບ**:

- ການສຳຫຼວດ ແລະຂຶ້ນບັນຊີ ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ
- ສ້າງບັນດາແຜນງານແຫ່ງຊາດທີ່ເຂັ້ມແຂງ
- ສ້າງຕັ້ງບັນດາລະບົບຂໍ້ມູນຂ່າວສານທີ່ກວ້າງຂວາງດ້ານຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ
- ສະໜັບສະໜູນການຄຸ້ມຄອງຢູ່ຟາມແລະການປັບປຸງຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ
- ສົ່ງເສີມການພັດທະນາ ແລະການຄ້າບັນດາພືດ ແລະ ຊະນິດແນວພັນ ທີ່ບໍ່ໄດ້ໃຊ້ເຕັມສ່ວນ
- ໃຫ້ສະໜັບສະໜູນການເກັບ ຕົວຢ່າງແນວພັນ ທີ່ໄດ້ວາງແຜນ ແລະມີເປົ້າໝາຍບັນດາຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ
- ສົ່ງເສີມການປູກຈິດສຳນຶກກ່ຽວກັບຄຸນຄ່າດ້ານອະນຸລັກແລະນຳໃຊ້ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ .

## <u>ການອະນຸລັກແນວພັນພືດ ນອກຖິ່ນກຳເນີດຈາກເຂດທຳມະຊາດຂອງມັນ</u>

5. ເຮັດໃຫ້ວຽກ ການອະນຸລັກ ແນວພັນນອກຖິ່ນກຳເນີດຈາກເຂດທຳມະຊາດ ທີ່ມີຢູ່ແລ້ວໃຫ້ສາມາດສືບຕໍ່ຢ່າງຍືນຍົງ.
6. ປູກຟື້ນຊີບບັນດາແນວພັນທອະນຸລັກ ແນວພັນນອກຖິ່ນກຳເນີດຈາກເຂດທຳມະຊາດ ທີ່ຕົກໃນໄພຂົ່ມຂູ່.
7. ສະໜັບສະໜູນການເກັບຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ ທີ່ໄດ້ວາງແຜນ ແລະມີເປົ້າໝາຍ.
8. ຂະຫຍາຍກິດຈະກຳອະນຸລັກ ແນວພັນນອກຖິ່ນກຳເນີດຈາກເຂດທຳມະຊາດ .

## <u>5.ສືບຕໍ່ການອະນຸລັກແນວພັນ ນອກຖິ່ນກຳເນີດໃຫ້ຍືນຍົງ</u>

76.**ການຕີລາຄາ: ຈຳ**ທະນາຄານເຊື້ອພັນໃນໂລກແລະຂະໜາດການອະນຸລັກແນວພັນນອກ ຖິ່ນກຳເນີດ ຈາກທຳມະຊາດໃນລະຫວ່າງ 1970 ຫາ 1980 ໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ເພື່ອຕອບ ໂຕ້ກັບ ຄວາມສຳນຶກນັບມື້ນັບເພີ້ມສູງກ່ຽວກັບໄພຂົ່ມຂູ່ຕໍ່ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ ເຖິງແມ່ນວ່າ ສ່ວນໃຫຍ່ ຂອງບັນດາ ປະເທດຍັງບໍ່ທັນມີບ່ອນເກັບມ້ຽນໄລຍະຍາວ, ມີຄວາມເຂົ້າໃຈວ່າຫຼາຍໆ ທະນາຄານເຊື້ອພັນ ທົ່ວໂລກ ມີສະຖານທີ່ເກັບມ້ຽນ ແລະ ຍັງສາມາດ ມີບ່ອນຕື່ມອີກໄດ້ດ້ວຍການ  ເອົາແນວພັນທີ່ໄດ້ເກັບຊ້ຳກັນ ໂດຍບໍ່ຈຳເປັນນັ້ນອອກ.

77.ໃນຂອບເຂດທົ່ວໂລກ ບັນດາລັດຖະບານ ແລະອົງກອນໃຫ້ທຶນບໍ່ໄດ້ປະກອບສ່ວນດ້ານທຶນຢ່າງພຽງພໍເຂົ້າໃນການບໍາລຸງຮັກສາໂຄງລ່າງອະນຸລັກ ຊຶ່ງມີຢູ່ປັດຈຸບັນ. ສະພາບດັ່ງກ່າວໄດ້ເຮັດໃຫ້ຫຼາຍໆບ່ອນຖືກຊຸດໂຊມຢ່າງຕໍ່ເນື່ອງ ແລະກະທົບຕໍ່ການປະຕິບັດໜ້າວຽກອະນຸລັກທີ່ພື້ນຖານທີ່ສຸດ. ໄພຂົ່ມຂູ່ທີ່ຮ້າຍແຮງຕໍ່ ແນວພັນທີ່ອະນຸລັກນອກຖິ່ນກໍາເນີດ ສະທ້ອນໃຫ້ເຫັນຢູ່ທີ່ວ່າບັນດາແນວພັນທີ່ໄດ້ເກັບມ້ຽນໄວ້ນັ້ນ ສ່ວນຫຼວງຫຼາຍແມ່ນຕ້ອງ ປູກຟື້ນຊີບ ແລະຕາມລາຍງານຈາກຫຼາຍໆປະເທດກໍໃຫ້ເຫັນວ່າ ບັນດາທະນາຄານ ເຊື້ອພັນ ແມ່ນພວມປະສົບກັບບັນຫາວິຊາການ ແລະດ້ານປົກຄອງບໍລິຫານ. ນອກເໜືອໄປກວ່ານັ້ນເຫັນວ່າ ບັນດາທະນາຄານເຊື້ອພັນ ຫຼາຍບ່ອນມີ ຊະນິດແນວພັນ ຫຼາຍກວ່າແຜນງານ ປັບປຸງພັນແຫ່ງຊາດ ຊຶ່ງພວມພັດທະນາຢູ່. ດັ່ງນັ້ນກໍສາມາດເລືອກທາງອອກທີ່ບໍ່ສິ້ນເປືອງຫຼາຍໂພດສໍາລັບວຽກອະນຸລັກ.

78.ເມື່ອມີລະບົບສົມເຫດສົມຜົນກວ່າ ຊຶ່ງມີການວາງແຜນດີກວ່າພ້ອມທັງມີການປະສານງານ ແລະຮ່ວມມືດີກວ່າ, ເມື່ອນັ້ນກໍຈະສາມາດຫຼຸດຄ່າໃຊ້ຈ່າຍ ແລະວຽກງານອະນຸລັກກໍຈະສ້າງຕັ້ງຢູ່ພື້ນຖານຖືກຕ້ອງແນ່ນອນດ້ານວິທະຍາສາດ ແລະມີສະພາບການເງິນທີ່ຍືນຍົງ. ຍ້ອນມີການອະນຸລັກ ທີ່ ມີປະສິດຕິຜົນກວ່າມັນກໍຈະເປັນພື້ນຖານໃຫ້ແກ່ການນໍາໃຊ້ຊັບພະຍາກອນພັນທຸກໍາພືດ ເພື່ອອາຫານແລະການກະສິກໍາ ແບບຂະຫຍາຍອອກໄດ້. ເພື່ອເຮັດໄດ້ຄືແນວນັ້ນ, ມັນຈະຕ້ອງມີທາງເລືອກຕ່າງໆດ້ານວຽກອະນຸລັກ, ສະເພາະຢ່າງຍິ່ງໃນຂຸມປະເທດທີ່ປັດຈຸບັນບໍ່ມີຄວາມສາມາດພຽງພໍເພື່ອຮັບປະກັນໃຫ້ສາມາດດໍາເນີນການອະນຸລັກ ນອກຖິ່ນກໍາເນີດ ຊັບພະຍາກອນພັນທຸກໍາພືດ ເພື່ອ ອາຫານ ແລະການກະສິກໍາ ໃຫ້ໄດ້ມາດຕະຖານສາກົນ.

**79.ບັນດາຈຸດປະສົງໄລຍະຍາວ:** ໃຫ້ບູລິມະສິດສູງກ່ຽວກັບວຽກປົກປັກຮັກສາເທົ່າທີ່ພໍເຮັດໄດ້ຕໍ່ຄວາມຫຼາກຫຼາຍທີ່ມີຄຸນຄ່າ ຊຶ່ງບໍ່ມີຢູ່ແຫ່ງອື່ນໆທີ່ໄດ້ທໍາການເກັບມ້ຽນ ຊັບພະຍາກອນພັນທຸກໍາພືດເພື່ອອາຫານແລະການກະສິກໍາ ນັ້ນໄວ້ແບບ ການອະນຸລັກ ນອກຖິ່ນກໍາເນີດ . ພັດທະນາລະບົບການອະນຸລັກ ນອກຖິ່ນກໍາເນີດ ທີ່ຍືນຍົງ ແລະມີປະສິດຕິພາບດ້ານເສດຖະກິດ ແລະມີເປົ້າໝາຍ. ພັດທະນາ ແລະເສີມຂະຫຍາຍການຮ່ວມມືລະຫວ່າງແຜນງານແຫ່ງຊາດ ແລະສະຖາບັນສາກົນເພື່ອອຸ້ມຊູວຽກ ການອະນຸລັກ ແນວພັນນອກຖິ່ນກໍາເນີດ ຊຶ່ງໃນນັ້ນກໍຮັບຮູ້ສິດທິຕ່າງໆຂອງລັດມີຕໍ່ຊັບພະຍາກອນພັນທຸກໍາພືດ ເພື່ອອາຫານແລະການກະສິກໍາ.

**80.ຈຸດປະສົງສະເພາະໜ້າຕ່າງໆ:** ເພື່ອພັດທະນາ ແລະສ້າງຄວາມເຂັ້ມແຂງໃຫ້ແກ່ຕາໜ່າງແຫ່ງຊາດ, ຂົງເຂດ ແລະສາກົນ. ລວມທັງຕາໜ່າງ ການອະນຸລັກ ນອກຖິ່ນກໍາເນີດ ຂອງອົງການອາຫານແລະການກະເສດ ຊຶ່ງຢູ່ໃຕ້ລະບົບ ອົງການອາຫານແລະການກະເສດ ທົ່ວໂລກ ແລະໂດຍສອດຄ່ອງ ກັບບັນດານະໂຍບາຍ ແລະຍຸດທະສາດກໍານົດໂດຍກໍາມາທິການຊັບພະຍາກອນພັນທຸກໍາ ສໍາລັບເປັນອາຫານ ແລະການກະເສດ ຄະນະກໍາມາທິການ ດ້ານຊັບພະຍາກອນ

ພັນທຸກຳພືດເພື່ອ ອາຫານ ແລະ ການກະສິກຳ. ໃນນັ້ນຮວບຮວມຄວາມສາມາດເພື່ອສະໜອງໃຫ້ບັນດາປະເທດ ທີ່ໄດ້ມີທາງເລືອກ ເຮັດການເກັບມ້ຽນແບບອາສາສະໝັກ . ວັດຖຸພັນທີ່ເໝາະສົມ ແລະ ຂະຫຍາຍແນວພັນເທົ່າຕົວໃຫ້ມີຢູ່ໃນແຕ່ລະຂົງເຂດ. ເພື່ອໃຫ້ສາມາດຖ່າຍທອດ ວັດຖຸ ພັນນີ້ ໃຫ້ແກ່ຂະບວນອະນຸລັກ ຊຶ່ງພວມດຳເນີນຢູ່ ໂດຍຈະປະຕິບັດຕາມບັນດາຂໍ້ຕົກລົງດ້ານກົດໝາຍສາກົນທີ່ໃຊ້ກັນຢູ່ ຊຶ່ງມີການຮັບຮູ້ສິດອະທິປະໄຕຂອງບັນດາປະເທດຕົ້ນກຳເນີດ ພ້ອມທັງຮັບຮູ້ໃຫ້ການອຸ້ມຊູທີ່ເໝາະສົມດ້ານວິຊາການ ແລະການເງິນ.

81.ເພື່ອຫຼຸດຜ່ອນການເຮັດວຽກແບບຊ້ຳຊ້ອນກັນ ຊຶ່ງບໍ່ຈຳເປັນ ແລະບໍ່ໄດ້ວາງແຜນອັນປະກົດຢູ່ໃນແຜນປັດຈຸບັນ ແລະເພື່ອສົ່ງເສີມໃຫ້ເຂົ້າເຖິງ ແລະແລກປ່ຽນຂໍ້ມູນຂ່າວສານດ້ານ ຊັບ ພະຍາ ກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ໂດຍໃຫ້ມັນສອດຄ່ອງກັບບັນດາຂໍ້ຕົກລົງສາກົນທີ່ນຳໃຊ້ກັນຢູ່, ລວມທັງສອດຄ່ອງກັບສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍດ້ານຊີວະນາໆພັນ. ເພື່ອໃຫ້ມີການ ສຳເນົາແນວພັນ ແບບມີການວາງແຜນ ແລະເພື່ອສາມາດເກັບມ້ຽນວັດຖຸພັນ ຊຶ່ງປັດຈຸບັນບໍ່ໄດ້ ສຳເນົາ ໄວ້ໃຫ້ມັນປອດໄພ.

**82.ນະໂຍບາຍ/ຍຸດທະສາດ:** ຊຸມຊົນສາກົນແມ່ນມີຄວາມສົນໃຈພ້ອມມີຄວາມຮັບຜິດຊອບໃນວຽກງານອະນຸລັກໃຫ້ເກີດພື້ນຖານໃຫ້ແກ່ແຜນໂລກແບບມີປະສິດຕິຜົນ, ເຊື່ອມສານກັນ ຢ່າງສົມເຫດສົມຜົນ ທັງນີ້ກໍເພື່ອຮັບປະກັນໃຫ້ມີການ ເກັບອະນຸລັກແນວພັນ ດັ່ງປະຕິບັດຢູ່ດຽວນີ້. ບັນດາປະເທດມີສິດອະທິປະໄຕຂອງຊາດ ແລະຄວາມຮັບຜິດຊອບຕໍ່ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ຂອງຕົນເອງ.

83.ຄວນນຳໃຊ້ສິ່ງອຳນວຍຄວາມສະດວກທີ່ເໝາະສົມ ຊຶ່ງມີຢູ່ນັ້ນໃຫ້ ມີຄຸ້ມຄ່າ ຊຶ່ງນອນໃນນັ້ນ ກໍລວມມີບັນດາສູນແຫ່ງຊາດ, ຂົງເຂດ ແລະສູນສາກົນ. ວັດຖຸ ພັນ ທີ່ໄດ້ອະນຸລັກໄວ້ນັ້ນເທົ່າທີ່ເຫັນເໝາະສົມຄວນໄດ້ ສຳຮອງແນວພັນ ແລະເກັບໄວ້ໃນສະຖານທີ່ເກັບມ້ຽນໄລຍະຍາວໃຫ້ໄດ້ຕາມມາດຕະຖານສາກົນ ແລະຖືກຕ້ອງຕາມຂໍ້ຕົກລົງສາກົນທີ່ພວມນຳໃຊ້ກັນຢູ່. ຄວນຫຼຸດຜ່ອນປະລິມານການເຮັດ ສຳເນົາ ພາຍໃນຕາໜ່າງເພື່ອສົ່ງເສີມໃຫ້ມີການໄລ່ລຽງເສດຖະກິດ ພ້ອມທັງຮັບປະກັນປະສິດຕິຜົນໃນຄວາມພະຍາຍາມລວມດ້ານການອະນຸລັກໃນໂລກ. ບັນດາປະເທດສາມາດໄດ້ຮັບການຊ່ວຍເຫຼືອດ້ານການກຳນົດວ່າຊັບພະຍາກອນພັນທຸກຳໃດແດ່ ທີ່ໄດ້ມີການເກັບມ້ຽນ ແລະສຳຮອງ ແລ້ວຢູ່ທີ່ສະຖານທີ່ອຳນວຍຄວາມສະດວກໄລຍະຍາວ.

84.ອົງການ ອາຫານ ແລະການກະເສດ ຮ່ວມມືກັບບັນດາປະເທດ ແລະສະຖາບັນກ່ຽວຂ້ອງຄວນອຳນວຍຄວາມສະດວກແກ່ການເຮັດຂໍ້ຕົກລົງຕ່າງໆ ເພື່ອຮັກສາຄວາມຫຼາກຫຼາຍດ້ານ ອະນຸລັກແນວພັນນອກຖິ່ນກຳເນີດ ໂດຍຈະຮັບປະກັນວ່າມັນສອດຄ່ອງກັບຂໍ້ຕົກລົງສາກົນຕ່າງໆ ທີ່ນຳໃຊ້ຢູ່.

ເຮັດຄືແນວນີ້ມັນກໍຈະສ້າງ ຄວາມສະດວກໃຫ້ແກ່ປະເທດເລົ່ານີ້ ທີ່ຕ້ອງການຢາກສະໝັກໃຈເອົາແນວພັນ ຂອງຕົນເຂົ້າໄວ້ໃນສະຖານທີ່ເກັບມ້ຽນ ນອກປະເທດຕົນເອງ.

**85.ຄວາມອາດສາມາດ:** ບັນດາພະນັກງານ ຄວນໄດ້ຮັບ ການເຂົ້າຝຶກ ອົບຮົມ ຢ່າງເໝາະສົມໃນທຸກໆລະດັບ ເພື່ອຈະໄດ້ຜັນຂະຫຍາຍ ແລະຕິດຕາມບັນດານະໂຍບາຍ ແລະຂໍ້ຕົກລົງຕ່າງໆຂ້າງເທິງນັ້ນ. ບັນດາສະຖາບັນແຫ່ງຊາດ ຄວນປະເມີນຮູບແບບວິທີ ເຮັດວຽກຄຸ້ມຄອງ ທະນາຄານເຊື້ອພັນ ໃນປັດຈຸບັນເພື່ອແນໃສ່ສ້າງບັນດາລະບົບອະນຸລັກ ນອກຖິ່ນກຳເນີດ ທີ່ມີທິດບໍລິການຜູ້ຊົມໃຊ້ ຊຶ່ງຮັບປະກັນດ້ານປະສິດຕິພາບ. ເຫັນ ມີຄວາມເໝາະສົມ ຄວນມີສິ່ງອຳນວຍຄວາມສະດວກຢ່າງແທບເໝາະເພື່ອພັດທະນາ ຊັບພະຍາກອນມະນຸດ ແລະອຸບປະກອນເພື່ອຮັບໃຊ້ແກ່ແຜນງານລະດັບຊາດຕ່າງໆ.

86.ຄວນຮັບປະກັນສືບຕໍ່ໃຫ້ມີການ ອະນຸລັກແນວພັນ ຂອງ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະການກະສິກຳ. ຄວນເອົາໃຈໃສ່ພິເສດໃຫ້ມີການປົກປັກຮັກສາ ຄູ່ມແນວພັນດັ່ງເດີມ ທີ່ມີຄວາມສ່ຽງຕໍ່ການສູນຫາຍ .

87.ສົມຄວນໃຫ້ ການສະໜັບສະໜູນ ດ້ານງົບປະມານ ໃຫ້ແກ່ບັນດາສະຖາບັນ ເພື່ອໃຊ້ຈ່າຍເຂົ້າໃນວຽກງານການເກັບມ້ຽນ ແລະວຽກອະນຸລັກທີ່ກ່ຽວຂ້ອງ ພ້ອມທັງໃຫ້ການ ບໍລິການດ້ານຄົ້ນຄ້ວາ/ເອກະສານສຳລັບ ປະເທດອື່ນໆ. ການສະໜັບສະໜູນ ນີ້ອາດສາມາດ ກຳນົດ ການສຳຮອງແນວພັນໃວ້ ຢ່າງເໝາະສົມ, ການເກັບມ້ຽນຢ່າງປອດໄພພ້ອມທັງ ຈຳແນກ ຄູນລັກສະນະ, ຜົນສະທ້ອນ ປະເມີນຕີລາຄາ ແລະ ລວບລວມ ເອກກະສານວັດຖຸພັນ ທີ່ບໍ່ມີຢູ່ບ່ອນອື່ນໆອີກແລ້ວ. ບັນຫາດັ່ງກ່າວແມ່ນ ຈະລວບລວມເອົາທັງການ ກຳນົດຊອກຮູ້ວ່າ ວັດຖຸພັນ ໃດແດ່ທີ່ບໍ່ໄດ້ສຳຮອງໃວ້ ຢ່າງບໍ່ພຽງພໍ ແລະ ຫຼາຍເກີນໄປ. ວັດຖຸພັນ ທີ່ບໍ່ທັນໄດ້ ສຳຮອງໃວ້ ກໍຄວນຂະຫຍາຍພັນຢ່າງເໝາະສົມ ແລ້ວກໍຄວນຮັກສາໄວ້ຢູ່ສະຖານທີ່ເກັບມ້ຽນທີ່ຮັບປະກັນ ແລະເໝາະສົມ. ໂດຍຈະຕ້ອງປະຕິບັດຢ່າງເຕັມສ່ວນ, ບັນດາຂໍ້ຕົກລົງສາກົນ ແລະລະບົບ ກົດໝາຍແຫ່ງຊາດທີ່ພວມປະຕິບັດກັນ ຢູ່.ການ ສຳຮອງ ແນວພັນ ທີ່ໄດ້ເຮັດ ການ ອະນຸລັກນອກຖິ່ນກຳເນີດ ເພີ່ມເຕີມນັ້ນ ກໍຈະສືບຕໍ່ຕາມການເຫັນສົມຄວນ ຂອງບັນດາປະເທດ. ການຂະຫຍາຍ ສິ່ງອຳນວຍຄວາມສະດວກ ເພື່ອເກັບມ້ຽນບາງບ່ອນ ແລະການສ້າງສິ່ງອຳນວຍຄວາມສະດວກ ອັນໃໝ່ອາດຖືວ່າເປັນສິ່ງຕ້ອງການ.

**88.ການຄົ້ນຄ້ວາ/ເຕັກໂນໂລຊີ:** ການຄົ້ນຄ້ວາຄວນສຸມໃສ່ບັນຫາພັດທະນາວິທີການຕ່າງໆທີ່ຖືກປັບປຸງ ເມື່ອເຫັນເໝາະສົມອາດລວບລວມທັງວິທີການປົກປັກຮັກສາ ໃນລອດແກ້ວ ແລະ ໂດຍສະເພາະແມ່ນວິທີການເຕັກນິກທີ່ບໍ່ແພງ ແຕ່ເຊື່ອຖືໄດ້ ຊຶ່ງອາດເຫັນວ່າເໝາະສຳລັບເງື່ອນໄຂເຮັດວຽກໃນລະດັບທ້ອງຖິ່ນ. ເຕັກໂນໂລຊີ ແລະຂັ້ນຕອນປະຕິບັດງານທີ່ຖ່າຍທອດຈາກບ່ອນອາກາດເຢັນ

ໜາວອາດບໍ່ເໝາະສົມສຳລັບເງື່ອນໄຂ ໃນບັນດາປະເທດອາກາດຮ້ອນ ແລະດ້ານກົງກັນຂ້າມກໍ່ເຊັ່ນດຽວ.

89.ການຄົ້ນຄ້ວາທີ່ອີງໃສ່ເອກະສານ ແລະຂໍ້ມູນຂ່າວສານທີ່ໄດ້ຖືກປັບປຸງ ດັ່ງທີ່ຄາດກະໄວ້ໃນແຜນງານນີ້ ຄວນຈະເຮັດໃຫ້ມີການຕັດສິນໃຈທີ່ມີຄວາມເຂົ້າໃຈບັນຫາອັນຈະເປັນພື້ນຖານໃຫ້ແກ່ລະບົບທີ່ມີປະສິດທິຜົນ ແລະສົມເຫດສົມຜົນ. ນອກຈາກສິ່ງອື່ນໆ, ນີ້ກໍ່ອາດຈະລວມເອົາທັງການສຳຫຼວດ ເພື່ອສາມາດກຳນົດໃຫ້ໄດ້ວ່າອັນໃດຄືບູລິມະສິດທາງດ້ານ ແນວພັນ ແລະ ການສຳຮອງແນວພັນ ແລະການຄົ້ນຄ້ວາເພື່ອຊອກຮູ້ດ້ານວິທີການເພື່ອກຳນົດວຽກ ການສຳຮອງແນວພັນ ກໍ່ຄືວຽກ ທົດສອບ ຄວາມເປັນໄປໄດ້ໃນດ້ານ ກຸ່ມແນວພັນ, ຂັ້ນຕອນຂອງການອະນຸລັກທີ່ມີເຫດມີຜົນ ແລະການເຮັດ ສຳຮອງ ຂອງ ລຳຕົ້ນ ຊະນິດແນວພັນ ກໍ່ຄືຮູບແບບ ແລະເຕັກໂນໂລຊີຕ່າງໆ ເພື່ອອະນຸລັກ ພັນທຸກຳ, ຊະນິດພັນທຸກຳ ແລະ ພັນທຸກຳ ທີ່ສັບສົນ

.

**90.ການປະສານງານ/ຄຸ້ມຄອງບໍລິຫານ:** ຄວນມີການປະສານງານພາຍໃນປະເທດ, ລະຫວ່າງ ທະນາຄານເຊື້ອພັນ ນອກຖິ່ນກຳເນີດ ແຫ່ງຊາດ, ແລະກຸ່ມເຮັດວຽກກ່ຽວກັບພືດ ແລະຜູ້ຊົມໃຊ້ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ທັງໝົດ ( ນັກປັບປຸງພັນ, ຊາວໄຮ່ນາ ແລະ ອີງ ການບໍ່ສັງກັດລັດ). ຄວນມີສາຍພົວພັນຢ່າງໜາແໜ້ນລະຫວ່າງຕາໜ່າງ ພາກພື້ນ ແລະ ບັນດາສູນລະດັບສາກົນ.

91.ວຽກບໍລິຫານ ແລະການປະຕິບັດກິດຈະກຳນີ້ ຄວນໄດ້ຮັບການສະໜັບສະໜູນຈາກ ຄະນະ ກຳມາທິການຂອງອົງການອາຫານແລະການກະເສດດ້ານຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ.

92.ຄວນສົ່ງເສີມໃຫ້ມີການທົບທວນວຽກຄຸ້ມຄອງ ແລະ ວຽກວິຊາການ ເປັນໄລຍະໆ ເພື່ອຕີລາຄາປະສິດຕິຜົນຂອງກິດຈະກຳຕ່າງໆ ທີ່ໄດ້ດຳເນີນໄປແລ້ວ. ໂດຍອີງຕາມຜົນຂອງການທົບທວນໜ້າວຽກດັ່ງກ່າວ ແລະອີງໃສ່ຂໍ້ຄວາມສະເພາະ ດ້ານທີ່ກຳນົດໄວ້ໃນບັນດາຂໍ້ຕົກລົງທີ່ກ່ຽວຂ້ອງ, ຄວນມີການສະໜັບສະໜູນດ້ານການເງິນ ເພື່ອເສີມສ້າງໃຫ້ມີຄວາມໝັ້ນຄົງໄລຍະຍາວ ແລະອະນຸຍາດໃຫ້ມີການວາງແຜນແບບມີປະສິດຕິພາບ.

**93.ກິດຈະກຳນີ້ແມ່ນພົວພັນຢ່າງໃກ້ຊິດກັບ:**

- ການປູກຟື້ນຊີບ ບັນດາແນວພັນນອກ ຖິ່ນກຳເນີດ ທີ່ຕົກໃນຄວາມສ່ຽງ.
- ຊ່ວຍເຫຼືອຊາວໄຮ່ນາໃນສະພາບມີໄພພິບັດ ເພື່ອສ້າງບັນດາລະບົບກະສິກຳຄືນໃໝ່
- ສ້າງບັນດາລະບົບຂໍ້ມູນຂ່າວສານອັນຄົບຖ້ວນດ້ານ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ.

- ຂະຫຍາຍວຽກ ການຈຳແນກຄູນລັກສະນະແນວພັນ, ການປະເມີນຕີລາຄາ ແລະຈຳນວນ ແນວພັນທີ່ເກັບ ຕົ້ນຕໍ ເພື່ອອຳນວຍຄວາມສະດວກໃນການນຳໃຊ້.
- ສ້າງແຜນງານລະດັບຊາດຕ່າງໆ ໃຫ້ເຂັ້ມແຂງ.
- ສົ່ງເສີມບັນດາລະບົບ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ

## 6.ການປູກຟື້ນຊີບ ບັນດາແນວພັນນອກ ຖິ່ນກຳເນີດ ທີ່ຕົກໃນຄວາມສ່ຽງ.

**94.ການຕີລາຄາ:** ໃນເມື່ອ ກຸ່ມແນວພັນ ໃນບ່ອນສາງເກັບມ້ຽນ ນອກຖິ່ນກຳເນີດ ໄດ້ຫຼຸດຜ່ອນໃນຄວາມສາມາດຈະເຕີບໂຕ, ຈຶ່ງເຮັດໃຫ້ທັງ ພັນທຸກຳ ແລະ ຊະນິດພັນທຸກຳ ຈະຕ້ອງສູນເສຍໄປ. ເຖິງແມ່ນວ່າຈະຢູ່ໃຕ້ເງື່ອນໄຂບ່ອນເກັບມ້ຽນ ນອກຖິ່ນກຳເນີດ ທີ່ດີເລີດ ກຸ່ມແນວພັນ ທັງໝົດໃນທີ່ສຸດ ກໍຕ້ອງໄດ້ປູກຟື້ນຊີບ . ສ່ວນຫຼາຍແລ້ວ ເພິ່ນບໍ່ຄ່ອຍຄຶດເຖິງ ຄວາມສາມາດ ຂອງ ການ ປູກ ຟື້ນຊີບ ເລີຍໃນເວລາ ເຮັດການຮວບຮວມ ຕົວຢ່າງແນວພັນ ແລະ ການກະ ຈ່າຍການຟື້ນຊີບ ຂອງ ຕົວຢ່າງແນວພັນ ຊຶ່ງໄດ້ ເກີດ ສະພາບທີ່ບໍໄດ້ຄາດຄຶດໄວ້ກ່ອນນັ້ນຄືການຂາດຄວາມສາມາດຈະຮັກສາມ້ຽນໄດ້ຢ່າງເໝາະສົມ ວັດຖຸພັນ ຊຶ່ງໄດ້ເກັບໄວ້ນັ້ນ. ດັ່ງນັ້ນຜົນສະທ້ອນຂອງມັນແມ່ນວ່າໃນປັດຈຸບັນມີ ວັດຖຸພັນ ຈຳນວນຫຼວງຫຼາຍທີ່ຕ້ອງ ການປູກຟື້ນ ຊີບໃໝ່ . ໂດຍສະເລ່ຍ 50% ຂອງການເກັບມ້ຽນ ແນວພັນ ລະດັບທີ່ມີຢູ່ປັດຈຸບັນແມ່ນຕ້ອງການ ການປູກຟື້ນຊີບ , ທັງນີ້ແມ່ນອີງໃສ່ຂໍ້ມູນທີ່ກ້ວາງຂວາງ ແຕ່ບໍ່ຄົບຖ້ວນໃນບັນດາປະເທດທີ່ສົ່ງມາ. ການວາງແຜນ ແລະປະສານງານທີ່ດີຈະຊ່ວຍຫຼຸດຜ່ອນຈຳນວນ ວັດຖຸພັນ ທີ່ຕ້ອງ ການປູກຟື້ນຊີບ ໃໝ່. ແຕ່ວ່າຂາດການປະຕິບັດງານຢ່າງໄວວາ. ແລະການຕອບຮັບສະພາບ ດັ່ງກ່າວແລ້ວສະພາບຫຼາກຫຼາຍທາງພັນທຸກຳຂອງພືດພັນເພື່ອເປັນອາຫານ ແລະການກະສິກຳໃນໂລກທີ່ໄດ້ຮັກສາໄວ້ນັ້ນກໍຈະສູນເສຍຕະຫຼອດໄປ ແລະແນ່ນອນທຶນຂອງລັດທີ່ໄດ້ລົງໄປແລ້ວ ເພື່ອສະສົມ ແນວພັນ ກໍສູນເສຍໄປເຊັ່ນດຽວ.

95.ຂະໜາດຕົວຢ່າງ ແນວພັນ ທີ່ເກັບມ້ຽນ ໃນຕອນຕົ້ນ ມີຈຳນວນໜ້ອຍ ພ້ອມທັງ ການມີຊີວິດລອດ ຂອງແນວພັນນັ້ນກໍ່ຕ່ຳ ແລະ ຍ້ອນສະຖານທີ່ເກັບມ້ຽນ ໄລຍະຍາວກໍມັກຂໍຕົວຢ່າງຢູ່ເລື້ອຍໆ ຊຶ່ງເຮັດໃຫ້ຮອບການ ປູກຟື້ນຊີບໃໝ່ ນັ້ນຫລຸດລົງ. ເງື່ອນໄຂ ບ່ອນເກັບມ້ຽນໄລຍະຍາວທີ່ຖືກຕ້ອງຄວນເຮັດໃຫ້ບໍ່ຕ້ອງການ ການປູກຟື້ນຊີບ ໃໝ່ ເປັນເວລາຫຼາຍທົດສະວັດ. ດັ່ງນັ້ນອາດພໍຄາດໄດ້ວ່າໂດຍສະເລ່ຍປະລິມານ ກຸ່ມແນວພັນ ທີ່ໄດ້ອະນຸລັກໄວ້ນັ້ນ ຄົງບໍ່ຈຳເປັນຕ້ອງເອົາ ປູກຟື້ນຊີບໃໝ່ແບບຕໍ່ເນື່ອງຕະຫຼອດໄປ ໃນແຕ່ລະປີ (ໃນນີ້ບໍ່ໄດ້ເວົ້າເຖິງຄວາມຈຳເປັນ ດ້ານປັບປຸງພັນ). ເຖິງຢ່າງໃດກໍດີ, ປະມານ 95% ຂອງປະເທດທີ່ໄດ້ຕອບຄຳຖາມສະເພາະເຈາະຈົງໃນເລື່ອງການປູກຟື້ນຊີບໃໝ່ ນັ້ນໄດ້ລາຍງານວ່າໄດ້ການປູກຟື້ນຊີບໃໝ່ ໃນອັດຕາສ່ວນທີ່ສູງກວ່າ, ແລະເຫັນວ່າທັງປະເທດພັດທະນາ ແລະກຳລັງພັດທະນາໄດ້ເວົ້າເຖິງຂອດຈຳກັດດ້ານວິຊາການ, ການ

ເງິນ ແລະບັນຫາອື່ນໆ ທີ່ພວມພົບພໍ້ໃນວຽກການປູກຟື້ນຊີບໃໝ່ ວັດຖຸພັນ ຂອງຕົນເອງ. ອາດເວົ້າໄດ້ວ່າ ແນວພັນ ຈຳນວນໜຶ່ງລ້ານ ອາດຕ້ອງການ ການປູກຟື້ນຊີບໃໝ່ ເພື່ອຮັກສາ ວັດຖຸພັນ ໃນແຜນງານ ອະນຸລັກແນວພັນ ນອກຖິ່ນກຳເນີດ ໃຫ້ຢູ່ລອດໄດ້. ບັນຫາດັ່ງກ່າວຍັງບໍ່ທັນມີກົນໄກລະດັບໂລກ ເພື່ອປະສານງານ. ການຂາດຂໍ້ມູນຂ່າວສານດ້ານ ແນວພັນ ເປັນຂໍ້ຈຳກັດເພີ່ມ ຂໍ້ຂັດຂວາງໃຫ້ແກ່ການ ການປູກຟື້ນຊີບໃໝ່ ແບບສົມເຫດສົມຜົນ. ບັນດາປະເທດກຳລັງພັດທະນາສ່ວນໃຫຍ່ ແລະຫຼາຍປະເທດທີ່ພັດທະນາແລ້ວ ໄດ້ລາຍງານການຂາດບ່ອນເໝາະສົມສຳລັບເກັບມ້ຽນໄລຍະຍາວ, ຂາດສິ່ງເອື້ອອຳນວຍຄວາມສະດວກ ເພື່ອ ດຳເນີນ ການວຽກປະສົມພັນພືດຊະນິດທີ່ເຮັດການສືບພັນດ້ວຍເກສອນ, ແລະການມີທຶນ ແລະ ບຸກຄະລາກອນບໍ່ພຽງພໍ ຊຶ່ງທັງໝົດນັ້ນເປັນບັນຫາໃຫຍ່ທີ່ຕ້ອງຜ່ານຜ່າ.

**96.ບັນດາຈຸດປະສົງໄລຍະຍາວ**:ເພື່ອສ້າງລະບົບໂຄງລ່າງທີ່ຈຳເປັນໃນການປູກຟື້ນຊີບໃໝ່ແບບເປັນໄລຍະ.

**97.ບັນດາຈຸດປະສົງ ໄລຍະກາງ:** ເພື່ອສ້າງຍຸດທະສາດ, ສ້າງບັນດາກົນໄກປະສານງານ, ກຳນົດສະຖານທີ່ສຳລັບ ການປູກຟື້ນຊີບ, ສຳເລັດບັນດາຂໍ້ຕົກລົງທີ່ຕ້ອງມີເພື່ອໃຫ້ເກີດມີການຮ່ວມມືລະຫວ່າງສະຖາບັນ, ປັບປຸງຄວາມສາມາດ ແລະໂຄງລ່າງດັ່ງທີ່ເຫັນຈຳເປັນ, ພ້ອມທັງເຮັດຂໍ້ລິເລີ່ມກິດຈະກຳ ເພື່ອ ການປູກຟື້ນຊີບ ກຸ່ມແນວພັນ ທີ່ເປັນເປົ້າໝາຍ. ເພື່ອສຳເລັດບ່ອນເກັບມ້ຽນສຳລັບແນວພັນ ໃນການອະນຸລັກ ນອກຖິ່ນກຳເນີດ ທີ່ໄດ້ ປູກຟື້ນຊີບ ຊຸດທຳອິດໃນໂລກ ໂດຍໄດ້ອອກແບບມາສະເພາະ ເພື່ອອະນຸລັກຮັກສາຄວາມໝັ້ນຄົງຍືນຍົງທາງພັນທຸກຳຂອງ ວັດຖຸພັນ.

**98.ນະໂຍບາຍ/ຍຸດທະສາດ:** ຄວນໃຫ້ບູລິມະສິດຕໍ່:

- ວຽກງານ ການປູກຟື້ນຊີບ ຕົວຢ່າງແນວພັນ ທີ່ມີຢູ່ໃນບ່ອນເກັບມ້ຽນໄລຍະຍາວໃນປັດຈຸບັນ ຫຼື ຕົວຢ່າງທີ່ໄດ້ກຳນົດວ່າຈະເອົາປ່ຽນແທນໃນໄລຍະຍາວນານ ຊຶ່ງພວມມີບັນຫາດ້ານຄວາມງອກ, ພ້ອມນີ້ຍັງມີຄວາມຕ້ອງການ ເຮັດການຂະຫຍາຍແນວພັນ ແລະເຫດຜົນອື່ນໆ.(ການຄຸ້ມຄອງທີ່ຖືກແມ່ນ ການຮັບປະກັນໃຫ້ບັນດາແນວພັນ ໄດ້ມີເງື່ອນໄຂ ຖືກປູກຟື້ນ ຊີບ ຍາວນານ ຍ້ອນການສູນເສຍ ຄວາມງອກ ແລະຜູ້ທີ່ເຮັດການຂະຫຍາຍແນວພັນ ແມ່ນເຮັດຈຳນວນໜ້ອຍລົງ).
- ບັນດາຕົວຢ່າງ ແນວພັນ ທີ່ສອດຄ່ອງຕາມກັບເງື່ອນໄຂທີ່ວ່າມີແຕ່ ຊະນິດສິ່ງດຽວນີ້ໃນໂລກ, ແນວພັນດັ່ງກ່າວຕົກຢູ່ໃນຄວາມສ່ຽງ ແລະ ຢູ່ໃນເງື່ອນໄຂ ທີ່ມີຄວາມເປັນໄປໄດ້ທີ່ຈະສືບຕໍ່ໃຫ້ມີສະພາບຫຼາກຫຼາຍ ຄືດັ່ງຂອງຕົວຢ່າງຕົ້ນສະບັບ.

99.ຄວນສະແຫວງຫາ ການປະກອບສ່ວນ ຂອງບັນດາຕາໜ່າງພືດ ແລະພາກພື້ນເພື່ອກຳນົດລະອຽດບູລິມະສິດຕ່າງໆ ແລະເພື່ອກຳນົດ ແນວພັນທີ່ເໝາະສົມເພື່ອ ປູກຟື້ນຊີບ.

100.ການກຳນົດຕົວຢ່າງແນວພັນ ສະເພາະ ຄວນດຳເນີນໄປໂດຍ ມີການຮ່ວມມືກັບນັກປັບປຸງພັນ ແລະຜູ້ ຄຸ້ມຄອງແຜນງານແຫ່ງຊາດ ຊຶ່ງເປັນຜູ້ທີ່ມີຄວາມຮູ້ຢ່າງເລິກເຊິ່ງ ແລະລະອຽດກ່ຽວກັບ ການເກັບມ້ຽນ ຕົວຢ່າງແນວພັນ ແລະ ທີ່ຮູ້ເຖິງ ວັດຖຸພັນ ຄ້າຍຄືກັນໃນເຂດ ອະນຸລັກ ໃນຖິ່ນກຳເນີດ.

101 ການປູກຟື້ນຊີບ ຄວນສຸມໃສ່ ໜ້າວຽກ ໃຫ້ເໝາະສົມ ແລະ ຖ້າເປັນໄປໄດ້ຄວນຊອກຫາວິທີການເພື່ອ ສາມາດຮັກສາ ສະພາບຫຼາຍຫຼາຍດ້ານ ຈຸດພິເສດສະເພາະດ້ານ ຂອງ ຊະນິດ ກຳມະພັນ ທີ່ສະຫຼັບສັບຊ້ອນຂອງ ຕົວຢ່າງຕົ້ນສະບັບທີ່ໄດ້ຖືກ ປັບຕົວແລ້ວ.

102.ຄວນພະຍາຍາມຫຼຸດຜ່ອນ ການເຮັດວຽກ ແບບຊ້ຳຊ້ອນ ຂອງການເກັບຕົວຢ່າງແນວພັນ ເພື່ອແນໃສ່ປັບປຸງ ຄວາມມີປະສິດຕິພາບ ແລະ ຫຼຸດຜ່ອນຄ່າໃຊ້ຈ່າຍ ສູງດ້ານ ການອະນຸລັກໃນປັດຈຸບັນ. ບໍ່ຄວນເບິ່ງວຽກງານ ປູກຟື້ນຊີບວ່າເປັນຮູບແບບໜຶ່ງທີ່ຕ້ອງສືບຕໍ່ເຮັດໃນໜ້າວຽກຂອງ ການເກັບຕົວຢ່າງແນວພັນ ໃນເງື່ອນໄຂທີ່ ບໍ່ໄດ້ມາດຕະຖານ. ໃນໄລຍະຍາວ ເພິ່ນໃດ້ ພົບວ່າ ຄວນຫລຸດຜ່ອນ ການ ປູກຟື້ນຊີບ ໃຫ້ໜ້ອຍລົງ ນັ້ນແມ່ນເປົ້າໝາຍສຳຄັນ ແລະເປັນຜົນໄດ້ມາຈາກ ກິດຈະກຳທັງຫຼາຍ ພາຍໃຕ້ແຜນດຳເນີນງານໂລກ.

103.ລັດຖະບານແລະພາກສ່ວນເອກະຊົນ,ສະຖາບັນຕ່າງໆລວມທັງຄະນະທີ່ປຶກສາດ້ານການຄົ້ນຄວ້າ ກະສິກຳ ນານາຊາດ ແລະອົງການບໍ່ສັງກັດລັດຄວນ:

- ຮ່ວມມືເພື່ອໃຫ້ມີການນຳໃຊ້ຄວາມອາດສາມາດ ທີ່ມີຢູ່ແບບມີປະສິດຕິພາບ ແລະເພື່ອຮັບປະກັນໃຫ້ວຽກ ປູກຟື້ນຊີບ ດຳເນີນໄປໃນເງື່ອນໄຂດ້ານວິທະຍາສາດ, ເຕັກນິກ ແລະດ້ານປົກຄອງ ແລະ ກໍສາມາດດຳເນີນ ໄປຢູ່ໃກ້ສະຖານທີ່ໆ ໄດ້ເອົາຕົວຢ່າງ ໃນຕອນທຳອິດ; ແລະ,
- ສົ່ງເສີມ ແລະ ອຳນວຍຄວາມສະດວກ ແກ່ວຽກງານ ຊັບພະຍາກອນພັນທຸກຳ ພືດ ເພື່ອອາຫານ ແລະ ການກະສິກຳ ທີ່ໄດ້ເກັບໄວ້ແບບ ອະນຸລັກ ນອກຖິ່ນກຳເນີດ ທັງນີ້ເພື່ອຫຼຸດຜ່ອນ ສະພາບຕ້ອງເກັບມ້ຽນຕົວຢ່າງແນວດຽວກັນທີ່ໄດ້ເກັບໄວ້ຢູ່ຫຼາຍໆບ່ອນແລະຕໍ່ມາຈະຕ້ອງໄດ້ປູກຟື້ນຊີບແຕ່ລະຕົວຢ່າງ.

104.ພ້ອມໆກັນກັບການເຮັດວຽກໃນດ້ານ ປູກຟື້ນຊີບ ດັ່ງທີ່ເຫັນຈຳເປັນ ຄວນເຮັດ ການກຳນົດຄຸນລັກສະນະດ້ານກິດຈະກຳທັງຫຼາຍ ໂດຍທີ່ບໍ່ຕ້ອງຫຼຸດຄຸນຄ່າໃນແງ່ປະສິດຕິຜົນ ຫຼືບັນດາເປົ້າໝາຍ ວິທະຍາດສາດ ຂອງການເຮັດວຽກ ການປູກຟື້ນຊີບ.

**105.ຄວາມອາດສາມາດ:** ເທົ່າທີ່ເຫັນວ່າເໝາະສົມ ແລະປະສິດຕິພາບທາງຄ່າໃຊ້ຈ່າຍ, ຄວນສະໜອງສິ່ງອຳນວຍຄວາມສະດວກທີ່ເໝາະສົມ, ມີຊັບພະຍາກອນມະນຸດ, ເຕັກໂນໂລຊີທີ່ເໝາະສົມ ພ້ອມມີອຸບປະກອນໃຫ້ແກ່ ແຜນງານແຫ່ງຊາດ ແລະສະຖາບັນສາກົນທີ່ພົວພັນເຮັດວຽກ ການປູກ

ຟື້ນຊີບ ຊຶ່ງແມ່ນສ່ວນນຶ່ງຂອງແຜນວຽກໂລກ. ຄວນເອົາໃຈໃສ່ພິເສດຕໍ່ການກໍ່ສ້າງ ແລະເສີມສ້າງ ຄວາມອາດສາມາດ ໃຫ້ພັກແໜ້ນ ຕໍ່ ປູກຟື້ນຊີບຊະນິດແນວພັນພືດ ທີ່ສືບພັນ ດ້ວຍເກສອນ. ຄວນເອົາໃຈໃສ່ຕໍ່ການເຂົ້າຮ່ວມຂອງພາກສ່ວນເອກະຊົນ, ຊາວໄຮ່ນາ ແລະອີງການບໍ່ສັງກັດລັດ ໃນກິດຈະກຳນີ້.

106.ທະນາຄານ ເຊື້ອພັນ ຄວນຮັບປະກັນໃຫ້ມີການຕິດຕາມ ແລະຄວນມີຄວາມສາມາດກຳນົດ ຂີດສະຖານະພາບຂອງ ຕົວຢ່າງແນວພັນ ພ້ອມທັງກຳນົດບູລິມະສິດວ່າ ຕົວຢ່າງແນວພັນ ໃດ ທີ່ຕ້ອງໄດ້ ນຳໄປປູກຟື້ນຊີບ.

107.ໃນແຜນງານຝຶກອົບຮົມນັ້ນຄວນຄຳນຶງເຖິງຄວາມຈຳເປັນທີ່ຕ້ອງອົບຮົມພະນັກງານ ເພື່ອເຮັດ ຂັ້ນຕອນຂອງການ ປູກຟື້ນຊີບ ແນວພັນ ແລະໃນບັນຫາ ການປູກຟື້ນຊີບໃນຊຸດໜຶ່ງ ທີ່ຕ້ອງປະຕິ ບັດສຳລັບ ສະເພາະຊະນິດແນວພັນ ສະເພາະ.

**108.ການຄົ້ນຄ້ວາ/ເຕັກໂນໂລຊີ:** ຄວນສືບຕໍ່ພັດທະນາຂໍ້ແນະນຳເພື່ອ ການ ປູກຟື້ນຊີບ ກໍຄືດ້ານ ມາດຕະຖານ ແລະເຕັກໂນໂລຊີສະເພາະ ຕາມຄວາມເໝາະສົມຄວນມີຂໍ້ແນະນຳ ເພື່ອວ່ານອກ ຈາກບັນຫາອື່ນໆ ແລ້ວຈະໄດ້ສະໜອງ ທິດທາງ ດ້ານເລືອກວິທີເກັບ ຕົວຢ່າງແນວພັນ ເພື່ອຈຸດປະ ສົງ ການ ປູກຟື້ນຊີບ . ພ້ອມນັ້ນກໍຕ້ອງຄຶດເຖິງບັນຫາ ການວາງແຜນ ແລະ ການບໍລິຫານຄຸ້ມຄອງ ພ້ອມທັງເລື່ອງຄວາມແທດເໝາະເພື່ອເອົາໄປນຳໃຊ້ໃນສະພາບການຈັດຕັ້ງທີ່ແຕກຕ່າງກັນໄປ ກໍຄື ເພື່ອຈຸດປະສົງ ຂອງການ ເກັບຕົວຢ່າງແນວພັນ.

109.ສືບຕໍ່ພັດທະນາ ການຄົ້ນຄວ້າວິທະຍາສາດ ເພື່ອກຳນົດ ແລະວາງບູລິມະສິດວິທີເລືອກ ເຟັ້ນ ຕົງ ຢ່າງແນວພັນ ສຳລັບ ການ ປູກຟື້ນຊີບ ໂດຍຜ່ານ ຄວາມພະຍາຍາມ ລະດັບຊາດ ແລະລະ ດັບໂລກ.

110.ຍັງມີຄວາມຕ້ອງການເພີ່ມທະວີວຽກຄົ້ນຄວ້າເພື່ອປັບປຸງເຕັກໂນໂລຊີ ເພື່ອອະນຸລັກໃນຂະ ແໜງຕ່າງໆ: ເຮັດໃຫ້ໄລຍະ ຮ່າງຂອງຮອບວຽນການ ປູກຟື້ນຊີບຍາວອອກ (ເມັດພັນພື້ນແບບ orthodox seeds), ກົນໄກສີລະສາດຕ່າງໆ ທີ່ພົວພັນກັບຄວາມ ທົນທານ ຕໍ່ອາກາດໜາວ ແລະ ການສູນເສຍ ນ້ຳຂອງເມັດພັນ ແລະ ເຕັກໂນໂລຊີ ຕ່າງໆໃນການ ອະນຸລັກແບບ ໃນ ລອດ ແກ້ວ.

111.ການຄົ້ນຄ້ວາຄວນດຳເນີນໄປເພື່ອເພີ່ມທະວີປະສິດຕິຜົນ ແລະປະສິດຕິພາບຂອງການ ປູກຟື້ນຊອບເມັດພັນ, ລວມທັງຮູບແບບວິທີຫຼຸດຜ່ອນການເຄື່ອນຍ້າຍ ພັນທຸກຳ, ການກຳນົດໂຕ ໝາຍ ທີ່ພົວພັນກັບການ ມີອາຍຸຍືນຂອງເມັດພັນ ເພື່ອຊ່ວຍໃນການວາງ ຍຸດທະສາດເພື່ອ ການປູກຟື້ນຊີບຂອງແນວພັນ, ເພື່ອພັດທະນາຄວາມເຂົ້າໃຈຕົ້ນເຫດຕ່າງໆ ທີ່ເຮັດໃຫ້ມີການປ່ຽນ

ແປງໃນ ແນວພັນທີ່ໄດ້ອະນຸລັກໄວ້, ເພື່ອກຳຈັດສັດຕູພືດມາຈາກເມັດພັນ ແລະເພື່ອຊອກໃຫ້ໄດ້ຄຳຕອບ ຈາກຄຳຖາມຕ່າງໆ ກ່ຽວກັບບັນດາ ລະບົບ ປັບປຸງພັນ, ຊີວະສາດດ້ານຈະເລີນພັນ ແລະ ບັນດາກົນໄກ ທີ່ຍັງບົ່ມຊ້ອນ ດ້ານການພັກຕົວຂອງເມັດພັນ ແລະບັນຫາທັງຫຼາຍທາງເຕັກນິກທີ່ພົວພັນເຖິງວິທີເຮັດ ປູກຟື້ນຊີບຂອງແນວພັນ.

112.ຂໍ້ມູນກ່ຽວກັບ ຕົວຢ່າງແນວພັນທີ່ ໄດ້ ອະນຸລັກ ນອກຖິ່ນກຳເນີດ ຄວນຖືກເກັບກຳມາໄວ້ ແລະວິເຄາະເພື່ອໃຫ້ມັນໄດ້ຊ່ວຍການວາງແຜນ ແລະການນຳເອົາໄປໃຊ້.

**113.ການປະສານງານ/ຄຸ້ມຄອງ:** ແຜນປະຕິບັດງານເພື່ອວຽກ ປູກຟື້ນຊີບຂອງແນວພັນ. ໃນ ໂລກ ແບບມີການປະສານສົມທົບຖືກພັດທະນາ ແລະເອົາໄປປະຕິບັດໂດຍອົງກອນໃດໜຶ່ງ ຫຼືຫຼາຍອົງກອນທີ່ກ່ຽວຂ້ອງເໝາະສົມ. ສິ່ງດັ່ງກ່າວແມ່ນຄວນກຳນົດສະຖາບັນ ແລະສະຖານທີ່ເພື່ອເຮັດ ປູກຟື້ນຊີບຂອງແນວພັນ. ຄວນອີງໃສ່ວິທີການເຮັດວຽກແບບວິທະຍາສາດທີ່ໃຊ້ການໄດ້, ແລະຄວນຄິດເຖິງຄວາມຈຳເປັນທີ່ຕ້ອງໄລ່ລຽງປະສິດຕິຜົນຂອງການໃຊ້ຈ່າຍ. ການເຂົ້າຮ່ວມຢ່າງຕັ້ງໜ້າຂອງຕາໜ່າງພືດ ແລະຂົງເຂດຖືວ່າມີຄວາມສຳຄັນ ເພື່ອຮັບປະກັນຜົນສຳເລັດສະ ເພາະ ໃນ ດ້ານກຳນົດ ແລະວາງບູລິມະສິດ ວ່າຕົວຢ່າງແນວພັນໃດທີ່ຄວນປູກຟື້ນຊີບ ພ້ອມກັນນັ້ນແຜນ ແຫ່ງຊາດເພື່ອ ປູກຟື້ນຊີບຂອງແນວພັນ.ຄວນຖືກມີໄວ້ໂດຍສະເພາະໃນດ້ານ ຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ ທີ່ເຫັນວ່າມີຄວາມສຳຄັນລະດັບຊາດ.

114.ຄວນເຮັດການຕິດຕາມຕໍ່ເນື່ອງກ່ຽວກັບຄວາມຕ້ອງການໃນເລື່ອງປູກຟື້ນຊີບຂອງແນວພັນ.ທີ່ເກັບມາອະນຸລັກ, ລວມທັງການ ຄົ້ນຄວ້າເຖິງຄວາມຈຳເປັນຕ້ອງເຮັດ ການສຳຮອງເມັດພັນ ໃຫ້ພຽງພໍ, ສະສົມສິ່ງພົວພັນເຖິງການຈະເລີນເຕີບໂຕຂອງ ຊະນິດແນວພັນ, ເງື່ອນໄຂສາງ ເກັບຮັກສາ ແລະການມີຊີວິດ ຂອງຕົວຢ່າງແນວພັນ ເປັນລາຍກໍລະນີ.

**115.ກິດຈະກຳນີ້ແມ່ນພົວພັນຢ່າງໃກ້ຊິດກັບ:**

- ການສືບຕໍ່ບຳລຸງ ການ ອະນຸລັກ ນອກຖິ່ນກຳເນີດ ຂອງ ຕົວຢ່າງ ທີ່ມີຢູ່ແລ້ວ
- ສ້າງບັນດາລະບົບຂໍ້ມູນແບບກ້ວາງຂວາງດ້ານຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ
- ຂະຫຍາຍວຽກ ການຈຳແນກ ຄູນລັກສະນະ / ກຳນົດ, ປະເມີນຕີລາຄາ ແລະໃຫ້ໝາຍເລກລະຫັດ ຂອງຕົວຢ່າງແນວພັນຕາມ ຫຼັກ ການ ເພື່ອສະດວກໃນການນຳໃຊ້ .
- ສ້າງແຜນງານຕ່າງໆ ລະດັບຊາດໃຫ້ເຂັ້ມແຂງ
- ສ້າງເສີມບັນດາຕາໜ່າງ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ

## <u>7.ສະໜັບສະໜູນແຜນການແລະເປົ້າໝາຍຂອງການເກັບຕົວຢ່າງຊັບພະຍາກອນພັນທຸກຳ ພືດເພື່ອອາຫານ ແລະ ການກະສິກຳ</u>

**116.ການຕີລາຄາ:** ໃນວຽກເກັບມ້ຽນ ຕົວຢ່າງແນວພັນ ສ່ວນໃຫຍ່ ແມ່ນມີຂຶ້ນມາຍ້ອນຄຳນຶງເຖິງຄວາມເປັນໄປໄດ້ທີ່ຈະມີການສູນເສຍ ແລະໂອກາດທີ່ຈະນຳໃຊແນວພັນ. ບັນດາວັດຖຸພັນ ດັ່ງກ່າວໄດ້ອະນຸລັກມາເຖິງປັດຈຸບັນຍັງ ນັ້ນບໍ່ສາມາດເປັນໂຕແທນຢ່າງຄົບຖ້ວນໃຫ້ແກ່ສະພາບຫຼາກຫຼາຍຂອງພືດໄດ້. ຄວາມຕ້ອງການໃນລະດັບໂລກ ເພື່ອທຳການເກັບຊ້ຳຍັງບໍ່ທັນສູງໃນປັດຈຸບັນທຽບໃສ່ 20 ປີຜ່ານມາ ຍ້ອນມີຄວາມກ້າວໜ້າໃນສອງທົດສະວັດກ່ອນ. ຄະນະທີ່ປຶກສາ ດ້ານການ ຄົ້ນຄວ້າພັນທຸກຳ ນານາຊາດ ໃດ້ລາຍງານວ່າພືດຕົ້ນຕໍ ນັ້ນສ່ວນໃຫຍ່ແມ່ນໄດ້ເກັບມ້ຽນ ເຖິງແມ່ນວ່າໃນບາງ ຕົວຢ່າງແນວພັນ ຍັງມີ ຊ່ອງວາງ. ການເກັບຕົວຢ່າງ ພືດ ບາງຢ່າງໃນຂົງເຂດ, ສຳລອງ ແລະການລຍຶງຊີບເຫັນວ່າຍັງບໍ່ທັນຄົບຖ້ວນ. ເຖິງຢ່າງໃດກໍຕາມຍ້ອນຂາດການວິເຄາະຄວາມຫຼາກຫຼາຍທາງພັນທຸກຳແບບກ້ວາງຂວາງທີ່ມີຢູ່ໃນ ທະນາຄານເຊື້ອພັນ ໃນໂລກ, ຈຶ່ງເວົ້າໄດ້ວ່າຂໍ້ສະຫຼຸບຕ່າງໆ ນີ້ເປັນພຽງຂໍ້ສັງເກດໃນຕອນຕົ້ນເທົ່ານັ້ນ.

117.ວຽກງານ ການເກັບມ້ຽນ ແນວພັນໃນອະດີດ ໄດ້ດຳເນີນໄປໂດຍຮູບແບບ ໃນເງື່ອນໄຂ ເຮັດວຽກທີ່ຂາດເຂີນ ອາດຈະບໍ່ສຳເລັດໃນດ້ານເກັບກຳຄວາມຫຼາກຫຼາຍແບບມີຕົວແທນຄັກແນ່ . ເງື່ອນໄຂໃນ ທະນາຄານ ເຊື້ອພັນ ເອງກໍອາດເຮັດໃຫ້ມີການສູນເສຍ ວັດຖຸພັນ ທີ່ໄດ້ເກັບມ້ຽນ ຊຶ່ງນຳໄປສູ່ຄວາມຈຳເປັນຕ້ອງເກັບຄືນໃໝ່. ໃນບາງກໍລະນີ, ມັນມີຄວາມຈຳເປັນທີ່ຕ້ອງເກັບເພື່ອກອບກູ້ວັດຖຸພັນ ທີ່ຖືກຂົ່ມຂູ່ໃນສະພາບ ການອະນຸລັກ ໃນຖິ່ນກຳເນີດ. ໃນບາງກໍລະນີ ແມ່ນ ຍ້ອນ ເຫດຜົນທາງດ້ານຄວາມຈຳເປັນເພື່ອການນຳໃຊ້-ເພື່ອວຽກງານ ຄວາມທົນທານຕ້ານພະຍາດແລະຕ້ານທານກັບສັດຕູພືດ ແລະຄຸນລັກສະນະ ການປັບຕົວຂອງມັນ.

**118.ບັນດາເປົ້າໝາຍໄລຍະຍາວ:** ເພື່ອເກັບ ຊະນິດແນວພັນ, ປະເພດນິເວດ , ແນວພັນ ດັ້ງເດີມຂອງຊາວປູກຝັງ ຫຼື ແນວພັນ ອື່ນໆ, ແລະຂໍ້ມູນຂ່າວສານທີ່ກ່ຽວຂ້ອງ ຊຶ່ງມີຄວາມສ່ຽງ ຫຼືຄາດຄະເນວ່າຈະມີການນຳໃຊ້ມັນ.

**119.ຈຸດປະສົງສະເພາະໜ້າ:** ເພື່ອເລີ່ມຕົ້ນເສີມສ້າງຊ່ອງຫວ່າງທີ່ມີຢູ່ໃນປັດຈຸບັນໃນວຽກງານເກັບຕົວຢ່າງແນວພັນ ໂດຍຈະເຮັດວຽກແບບມີເປົ້າ ແລະມີບູລິມະສິດ.

**120.ນະໂຍບາຍ/ຍຸດທະສາດ:** ພັດທະນາວຽກເກັບກຳຂໍ້ມູນດ້ານປະຕິບັດຕົວຈິງໃນແງ່ຈຸດປະສົງແລະພັນທະກຳນົດໄວ້ໃນສົນທິສັນຍາຄວາມຫຼາກຫຼາຍທາງຊີວະນາໆພັນ, ຕົວຢ່າງເຊັ່ນ ສິດທິຂອງຄູ່ສັນຍາທີ່ຮຽກຮ້ອງໃຫ້ຕ້ອງມີຄວາມເຫັນພ້ອມເອກະພາບລ່ວງໜ້າທີ່ອີງໃສ່ຂໍ້ມູນກ່ອນຈະໃຫ້ເຂົ້າເຖິງຊັບພະຍາກອນພັນທຸກຳ ພ້ອມທັງພັນທະຂອງຄູ່ສັນຍາ ໂດຍຈະຕ້ອງອີງຕາມກົດໝາຍຂອງປະ

ເທດຂອງຄູ່ສັນຍາ ແລະຮຽກຮ້ອງໃຫ້ເຄົາລົບຄວາມຮູ້ຂອງຊຸມຊົນພື້ນເມືອງໃນດ້ານການອະນຸລັກ ແລະການນໍາໃຊ້ສິ່ງຫຼາກຫຼາຍຊີວະນາໆພັນ.

**121.ຄວາມສາມາດ: ວັດຖຸພັນ** ທີ່ໄດ້ເກັບນັ້ນຄວນຖືກຮັກສາມ້ຽນໄວ້ໃນສະຖານທີ່ ຊຶ່ງມີຄວາມສາມາດຄຸ້ມຄອງມັນໄດ້ໃນປະເທດຕົ້ນກໍາເນີດ ແລະອາດມ້ຽນຢູ່ບ່ອນອື່ນ ດັ່ງທີ່ໄດ້ຕົກລົງກັນກັບປະເທດຕົ້ນກໍາເນີດກ່ອນຈະມີການເກັບໃນກໍລະນີທີ່ບໍ່ມີສິ່ງອໍານວຍຄວາມສະດວກດັ່ງກ່າວໃນປະເທດຕົ້ນກໍາເນີດ, ກໍຄວນພັດທະນາມັນຂຶ້ນມາຢູ່ທີ່ບ່ອນຕ້ອງການ ແລະໃນໄລຍະລໍຖ້າກໍ ວັດຖຸພັນ ນັ້ນສາມາດນໍາເອົາ ໄປຄຸ້ມຄອງ ຢູ່ປະເທດຕ່າງໆ ດັ່ງທີ່ໄດ້ຕົກລົງກັນໃນປະເທດຕົ້ນກໍາເນີດກ່ອນ ເຮັດການເກັບແນວພັນ.

122,ກ່ອນຈະເຮັດການເກັບຕົວຢ່າງ ຄວນຄໍານຶງ ຢ່າງຄົບຖ້ວນ ເຖິງຄວາມສາມາດ ທີ່ຈະອະນຸລັກວັດຖຸພັນ ທີ່ໄດ້ເກັບໄວ້ໃຫ້ຮັບປະກັນດ້ານປະສິດຕິຜົນ ແລະຄວາມຍືນຍົງ.

123.ການຝຶກອົບຮົມຄວນດໍາເນີນໄປ ໂດຍຈະຕ້ອງຄຶດເຖິງບັນດາວິທີການເກັບແບບ ວິທະຍາສາດຊັບພະຍາກອນພັນທຸກໍາພືດ ເພື່ອອາຫານແລະການກະສິກໍາ.

**124.ການປະສານງານ/ຄຸ້ມຄອງ:** ເທົ່າທີ່ເຫັນວ່າເໝາະສົມ ຄວນໃຫ້ມີການປະສານງານ ພາຍໃນປະເທດ. ການປະສານງານ ລະດັບສາກົນເທົ່າທີ່ເຫັນຈໍາເປັນ ແມ່ນມີຄວາມຕ້ອງການ ເພື່ອໃຫ້ມີການຕິດຕໍ່ກັບ ການອະນຸລັກ ແນວພັນນອກຖິ່ນກໍາເນີດ ແລະປົວແປງຈຸດຊ່ອງວ່າງ ຈຸດຂາດເຂີນ ເພື່ອພະຍາຍາມດ້ານ ປູກຟື້ນຊັບ. ການປະສານງານນັ້ນ ອາດພົວພັນເຖິງ ການຊອກຮູ້ກໍານົດຄວາມ ຕ້ອງການ ໃນລະດັບໂລກ ກໍຄືຄວາມຕ້ອງການສະເພາະ ຂອງປະເທດໃດໜຶ່ງ ຊຶ່ງປະເທດໜຶ່ງອາດສາມາດ ຕອບສະໜອງ ທາງ ຊັບພະຍາກອນ ພັນທຸກໍາພືດ ເພື່ອ ອາຫານ ແລະ ການກະສິ ກໍາ ໄດ້.

125.ມັນມີຄວາມຈໍາເປັນທີ່ຕ້ອງກໍ່ສ້າງຕາໜ່າງພາກພື້ນແລະພືດພັນແລະຜູ້ຊົມໃຊ້ຊັບພະຍາ ກອນພັນທຸກໍາພືດ ເພື່ອອາຫານແລະການກະສິກໍາ ( ນັກປັບປຸງພັນ ແລະ ຊາວກະສິກອນ ) ເພື່ອຈະໄດ້ແຈ້ງຂ່າວ, ຊີ້ນໍາ ແລະ ກໍານົດບູລິມະສິດ ຂັ້ນຕອນ ການອະນຸລັກທັງໝົດ ລວມທັງການສໍາຫຼວດ, ຂຶ້ນບັນຊີ ແລະເກັບ.

126.ຈໍາເປັນຕ້ອງພັດທະນາກົນໄກຕ່າງໆ ໃນທຸກໆລະດັບ ເພື່ອຈະໄດ້ທໍາການເກັບ ຕົວຢ່າງ ແນວພັນ ຊັບພະຍາກອນພັນທຸກໍາພືດ ເພື່ອອາຫານ ແລະ ການກະສິກໍາ. ກົນໄກທັງຫຼາຍນີ້ ຄວນນໍາໃຊ້ໃຫ້ໄດ້ຢ່າງເຕັມ ສ່ວນຂໍ້ມູນຂ່າວສານ ແລະແນວພັນ ນັ້ນຕ້ອງໃກ້ຊິດທີ່ສຸດກັບລະບົບຂ່າວ ການເຕືອນໄພແຕ່ຫົວທີຂອງທຸກໆ ຂັ້ນ.

127.ວຽກງານດັ່ງກ່າວແມ່ນ ເປັນສ່ວນໜຶ່ງຂອງ ແຜນງານຕ່າງໆ ດ້ານຊັບພະຍາກອນພັນທຸກຳພືດ, ລັດຖະບານອາດ ແຕ່ງຕັ້ງ ບຸກຄົນຮັບຜິດຊອບວຽກ ນີ້ສະເພາະເພື່ອຈະໄດ້ຄຸ້ມຄອງ ວຽກຕອບສະໜອງຄຳຮ້ອງຂໍເພື່ອທຳການເກັບຕົວຢ່າງ.

128.ກິດຈະກຳນີ້ແມ່ນພົວພັນຢ່າງສະໜິດແໜ້ນກັບວຽກ:

- ສຳຫຼວດ ແລະຂຶ້ນທະບຽນ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ
- ສືບຕໍ່ວຽກ ການອະນຸລັກ ແນວພັນໃນຖິ່ນກຳເນີດ
- ສົ່ງເສີມການອະນຸລັກ ສາຍແນວພັນ ພືດປ່າໃນຖິ່ນກຳເນີດ ແລະ ພືດປ່າ ເພື່ອຜະລິດ ອາຫານ

.

## 8. ຂະຫຍາຍກິດຈະກຳ ຕ່າງໆ ດ້ານ ການອະນຸລັກ ແນວພັນນອກ ຈາກເຂດທຳມະຊາດ ຂອງມັນ

**129.ການຕີລາຄາ:** ຄວາມຫຼາກຫຼາຍຂອງຫຼາຍໆ ຊະນິດພືດ ບໍ່ສາມາດ ອະນຸລັກໄດ້ແບບສະດວກ ຫຼືແບບມີປະສິດຕິຜົນ ໄດ້ໃນຮູບແບບ ເປັນເມັດ. ບາງ ຊະນິດແນວພັນ ແມ່ນເອົາໄປ ປັບປຸງພັນໃນຮູບ ການຂະຫຍາຍພັນ ດ້ວຍລຳຕົ້ນ ແລະ ພວກໜຶ່ງ ແມ່ນເຮັດດ້ວຍເມັດ “recalcitrants”. ສ່ວນຫຼວງຫຼາຍ ຂອງພືດຕົ້ນຕໍ ເພື່ອເປັນອາຫານ, ໝາກໄມ້ເຂດຮ້ອນແມ່ນຢູ່ໃຕ້ໝວດນີ້. ຍ້ອນມີຄວາມຫຍຸ້ງຍາກດ້ານເຕັກນິກ ການອະນຸລັກ ຊັບພະຍາກອນ ພັນທຸກຳຂອງພືດປະເພດນີ້ ໂດຍທົ່ວໄປແມ່ນບໍ່ໄດ້ຮັບການເອົາໃຈໃສ່.

130.ພືດຫຼາຍໆແນວ ທີ່ມີຄວາມສຳຄັນ ເພື່ອເປັນອາຫານ ແລະ ການກະສິກຳ ເກືອບເວົ້າໄດ້ວ່າ ທາງ ທະນາຄານເຊື້ອພັນ ແບບ ພື້ນບ້ານ ມັກບໍ່ເຫັນ ຄວາມສຳຄັນເລີຍ. ການເກັບ ຕົວຢ່າງ ແນວພັນ ແມ່ນເຮັດແບບສະເພາະກິດ ແລະ ກໍບໍ່ມີການປະສານສົມທົບກັນ ເພື່ອຮັບປະກັນໃຫ້ໄດ້ຕົວຢ່າງ ແນວພັນທີ່ເປັນຕົວແທນ ດ້ານເຊື້ອພັນ ທີ່ພຽງພໍເພື່ອການອະນຸລັກ ແລະພັດທະນາອີກຕໍ່ໄປ.

131.ສວນພຶກສາຊາດ ແລະ ການນຳໃຊ້ເຕັກໂນໂລຊີໃໝ່, ລວມທັງວິທີການ ໃນລອດແກ້ວ, ອາດສາມາດພັດທະນາ ຕື່ມໃຫ້ຄົບຖ້ວນກວ່າ ເພື່ອຊ່ວຍເສີມສ້າງ ແລະຂະຫຍາຍວຽກອະນຸລັກ ຊັບພະຍາ ກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ.

**132.ຈຸດປະສົງຍາວນານ:** ເພື່ອອະນຸລັກ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ ເພື່ອໃຫ້ມີໄວ້ໃຊ້ໃນອະນາຄົດ.

**133.ຈຸດປະສົງສະເພາະໜ້າ:** ເພື່ອພັດທະນາບັນດາ ຍຸດທະສາດຄຸ້ມຄອງ ວຽກງານອະນຸລັກ ນອກຖິ່ນ ກຳເນີດ ພືດປະເພດ ປູກຂະຫຍາຍພັນ ດ້ວຍລຳຕົ້ນ ແລະ ພືດທີ່ໃຊ້ເມັດເພື່ອເພາະປູກ

134.ເພື່ອສົ່ງເສີມການພັດທະນາ ແລະຖ່າຍທອດເຕັກໂນໂລຊີທີ່ເໝາະສົມສຳລັບວຽກງານອະນຸລັກ ພືດປະເພດດັ່ງກ່າວ.

135.ເພື່ອສົ່ງເສີມ ແລະ ຊຸກຍູ້ໃຫ້ສວນພຶກສາຊາດ ມີສ່ວນຮ່ວມຢ່າງຫຼາຍກວ່າເກົ່າໃນວຽກອະນຸລັກ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ, ໂດຍສະເພາະ ການອະນຸລັກ ຊະ ນິດ ແນວພັນ ຊຶ່ງມີເງື່ອນໄຂໄດ້ປຽບ.

**136.ນະໂຍບາຍ/ຍຸດທະສາດ:** ບັນດາລັດຖະບານ ສູນຄົ້ນຄ້ວາກະສິກຳສາກົນ, ອົງການບໍ່ສັງກັດ ລັດ, ແລະອົງກອນໃຫ້ທຶນ ຄວນໃຫ້ ການສະໜັບສະໜູນ ແບບພຽງພໍເໝາະສົມ ແລະດຸ່ນດ່ຽງ ເພື່ອ ການອະນຸລັກ ແນວພັນ ທີ່ມີການສືບພັນດ້ວຍລຳຕົ້ນ ແລະ ພືດ /recalcitrant ເມັດພັນພືດ

**137.ຄວາມສາມາດ:** ບັນດາສວນພຶກສາຊາດ ແລະ ທະນາຄານເຊື້ອພັນ ຢູ່ທ້ອງຖິ່ນ ຄວນຖືກສ້າງ ຕັ້ງໃຫ້ເຂັ້ມແຂງ, ສະເພາະຢ່າງຍິ່ງສິ່ງທີ່ພົວພັນເຖິງຄວາມເຂັ້ມແຂງ ເພື່ອຈະໄດ້ອະນຸລັກ ບັນດາ ຊະນິດແນວພັນ ທີ່ສ່ວນຫຼວງຫຼາຍຂອງສິ່ງອຳນວຍຄວາມສະດວກ ເພື່ອວຽກກະສິກຳມັກຈະເບິ່ງ ຂ້າມຫຼົງລືມ. ກ່ຽວກັບບັນຫານີ້ ຄວນສ້າງຄວາມເຂັ້ມແຂງ ດ້ານບຸກຄະລາກອນ ໃຫ້ແກ່ບັນດາ ປະ ເທດ ກຳລັງພັດທະນາ ໂດຍສະເພາະ. ເທົ່າທີ່ເຫັນວ່າເໝາະສົມ, ອາດສ້າງຄວາມເຂັ້ມແຂງ ສ້າງ ສິ່ງເອື້ອ ອຳນວຍຄວາມສະດວກ ແກ່ສວນ ພຶກສາຊາດ (Bot. Garden).

138.ສວນພຶກສາຊາດ ແບບງ່າຍດາຍ ແລະ ບໍ່ຕ້ອງໃຊ້ຈ່າຍແພງ ກໍຄື ທະນາຄານເຊື້ອພັນ ສຳລັບ ປູກພືດຊະນິດເປັນຕົ້ນ ແລະພຸ່ມໄມ້ ໃນສະຖານທີ່ມະຫາວິທະຍາໄລ, ໂຮງຮຽນ ແລະສະຖາບັນ ອື່ນໆ ເທົ່າທີ່ເຫັນສົມຄວນ ຕ້ອງໄດ້ຮັບ ການພັດທະນາ ແລະສົ່ງເສີມ ການສຶກສາ ແລະສ້າງຈິດສຳ ນຶກໃຫ້ແກ່ມວນຊົນ.

139.ຄວນສະໜັບສະໜູນ ໃຫ້ມີການອົບຮົມ ດ້ານເຕັກນິກ ປູກໃນລອດແກ້ວ ແລະ ເຕັກໂນໂລຊີ ໃໝ່ ແລະ ເໝາະສົມອື່ນໆ ໂດຍສອດຄ່ອງ ກັບຄວາມ ຕ້ອງການ ແລະ ບູລິມະສິດຂອງຊາດ, ອານຸ ຂົງເຂດ, ແລະເຂດແຄ້ວນ, ຄວນໃຫ້ການສະໜັບສະໜູນເພື່ອສ້າງຄວາມເຂັ້ມແຂງ ເພື່ອຈະໄດ້ນຳ ໃຊ້ເຕັກໂນໂລຊີນັ້ນ.

140.ຄວນພັດທະນາ ລະບຽບຂັ້ນຕອນອັນແນ່ນອນ ເພື່ອ ການອະນຸລັກແບບ ປູກໃນລອດແກ້ວ ແລະເຕັກໂນໂລຊີຕ່າງໆ ເພື່ອການອະນຸລັກ ພືດສຳຄັນ ປະເພດສືບພັນດ້ວຍລຳຕົ້ນ ແລະ ພືດ ທີ່ ມີເມັດບໍ່ທຳມະດາ/ non-orthodox seed plants.

141.ຄວນມີການປະເມີນ ຕີລາຄາຄວາມ ຕ້ອງ ການ ດ້ານອະນຸລັກ ຊະນິດແນວພັນ ອື່ນໆ ເພື່ອເປັນອາຫານ ແລະກະສິກຳ ຊຶ່ງມາເຖິງຈຸດນີ້ ຍັງບໍ່ທັນໄດ້ອະນຸລັກ ຢ່າງພຽງພໍເທື່ອ, ລວມທັງການສຳຫຼວດກິດຈະກຳຕ່າງໆ ຊຶ່ງຕ້ອງເຮັດ ເພື່ອຈະໄດ້ເຮັດ ການວາງແຜນ ແລະປະສານງານວຽກເກັບ ແລະອະນຸລັກໃນຕອນຕໍ່ໄປ.

**142.ການຄຸ້ມຄອງ/ການປະສານງານ:** ຕາໜ່າງພືດ ແລະຕາໜ່າງ ພາກພື້ນ ພ້ອມທັງອົງການສວນພຶກສາຊາດສາກົນທີ່ກ່ຽວຂ້ອງ, ໂດຍໄດ້ຮັບການສະໜັບສະໜູນ ຈາກ ສູນຄົ້ນຄ້ວາກະສິກຳ ສາກົນ ແລະ ລະບົບຄົ້ນຄ້ວາກະສິກຳແຫ່ງຊາດ. ຄວນປະເມີນຕີລາຄາຢ່າງເປັນປົກກະຕິ ບັນຫາ ທີ່ພົວພັນເຖິງການອະນຸລັກ ແນວພັນພືດທີ່ສືບພັນດ້ວຍລຳຕົ້ນ ແລະ ພືດທີ່ໃຫ້ເມັດບໍ່ທຳມະດາ non-orthodox seeded plants ແລ້ວ ເຮັດ ຂໍ້ສະເໜີ ຕ່າງໆ ແລະກຳນົດ ບາງກິດຈະກຳ ເພື່ອແກ້ໄຂ ທີ່ເຫັນສົມຄວນ.

143.ສວນ ພຶກສາຊາດ ຄວນໄດ້ຮັບ ການສົ່ງເສີມ ເພື່ອໃຫ້ເຂົ້າຮ່ວມຢ່າງຕັ້ງໜ້າໃນບັນດາກິດຈະກຳຂອງສະມາຄົມ ສວນພຶກສາຊາດສາກົນ. ຄວນເສີມຂະຫຍາຍ ສາຍສຳພັນ ລະຫວ່າງບັນດາອົງການ ສວນພຶກສາຊາດສາກົນ (ເຊັ່ນ ສະມາຄົມສວນພຶກສາຊາດສາກົນ ແລະຊຸມສະມາຄົມທີ່ຮັບຜິດຊອບ ແລະເຮັດວຽກອະນຸລັກ ຊະນິດແນວພັນ ເພື່ອເປັນອາຫານ ແລະກະສິກຳ (ນອກຈາກອົງການອື່ນໆ ກໍມີອົງການ ອາຫານແລະການກະເສດ, ແຫລ່ງຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະການກະສິກຳ, ແລະ ສູນຄົ້ນຄ້ວາກະສິກຳ ສາກົນອື່ນໆ). ເຊັ່ນດຽວ ກັນກໍຄວນສ້າງເສີມ ການຂະຫຍາຍສາຍພົວພັນລະຫວ່າງສະຖາບັນ ລວມທັງສະຖາບັນເອກະຊົນ (ເຊັ່ນ ຂະແໜງທຸລະກິດກ້າເບ້ຍ) ລະດັບຊາດ. ຄວນສົ່ງເສີມ ການຊຸກຍູ້ໃຫ້ມີການຮ່ວມມື ໃນແງ່ປະຕິບັດການຕົວຈິງ ແລະຖືເປັນບັນຫາບູລິມະສິດ.

144.ກິດຈະກຳນີ້ແມ່ນພົວພັນໃຫ້ຊິດກັບ:

- ວຽກສືບຕໍ່ໃຫ້ມີການ ອະນຸລັກ ຕົວຢ່າງແນວພັນ ນອກຖິ່ນກຳເນີດ ຊຶ່ງ ພວມດຳເນີນ ຢູ່.
- ສົ່ງເສີມວຽກອະນຸລັກ ຕົວຢ່າງ ສາຍພັນພືດປ່າ ໃນຖິ່ນກຳເນີດ ແລະ ພືດປ່າ ເພື່ອຜະລິດ ອາຫານ.
- ສ້າງແຜນງານແຫ່ງຊາດໃຫ້ເຂັ້ມແຂງ

## ການນຳໃຊ້ຊັບພະຍາກອນພັນທຸກຳພືດ

9. ຂະຫຍາຍວຽກ ຈຳແນກຄູນລັກສະນະ ຂອງແນວພັນ, ການປະເມີນຕີລາຄາ ແລະເຮັດໝາຍເລກ ຕົວຢ່າງແນວພັນ ຕົ້ນຕໍເພື່ອສະດວກໃນການໃຊ້.
10. ເພີ່ມທະວີການ ສົ່ງເສີມ ແລະວຽກ ເຜີຍແຜ ດ້ານພັນທຸກຳ ຢ່າງກ້ວາງຂວາງ
11. ສົ່ງເສີມການກະສິກຳແບບຍືນຍົງໂດຍໃຫ້ມີການຜະລິດພືດຫຼາຍໆວິທີ ແລະໃຫ້ມີຄວາມຫຼາກຫຼາຍ ສູ່ທາງ ກວ້າງຂວາງ ດ້ານພືດພັນ.
12. ສົ່ງເສີມໃຫ້ມີການພັດທະນາ ແລະການຄ້າພືດ ແລະ ບັນດາຊະນິດ ທີ່ມີການນຳໃຊ້ແບບບໍ່ເຕັມສ່ວນ.
13. ໃຫ້ການສະໜັບສະໜູນຕໍ່ການຜະລິດ ແລະ ແຈກຈ່າຍ ເມັດພືດພັນ.
14. ພັດທະນາ ການຕະຫຼາດໃໝ່ສຳລັບແນວພັນທ້ອງຖິ່ນ ແລະ ຜະລິດຕະພັນທີ່ "ຮັ່ງມີດ້ານຄວາມຫຼາກຫຼາຍ"

## 9. ຂະຫຍາຍໜ້າວຽກ ການຈຳແນກຄູນລັກສະນະພິເສດ, ການປະເມີນ ຕີລາຄາ ແລະ ໝາຍເລກໝາຍ ຕົວຢ່າງແນວພັນ ຫລັກ ເພື່ອສະດວກໃນການໃຊ້.

**145.ການປະເມີນ:** ຕົວຢ່າງ ແນວພັນ ຂອງ ທະນາຄານ ເຊື້ອພັນ ຄວນສາມາດສະໜອງ ໃຫ້ຜູ້ຊົມໃຊ້ໄດ້ມີໂອກາດ ຕອບບັນຫາ ສິ່ງທ້າທ້າຍ . ສ່ວນຫຼາຍແລ້ວ ເພິ່ນມັກຈະບໍ່ໄດ້ຈັດສັນຄູນ ລັກສະນະສະເພາະດ້ານ ແລະ ປະເມີນຕີລາຄາ ຕົວຢ່າງແນວພັນ ໃນ ທະນາຄານເຊື້ອພັນ, ຊຶ່ງສະພາບດັ່ງກ່າວນີ້ເຮັດໃຫ້ມີການນຳໃຊ້ ຕົວຢ່າງແນວພັນດັ່ງກ່າວ ບໍ່ໝົດຄຸນຄ່າ ແລະ ບໍ່ເຫັນໄດ້ຄຸນຄ່າແທ້ຈິງຂອງ ແນວພັນ ແລ້ວ ກໍນຳໄປສູ່ການໃຊ້ຈ່າຍ ສຳລັບ ການອະນຸລັກ ໃນລາຄາສູງ ເມື່ອທຽບໃສ່ ຜົນປະໂຫຍດ ທີ່ໄດ້ມາ. ບົດລາຍງານ ຂອງບັນດາປະເທດ ກໍໄດ້ຊີ້ໃຫ້ ເຫັນວ່າ ຍ້ອນຂາດການກຳນົດຄູນລັກສະນະພິເສດ ແລະ ການ ປະເມີນຕີລາຄາ ຈຶ່ງເຮັດ ໃຫ້ມີອັນ ຈຳກັດໃນການນຳໃຊ້ ຊັບພະຍາກອນ ພັນທຸກຳພືດ ໃນແຜນງານ ປັບປຸງພັນ.

146.ນັກປັບປຸງ ພັນພືດ ແລະ ຜູ້ຊົມໃຊ້ອື່ນໆສ່ວນຫຼວງຫຼາຍ ສົນໃຈຢາກໃຫ້ມີ ຊະນິດພັນທຸກຳ ໃນຈຳນວນ ທີ່ສາມາດຄຸ້ມຄອງໄດ້ ຊຶ່ງເປັນ ຊະນິດແນວພັນ ທີ່ມີ ຫຼື ໜ້າຈະມີລັກສະນະສະເພາະ ທີ່ສຳຄັນ ເພື່ອຮັບໃຊ້ ແຜນງານປັບປຸງແນວພັນຂອງຕົນ. ການກຳນົດແຈ້ງລັກສະນະສະເພາະຕົວ ໂດຍຜ່ານ ການຈັດລັກສະນະ ສະເພາະ ແລະ ສ້າງຕັ້ງ ການເກັບຕົວຢ່າງ ສຳຄັນ ທີ່ເປັນໃຈກາງ ( ກຸ່ມຍ່ອຍ ທີ່ໄດ້ເລືອກມາ ເພື່ອໃຫ້ມີຄວາມ ແຕກຕ່າງ ຫຼາກຫຼາຍ ສູງສຸດໃນຊຸມ ຕົວຢ່າງແນວພັນ ຈຳນວນ ບໍ່ຫຼວງຫຼາຍ), ແລະ ຖືວ່ານັ້ນ ຄື ມາດຕະການ ທີ່ສາມາດ ສົ່ງເສີມໃຫ້ມີການນຳໃຊ້ຕົວຢ່າງແນວພັນ ແບບກ້ວາງຂວາງ ແລະ ມີປະສິດຕິພາບ ກວ່າເກົ່າ. ການປະເມີນຕີລາຄາ ກໍສາມາດ ຊ່ວຍໃຫ້ຮູ້ໄດ້ວ່າ ແນວພັນ ໃດແດ່ທີ່ຊາວໄຮ່ນາ ອາດຈະ ນຳໃຊ້ ໂດຍກົງ.

147.ນອກເໜືອຈາກນັ້ນແລ້ວ, ການ ຈຳແນກຄູນລັກສະນະ ແລະ ປະເມີນຕີ ລາຄາ ຂໍ້ມູນ ແລະ ການນຳໃຊ້ ຕົວຢ່າງແນວພັນ ຫຼັກລ້ວນ ແຕ່ມີຄວາມສຳຄັນ ຕໍ່ການຄຸ້ມຄອງ ຕົວຢ່າງແນວພັນ ໂດຍ ລວມໃຫ້ມີ ປະສິດຕິພາບ ແລະ ປະສິດຕິຜົນ.

**148.ບັນດາຈຸດປະສົງໄລຍະຍາວ:** ເພື່ອເພີ່ມທະວີ ແລະປັບປຸງການນຳໃຊ້ຊັບພະຍາກອນພັນທຸກຳ ພືດ ທີ່ໄດ້ອະນຸລັກໄວ້ໃຫ້ ມັນງ່າຍດາຍ ກວ່າເກົ່າ. ເພື່ອອຳນວຍ ຄວາມສະດວກ ໃຫ້ມີຄວາມຄືບ ໜ້າໃນ ດ້ານ ປັບປຸງພັນພືດ ໂດຍ ຜ່ານວຽກສົ່ງເສີມ ການກຳນົດ ວ່າອັນໃດຄື ກູ່ມແນວພັນ ທີ່ເປັນ ປະໂຫຍດ ຫຼື ອົງປະກອບ ພັນທຸກຳ ມີຫຍັງແດ່ເພື່ອຈະໄດ້ເສີມຂະຫຍາຍ ພັນທຸກຳ ເພື່ອ ເປັນຂໍ້ມູນຊຸກຍູ້ແກ່ວຽກງານ ປັບປຸງພັນ ແລະຮັບໃຊ້ໃຫ້ ແກ່ປັບພັນ ອັນຈະເຮັດໃຫ້ມີສະພາບຫຼາກ ຫຼາຍໃນລະດັບສູງ ກວ່າທາງ ດ້ານພັນທຸກຳ ໃນຈຳນວນພືດ ແລະລະບົບກະສິກຳ. ເພື່ອກຳນົດໃຫ້ ໄດ້ວ່າ ແນວພັນພືດ ອັນໃດແທ້ທີ່ມີຄຸນຄ່າບົ່ມຊ້ອນ ອັນຈະເຮັດ ໃຫ້ຊາວກະສິກອນ ສາມາດນຳໃຊ້ ມັນໂດຍກົງ ໃນແຜນງານປູກຝັງຂອງເຂົາເຈົ້າໄດ້.

149.ເພື່ອສົ່ງເສີມໃຫ້ມີການປະສານງານໃນວຽກອະນຸລັກ, ການສຳຫຼວດ ແລະກິດຈະກຳປັບປຸງ ໂດຍມີການວາງເປົ້າໝາຍໜ້າວຽກ ເກັບຕົວຢ່າງ, ນຳໃຊ້ຍຸດທະສາດ ການເອົາຕົວຢ່າງ ໃຫ້ໄດ້ສູງ ສຸດ, ນຳໃຊ້ບັນດາວິທີການ ປູກຟື້ນຊີບ ໃຫ້ໄດ້ປະໂຫຍດສູງສຸດ, ກຳນົດໃຫ້ໄດ້ຊ່ອງຫວ່າງໃນວຽກ ງານເຮັດ ເກັບຕົວຢ່າງ, ການເຮັດ ອະນຸລັກ ແບບສົມເຫດສົມຜົນ, ວາງບູລິມະສິດສຳລັບເຮັດ ການເກັບຕົວຢ່າງແນວພັນ, ສ້າງຕັ້ງ ຈຸດປະສານງານຫລັກ ດ້ານເກັບຕົວຢ່າງ ແນວພັນ ຢູ່ພື້ນທີ່ຊາວ ກະສິກອນ ແລະ ວັດແທກ ຊັ່ງຊາເບິ່ງປະສິດຕິຜົນ ທຽບຖານ ຂອງວຽກງານອະນຸລັກແນວພັນ ນອກຖິ່ນກຳເນີດ ແລະອະນຸລັກແນວພັນໃນຖິ່ນກຳເນີດ.

**150.ບັນດາຈຸດປະສົງສະເພາະໜ້າ:** ເພື່ອໃຫ້ບູລິມະສິດສູງ ດ້ານການພັດທະນາ ວຽກແຜນ ຈຳແນກ ຄູນລັກສະນະສະເພາະດ້ານຂອງ ແນວພັນ ແລະປະເມີນ ຕີລາຄາທັງນີ້, ແມ່ນເພື່ອ ກຳນົດ ຊອກຮູ້ ບັນດາ ນ້ຳເບີ ແນວພັນ ແລະ ພັນທຸກຳ ທີ່ມີຄູນຄ່າອັນໃດ ທີ່ ສາມາດ ຕອບສະໜອງໃຫ້ແກ່ ດ້ານຊີວະເຕັກນິກ ແລະ ບໍ່ແມ່ນຊີວະເຕັກນິກabictic ຊຶ່ງເປັນສິ່ງຈຳກັດການຜະລິດພືດຕ່າງໆ.

151.ເພື່ອປັບປຸງສະມັດຕະພາບຂອງຂະບວນການປະເມີນຕີລາຄາ ໂດຍໃຫ້ມີການພັດທະນາ ແລະ ຮັບຮອງເອົາເຕັກໂນໂລຊີໃໝ່ໆ ທັງຫຼາຍເພື່ອຈະໄດ້ຮູ້ແຈ້ງຢ່າງແນ່ນອນວ່າ ແນວພັນ ນ້ຳເບີໃດ ທີ່ມີ ຄຸນຄ່າດ້ານໃດ ແລະ ດ້ານພັນທຸກຳມີຄຸນຄ່າອັນໃດໃນຈຳນວນແນວພັນໃດທີ່ໄດ້ເລືອກໄວ້ແລ້ວນັ້ນ.

152.ເພື່ອກໍ່ສ້າງ ວຽກງານການເກັບຕົວຢ່າງແນວພັນ ເພື່ອການອະນຸລັກ ຫຼັກ ລະດັບສາກົນ ກ່ຽວ ກັບພັນພືດ ທີ່ມີຄວາມສຳຄັນ ລະດັບໂລກ ແລະ ສົ່ງເສີມ ການກໍ່ສ້າງການ ເກັບຕົວຢ່າງ ຫຼັກ ອີງໃສ່ ພື້ນຖານຂອງທະນາຄານເຊື້ອພັນ ເພື່ອເປັນບ່ອນອີງໃຫ້ແກ່ ການເຮັດ ການເກັບຕົວຢ່າງ ພືດໃນ

ຊາດ ຢູ່ທີ່ສະຖາບັນ ພາຍໃນປະເທດ. ເພື່ອສົ່ງເສີມ, ປັບປຸງ ແລະ ທົດລອງ ບັນດາ ວິທີການ ແລະ ເຕັກໂນໂລຊີ ເພື່ອເຮັດ ການເກັບຕົວຢ່າງ ຫຼັກສຳຄັນໆ.

**153.ນະໂຍບາຍ/ຍຸດທະສາດ:** ໂດຍໄດ້ຮັບການຮ່ວມມືຈາກ ບັນດາອົງການ ສປຊ, ຂົງເຂດ, ລະຫວ່າງລັດ ແລະອົງການບໍ່ສັງກັດລັດຖະບານ, ສູນກະສິກຳສາກົນ ແລະ ລວມທັງພາກສ່ວນເອກະຊົນ ພ້ອມທັງຄຳນຶງ ເຖິງຄວາມເຫັນຂອງ ຊຸມຊົນວິທະຍາສາດ ແລະອົງການ ຂອງກະສິກອນ ແລະ ຊຸມຊົນເຂົາເຈົ້າ, ລັດຖະບານຄວນ:

(ກ) ກຳນົດວາງບູລິມະສິດຕ່າງໆ ແລະ ປະເມີນເປັນໄລຍະໆ ຄວາມຄືບໜ້າດ້ານຕີລາຄາ ຄວາມຮຽກຮ້ອງຕ້ອງການທັງຫຼາຍຂອງຜູ້ຊົມໃຊ້ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ໂດຍເນັ້ນໃສ່ວຽກ ກຳນົດຄຸນລັກສະນະພິເສດ ທີ່ຈຳກັດການຜະລິດພືດອາຫານສຳຄັນ ແລະພືດຕ່າງໆ ທີ່ມີຄວາມໝາຍດ້ານເສດຖະກິດຂອງຊາດ;

(ຂ) ສົ່ງເສີມໃຫ້ມີການຮ່ວມມື ແລະ ຊ່ວຍຊູຊຶ່ງກັນ ແລະ ກັນໃນໝູ່ນັກປັບປຸງພັນ, ນັກຄົ້ນຄ້ວາ, ຊາວໄຮ່ນາ ແລະ ທະນາຄານເຊື້ອພັນ

(ຄ) ຊຸກຍູ້ໃຫ້ມີການແລກປ່ຽນຂໍ້ມູນຂ່າວສານດ້ານການກຳນົດລັກສະນະ ແລະການປະເມີນຕີລາຄາ;

(ງ) ສັງເກດເຫັນວ່າການເຂົ້າເຖິງ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ແມ່ນຕ້ອງເຮັດພາຍໃຕ້ຂໍ້ຕົກລົງສາກົນທີ່ພວມນຳໃຊ້ກັນຢູ່ ໂດຍໃຫ້ສອດຄ່ອງກັບຂໍ້ຕົກລົງທັງຫຼາຍນັ້ນ, ຜູ້ນຳໃຊ້ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ຄວນຖືກສົ່ງເສີມໃຫ້ເຫັນດີເຫັນພ້ອມນຳເງື່ອນໄຂຕ່າງໆ ດ້ານແລກປ່ຽນຂໍ້ມູນການປະເມີນຕີລາຄາທີ່ມີສ່ວນກ່ຽວຂ້ອງກັບບັນດາສະຖາບັນແຫຼ່ງ, ພ້ອມນັ້ນກໍຕ້ອງຄິດເຖິງຄວາມຕ້ອງການພິເສດຂອງຜູ້ນຳໃຊ້ຈາກພາກສ່ວນການຄ້າໃນດ້ານການປົດລັບທີ່ເໝາະສົມ;

(ຈ) ໃຫ້ການສະໜັບສະໜູນດ້ານການເງິນຢ່າງເໝາະສົມແກ່ແຜນງານດ້ານການກຳນົດຄູນລັກສະນະ ແລະ ການປະເມີນ ຊະນິດແນວພັນ ພືດຊຶ່ງມີຄວາມສຳຄັນຕົ້ນຕໍ ຫຼືຂາດບໍ່ໄດ້ ເພື່ອຜົນປະໂຫຍດທາງຄວາມໝັ້ນຄົງໃນເລື່ອງອາຫານໃນປະເທດຕ່າງໆ, ໃນນັ້ນຈະຄຳນຶງເຖິງການປະກອບທຶນໃຫ້ໃນໄລຍະກາງ ແລະຍາວ.

154.ບັນດາຕາໜ່າງພືດ ແລະທະນາຄານເຊື້ອພັນ ຄວນດຳເນີນວຽກຢ່າງລະມັດລະວັງເພື່ອພັດທະນາ ການເກັບຕົວຢ່າງແນວພັນຫຼັກດ້ານບັນດາພືດມີຄວາມສຳຄັນຫຼາຍ ສຳລັບລະບົບຕ່າງໆ ພາຍໃນປະເທດ. ແມ່ນຢູ່ວ່າ ການເກັບຕົວຢ່າງແນວພັນຫຼັກນັ້ນ ເປັນສິ່ງແນະນຳ ໃຫ້ແກ່ສະພາບເຮັດວຽກ ທະນາຄານເຊື້ອພັນ ຂອງຕົວຢ່າງແນວພັນທີ່ ໄດ້ເກັບມາ, ແຕ່ນັ້ນບໍ່ໝາຍຄວາມວ່າມັນຈະປ່ຽນແທນ ທະນາຄານເຊື້ອພັນໃດ້. ທະນາຄານ ເຊື້ອພັນ ບໍ່ຄວນຖືເອົາການມີ ຕົວຢ່າງ ແນວພັນຫລັກ

ນັ້ນເປັນ ຂໍ້ອ້າງອະນຸຍາດໃຫ້ສະພາບອະນຸລັກ ບັນດານ້ຳເບີ ຕົວຢ່າງແນວພັນ ອື່ນໆ ທີ່ມີຢູ່ໃນການເກັບນັ້ນເຊື່ອມໂຊມລົງ.

**155.ຄວາມສາມາດ:** ການສະໜັບສະໜູນຄວນຈະເລີ່ມເຮັດເປັນກ້າວໆ ແລະມີຈຸດສຸມເພື່ອຊ່ວຍແຜນງານກຳນົດຄຸນລັກສະນະພິເສດ ແລະການປະເມີນຕີລາຄາ ທັງນີ້ແມ່ນເພື່ອເລືອກແນວພັນພືດທີ່ເປັນບູລິມະສິດ. ຂັ້ນຕອນ ການຈຳແນກຄູນລັກສະນະພິເສດ ແລະ ການປະເມີນຕີລາຈະເລີ່ມດ້ວຍ ການຕີລາຄາຂ່າວສານ ຂໍ້ມູນທີ່ມີຢູ່ ກໍຄືຄວາມພະຍາຍາມໃນການເກັບກຳ, ສັງລວມ, ປ້ອນເຂົ້າໃນເຄື່ອງຄອມພິວເຕີ ແລ້ວຜະລິດຂໍ້ມູນຂ່າວສານທີ່ມີຢູ່ອອກມາເປັນບົດບັນທຶກ, ລາຍງານ, ແຜ່ນຄາດທ໌, ໆລໆ. ສ່ວນຫຼວງຫຼາຍຂອງວຽກປະເມີນຕີລາຄາຕ້ອງເຮັດໄປໂດຍຫຼຶງເຫັນຜູ້ຈະນຳເອົາໄປໃຊ້ເປັນສຳຄັນ.

156.ບັນດາລັດຖະບານ ແລະອົງການຈັດຕັ້ງທີ່ເໝາະສົມ ຄວນກຳນົດເອົາສະຖາບັນຕ່າງໆ ແລະບຸກຄົນຜູ້ທີ່ມີຄວາມສາມາດ ແລະຄວາມຊຳນິຊຳນານງານໃຫ້ມາເຮັດວຽກ ການກຳນົດ ຄູນລັກສະນະ ແລະ ປະເມີນຕີລາຄາ ສະພາບກົດດັນ ສະເພາະ ແລະ ຄວນພັດທະນາສ້າງຕຳແໜ່ງງານລະດັບຊາດໃຫ້ແກ່ຜູ້ມີຄວາມຊຳນານງານດັ່ງກ່າວ, ລວມໃນນັ້ນກໍມີທັງ ຊາວກະສິກອນ ທີ່ຢູ່ໃນເຂດມີຄວາມກົດດັນ ຊຶ່ງຊາວກະສິກອນເລົ່ານີ້ອາດໄດ້ທຳການປະເມີນໃນຕອນຕົ້ນແລ້ວ ເພື່ອຢາກຊອກຮກູ່ມຍ່ອຍຂອງ ແນວພັນ ຊຶ່ງອາດເປັນປະໂຫຍດເພື່ອການປະເມີນຕີລາຄາຕື່ມໃນເງື່ອນໄຂວິທະຍາສາດທີ່ເຂັ້ງກ່ວາ. ຄວນສຶກສາຄິດໄລ່ເບິ່ງປະສິດຕິພາບຂອງການໃຊ້ຈ່າຍ ເພື່ອເຮັດວຽກ ປະເມີນຕີລາຄາ ທີ່ໄດ້ໃຫ້ມີ ການຮັບເໝົາຕໍ່, ນອກນັ້ນກໍຕ້ອງໄດ້ເບິ່ງຄືນບັນດາແຜນງານຮ່ວມມືລະຫວ່າງແຜນງານແຫ່ງຊາດທັງຫຼາຍທີ່ມີກັບພາກສ່ວນເອກະຊົນ ເຊັ່ນໂຄງການ LAMP/ໂຄງການສາລີລາຕິນອະເມຣິກາ.

157.ພະນັກງານໃນແຜນງານແຫ່ງຊາດຄວນໄດ້ຮັບການອົບຮົມກ່ຽວກັບການວິເຄາະຄຸນລັກສະນະພິເສດຂອງ ແນວພັນ ແລະ ເຕັກນິກການ ປະເມີນຕີລາຄາຂອງແຕ່ລະພືດ . ການອົບຮົມນີ້ຄວນເລີ່ມຕົ້ນດ້ວຍພືດທີ່ມີຄວາມສຳຄັນລະດັບຊາດເສຍກ່ອນ ແລະເປັນພືດຊຶ່ງປັດຈຸບັນຢູ່ໃນແຜນການປັບປຸງພັນຢູ່ແລ້ວ.

158.ໃຫ້ການສະໜັບສະໜູນດ້ານຝຶກອົບຮົມຊາວໄຮ່ນາ, ລວມທັງຊາວໄຮ່ນາເພດຍິງກ່ຽວກັບທັກສະທີ່ຕ້ອງການ ແລະຈຳເປັນ ເຂົ້າຮ່ວມໃນແຜນປະເມີນຕີລາຄາຢູ່ກັບຟາມ. ຄວາມຮັບຜິດຊອບຂອງເພດຍິງນັ້ນ ມີຫຼາຍໄປກ່ວາ ການປູກ , ການຜະລິດ ແລະເກັບກ່ຽວພືດ, ມັນກວມເອົາທັງການປຸງແຕ່ງ, ເກັບມ້ຽນ ແລະປຸງແຕ່ງອາຫານ. ດັ່ງນັ້ນຄວາມຮູ້ຂອງເພດຍິງ ທາງດ້ານການນຳໃຊ້ ແລະຄວາມເປັນປະໂຫຍດຂອງພືດ ປົກກະຕິ ແມ່ນກ້ວາງຂວາງ.

159.ຄວນໃຫ້ການສະໜັບສະໜູນດ້ານວິຊາການ ແລະການເງິນຕໍ່ວຽກງານ ຂະຫຍາຍ ເມັດພັນ ຫລັກ.

**160.ການຄົ້ນຄ້ວາ/ເຕັກໂນໂລຊີ:** ຖ້າຈະສົ່ງເສີມການນຳໃຊ້ ແບບມີການຄິດໄລ່ປະສິດຕິຜົນຂອງ ຕົວຢ່າງແນວພັນທີ່ມີຢູ່ປັດຈຸບັນ, ມັນມີຄວາມຈຳເປັນ ທີ່ຕ້ອງເຮັດ ການຄົ້ນຄ້ວາຫຼາຍໆແບບ. ຊຶ່ງ ອາດ ລວມທັງ ການເຂົ້າເຖິງເຕັກໂນໂລຊີ ຫຼ້າສຸດ ແລະ ການສະໜັບສະໜູນ ການຄົ້ນຄ້ວາວິທະຍາ ສາດ ເພື່ອປັບປຸງເຕັກນິກສຳລັບ ການກຳນົດ ຄູນລັກສະນະ ແລະ ປະເມີນຕີ ລາຄາ.

161.ບັນດາບູລິມະສິດ ສຳລັບ ການຄົ້ນຄ້ວາ ທີ່ພົວພັນເຖິງ ຕົວຢ່າງແນວພັນ ຫຼັກລວມມີທັງ ການ ພັດທະນາ:

(ກ). ວິທີການຕ່າງໆ ທີ່ໄດ້ປັບປຸງສຳລັບ ກຳນົດ ຄູນລັກສະນະພິເສດ ຂອງແນວພັນ ພືດໂດຍ ນຳໃຊ້, ນອກຈາກສິ່ງອື່ນໆ, ວິທີການຊີວະເຄມີ ແລະ ໂມເລກູນລາ ຊີວະສາດ;

(ຂ). ຂັ້ນຕອນທີ່ໄດ້ປັບປຸງໃນການກຳນົດ ຂັ້ນຄວາມຫຼາກຫຼາຍ ;

(ຄ). ວິທີການຕ່າງໆ ທີ່ຖືກຕ້ອງ ຕາມລັກການ ສຳລັບ ການຄັດເລືອກ ຕົວຢ່າງ ແນວພັນ ຫຼັກ;

(ງ). ບັນດາວິທີການເຊື່ອມໂຍງ ຕົວຢ່າງ ແນວພັນ ຕົ້ນຕ (ຍຸດທະສາດຕ່າງໆດ້ານການເອົາ ຕົວຢ່າງທີ່ເປັນຕົວແທນແນວພັນ);

(ຈ). ບັນດາວິທີການທີ່ໄດ້ປັບປຸງກ່ຽວກັບການນຳໃຊຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ, ລວມທັງການຊອກຫາລັກສະນະພິເສດຂອງພືດເປົ້າໝາຍ.

162.ສົ່ງເສີມໃຫ້ມີ ກອງປະຊຸມລະດັບ ພາກພື້ນ ແລະ ລະດັບສາກົນ ເພື່ອໃຫ້ຜູ້ຊ່ຽວຊານ ດ້ານ ແນວພັນພືດ ໄດ້ປຶກສາກັນຫຼາຍໆ ປະເດັນບັນຫາ ວິຊາການ ຊຶ່ງພົວພັນເຖິງ ການພັດທະນາ ແລະ ການນຳໃຊ້ ຕົວຢ່າງແນວພັນ ແລະເພື່ອຊຸກຍູ້ ກິດຈະກຳ ໃນພາກພື້ນ ແລະເບິ່ງສະພາບກົມກຽວ ຊ່ວຍຊູ ກັບ ຫົວຂໍ້ ອື່ນໆໆ ຂອງແຜນດຳເນີນງານໂລກ.

**163.ການປະສານງານ/ບໍລິຫານຄຸ້ມຄອງ:** ວຽກ ກຳນົດຄູນລັກສະນະພິເສດ ແລະ ປະເມີນຕີລາຄາ ຄວນຖືກ ວາງແຜນ ແລະປະຕິບັດໂດຍມີການເຂົ້າຮ່ວມ ຢ່າງຂະຫຍັນຂັນແຂງ ຈາກພາກສ່ວນແຜນ ງານແຫ່ງຊາດ ແລະ ບັນດາຕາໜ່າງພືດ ແລະ ພາກພື້ນ. ເທົ່າທີ່ເຫັນວ່າເໝາະສົມ, ອົງການຈັດຕັ້ງ ຂອງຊາວໄຮ່ນາ, ບໍລິສັດເອກະຊົນ ແລະການຈັດຕັ້ງຂອງເຂົາເຈົ້າ ແລະອື່ນໆ ກໍອາດມີສ່ວນພົວພັນ.

164.ຕົວຢ່າງແນວພັນທີ່ອະນຸລັກ ຫຼັກຄວນຖືກ ພັດທະນາໂດຍມີ ການເຂົ້າຮ່ວມຢ່າງ ຕັ້ງໜ້າຈາກ ຊຸມ ນັກປັບປຸງພັນ ແລະບັນດາ ຕາໜ່າງພືດ ຂອງພືດຕົ້ນຕໍຕ່າງໆ. ການເຮັດວຽກກ່ຽວກັບ

ການເກັບຕົວຢ່າງແນວພັນ ຫຼັກຕ້ອງໄດ້ຖືກສຶກສາ ພິຈາລະນາໂດຍຫຼິງເຫັນ ບັນຫາອື່ນໆ ຂອງ ຄວາມພະຍາຍາມ ລວມ ເພື່ອຈະສາມາດປັບປຸງການນຳໃຊ້.

165.ການຮ່ວມມື ແລະແລກປ່ຽນຂໍ້ມູນຂ່າວສານ ເປັນຄວາມຈຳເປັນ, ສະເພາະຢ່າງຍິ່ງເມື່ອໄດ້ສ້າງ ທະນາຄານເຊື້ອພັນ ຂອງປະເທດ ທີ່ຄຸ້ມຄອງ ຕົວຢ່າງແນວພັນຊຶ່ງມີ ຄວາມຫຼາກຫຼາຍ ດ້ານ ຊະ ນິດ ແນວພັນ ຢ່າງກວ້າງຂວາງ ໂດຍທີ່ຍັງມີ ຄວາມຂາດແຄນ ຄວາມຊຳນິຊຳນານ ວິຊາການ ສະເພາະ ໃນ ໝູ່ພະນັກງານ ກ່ຽວກັບແຕ່ລະ ບັນດາຊະນິດແນວັພນ ທີ່ມີຢູ່.

166.ຄວນມີການຕີລາຄາແບບເປັນໄລຍະໆ ກ່ຽວກັບການນຳໃຊ້ ຕົວຢ່າງແນວພັນ ຫຼັກ ເພື່ອເປັນ ທິດ  ໃຫ້ແກ່ວຽກງານໃນອະນາຄົດ ແລະຊ່ວຍກຳນົດບູລິມະສິດ. ການຕີລາຄານັ້ນຄວນດຳເນີນໄປ ໂດຍໃຫ້ຜູ້ ປັບປຸງພືດໄດ້ຮ່ວມ ແລະໂດຍໄດ້ຮັບ ການປຶກສາຈາກອົງກອນ, ສະຖາບັນ ແລະອົງການ ບໍ່ສັງກັດ ລັດສາກົນ ທີ່ເໝາະສົມ.

**167.ກິດຈະກຳນີ້ແມ່ນຕິດພັນຢ່າງໃກ້ຊິດກັບ:**

- ການສືບຕໍ່ໃຫ້ມີ ການອະນຸລັກ ນອກພັນນອກຖິ່ນກຳເນີດ
- ການສະໜັບສະໜູນ ການບໍລິຫານຄຸ້ມຄອງ ຢູ່ກັບຟາມ ແລະການປັບປຸງ ຊັບພະຍາກອນ ພັນທຸກຳພືດ ເພື່ອ ອາຫານແລະການກະສິກຳ
- ການປັບປຸງພັນຄືນ/ ການປູກຟື້ນຊີບ ບັນດາແນວພັນທີ່ໄດ້ ມີການອະນຸລັກ ນອກຖິ່ນກຳເນີດ ທີ່ມີຄວາມສ່ຽງ.
- ການສະໜັບສະໜູນການເກັບຕົວຢ່າງແນວພັນ ດ້ານ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ  ທີ່ມີແຜນ ແລະເປົ້າໝາຍ
- ການເພີ່ມທະວີຽກ ສິ່ງເສີມ ພັນທຸກຳ ແລະ ຂະຫຍາຍຖານ ການເຜີຍແຜ່ຂໍ້ມູນ
- ການກໍ່ສ້າງລະບົບຂໍ້ມູນຂ່າວສານທີ່ຄົບຊຸດສຳລັບ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານແລະການກະສິກຳ.

## 10  ເພີ່ມທະວີ ການສົ່ງເສີມພັນທຸກຳພືດ ແລະການສ້າງຖານຂໍ້ມູນຢ່າງກ້ວາງຂວາງ

**168.ການຕີລາຄາ:** ຂະຫຍາຍຖານພັນທຸກຳພືດ ເພື່ອ ສາມາດປະກອບສ່ວນ ແກ່ການ ເພີ່ມທະວີ ຄວາມໝັ້ນຄົງ ແລະ ການ ປັບຕົວ ຂອງຊຸມພືດ. ເຖິງຢ່າງໃດກໍຕາມໃນການ ເບິ່ງບັນຫາ ຂອງ  ນັກ ປັບ ປຸງພັນ, ບໍລິສັດ ຫຼືສະຖາບັນຄ່າໃຊ້ຈ່າຍຂອງການເອົາ ແນວພັນພືດ ໃໝ່ ແລະຫຼາກຫຼາຍເຂົ້າ ມາລວມກັບ ວັດຖຸພັນ ທີ່ໄດ້ດັດປັບແລ້ວນັ້ນອາດຈະສູງ ບໍ່ຄຸ້ມຄ່າ. ຜົນປະໂຫຍດຈະໄດ້ມາຕ້ອງໃຊ້ ເວລາດົນກວ່າຈະໄດ້ຊົມໃຊ້, ແລະມັນເປັນສິ່ງທີ່ທົ່ວທັງ ສັງຄົມ ແລະ ຜູ້ແຜ່ພັນອື່ນໆ ກໍຈະໄດ້ຜົນປະ

ໂຫຍດ ນຳເຊັ່ນດຽວ. ໜ້າວຽກ ການສົ່ງເສີມ ດ້ານພັນທຸກຳ ແລະ ກິດຈະກຳຕ່າງໆກ່ອນການປັບປຸງພັນ ສ່ວນໃຫຍ່ຈຳເປັນທີ່ຕ້ອງໄດ້ຮັບ ການສະໜັບ ສະໜູນຮ່ວມມືຈາກ ສາກົນ ແລະມະຫາຊົນ.

169.ບັນດາ ວິທີການ ສົ່ງເສີມ ພັນທຸກຳລວມມີ:

(ກ). ທວນຄືນ ຄຸນລັກສະນະສະເພາະ / ການກະເສດຕະກຳ ສະເພາະດ້ານ ທີ່ເປັນປະໂຫຍດທີ່ໄດ້ຮູ້ຜ່ານການ ຈຳແນກ ຄູນລັກສະນະ ພິເສດ ຫຼື ປະເມີນຕີລາຄາໃນຊຸມ ວັດຖຸພັນ ນຳ ຫຼື ວັດຖຸພັນ ທີ່ໄດ້ດັດປັບໃຫ້ເໝາະສົມກັບທ້ອງຖິ່ນ ເພື່ອຈະໄດ້ນຳເອົາໄປໃຊ້ຕື່ມໃນແຜນງານປັບປຸງພັນ.

(ຂ). ການຂະຫຍາຍຖານຂອງ ວັດຖຸພັນ ຂອງ ນັກປັບປຸງພັນ ໂດຍລວມ ມັນເຂົ້າ ກັບສະພາບຂອງຫຼາຍ ພັນທຸກຳ ທີ່ກວ້າງຂວາງ.

**170.ບັນດາຈຸດປະສົງໄລຍະຍາວ:** ເພື່ອປັບປຸງຄວາມໝັ້ນຄົງດ້ານອາຫານ ແລະປັບປຸງຊີວິດການເປັນຢູ່ຂອງຊາວໄຮ່ນາ ໂດຍຜ່ານການພັດທະນາບັນດາແນວພັນພືດ ທີ່ດີກວ່າເພື່ອ ເພີ່ມທະວີການນຳໃຊ້ ຊັບພະຍາກອນພັນທຸກຳ ແລະ ຈາກນັ້ນ ກໍມີວິທີການ ຊຸກຊູວນໃຫ້ມີການອະນຸລັກມັນ. ເພື່ອຫຼຸດຜ່ອນ ສະພາບ ຂອງພັນທຸກຳ ທີ່ເປັນຄືກັນ ໃນ ຊຸມແນວພັນພືດ ໂດຍຜ່ານການນຳໃຊ້ ສາຍ ພັນພືດປ່າ, ວັດຖຸພັນ ທ້ອງຖິ່ນ ແລະ/ ຫຼື ແນວພັນ ພັນປັບປຸງ. ເພື່ອເພີ່ມທະວີຄວາມຍືນຍົງຂອງ ບັນດາລະບົບກະສິກຳ ແລະ ຄວາມສາມາດ ໃນການດັດປັບ ເຂົ້າກັບການປ່ຽນແປງ ທາງສະພາບແວດລ້ອມ ທີ່ບໍ່ໄດ້ຄາດກະໄວ້ກ່ອນ.

**171.ບັນດາຈຸດປະສົງໄລຍະກາງ:** ເພື່ອເພີ່ມທະວີຄວາມຫຼາກຫຼາຍ ທາງພັນທຸກຳ ທີ່ມີຢູ່ໃນຈຳນວນປະຊາກອນ ແນວພັນ ຂອງນັກປັບປຸງພັນໂດຍຜ່ານບັນດາຍຸດທະສາດ ທີ່ເໝາະສົມຂອງວຽກງານການຄວບຄືນ ທາງດ້ານພັນທຸກຳ ໂດຍ ການຂະຫຍາຍ ຖານຂໍ້ມູນ ດ້ານພັນທຸກຳອອກຢ່າງກວ້າງຂວາງ.

**172.ນະໂຍບາຍ/ຍຸດທະສາດ:** ບັນດາລັດຖະບານ, ອົງການຈັດຕັ້ງສາກົນ, ອົງການບໍ່ສັງກັດລັດ ແລະ ແຫຼ່ງສະໜອງທຶນຕ່າງໆ ຄວນຮັບຮູ້ ເຖິງຄວາມສຳຄັນໃນ ການສະໜອງທຶນ ໄລຍະຍາວ ແລະໃຫ້ການສະໜັບສະໜູນ ດ້ານພາລາທີການ ແກ່ບັນດາກິດຈະກຳກ່ອນການປັບປຸງພັນ ການສົ່ງເສີມ ພັນທຸກຳ ແລະ ກິດຈະກຳຂະຫຍາຍຖານ.

**173.ຄວາມສາມາດ:** ຄວນສະໜັບສະໜູນບັນດາລະບົບແຫ່ງຊາດ ແລະ ຕາໜ່າງ ຂົງເຂດ, ບັນດາສູນຄົ້ນຄ້ວາກະສິກຳສາກົນ, ການຈັດຕັ້ງບໍ່ສັງກັດລັດ, ມະຫາວິທະຍາໄລ ແລະອົງການກ່ຽວຂ້ອງອື່ນໆ ທີ່ປະຕິບັດໂຄງການ ກ່ຽວກັບກິດຈະກຳ ກ່ອນການປັບປຸງພັນ ແລະ ການ ສົ່ງເສີມພັນທຸກຳ ຄວນໃຫ້ບູລິມະສິດ ແກ່ການແກ້ໄຂ ບັນຫາທີ່ພົບເຫັນ ໂດຍບັນດາ ຕາໜ່າງຂົງເຂດ, ໂດຍອົງການ

ແລະ ສະຖາບັນວິທະຍາສາດ ທີ່ຖືກຮັບຮູ້ດ້ານ ຄວາມສາມາດ ກໍຄືການຈັດຕັ້ງຂອງຊາວໄຮ່ນາ. ໃນຕອນທຳອິດ ຄວນສຸມຄວາມ ພະຍາຍາມໃສ່ບັນຫາ ຮີບ ດ່ວນທີ່ສຸດ ຊຶ່ງກຳນົດໄວ້ໃນ 15 ພືດ ຊຶ່ງມີຄວາມສຳຄັນທັງລະດັບສາກົນ ແລະພາກພື້ນ.

**174.ການຄົ້ນຄ້ວາ/ເຕັກໂນໂລຊີ:** ສະຖາບັນຕ່າງໆຄວນສືບຕໍ່ພັດທະນາວິທີການຕ່າງໆ ສຳລັບການສົ່ງເສີມພັນທຸກຳ ລວມທັງວິທີການກ່ອນ ການປັບປຸງພັນ ພ້ອມທັງວຽກເຜີຍແຜ່ ວິທີການນີ້ຢ່າງກ້ວາງຂວາງ.

**175.ການປະສານງານ/ບໍລິຫານຄຸ້ມຄອງ:** ກິດຈະກຳຕ່າງໆ ຄວນມີການວາງແຜນ ແລະດຳເນີນໄປໂດຍມີການຮ່ວມມືແບບໃກ້ຊິດກັບແຜນງານແຫ່ງຊາດຕ່າງໆ ພ້ອມທັງມີການປະສານສົມທົບໂດຍຕາໜ່າງພືດ ແລະ ພາກພື້ນ, ອົງການ ແລະສະຖາບັນວິທະຍາສາດ ແລະອົງການຊາວໄຮ່ນາ. ຄວນສົ່ງເສີມ ໃຫ້ມີ ການສື່ສານລະຫວ່າງ ນັກປັບປຸງພັນພືດ ແລະ ຊຸມນັກວິທະຍາສາດ ທັງມາຈາກພາກລັດ ແລະ ພາກ ເອກະຊົນ.

176.ກິດຈະກຳນີ້ແມ່ນຕິດພັນກັບ:

- ການສ້າງລະບົບຂໍ້ມູນຂ່າວສານທີ່ກ້ວາງຂວາງສຳລັບ ຊັບພະຍາກອນພັນທຸກຳພືດເພື່ອອາຫານແລະການກະສິກຳ
- ການຂະຫຍາຍວຽກ ການກຳນົດ ຄູນລັກສະນະ, ປະເມີນຕີລາຄາ ແລະ ກຳນົດໝາຍເລກໃຫ້ແກ່ ຕົວຢ່າງແນວພັນ ຫຼັກ ເພື່ອ ສະດວກໃນການນຳໃຊ້
- ສະໜັບສະໜູນ ການຄຸ້ມຄອງບໍລິຫານ ຢູ່ກັບຟາມ ແລະ ປັບປຸງວຽກ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະການກະສິກຳ.

## 11.ສົ່ງເສີມ ການກະສິກຳຍືນຍົງ ໂດຍສ້າງຄວາມຫຼາກຫຼາຍໃນການຜະລິດພືດ ເພື່ອກະຈາຍຄວາມຫຼາກຫຼາຍຂອງພືດໃຫ້ກ້ວາງຂວາງ.

**177.ການຕີລາຕີຄາ**: ພືດຕົ້ນຕໍ, ຕາມການຕີລາຄາ ສະພາບການ ຢູ່ສະຫະລັດໃນຕອນຕົ້ນໆຂອງສະຖາບັນວິທະຍາສາດແຫ່ງຊາດ ແມ່ນ “ມີຄວາມຄືກັນຢ່າງບໍ່ໜ້າເຊື່ອ ແລະ ກໍຕົກຢູ່ໃນສະພາບອັນຕະລາຍ ຢ່າງໃຫຍ່ຫຼວງ”. ຄວາມຄືກັນບໍ່ຈຳເປັນ ຈະນຳໄປສູ່ສະພາບ ຄວາມສ່ຽງໄພຕະຫຼອດ ແລະຍ້ອນຂາດການຕີລາຄາແບບດີເລີດ, ຂາດເຄື່ອງມືພະຍາກອນ ແລະ ຂາດວິທີການຕ່າງໆ ກໍໝາຍຄວາມ ວ່າສະພາບຄວາມສ່ຽງໄພ ບໍ່ສາມາດວັດແທກໄດ້ຢ່າງຖືກຕ້ອງແທ້ໆ. ເຖິງຢ່າງໃດ ກໍຕາມ

ການຕິດຕາມສະພາບດັ່ງກ່າວນີ້ ກໍມີຄວາມສຳຄັນ ເພື່ອຈະໄດ້ຮູ້ວ່າຄວນມີວິທີການແກ້ໄຂ ຫຼືປ້ອງກັນຄືແນວໃດ.

178.ບັນດາລະບົບກະສິກຳ ໃນອານາຄົດ ຈະຕ້ອງໄດ້ເອົາ ພືດຫຼາຍກວ່າເກົ່າເຂົ້າ ຊຶ່ງນອກຈາກສິ່ງອື່ນໆ ແລ້ວແມ່ນເພື່ອຈະໄດ້ຜະລິດຊັບພະຍາກອນ ຫຼືໃຫ້ເປັນ ແຫຼ່ງພະລັງງານ. ເພື່ອຄວາມລະມັດລະວັງດຽວນີ້ໃຊ້ ວິທີການບາງຢ່າງ ເພື່ອສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ມີຄວາມຫຼາກຫຼາຍກ່ວາເກົ່າໃນ ແຜນງານ ປັບປຸງພັນ ກໍຄືຄວາມຫຼາກຫຼາຍດ້ານ ແນວພັນ ແລະ ຊະນິດພືດ ທີ່ໃຊ້ໃນຟາມ. ໄດ້ມີການຮັບຮູ້ວ່າແບບວິທີເຮັດວຽກແບບສ້າງສັນໃໝ່ ເພື່ອການ ປັບປຸງພັນພືດ ສຳລັບຈຸດປະສົງ ພາຍໃນທ້ອງຖິ່ນ ເຮັດໃຫ້ພືດໃໝ່ ເຊື້ອມການພັດທະນາ, ການພັດທະນາ ແນວພັນ ພືດແນວໃໝ່ ແລະການລະດົມ ການສົ່ງເສີມໃຫ້ມີຄວາມຫຼາກຫຼາຍ ທາງພັນທຸກຳພືດ ໃນລະດັບສູງກວ່າທີ່ໃຊ້ຢພື້ນ ທີ່ປູກຝັງ ເຊັ່ນ ການປູກ ແນວພັນ ທີ່ໄດ້ດັດປັບ ປົນກັນ ທັງໝົດນັ້ນ ແມ່ນວິທີການ ຊ່ວຍເສີມສ້າງຄວາມໝັ້ນຄົງ ຂອງບັນດາ ລະບົບກະສິກຳ ພ້ອມນັ້ນກໍສົ່ງເສີມ ການຜະລິດກະສິກຳ ແລະຄວາມໝັ້ນຄົງ ດ້ານສະບຽງອາຫານ.

**179.ຈຸດປະສົງໄລຍະຍາວ:** ເພື່ອສົ່ງເສີມກະສິກຳແບບຍືນຍົງ ແລະຫຼຸດຜ່ອນການເຊື່ອມຄຸນດ້ານພັນທຸກຳ ແລະສະພາບຄວາມສ່ຽງໄພ ທາງພັນທຸກຳ ທີ່ອາດເປັນໄປໄດ້ ດ້ວຍວິທີສ້າງຄວາມຫຼາກຫຼາຍ ໃນດ້ານການຜະລິດພືດ ແລະເພີ່ມທະວີຄວາມຫຼາກຫຼາຍ ດ້ານພັນທຸກຳຂອງພືດຕ່າງໆ.

**180.ຈຸດປະສົງສະເພາະໜ້າ:** ເພື່ອທົບທວນເປັນໄລຍະໆ ສະພາບສ່ຽງໄພທາງ ພັນທຸກຳໃນໝູ່ພືດ ແລະ ສົ່ງເສີມ ນັກປັບປຸງພັນ ແລະ ກຸ່ມຕ່າງໆທີ່ເໝາະສົມໃຫ້ມີ ທີການແກ້ໄຂ ປົວແປງໃນລະດັບຊາດ ແລະສາກົນແລ້ວແຕ່ຄວາມເໝາະສົມ.

181.ສົ່ງເສີມເປົ້າໝາຍໃຫ້ມີຄວາມຫຼາກຫຼາຍພັນທຸກຳໃນລະດັບ ສູງກວ່າເກົ່າ ຊຶ່ງສອດຄ່ອງກັບສະມັດຕະພາບ ທີ່ເພີ່ມຂຶ້ນ ແລະຄວາມຮຽກຮ້ອງ ຕ້ອງການຂອງຂະແໜງປູກພືດ, ລວມໃນນັ້ນກໍມີຂະແໜງ ຜະລິດພືດ, ການປັບປຸງພັນພືດ ແລະ ການຄົ້ນຄ້ວາ ແລະພັດທະນາ ທາງຊີວະເຕັກໂນໂລຊີ.

**182.ນະໂຍບາຍ/ຍຸດທະສາດ:** ບັນດາລັດຖະບານ ແລະ ອົງການລະຫວ່າງລັດທີ່ກ່ຽວຂ້ອງໂດຍຮ່ວມມືກັບບັນດາຕາໜ່າງພືດ , ສະຖາບັນຄົ້ນຄ້ວາອົງກອນສົ່ງເສີມ, ຂະແໜເອກະຊົນ, ອົງການຈັດຕັ້ງຊາວນາ ແລະ ອົງການບໍ່ສັງກັດລັດ, ຄວນ:

(ກ). ຕິດຕາມຢ່າງເປັນລະບົບ ຄວາມຄືກັນ ດ້ານພັນທຸກຳ ແລະ ຕີລາຄາສະພາບອ່ອນແອ ຂອງພືດ.

(ຂ). ທົບທວນເບິ່ງຄືນບັນດານະໂຍບາຍ ຊຶ່ງອາດສົ່ງຜົນກະທົບຕໍ່ລະດັບຄວາມຫຼາກຫຼາຍໃນລະບົບກະສິກໍາ ແລະສະເພາະຢ່າງຍິ່ງ ເບິ່ງລະດັບສະພາບ ຄືກັນ ແລະ ຄວາມອ່ອນແອ ທາງພັນທຸກໍາ ຂອງພືດຕົ້ນຕໍ.

(ຄ). ເພີ່ມທະວີສະພາບ ແຕກຕ່າງກັນໃນທາງລັກສະນະໂດຍປູກ ຊະນິດແນວພັນ ທີ່ໄດ້ປັບຕົວແລ້ວ ປົນກັນ ແລ້ວແຕ່ຄວາມເໝາະສົມ.

183.ຄວນສົ່ງເສີມໃຫ້ອົງກອນໃຫ້ທຶນສືບຕໍ່ສະໜັບສະໜູນບັນດາສູນກະສິກໍາສາກົນ, ລະບົບຄົ້ນຄ້ວາກະສິກໍາແຫ່ງຊາດ ແລະອົງການຄົ້ນຄ້ວາກະສິກໍາ ກ່ຽວຂ້ອງອື່ນໆ ພ້ອມທັງອົງ ການບໍ່ສັງກັດລັດທີ່ເຮັດວຽກ ເພື່ອເສີມຂະຫຍາຍ ລະດັບຄວາມຫຼາກຫຼາຍ ດ້ານພັນທຸກໍາ ໃນລະບົບກະສິກໍາ. ການທີ່ສູນສາກົນຕ່າງໆ ສະໜອງ ແນວພັນ ທີ່ບໍ່ທັນສໍາເລັດຢ່າງສົມບູນດ້ານການປັບປຸງພັນ ໃຫ້ແກ່ ແຜນງານແຫ່ງຊາດ ເພື່ອຈະໄດ້ພັດທະນາຕໍ່. ລວມທັງການປັບປຸງທີ່ໃນພື້ນທີ່ປັກຝັງ, ຊຶ່ງສອດຄ່ອງກັບຍຸດທະສາດ ເໝາະສົມ, ນັ້ນກໍແມ່ນ ມາດຕະການອັນໜຶ່ງ ເພື່ອຈະໃຫ້ມີລະດັບຄວາມຫຼາກຫຼາຍ, ຄວາມສາມາດ ປັບຕົວເຂົ້າກັບສະພາບ ແລະຄວາມໝັ້ນຄົງຂອງພືດເພີ່ມຂຶ້ນສູງກວ່າເກົ່າ. ມາດຕະການອີກອັນໜຶ່ງ ແມ່ນ ການເລືອກເອົາ ແນວພັນ ດັ້ງເດີມ ຂອງຊາວກະສິກອນ ທີ່ມີສະມັດຕະພາບສູງ.

**184.ຄວາມສາມາດ:** ລັດຖະບານຕ່າງໆ ພ້ອມທັງລະບົບຄົ້ນຄ້ວາກະສິກໍາແຫ່ງຊາດ ໂດຍໄດ້ຮັບການສະໜັບສະໜູນ ໂດຍບັນດາສູນຄົ້ນຄ້ວາກະສິກໍາສາກົນ ແລະອົງການຈັດຕັ້ງຄົ້ນ ຄ້ວາ ແລະ ສົ່ງເສີມຄວນ:

(ກ). ເພີ່ມທະວີຄວາມສາມາດຂອງຕົນເພື່ອພັດທະນາ ແລະນໍາໃຊ້ແນວພັນ ຈາກຫຼາຍສາຍພັນ, ປະເພດປົນກັນ ແລະປະເພດທຽມ, ເທົ່າທີ່ເຫັນເໝາະສົມ;

(ຂ). ເພີ່ມທະວີຄວາມສາມາດໃນການນໍາໃຊ້ບັນດາຍຸດທະສາດຄຸ້ມຄອງສັດຕູພືດແບບປະສົມປະສານ ລວມທັງປະເພດທົນທານ ບໍ່ສະເພາະສາຍພັນ, ປະເພດທົນຕໍ່ສາຍພັນສະເພາະແບບຈອມທາດ ແລະການນໍາໃຊ້ແບບຍຸດທະສາດຈໍາພວກ ພັນທຸກໍາ ທີ່ມີຄວາມຕ້ານທານ

(ຄ). ອໍານວຍຄວາມສະດວກແກ່ການນໍາໃຊ້ແບບຍຸດທະສາດ ແນວພັນຕ່າງໆ ແບບກ້ວາງຂວາງ;

(ງ). ຄົ້ນຄວ້າຊອກຫາ ແລະເທົ່າທີ່ເຫັນວ່າເໝາະສົມ ການນໍາໃຊ້ ບັນດາຍຸດທະສາດ ປັບປຸງພັນພືດ ທີ່ບໍ່ລວມສູນ ແລະ "ມີສ່ວນຮ່ວມ" ເພື່ອພັດທະນາ ແນວພັນພືດທີ່ໄດ້ດັດປັບສະເພາະໃຫ້ເໝາະກັບສະພາບແວດລ້ອມທ້ອງຖິ່ນ;

(ຈ). ນໍາໃຊ້ເຕັກນິກຊີວະເຕັກໂນໂລຊີທັນສະໃໝເທົ່າທີ່ເປັນໄປໄດ້ ເພື່ອອໍານວຍຄວາມສະດວກແກ່ການຂະຫຍາຍຖານພັນທຸກໍາພືດໃຫ້ກວ້າງອອກໄປ.

**185.ການຄົ້ນຄ້ວາ/ເຕັກໂນໂລຊີ:** ສະໜັບສະໜູນຄວາມພະຍາຍາມ ເພື່ອກຳນົດວ່າ ກິດຈະກຳໃດ ທີ່ນຳໃຊ້ໃນການ ປັບປຸງພັນພືດ, ການຄົ້ນຄ້ວາພືດ ແລະລະບົບປູກຝັງ ຊຶ່ງເຮັດໃຫ້ມີຄວາມຫຼາກ ຫຼາຍຢູ່ໃນພື້ນທີ່ປູກຝັງ. ການຄົ້ນຄ້ວາປະເພດ ນີ້ອາດລວມເອົາທັງ ການທົບທວນເບິ່ງບັນດາ ລະບົບ ປູກຝັງ ທີ່ບໍ່ ຄືກັນ ເຊັ່ນ ວິທີການປູກ ພືດສັບວາງກັນ, ພືດພືດຫລາຍອື່ນ ໃສ່ນຳກັນ ແລະ ການຄຸ້ມ ຄອງສັດຕູພືດແບບປະສົມປະສານ, ແລະການຄຸ້ມຄອງ ແບບປະສົມປະສານ, ທັງນີ້ແມ່ນເພື່ອ ເບິ່ງ ຄວາມເປັນໄປໄດ້ທີ່ຈະນຳໃຊ້ ຢ່າງກ້ວາງຂວາງກວ່າເກົ່າ, ນອກນັ້ນແລ້ວກໍຄົ້ນຄ້ວາເພື່ອພັດທະນາວິ ທີການຕ່າງໆ ໃນການ ປັບປຸງພັນພືດທີ່ເໝາະສົມ.

186.ຄວນສະໜັບສະໜູນການພັດທະນາເຄື່ອງມື ແລະວິທີການຕ່າງໆ ທີ່ໄດ້ປັບປຸງສຳລັບຕີລາຄາ ສະພາບຄວາມອ່ອນແອ ດ້ານພັນທຸກຳ, ຖ້າຫາກສິ່ງນັ້ນພໍເປັນໃຫ້ກຳນົດ ວ່າອັນໃດຄື ຄວາມດຸ່ນ ດ່ຽງທີ່ດີສຸດ ສຳລັບພືດ ທັງຫຼາຍ ລະຫວ່າງຄວາມຄືກັນ ແລະ ຄວາມຫຼາກຫຼາຍ ອັນສອດຄ່ອງກັບ ແນວຄວາມ ຄິດທາງພາກປະຕິບັດ, ວິຊາການ ແລະ ເສດຖະກິດ ອັນຈະເຮັດໃຫ້ ສືບຕໍ່ມີລະບົບ ນິເວດຕ່າງໆ.

**187.ການຄຸ້ມຄອງ/ປະສານງານ: ຄະນະ**ກຳມາທິການດ້ານຊັບພະຍາກອນ ພັນທຸກຳ ສຳລັບອາ ຫານ ແລະກະເສດ, ຫຼືການຈັດຕັ້ງສຳລອງ ທີ່ເໝາະສົມທີ່ຖືກແຕ່ງຕັ້ງໂດຍກຳມາທິກຳນີ້ຄວນໄດ້ຮັບ ການແຈ້ງຂ່າວ ຢ່າງເປັນລະບົບກ່ຽວກັບ ສະພາບຄວາມຫຼາກຫຼາຍໃນ ແນວພັນແລະເລື້ອງ ປະຊາກອນແວພັນ ທີ່ປະສົມພັນໃນໝູ່ພືດຕົ້ນຕໍທີ່ມີຄວາມສຳຄັນ ດ້ານຄວາມໝັ້ນຄົງຂອງຫາຫານ ໂລກ. ຄະນະກຳມາທິການນີ້ ຕ້ອງສະໜອງຂໍ້ມູນຂ່າວສານນີ້ໃຫ້ ແກ່ການຈັດຕັ້ງລະຫວ່າງລັດຖະ ບານທີ່ກ່ຽວຂ້ອງອື່ນໆ ເຊັ່ນ ກອງປະຊຸມຄູ່ພາຄີ ສົນທິສັນຍາກ່ຽວກັບ ຄວາມຫຼາກຫຼາຍ ດ້ານຊີວະ ນາໆພັນ, ສົນທິສັນຍາສາກົນ ເພື່ອປົກປ້ອງພືດ, ແລະ ກຳມາທິການ ເພື່ອ ການພັດທະນາ ແບບ ຍືນຍົງ.

**188.ກິດຈະກຳນີ້ແມ່ນພົວພັນຢ່າງໃກ້ຊິດກັບ:**

- ການພັດທະນາລະບົບຕິດຕາມ ແລະເຕືອນໄພແຕ່ທົວທີກ່ຽວກັບການສູນເສຍຊັບພະຍາ ກອນພັນທຸກຳພືດສຳລັບອາຫານ ແລະກະເສດ.
- ສະໜັບສະໜູນການຄຸ້ມຄອງບໍລິຫານຢູ່ກັບຟາມ ແລະປັບປຸງຊັບພະຍາກອນພັນທຸກຳພືດ ສຳລັບອາຫານ ແລະກະເສດ.
- ການເພີ່ມທະວີງຽກເສີມຂະຫຍາຍ ພັນທຸກຳ ແລະຄວາມພະຍາຍາມຂະຫຍາຍຖານຂໍ້ມູນ ດ້ານພັນທຸກຳ.
- ການພັດທະນາຕະຫຼາດໃໝ່ສຳລັບ ແນວພັນ ທ້ອງຖິ່ນ ແລະຜະລິດຕະພັນປະເພດ “ຮັ່ງມີ ທາງຄວາມຫຼາກຫຼາຍ”.

## 12. ສົ່ງເສີມການພັດທະນາ ແລະການຄ້າຂາຍພືດ ແລະ ຊະນິດແນວພັນພືດ ທີ່ບໍ່ໄດ້ໃຊ້ຢ່າງເຕັມສ່ວນ

**189.ການຕີລາຄາ:** ໃນຄະນະທີ່ ຊະນິດແນວພັນຈຳນວນໜ້ອຍນຶ່ງເທົ່ານັ້ນ ທີ່ສະໜອງຄວາມຮຽກຮ້ອງ ຕ້ອງການດ້ານອາຫານໃຫ້ຊາວໂລກ ໃນອັດຕຣາສ່ວນຫຼວງຫຼວງ, ມີ ຊະນິດແນວພັນ ອື່ນໆ ຫຼາຍຮ້ອຍທີ່ໄດ້ຖືກນຳໃຊ້ໃນລະດັບທ້ອງຖິ່ນ ດ້ວຍຮູບແບບ ນຳປູກຝັງ ຫຼື ການເກັບກ່ຽວແນວພັນ ຊຶ່ງໄດ້ໃຊ້ພຽງແຕ່ເທົ່າໃດເທົ່ານັ່ງ ພວກນີ້ແມ່ນໄດ້ປະກອບສ່ວນຫຼາຍສົມຄວນໃຫ້ແກ່ຄົວເຮືອນດ້ານສະບຽງອາຫານ ແລະ ດ້ານຄວາມໝັ້ນຄົງແກ່ຊີວິດການເປັນຢູ່. ສ່ວນຫຼາຍແລ້ວແມ່ນເພດຍິງ ຈະເປັນຄົນຄຸ້ມຄອງ ແລະເກັບກ່ຽວ ຊະນິດແນວພັນເລົ່ານີ້. ຄວາມຮູ້ກ່ຽວກັບການນຳໃຊ້ ແລະ ການຄຸ້ມຄອງ ຫຼືດ້ານ ການເກັບກ່ຽວສ່ວນໃຫຍ່ຈະຢູ່ໃນຂອບເຂດ ທ້ອງຖິ່ນ ແລະ ສະເພາະເຈາະຈົງບໍ່ຂະຫຍາຍໄປແຫ່ງອື່ນ. ສ່ວນຫຼວງຫຼາຍ ຂອງພືດທີ່ບໍ່ໄດ້ຖືກນຳໃຊ້ເຕັມອັດຕາ ພວກນີ້ມີຄວາມເປັນໄປໄດ້ທີ່ຈະເອົາໄປນຳໃຊ້ຢ່າງກ້ວາງຂວາງ, ແລະເຫັນວ່າການສົ່ງເສີມແບບນີ້ສາມາດປະກອບສ່ວນໃຫ້ແກ່ສະພາບຄວາມໝັ້ນຄົງ ດ້ານອາຫານ, ດ້ານຄວາມຫຼາກຫຼາຍທາງ ກະສິກຳ ແລະດ້ານການສ້າງລາຍຮັບ ສະເພາະຢ່າງຍິ່ງຢູ່ບ່ອນທີ່ການປູກຝັງພືດຕົ້ນຕໍໃນແງ່ເສດຖະກິດແມ່ນມີໜ້ອຍ. ເຖິງຢ່າງໃດກໍຕາມ, ແຜນງານຕ່າງໆໃນປັດຈຸບັນ ເພື່ອການອະນຸລັກ, ຄົ້ນຄ້ວາ ແລະພັດທະນາໂດຍທົ່ວໄປແມ່ນບໍ່ໄດ້ເອົາໃຈໃສ່ດ້ານຊະນິດແນວພັນ ພວກນີ້ເລີຍ.

**190.ຈຸດປະສົງໄລຍະຍາວ:** ເພື່ອປະກອບສ່ວນໃຫ້ກະສິກຳມີຄວາມຫຼາກຫຼາຍ, ເພື່ອເພີ່ມທະວີຄວາມໝັ້ນຄົງດ້ານອາຫານ ແລະ ປັບປຸງຊີວິດ ການເປັນຢູ່ຂອງຊາວໄຮ່ນາ; ເພື່ອສົ່ງເສີມການອະນຸລັກ ແລະຄຸ້ມຄອງແບບຍືນຍົງ ຊະນິດແນວພັນ ທີ່ບໍ່ທັນໄດ້ ນຳໃຊ້ແບບເຕັມສ່ວນ ແລະຊັບພະຍາກອນພັນທຸກຳຂອງມັນ.

**191.ຈຸດປະສົງສະເພາະໜ້າ:** ເພື່ອພັດທະນາບັນດາຍຸດທະສາດ ການອະນຸລັກທີ່ເໝາະສົມ ແລະວິທີການເຮັດວຽກ ການຄຸ້ມຄອງທີ່ເໝາະສົມສຳລັບພວກ ຊະນິດແນວພັນ ທີ່ບໍ່ໄດ້ໃຊ້ຢ່າງເຕັມສ່ວນ; ເພື່ອປັບປຸງ ຊະນິດແນວພັນ ທີ່ໄດ້ເລືອກໄວ້; ເພື່ອປັບປຸງວຽກການຕະຫຼາດສຳລັບຈຳພວກພືດທີ່ບໍ່ໄດ້ໃຊ້ຢ່າງເຕັມສ່ວນ.

**192.ນະໂຍບາຍ/ຍຸດທະສາດ:** ໂດຍໄດ້ຮັບການສະໜັບສະໜູນຈາກສູນຄົ້ນຄ້ວາກະສິກຳສາກົນ ແລະອົງການຈັດຕັ້ງທີ່ບໍ່ ສັງກັດລັດຖະບານ. ພ້ອມທັງຄຶດເຖິງ ແນວຄວາມຄຶດຂອງການຈັດຕັ້ງຊາວໄຮ່ນາ ແລະຊຸມຊົນຂອງເຂົາເຈົ້າ, ລັດຖະບານຕ່າງໆພ້ອມທັງລະບົບ ການຄົ້ນຄ້ວາກະສິກຳແຫ່ງຊາດ ຂອງຕົນ ເທົ່າທີ່ເຫັນວ່າເໝາະສົມ ແມ່ນຖືກຊຸກຍູ້ ເພື່ອສົ່ງເສີມ ບັນດານະໂຍບາຍທີ່ສອດຄ່ອງກັບການນຳໃຊ້, ຄຸ້ມຄອງ ແລະພັດທະນາແບບຍືນຍົງ ຕໍ່ ຊະນິດແນວພັນ ທີ່ບໍ່ໄດ້ໃຊ້ແບບເຕັມສ່ວນ

ຊຶ່ງໃນນັ້ນກໍລວມ ທັງບັນດານະໂຍບາຍ ການໃຊ້ດິນທີ່ເຫັນວ່າ ມີຄວາມສາມາດບົ່ມຊ້ອນໃນການປະກອບສ່ວນ ເສີມສ້າງເສດຖະກິດ ທ້ອງຖິ່ນ ແລະຄວາມ ໝັ້ນຄົງ ອາຫານ.

**193.ຄວາມສາມາດ:** ຄວນຈັດການຝຶກອົບຮົມ ແລະສ້າງຄວາມສາມາດໃຫ້ແກ່ນັກວິທະຍາສາດ ແລະນັກຊ່ຽວຊານວຽກງານສົ່ງເສີມ ແລະຊາວໄຮ່ນາພ້ອມຊຸມຊົນເຂົາເຈົ້າໂດຍໃຫ້ເອົາໃຈໃສ່ເພດຍິງ, ແລະ ການອົບຮົມຈະສຸມໃສ່ບັນຫາ:

(ກ). ກໍານົດວ່າ ຊະນິດແນວພັນ ໃດທີ່ບໍ່ໄດ້ໃຊ້ ເຕັມສ່ວນ ຊຶ່ງເຫັນວ່າມີຄວາມບົ່ມຊ້ອນ ທີ່ຈະເພີ່ມທະວີ ການນໍາໃຊ້ມັນຢ່າງ ຍືນຍົງໄດ້;

(ຂ). ພັດທະນາ ແລະປະຕິບັດຮູບແບບ ວິທີຄຸ້ມຄອງແບບຍືນຍົງ ສໍາລັບ ຊະນິດແນວພັນ ທີ່ບໍ່ໄດ້ໃຊ້ແບບເຕັມສ່ວນແຕ່ມີຄວາມສໍາຄັນສໍາລັບອາຫານ ແລະກະສິກໍາ

(ຄ). ພັດທະນາບັນດາວິທີການປຸງແຕ່ງພາຍຫຼັງເກັບກ່ຽວ;

(ງ). ພັດທະນາວິທີການຕ່າງໆ ກ່ຽວກັບການຕະຫຼາດ.

**194.ການຄົ້ນຄ້ວາ/ເຕັກໂນໂລຊີ:** ຄວນທໍາການຄົ້ນຄ້ວາເພື່ອ:

(ກ). ພັດທະນາຮູບແບບຕ່າງໆ ເພື່ອຄຸ້ມຄອງແບບຍືນຍົງ ຊະນິດແນວພັນ ທີ່ບໍ່ໄດ້ນໍາໃຊ້ແບບເຕັມສ່ວນເທື່ອ ຊຶ່ງ ຊະນິດແນວພັນ ເລົ່ານີ້ມີຄວາມສໍາຄັນໃນແງ່ຊັບພະຍາກອນພັນ ທຸກໍາ;

(ຂ). ພັດທະນາການປຸງແຕ່ງພາຍຫຼັງເກັບກ່ຽວ ແລະຮູບແບບຕ່າງໆ ເພື່ອປັບປຸງສະພາບຄວາມເປັນໄປໄດ້ໃນແງ່ຕະຫຼາດ.

**195.ການປະສານງານ/ຄຸ້ມຄອງ:** ບັນດາຕາໜ່າງ ຂົງເຂດພ້ອມທັງ ແຜນງານແຫ່ງຊາດ ໂດຍການຮ່ວມມືກັບບັນດາ ສູນຄົ້ນຄ້ວາກະສິກໍາສາກົນ, ອົງການບໍ່ສັງກັດລັດ ແລະ ອົງການຈັດຕັ້ງກ່ຽວຂ້ອງທັງຫຼາຍ ຄວນທົບທວນເບິ່ງສະພາບຖານະ ຂອງຊຸມ ຊະນິດແນວພັນ ທີ່ບໍ່ໄດ້ນໍາໃຊ້ເຕັມສ່ວນ ຊຶ່ງມີຢູ່ໃນພາກພື້ນ, ເພື່ອ:

(ກ). ຊອກຮູ້ຄວາມເປັນໄປໄດ້ທີ່ຈະໃຊ້ມັນແບບຍືນຍົງກວ່າເກົ່າ;

(ຂ). ຊອກຮູ້ວ່າການຄົ້ນຄ້ວາ ແບບດຽວກັນ ແລະຄວາມຮຽກຮ້ອງ ຕ້ອງການໃນ ດ້ານພັດທະນາມີຄືແນວໃດ;

(ຄ). ອໍານວຍຄວາມສະດວກ, ແລະ ເທົ່າທີ່ເຫັນວ່າເໝາະສົມ, ປະສານເລື່ອງຂໍ້ຮຽກຮ້ອງ ເວລາມີຄວາມຕ້ອງ ການຊ່ວຍເຫຼືອ ດ້ານການເງິນ ແລະວິຊາການ.

196.ກິດຈະກໍານີ້ແມ່ນພົວພັນຢ່າງໃກ້ຊິດກັບ:

- ວຽກສະໜັບສະໜູນການຄຸ້ມຄອງຢູ່ທີ່ຟາມ ແລະ ປັບປຸງຊັບພະຍາກອນ ພັນທຸກໍາພືດເພື່ອອາຫານ ແລະການກະສິກໍາ

- ສົ່ງເສີມການອະນຸລັກແນວພັນໃນຖິ່ນກຳເນີດ ພືດປະເພດ ສາຍພັນພືດປ່າ ແລະ ພືດປ່າ ເພື່ອຜະລິດເປັນອາຫານ.
- ພັດທະນາຕະຫຼາດໃໝ່ສຳລັບ ແນວພັນ ທ້ອງຖິ່ນ ແລະຜະລິດຕະພັນທີ່ "ຮັ່ງມີດ້ານຄວາມ ຫຼາກຫຼາຍ".
- ສົ່ງເສີມໃຫ້ມະຫາຊົນຮູ້ ແລະເຫັນບັນຫາ ຄຸນຄ່າຂອງຊັບພະຍາກອນພັນ ທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ແລະວຽກງານອະນຸລັກ ແລະນຳໃຊ້.

## 13. ການສະໜັບສະໜູນວຽກງານ ການຜະລິດ ແລະການແຈກຢາຍເມັດພັນ

**197.ການຕີລາຄາ:** ຊາວໄຮ່ນາໄດ້ຮັບຜົນປະໂຫຍດຈາກການມີເມັດພັນ ແບບກ້ວາງຂວາງ ພ້ອມທັງມີວັດຖຸພັນ ປູກຝັງອື່ນໆ. ການມີສິ່ງເລົ່ານີ້ສາມາດມີຂໍ້ຈຳກັດ ຍ້ອນວ່າ: (ກ) ການເກັບກ່ຽວບໍ່ໄດ້ດີ, ສິ່ງອຳນວຍຄວາມສະດວກໃນການເກັບມ້ຽນ ຢູ່ຟາມຂາດແຄນ, ຂາດພາຫະນະເພື່ອຂະຫຍາຍ ເມັດພັນ, ໃຫ້ໄດ້ຄຸນນະພາບ, ແລະ (ຂ) ລະບົບແຈກຢາຍເມັດບໍ່ໄດ້ຜົນດີ. ບັນຫາເລົ່ານີ້ສາມາດ ເກີດຂຶ້ນກັບເມັດ ພັນ ທີ່ປັບປຸງພັນພາຍໃນທ້ອງຖິ່ນເອງ ແລະ ແນວພັນ ທີ່ປັບປຸ່ງພັນ ເພື່ອການຄ້າຂຸມບໍລິສັດເມັດພືດ parastatal ແລະການຄ້າ ມີບາງຄັ້ງກໍມີບັນຫາດ້ານສະໜອງເມັດພັນພືດຂອງ ແນວພັນ ທີ່ໄດ້ດັດປັບ ສະເພາະສຳລັບ ເງື່ອນໄຂພິເສດທ້ອງຖິ່ນໃດນຶ່ງ. ສ່ວນຫຼາຍແລ້ວ ພວກເຂົາເຈົ້າ ຈະບໍ່ສາມາດສະໜອງແນວພັນ ຫຼາຍໆແນວໄດ້ ຫຼືບໍ່ກໍບໍ່ມີແກ່ນແນວພືດ "ສຳຮອງ/minor crop" ຍ້ອນວ່າຄ່າຊື້ຂາຍມັນສູງ ແລະພະລັງຊື້ຂອງຊາວໄຮ່ນາກໍຕ່ຳ. ຍ້ອນແນວນັ້ນຈຶ່ງມີຄວາມຈຳເປັນເພີ່ມທະວີຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ ເພື່ອຈະສາມາດຜະລິດ ແລະແຈກຢາຍແກ່ນພືດຫຼາຍໆ ແນວພັນ, ລວມທັງ ແນວພັນດັ້ງເດີມ landrace ຂອງ ຊາວໄຮ່ນາ ຊຶ່ງມີຄຸນປະໂຫຍດສຳລັບລະບົບຫຼາກຫຼາຍ ຂອງແນວພັນ.

**198.ຈຸດປະສົງໄລຍະຍາວ:** ເພື່ອເພີ່ມທະວີ ສະພາບ ການມີໃຊ້ແນວພັນພືດຈຳນວນກ້ວາງຂວາງ.

199.ເພື່ອປະກອບສ່ວນແກ່ການມີຄວາມຫຼາກຫຼາຍ ດ້ານກະເສດ-ຊີວະ ແລະສະມັດຕະພາບ ໃຫ້ໄດ້ສູງສຸດ.

**200.ຈຸດປະສົງໄລຍະກາງ:** ເພື່ອປັບປຸງສະພາບຊ່ວຍຊູຊຶ່ງກັນ ແລະກັນລະຫວ່າງລັດຖະບານ, ບໍລິສັດການຄ້າ ແລະ ບໍລິສັດຂະໜາດນ້ອຍ ທີ່ເຮັດວຽກ ດ້ານປັບປຸງພັນພືດ, ການຜະລິດ ແລະແຈກຢາຍເມັດພັນ.

201.ເພື່ອຮັບປະກັນເປັນຢ່າງດີທີ່ໄດ້ພັດທະນາ ແລະຂະຫຍາຍກົນໄກຕ່າງໆ ເພື່ອການຜະລິດ ແລະ ແຈກຢາຍເມັດພັນລະດັບ ທ້ອງຖິ່ນສຳລັບ ແນວພັນ ແລະພືດສຳຄັນໆ ທີ່ຊາວໄຮ່ນາຂະໜາດນ້ອຍນຳໃຊ້.

202.ເພື່ອຊ່ວຍບໍລິການຊາວໄຮ່ນາໃຫ້ມີ ແນວພັນ ພືດໃໝ່ໃຊ້. ເພື່ອໃຫ້ມີ ວັດຖຸພັນ ເໝາະສົມ ຊຶ່ງເກັບມ້ຽນໄວ້ແບບ ການອະນຸລັກ ນອກຖິ່ນກຳເນີດ ສຳລັບການ ຂະຫຍາຍພັນ ແລະ ການ ແຈກຢາຍໃຫ້ຊາວໄຮ່ນາ.

**203.ນະໂຍບາຍ/ຍຸດທະສາດ:** ບັນດາລັດຖະບານ ຄວນມລະບົບ ຄົ້ນຄ້ວາກະສິກຳ ແຫ່ງຊາດຂອງຕົນ, ໂດຍໃຫ້ສອດຄ່ອງ ກັບກົດໝາຍ ແລະລະບຽບການແຫ່ງຊາດ ທີ່ເໝາະສົມ ແລະໄດ້ຮັບການສະໜັບສະໜູນ ຈາກສູນຄົ້ນຄ້ວາກະສິກຳ ສາກົນ ແລະແຜນງານຮ່ວມມື ໃນພາກພື້ນ, ການຈັດຕັ້ງບໍ່ສັງກັດລັດ, ພ້ອມດຽວກັນນັ້ນກໍຄຳນຶງເຖິງແນວຄວາມຄິດ ຂອງພາກສ່ວນເອກະຊົນ, ອົງການຈັດຕັ້ງຊາວໄຮ່ນາ ແລະຊຸມຊົນຂອງພວກເຂົາເຈົ້າ, ຄວນ:

(ກ) ພັດທະນາບັນດານະໂຍບາຍທີ່ເໝາະສົມ ກ່ຽວກັບບັນດາບໍລິສັດລັດ, ການຄ້າ ແລະບໍລິສັດປະເທດນອກລະບົບ ທີ່ມີທຸລະກິດຜະລິດ ແລະແຈກຢາຍເມັດພືດ, ທັງນີ້ແມ່ນເພື່ອສຸມຄວາມພະຍາຍາມໃສ່ຂໍ້ລິເລີ່ມ ຂອງລັດຖະບານ ເພື່ອສະໜອງ ຄວາມຕ້ອງການຫຼາຍໆຢ່າງຂອງຊາວໄຮ່ນາທີ່ຂາດ ຊັບພະຍາກອນໂດຍສະເພາະ, ໃນນັ້ນເມື່ອໃດຫາກ ຈຳເປັນກໍຄວນສະໜອງຄວາມຕ້ອງການຂອງຊາວໄຮ່ນາ ເພດຍິງ. ໃນຄະນະທີ່ປະຕິບັດ ຮູບການນີ້ຢູ່ນັ້ນ, ກໍຄວນສົ່ງເສີມໃຫ້ພາກສ່ວນ ເອກະຊົນຕອບສະໜອງ ຄວາມຮຽກຮ້ອງຕ້ອງ ການຂອງຊາວປູກຝັງການຄ້າຂະໜາດໃຫຍ່. ລັດຖະບານບໍ່ຄວນຈຳກັດຕົນເອງໃນ ການຈະເຂົ້າໄປມີສ່ວນຮ່ວມເມື່ອເຫັນວ່າພາກສ່ວນເອກະຊົນບໍ່ໄດ້ ສຸມຄວາມພະຍາຍາມ ແບບພຽງພໍກັບບາງພືດຕົ້ນຕໍ ຫຼື ພືດສຳຮອງ;

(ຂ) ສ້າງ, ແລະສົ່ງເສີມເທົ່າທີ່ເຫັນຈຳເປັນ, ສິ່ງແວດລ້ອມທີ່ເອື້ອອຳນວຍ ເມື່ອໃດຫາກເຫັນວ່າຍັງຂາດສະພາບດັ່ງກ່າວ, ທັງນີ້ແມ່ນເພື່ອ ພັດທະນາບໍລິສັດ ເມັດພັນຂະໜາດນ້ອຍ, ລວມທັງປະຕິບັດ ຜ່ານຂໍ້ລິເລີ່ມທີ່ເໝາະສົມ;

(ຄ) ເຮັດໃຫ້ສາຍພົວພັນເຂັ້ມແຂງ ລະຫວ່າງທະນາຄານ ເຊື້ອພັນ, ອົງການ ປັບປຸງພັນພືດ, ຜູ້ຜະລິດເມັດ, ແລະບັນດາບໍລິສັດຜະລິດ ແລະຈຳໜ່າຍເມັດພັນຂະໜາດນ້ອຍ;

(ງ) ຄົ້ນຄວ້າ ແຜນການຄວບຄຸມ ຄຸນນະພາບເມັດພັນ, ສະເພາະຢ່າງຍິ່ງປະເພດເໝາະສົມ ສຳລັບບັນດາ ບໍລິສັດຂະໜາດນ້ອຍ;

(ຈ) ຄົ້ນຄວ້າ ບັນດາມາດຕະການ ທີ່ຈະອະນຸຍາດໃຫ້ສາມາດແຈກຢາຍ ແລະ ການຄ້າຂາຍແນວພັນພັນດັ້ງເດີມ ຂອງຊາວໄຮ່ນາ ແລະ ແນວພັນ ທີ່ເລີກໃຊ້ກັນແລ້ວ ຖ້າຫາກເຫັນວ່າແນວພັນ ນັ້ນມີເງື່ອນໄຂໃຊ້ໄດ້ໃນແງ່ທຳການແຈກຢາຍ ແລະທຳການຄ້າ ຖ້າເບິ່ງດ້ານພະຍາດ, ສັດຕູພືດ, ສຸກຂະພາບ ແລະສິ່ງແວດລ້ອມເຫັນວ່າບໍ່ແຕກຕ່າງກັບແນວພັນ ທີ່ໃຊ້ກັນຢູ່ທົ່ວໄປ ແລະ

ແນວພັນທີ່ໄດ້ລົງທະບຽນ ມາດຕະການຕ່າງໆນັ້ນຕ້ອງໃຫ້ຖືກຕາມມາດຕະຖານຄຸນນະພາບຂອງການແຈກຢາຍຈຳໜ່າຍການຄ້າເມັດພືດ, ໂດຍໃຫ້ມັນສອດຄ່ອງກັບກົດໝາຍແຫ່ງຊາດ ຫຼືລະບຽບການຂອງຂົງເຂດຕາມແຕ່ຄວາມເໝາະສົມ.

**204.ຄວາມສາມາດ:** ລັດຖະບານຕ່າງໆ, ໂດຍສອດຄ່ອງກັບກົດໝາຍແຫ່ງຊາດ ແລະນະໂຍບາຍອັນຄວນ ແລະພ້ອມໆກັນກັບອົງກອນ ຊ່ວຍເຫຼືອສາກົນ, ອົງການບໍ່ສັງກັດລັດ ແລະ ບັນດາບໍລິສັດເມັດພືດ ຄວນ:

(ກ) ສົ່ງເສີມໃຫ້ບັນດາບໍລິສັດເມັດ ພືດທີ່ມີຢູ່ໃຫ້ປັບປຸງຈຳນວນ ແລະຄຸນນະພາບ ວັດຖຸພັນເພື່ອປູກຝັງທີ່ໃຫ້ບໍລິການລູກຄ້າ;

(ຂ) ສະໜອງຂໍ້ລິເລີ່ມຕ່າງໆ ຢ່າງເໝາະສົມລວມທັງມີໂຄງການສິນເຊື່ອ, ໆລໆ, ເພື່ອອຳນວຍຄວາມສະດວກໃຫ້ມີການສ້າງຕັ້ງບໍລິສັດເມັດພັນ, ພ້ອມກັນໃນແຕ່ລະປະເທດກໍຕ້ອງເອົາໃຈໃສ່, ຕາມຄວາມເໝາະສົມ, ໃນການຕອບສະໜອງຄວາມຕ້ອງການຂອງກຸ່ມຊາວໄຮ່ນາຂະໜາດນ້ອຍ, ຂອງແມ່ຍິງ ແລະກຸ່ມທີ່ອ່ອນແອຢູ່ໃນຄວາມສ່ຽງ ຫຼືດ້ອຍໂອກາດ;

(ຄ) ໃຫ້ການສະໜັບສະໜູນ ແລະສ້າງຄວາມເຂັ້ມແຂງແກ່ການຈັດຕັ້ງຊາວໄຮ່ນາ ເພື່ອໃຫ້ສາມາດສະແດງຄວາມຄິດເຫັນທີ່ມີປະສິດຕິຜົນກ່ວາເກົ່າທາງດ້ານຄວາມຕ້ອງການຂອງຕົນເອງທາງດ້ານເມັດພືດ, ໂດຍໃຫ້ຄວາມເອົາໃຈໃສ່ຕໍ່ເພດຍິງ ແລະກຸ່ມຄົນທີ່ອ່ອນແອ ຫຼືຢູ່ຂອບສັງຄົມ;

(ງ) ສະໜອງການອົບຮົມ ແລະສະໜັບສະໜູນດ້ານໂຄງລ່າງແກ່ຊາວໄຮ່ນາໃນເລື່ອງເຕັກໂນໂລຊີເມັດພັນ, ທັງນີ້ແມ່ນເພື່ອປັບປຸງ ເມັດພັນທີ່ຊາວໄຮ່ນາໄດ້ເກັບມ້ຽນໄວ້ ນັ້ນໃຫ້ມີຄຸນນະພາບດີ ກ່ວາທາງດ້ານຮູບຊົງ ຕົວຈິງຂອງເມັດ ກໍຄືດ້ານພັນທຸກຳ.

**205.ການຄົ້ນຄ້ວາ/ເຕັກໂນໂລຊີ:** ບັນດາລັດຖະບານຄວນ:

(ກ) ຕີລາຄາເບິ່ງສິ່ງຕ່າງໆ ທີ່ຊຸກຍູ້ ແລະບໍ່ຊຸກຍູ້ ພ້ອມທັງບັນຫາຄວາມຕ້ອງການໃຫ້ສະໜັບສະໜູນບັນດາບໍລິສັດຜະລິດ ແລະຈຳໜ່າຍເມັດພັນ, ລວມທັງເບິ່ງເຖິງຄວາມພະຍາຍາມຂະໜາດນ້ອຍປະຕິບັດກັນໃນລະດັບຊາວໄຮ່ນາ;

(ຂ) ພັດທະນາວິທີການຕ່າງໆ ເພື່ອສະໜັບສະໜູນລະບົບຈຳໜ່າຍ ເມັດພັນລະດັບຊາວໄຮ່ນາຂະໜາດນ້ອຍ, ພ້ອມທັງຖອດຖອນ ປະສົບການຂອງຊຸມຊົນ ແລະ ບໍລິສັດເມັດພັນຂະໜາດນ້ອຍ ຊຶ່ງມີຢູ່ແລ້ວໃນບາງປະເທດ.

**206.ການປະສານງານ/ຄຸ້ມຄອງບໍລິຫານ:** ລັດຖະບານຄວນຕິດຕາມຢ່າງເປັນປະຈຳຊອກຮູ້ຄວາມສາມາດລະດັບຊາດ ຂອງຊາວໄຮ່ນາ ໃນການຈະມີເມັດພັນ ທີ່ຕົນຕ້ອງການຢ່າງເໝາະສົມ.

207.ໂດຍການຮ່ວມມືກັບອົງການ ອາຫານ ແລະການ ກະເສດ, ແຜນງານ ການພັດທະນາ ຂອງອົງການ ສະຫະປະຊາຊາດ, ທະນາຄານໂລກ ແລະ ກອງທຶນ ກະສິກຳ ເພື່ອການພັດທະນາ ສາກົນ, ພ້ອມທັງການຈັດຕັ້ງອື່ນໆ ຄວນສຶກສາຄວາມເປັນໄປໄດ້ທີ່ຈະລວມເອົາກິດຈະກຳນີ້ເຂົ້າໃນ ບັນດາໂຄງການພັດທະນາກະສິກຳອື່ນໆ.

## 14. ພັດທະນາ ການຕະຫຼາດໃໝ່ສຳລັບ ແນວພັນ ທ້ອງຖິ່ນ ແລະ ຜະລິດຕະພັນ "ຮັ່ງມີດ້ວຍ ຄວາມຫຼາກຫຼາຍ"

**208.ການຕີລາຄາ:** **ການ**ຕະຫຼາດກະສິກຳ, ຄວາມຫຼາກຫຼາຍ ກຳລັງຖືກປ່ຽນແທນ ນັບມື້ນັບຫຼາຍຂຶ້ນ ໂດຍສະເພາະສະພາບຄືກັນເປັນອັນດຽວກັນ. ຂໍ້ອະທິບາຍອັນໜຶ່ງຕໍ່ສະພາບປ່ຽນແປງນີ້ກໍແມ່ນຍ້ອນມີການປ່ຽນແປງ ຈາກປະເພນີດັ້ງເດີມ ແລະ ຄວາມນິຍົມຂອງຜູ້ຊົມໃຊ້. ການໃຫ້ຄວາມສຳຄັນຫຼາຍໂພດແກ່ສະມັດຕະພາບ/ຜະລິດຕະພັນ , ຜົນກະທົບຈາກ ການໂຄສະນາ ແລະ ການເພີ່ມທະວີຄວາມສຳຄັນ ຂອງການຕະຫຼາດຜູ້ຊົມໃຊ້ໃນໂລກເຮັດໃຫ້ ຊາວກະສິກອນຕ້ອງປະຕິບັດຕາມລະບຽບບາງ ອັນຢ່າງເຄັ່ງຄັດ; ນອກນັ້ນຂໍ້ອະທິບາຍ ອີກອັນໜຶ່ງກໍແມ່ນເລື່ອງທີ່ກົດໝາຍ, ນະໂຍບາຍ, ແຜນງານ ແລະ ກິດຈະກຳຂອງສະຖາບັນຕ່າງໆ ໂດຍບໍ່ໄດ້ຕັ້ງໃຈບໍ່ໄດ້ລະດົມຊຸກຍູ້. ຊາວກະສິກອນ ໃນໂລກແມ່ນບໍ່ໄດ້ຖືກ ລະດົມໃຫ້ສະໜອງຫຼາຍໆ ແນວພັນຄືດັ່ງເມື່ອກ່ອນ. ທັງຢູ່ປະເທດພັດທະນາ ແລະກຳລັງພັດທະນາ ອາດນຳໃຊ້ສິ່ງຈູງໃຈຕ່າງໆ ດ້ານເສດຖະກິດ ແລະສັງຄົມໃຫ້ສືບຕໍ່ປູກແນວພັນທ້ອງຖິ່ນສະເພາະໂຕ ແລະພ້ອມກັນ ຜະລິດ ໃດ້ ຜົນຜະລິດກະສິກຳແບບ "ຮັ່ງມີທາງຄວາມຫຼາກຫຼາຍ" ອອກມາ.

209.ແຜນງານ ເພື່ອຊ່ວຍສ້າງຕະຫຼາດນ້ອຍໆ ແຕ່ພິເສດ ສຳລັບພືດອາຫານ ທີ່ມີຄວາມຫຼາກຫຼາຍດ້ານຊີວະ ອາດເປັນ ສິ່ງກະຕຸ້ນໃນ ທາງບວກໃຫ້ຊາວໄຮ່ນາໄດ້ ປູກແນວພັນ ດັ້ງເດີມ(landrace) ຂອງຊາວໄຮ່ນາ, ແນວພັນທີ່ບໍ່ໄດ້ນຳໃຊ້ແລ້ວ ແລະພືດອາຫານອື່ນໆ ທີ່ບໍ່ໄດ້ນຳໃຊ້ຢ່າງເຕັມສ່ວນ. ແຜນງານປະເພດນີ້ ຄວນກວມເອົາທັງວຽກ ພິເສດຊອກຮູ້ໃຫ້ໄດ້ວ່າ ສິ່ງໃດໃນລະບົບທີ່ກີດຂວາງ ແລະ ບໍ່ຊຸກຍູ້ ສິ່ງເສີມການອະນຸລັກ ແລະການຜະລິດ / ເຮັດ ການຕະຫຼາດ ຊີວະນາໆພັນ.

**210.ບັນດາຍຸດທະສາດໄລຍະຍາວ:** ກະຕຸ້ນໃຫ້ມີຄວາມຕ້ອງການຫຼວງຫຼາຍກວ່າເກົ່າ ແລະມີກົນໄກຕະຫຼາດ ທີ່ເຊື່ອຖືໄດ້ຫຼາຍກວ່າ ສຳລັບແນວພັນປະເພດດັ້ງເດີມ ແລະ ຜະລິດຕະພັນ ກະສິກຳທີ່ໃກ້ຄຽງ.

**211.ບັນດາຍຸດທະສາດໄລຍະກາງ:** ຊຸກຍູ້ສົ່ງເສີມ ຜູ້ສະໜອງ ຊາວໄຮ່ນາ, ຜູ້ປຸງແຕ່ງອາຫານ, ຜູ້ຈຳໜ່າຍ ອາຫານ ແລະ ຈຸດຂາຍຕ່າງໆໃຫ້ສະໜັບສະໜູນ ການ ສ້າງຕະຫຼາດ ສິນຄ້າ ປາຍແຫລມ ສຳລັບອາຫານ, ແນວພັນ ແລະຜະລິດຕະພັນ ທີ່ຫຼາກຫຼາຍດ້ານຊີວະ.

**212.ນະໂຍບາຍ/ຍຸດທະສາດ:** ລັດຖະບານຕ່າງໆ ຄວນພິຈາລະນາ, ແລ້ວເທົ່າທີ່ ເຫັນວ່າເໝາະສົມ, ຮັບຮອງເອົານະໂຍບາຍ ໃນວຽກ ງານ ການສົ່ງເສີມ, ຝຶກອົບຮົມ, ກຳນົດລາຄາ, ແຈກຢາຍ ຈຳໜ່າຍ ຂາເຂົ້າ , ພັດທະນາໂຄງລ່າງ ສິນເຊື່ອ ແລະ ການເສຍພາສີ ຊຶ່ງທັງໝົດເປັນໂຕ ກະຕຸ້ນໃຫ້ມີຄວາມຫຼາກຫຼາຍ ດ້ານພືດ ແລະມີການກໍ່ສ້າງ ຕະຫຼາດສຳລັບ ພືດອາຫານທີ່ຫຼາກຫຼາຍ ດ້ານຊີວະ, ລວມທັງມີມາດຕະຖານ ສຳລັບຕິດປ້າຍ ສະຫຼາກນຳ ອາຫານ ຊຶ່ງຈະອານຸຍາດໃຫ້ເຫັນໄດ້ເລີຍວ່າ ຜະລິດຕະພັນໃດບໍ່ໄດ້ໃຊ້ແນວພັນພືດ ທີ່ໄດ້ມາດຕະຖານ. ຄວນຄຶດ ເຖິງ ການພັດທະນາ ຢ່າງເໝາະສົມ ບັນດາລະບົບ ລິງທະບຽນແນວພັນ ເປັນສິນຄ້າປາຍແຫລມ ທີ່ມີຕະຫຼາດພິເສດ ເພື່ອອະນຸຍາດ ແລະສົ່ງເສີມໃຫ້ມີ ແນວພັນພື້ນເມືອງທ້ອງຖິ່ນຕ່າງໆ ທີ່ໄດ້ຢຸດເຊົາໃຊ້ໃຫ້ໄດ້ ຍືນຍົງຕໍ່ໄປ ແລະໃຫ້ມີ ການທົດລອງ, ຕີລາຄາ ແລະຈຳໜ່າຍໃນ ຮູບການຄ້າ; ພ້ອມດຽວກັນກໍໃຫ້ ຕິດຕາມເບິ່ງ ການລົງທະບຽນທີ່ໄດ້ຮັບຮ້ອງເອົາໄປ ນຳໃຊ້ສຳລັບ ຈຸດປະສົງອື່ນ ອັນອາດຈະກໍ່ໃຫ້ບາງແນວພັນຕ້ອງດັບສູນ ໄປໂດຍບໍ່ໄດ້ຕັ້ງໃຈ.

213.ເທົ່າທີ່ເປັນໄປໄດ້ ແລະ ຄວາມເໝາະສົມ, ບັນດາສະຖາບັນ ຄວນຖືກ ສົ່ງເສີມໃຫ້ ຊື້ອາຫານ "ປະເພດຮັ່ງມີດ້ານຄວາມຫຼາກຫຼາຍ" ເພື່ອຊົມໃຊ້ພາຍໃນ.

**214.ຄວາມສາມາດ:** ຂະບວນການໃດ ແລະ ກິດຈະກຳໃດ ຊຶ່ງມີ ຫຼືອາດມີຜົນກະທົບຮ້າຍແຮງ ຢ່າງສຳຄັນ ຕໍ່ວຽກງານອະນຸລັກ ແລະ ການນຳໃຊ້ ຊີວະນາໆພັນ ແບບຍືນຍົງ ກໍຄວນຖືກກຳນົດໃຫ້ໄດ້ ແລ້ວກໍຕ້ອງ ຕິດຕາມຜົນສະທ້ອງທີ່ມັນມີຕໍ່ ຄວາມຫຼາກຫຼາຍຂອງພືດ.

215.ອົງກອນຕ່າງໆ, ລວມທັງອົງການບໍ່ສັງກັດລັດ, ຄວນສົ່ງເສີມ ການປູກຈິດສຳນຶກ ໃນໝູ່ມະຫາຊົນ, ໂດຍນຳໃຊ້ສື່ຕ່າງໆ ໂດຍຜ່ານກົນໄກ ອັນເໝາະສົມ ເຊັ່ນ ຈັດຕະຫຼາດ ນັດແລມທ້ອງຖະໜົນ, ແລະ ຂໍ້ລິເລີ່ມທີ່ໂຮງຮຽນ ໆລໆ.

**216.ການປະສານງານ/ຄຸ້ມຄອງບໍລິຫານ:** ການປະສານງານ ແລະຄຸ້ມຄອງລະດັບຊາດ ແລະທ້ອງຖິ່ນຄວນຖືກສົ່ງເສີມໃຫ້ມັນ ມີຄວາມຮັບປະກັນ ຄວາມມີປະສິດຕິຜົນສູງສຸດ.

217.ກິດຈະກຳນີ້ແມ່ນພົວພັນໃກ້ຊິດກັບ:

- ການສະໜັບສະໜູນວຽກງານບໍລິຫານຄຸ້ມຄອງຢູ່ພື້ນທີ່ປູກຝັງຊາວກະສິກອນ ແລະ ປັບປຸງ ຊັບພະຍາກອນ ພັນທຸກຳພືດ ເພື່ອ ເປັນອາຫານ ແລະກະສິກຳ.
- ສົ່ງເສີມແນວຄຶດ ໃນໝູ່ປະຊາຊົນໃຫ້ເຫັນຄຸນຄ່າ ການອະນຸລັກ ແລະນຳໃຊ້ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ.

## ບັນດາສະຖາບັນ ແລະການສ້າງຄວາມເຂັ້ມແຂງ

15. ສ້າງແຜນງານແຫ່ງຊາດທີ່ເຂັ້ມແຂງ;
16. ສົ່ງເສີມຕາໜ່າງ ສຳລັບຊັບພະຍາກອນ ພັນທຸກຳພືດ ສຳລັບ ອາຫານ ແລະກະສິກຳ
17. ກໍ່ສ້າງ ລະບົບຂ່າວສານ ຄົບຊຸດສຳລັບ ຊັບພະຍາກອນ ພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ;
18. ພັດທະນາ ບັນດາລະບົບ ຕິດຕາມ ແລະການເຕືອນໄພ ແຕ່ຫົວທີ ກ່ຽວກັບການສູນເສຍຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ;
19. ຂະຫຍາຍ ແລະ ປັບປຸງວຽກ ການສຶກສາ ແລະການຝຶກອົບຮົມ;
20. ສົ່ງເສີມຈິດສຳນຶກ ໃນໝູ່ມະຫາຊົນ ກ່ຽວກັບ ການອະນຸລັກ ແລະ ການນຳໃຊ້ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ

## 15. ກໍ່ສ້າງແຜນງານແຫ່ງຊາດ ໃຫ້ເຂັ້ມແຂງ

**218.ການຕີລາຄາ:** ບັນດາແຜນງານແຫ່ງຊາດ ແມ່ນພື້ນຖານ ຂອງວຽກງານ ດ້ານຊັບພະຍາກອນພັນທຸກຳ ພືດລະດັບ ພາກພື້ນ ແລະ ລະດັບໂລກ; ແຜນງານເລົ່ານີ້ຍັງ ແມ່ນ ພາຫະນະເພື່ອສົ່ງເສີມການຮ່ວມມືສາກົນ ເພື່ອ ເຂົ້າເຖິງຊັບພະຍາກອນ ພັນທຸກຳພືດ ແລະ ການແບ່ງປັນ ແບບຍຸດຕິທຳ ແລະສະເໝີພາບໃນຜົນປະໂຫຍດ ທີ່ໄດ້ຈາກ ການຊົມໃຊ້ ຊັບພະຍາກອນ ເລົ່ານັ້ນ. ແຜນງານແຫ່ງຊາດ ທີ່ມີປະສິດຕິຜົນ ຈະເຮັດໃຫ້ ເກີດ ການປະສານ ກັນລະຫວ່າງ ກິດຈະກຳພາຍໃນປະເທດ ກັບກິດຈະກຳ ໃນຂົງເຂດ ແລກໃນໂລກ. ຫຼາຍໆແຜນງານແຫ່ງຊາດທີ່ມີຢູ່ປັດຈຸບັນແມ່ນຂາດການວາງແຜນ ແລະ ການຄຸ້ມຄອງ ທີ່ເກີດຜົນ ແລະສະພາບດັ່ງກ່າວນັ້ນຍິ່ງຊຸດໂຊມ ຍ້ອນຂາດ ຊັບພະຍາກອນ ແລະ ຍ້ອນການມີ ກິດຈະກຳຕ່າງໆ ທີ່ບໍ່ໄດ້ປະສານກັນ, ຕ່າງດຳເນີນໄປພໍໃຜພໍລາວ.

219.ບັນດາປະເທດ ທີ່ຂາດ ແຜນງານ ແຫ່ງຊາດ ທີ່ເຂັ້ມແຂງນັ້ນ ແລະ ບໍ່ມີບ່ອນເກັບ ມ້ຽນໄລຍະຍາວນັ້ນ, ສວນຫຼາຍແມ່ນ ຊຸມປະເທດ ທີ່ມີບັນຫາທີ່ຮີບດ່ວນທີ່ສຸດ ດ້ານຄວາມໝັ້ນຄົງທາງອາຫານ. ນອກນັ້ນຊໍ້າມັກ ຈະເປັນປະເທດ ທີ່ມີຊັບພະຍາກອນ ພັນທຸກຳທີ່ ຫຼວງຫຼາຍ ແລະ ຫຼາກຫຼາຍໃນປະເພດໃນທົ່ງຂອງຊາວໄຮ່ນາ ແລະໃນທົ່ງທຳມະຊາດ. ນອກນັ້ນແລ້ວ ສະເພາະຢ່າງຍິ່ງໃນຊຸມປະເທດກຳລັງພັດທະນາ, ຄວາມສາມາດ ຂອງແຜນງານແຫ່ງຊາດ ຊຶ່ງມັກຈະຈຳກັດ ໃນ ການຕີລາຄາ, ນຳໃຊ້ ແລະ ການຍົກລະດັບ ເຕັກໂນໂລຊີ ເພື່ອການອະນຸລັກ ເພື່ອການກຳນົດຄູນລັກສະນະພິເສດຂອງແນວພັນ ແລະການນຳໃຊ້ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ແບບຍືນຍົງ - ທັງໝົດນັ້ນ ແມ່ນເຫດຜົນສຳຄັນ ອັນໜຶ່ງ ທີ່ນຳໄປສູ່ການ ບໍລິຫານ ແນວພັນທີ່ເກັບມາອະນຸລັກ ແບບຂາດ ປະສິດຕິພາບ ແລະ ເປັນປັດໃຈ ທີ່ ຈຳກັດໃຫ້ມີ ການນຳໃຊ້ໃນອານາຄົດ.

220.ບັນດາກິດຈະກຳກ່ຽວກັບ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ນັ້ນ ມັນພົວພັນ ເຖິງ ສະຖາບັນລັດ, ເອກະຊົນ ແລະບໍລິສັດ, ອົງການຈັດຕັ້ງບໍ່ສັງກັດລັດ, ຊຸມຊົນພ້ອມ ທັງບຸກຄົນຈາກຂະແໜງກະສິກຳ, ພະແນກການສິ່ງແວດລ້ອມ ແລະພັດທະນາ. ການປະສານລະ ຫວ່າງກິດຈະກຳ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ຊຶ່ງມີຢູ່ໃຫ້ຢູ່ໃຕ້ ກອບ ຂອງ ແຜນງານແຫ່ງຊາດ ແບບເອກະພາບ ກັນ ຈະຊ່ວຍສ້າງໂອກາດ ໃຫ້ໄດ້ເຮັດໃຫ້ມີ ຄວາມພະ ຍາຍາມທີ່ຫຼາກຫຼາຍພາຍໃນປະເທດໄດ້ຖືກເສີມຂະຫຍາຍ.

221.ແນວພັນທີ່ເກັບມາອະນຸລັກນອກ ຖິ່ນກຳເນີດ ແຫ່ງຊາດ ແມ່ນສ່ວນໜຶ່ງ ທີ່ແຍກອອກ ບໍ່ໄດ້ ຈາກ ບັນດາແຜນງານ ແຫ່ງຊາດ ດ້ານຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະ ການກະ ສິກຳ. ບໍ່ຄວນຖືວ່າທະນາຄານເຊື້ອພັນ ເປັນບ່ອນເກັບມ້ຽນ ທີ່ປິດລ້ອກໄວ້, ມັນຄວນເປັນສູນທີ່ມີຊີ ວິດ ຊີວາ. ການປະສານ ວຽກງານ ການອະນຸລັກ, ການກຳນົດຄູນລັກສະນະພິເສດຂອງ ແນວພັນ, ການປະເມີນຂໍ້ມູນ ແລະນຳໃຊ້ ມັນ ຈະອຳນວຍ ຄວາມສະດວກໃຫ້ແກ່ ການຍົກຄຸນຄ່າ ຂອງ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານແລະການກະສິກຳ ຂຶ້ນ. ການເໜັ້ນໜັກເກີນໄປເພື່ອອະ ນຸລັກ ທະນາຄານເຊື້ອພັນ ໃຫ້ໄດ້ຮັບ ການຄຸ້ມຄອງ ແບບ ລວມ ນັ້ນ ມັນຈະເຮັດໃຫ້ຫລົງລືມ ດ້ານ ການນຳໃຊ້ສິ່ງອຳນວຍ ຄວາມສະດວກ ເລົ່ານັ້ນ ອັນຈະນຳໄປສູ່ສະພາບໂດດດ່ຽວຣັດແຄບໂອກາດ ຈະໄດ້ ນຳໃຊ້ທະນາຄານ ເຊື້ອພັນ ເພື່ອຜົນ ປະໂຫຍດຂອງປະເທດ. ວຽກອະນຸລັກ ແລະປັບປຸງ ພັນ ພືດໃນບັນດາ ປະເທດກຳລັງພັດທະນາ ສ່ວນຫຼາຍແລ້ວແມ່ນສະຖາບັນຂອງລັດເປັນຜູ້ເຮັດ, ແຕ່ ຫາກວ່າມັນຂາດການປະສານງານ ທີ່ດີໃນແງ່ ປະຕິບັດການ ແລະ ສະຖາບັນລະຫວ່າງ ສອງ ໜ້າວຽກນັ້ນ. ນອກນັ້ນ ສ່ວນຫຼາຍກໍ ຂາດການກຳນົດ ເປົ້າໝາຍຢ່າງຈະແຈ້ງ. ຂາດການວາງແຜນ ແບບກວມລວມ ຄົບຊຸດ ແລະ ຂາດເປົ້າໝາຍໄດ້ຫຼຸດຜ່ອນການນຳໃຊ້ ຊັບພະຍາກອນທີ່ມີດ້ວຍຮູບ ການສົມເຫດສົມຜົນ ຊຶ່ງນຳໄປສູ່ການຂາດປະສິດຕິພາບ. ຫຼຸດຜ່ອນຜົນປະໂຫຍດ ແລະ ສູນເສຍ ກາລະໂອກາດ.

**222.ບັນດາຈຸດປະສົງໄລຍະຍາວ:** ເພື່ອກຳນົດໃຫ້ໄດ້ວ່າອັນໃດຄືຄວາມຮຽກຮ້ອງຕ້ອງການແຫ່ງ ຊາດ ແລ້ວ ຕອບສະໜອງສິ່ງນັ້ນ ໂດຍນຳໃຊ້ ແບບວິທີເຮັດວຽກ ທີ່ມີເຫດມີຜົນ, ຍືນຍົງ, ມີປະສິດຕິ ຜົນ ແລະ ສະເໝີພາບເພື່ອໃຊ້ໃນວຽກງານ ການອະນຸລັກ ແລະ ການນຳໃຊ້ ຊັບພະຍາກອນ ພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ ທັງໝົດແມ່ນ ເພື່ອຜົນປະໂຫຍດ ຂອງ ລູ້ນຄົນປັດຈຸ ບັນ ແລະອານາຄົດ.

223.ເພື່ອຮັບປະກັນໃຫ້ມີຄວາມສາມາດແຫ່ງຊາດ ດ້ານ ການ ອະນຸລັກ ແລະນຳໃຊ້ຊັບພະຍາ ກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ ທີ່ພຽງພໍ, ເພື່ອເຂົ້າຮ່ວມໃນຄວາມພະຍາຍາມ ຂອງຊາວໂລກ ແລະ ເພື່ອແບ່ງປັນຜົນປະໂຫຍດທີ່ໄດ້ມາຈາກການນຳໃຊ້ໃນ ວຽກງານ ດັ່ງກ່າວ.

**224.ບັນດາຈຸດປະສົງໄລຍະກາງ:** ເພື່ອຍົກສູງ ໃຫ້ບູລິມະສິດ ໃນການສ້າງ ປະຖົມປັດໃຈ ເພື່ອໃຫ້ມີແຜນງານແຫ່ງຊາດ ແບບປະສົມປະສານ ເຊັ່ນ ສະຖານະພາບແຫ່ງຊາດ ທີ່ຖືກຮັບຮູ້; ນະໂຍບາຍ ພ້ອມທັງ ຂອບວຽກສະຖາບັນ ທີ່ເໝາະສົມ ລວມທັງໃຫ້ມີ ບັນດາກົນໄກ ເພື່ອວາງແຜນ ແລະ ປະຕິບັດການ ແບບປະສົມປະສານ; ມີຍຸດທະສາດແຜນງານ; ມີຜົນປະໂຫຍດຈາກການໃຫ້ການຊ່ວຍເຫຼືອ . ໃນເມື່ອເຫັນວ່າເໝາະສົມ, ໃຫ້ຍົກລະດັບ ສິ່ງອຳນວຍ ຄວາມສະດວກສຳລັບ ການອະນຸລັກ ໃນລະດັບຊາດ ແລະຂົງເຂດ.

225.ເພື່ອປັບປຸງສາຍສຳພັນ ທາງສະຖາບັນ ແລະ ຂະແໜງການ ແລະເສີມຂະຫຍາຍ ການເຊື່ອມປະສານວຽກງານ ຂອງສະຖາບັນ ແລະຊຸມຊົນ.

226.ພັດທະນາຄວາມສາມາດແຫ່ງຊາດ ຂົງເຂດວິຊາການ, ການຄຸ້ມຄອງ ແລະ ດ້ານນະໂຍບາຍ.

**227.ນະໂຍບາຍ/ຍຸດທະສາດ:** ແຜນງານແຫ່ງຊາດ ຄວນມີຖານະທາງ ການ ທີ່ມີການຮັບຮູ້. ຄຸນຄ່າດ້ານນິເວດ, ເສດຖະກິດ, ສັງຄົມ ແລະ ຄວາມສວຍງາມຂອງ ຊັບພະຍາກອນພັນທຸກຳພືດເພື່ອອາຫານ ແລະ ການກະສິກຳ ຄວນເປັນສິ່ງທີ່ຖືກຮັບຮູ້ ໃນການວາງແຜນ ແລະໃນນະໂຍບາຍແຫ່ງຊາດ ແລະໃນການກຳນົດ ບູລິມະສິດ ແລະນຳໃຊ້ງົບປະມານ ແລະ ຊັບພະຍາກອນອື່ນໆ ລວມທັງນະໂຍບາຍໄມ້ງົດການເງິນ ເພື່ອຮັກສາ ພະນັກງານ ທີ່ມີຄວາມສາມາດ. ຄວນມີການອະນຸມັດ ງົບປະມານສະເພາະໃຫ້ແກ່ ບັນດາແຜນງານ ຊັບພະຍາກອນພັນທຸກຳ ພືດ ເພື່ອອາຫານ ແລະ ການກະສິກຳ ໃນເວລາທີ່ລັດຖະບານກາງ ຂຶ້ນແຜນງົບປະມານ.

228.ຄວາມຕັດສິນໃຈລະດັບຊາດ ເພື່ອສະໜອງທຶນແບບຍືນຍົງ ໃຫ້ແກ່ແຜນງານ ແລະໂຄງການແຫ່ງຊາດ ແມ່ນເປັນສິ່ງຈຳເປັນ; ເຖິງຢ່າງໃດກໍຕາມ ຕ້ອງເຂົ້າໃຈວ່າການສະໜັບສະໜູນຈາກຂົງເຂດ ແລະ ສາກົນນັ້ນ ເປັນພຽງແຕ່ ການສົມທົບຄວາມພະຍາຍາມ ພາຍໃນປະເທດເທົ່ານັ້ນ.

229.ແຜນງານ ແຫ່ງຊາດຕ່າງໆ ຄວນ ມີການພັດທະນາ ຄວາມສາມາດຕີລາຄາ ແລະກຳນົດວ່າສິ່ງໃດຄື ຊັບພະຍາກອນ ພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ ທີ່ຕ້ອງການ ເພື່ອ ຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ການອະນຸລັກ ແລະ ການພັດທະນາແຫ່ງຊາດ ກໍຄືເພື່ອ ຕອບສະໜອງພັນທະສາກົນ ທີ່ກ່ຽວຂ້ອງ ແລະ ຄວນມີນະໂຍບາຍ ຊ່ວຍຊູສະໜັບສະໜູນ ກ່ຽວກັບ ການອະນຸລັກ, ການເຂົ້າເຖິງ ແລະ ການນຳໃຊ້ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ. ແຜນງານແຫ່ງຊາດ, ເທົ່າ ທີ່ເຫັນວ່າເໝາະສົມ ຄວນສະໜອງ ໃຫ້ ກ້ວາງຂວາງທີ່ສຸດ ຕົວແທນແນວພັນທີ່ເກັບຂອງຊັບພະຍາກອນພັນທຸກຳພືດເພື່ອອາຫານ

ແລະການກະສິກຳ ເພື່ອຈະໄດ້ຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ຂອງຊາວໄຮ່ນາແລະ ເພື່ອຈະໄດ້ປັບປຸງແນວພັນທ້ອງຖິ່ນ. ບັນດາລັດຖະບານໂດຍການຮ່ວມມືຂອງບັນດາສະຖາບັນ ແຫ່ງຊາດ, ຂົງເຂດ ແລະສາກົນຄວນຕິດຕາມ ການພັດທະນາເຕັກໂນໂລຊີໃໝ່ ເໝາະສົມສຳລັບວຽກອະນຸລັກ, ກຳນົດຄູນລັກສະນະພິເສດ ແລະອື່ນໆ ທີ່ພົວພັນ ກັບການນຳເຂົ້າ ແລະ ສົ່ງອອກວັດຖຸພັນທຸກຳພືດ ຊຶ່ງໃຫ້ການປົກປ້ອງ ຢ່າງພຽງພໍ ໂດຍທີ່ບໍ່ຕ້ອງຈຳກັດ ການຖ່າຍທອດ ວັດຖຸພັນຢ່າງເໝາະສົມ.

230.ເທົ່າທີ່ເໝາະສົມກັບລະດັບການພັດທະນາ ແລະຄວາມສະຫຼັບສັບຊ້ອນຂອງໜ້າວຽກຂອງບັນດາສະຖາບັນ, ແຜນງານແຫ່ງຊາດ ຄວນສົ່ງເສີມ ຫຼືເຮັດໃຫ້ເກີດ ການປະສານງານກັນລະຫວ່າງຊຸມສະຖາບັນ ແລະອົງການຈັດຕັ້ງ ພາຍໃນປະເທດ ແລະ ສ້າງສາຍຕິດຕໍ່ ລະຫວ່າງກິດຈະກຳແຫ່ງຊາດ ກັບກິດຈະກຳໃນຂົງເຂດ ແລະສາກົນ. ຍຸດທະສາດແບບປະສົມປະສານຄົບວົງຈອນລະດັບຊາດ ສາມາດແກ້ໄຂ ຫຼາຍກວ່າບັນຫາກ່ຽວກັບ ການປະຕິບັດການຂອງ ທະນາ ຄານເຊື້ອພັນ. ຍຸດທະສາດເລົ່ານີ້ຄວນກວມເອົາວຽກງານ ການອະນຸລັກ,ການ ພັດທະນາ ແລະ ການນຳໃຊ້ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ ແລະການເຊື່ອມຕໍ່ລະຫວ່າງ ຂະແໜງການເລົ່ານີ້. ການສ້າງຕັ້ງຄະນະກຳມະການແຫ່ງຊາດ ທີ່ສະມາຊິກມາຈາກຫຼາຍໆພາກສ່ວນເປັນປັດໃຈສຳຄັນ ເພື່ອຈັດຕັ້ງ ແລະປະສານວຽກງານ.

231.ໂຄງຮ່າງ ແລະການຈັດຕັ້ງ ຕົວຈິງຂອງແຜນງານແຫ່ງຊາດ, ຈະຂຶ້ນກັບລະບົບ ໂຄງລ່າງ ແລະຄວາມສາມາດຕ່າງໆ ທີ່ມີໃນ ປະເທດກ່ຽວຂ້ອງ; ການຕັດສິນ ໃນເລື່ອງ ນະໂຍບາຍຈະເປັນສິ່ງຕັດສິນ ເລື່ອງຍຸດທະສາດ ຂອງແຜນງານ ແລະ ຮູບແບບ ວິທີປະຕິບັດ, ສະເພາະຢ່າງຍິ່ງສິ່ງ ທີ່ມີຕໍ່ການຮ່ວມມືກັບສາກົນ. ໃນບັນດາປະເທດ ທີ່ຄວາມສາມາດຈຳກັດ, ຍຸດທະສາດອາດເວົ້າເຖິງການນຳໃຊ້ສິ່ງອຳນວຍຄວາມສະດວກ ໃນທາງວັດຖຸ ແລະ ຄວາມຊຳນານໃນ ດ້ານວິຊາການ ຂອງແຜນງານ ແຫ່ງຊາດ ອື່ນໆ ຫຼືສະຖາບັນສາກົນອື່ນໆ.

232.ແຜນງານຕ່າງໆ ທີ່ມີຢູ່ປັດຈຸບັນ ອາດພິຈາລະນາ ກໍ່ສ້າງສາຍສຳພັນ ຄູ່ຮ່ວມງານທີ່ແຂງແຮງກວ່າກັບ ບັນດາບໍລິສັດເອກະຊົນ, ອົງການຈັດຕັ້ງບໍ່ສັງກັດລັດ, ຊຸມຊົນ ຊົນນະບົດ ແລະພື້ນເມືອງ. ຄວນກໍ່ສ້າງສາຍພົວພັນ ກັບບັນດາຂະແໜງການ ເຊັ່ນ ຂະແໜງທີ່ເຮັດວຽກໃນການວາງແຜນແຫ່ງຊາດ ແລະແຜນງານອື່ນໆ ກ່ຽວຂ້ອງກັບກະສິກຳ, ປະຕິຮູບທີ່ດິນ ແລະການປົກປ້ອງສິ່ງແວດລ້ອມ.

233.ເທົ່າທີ່ເຫັນສົມຄວນ, ຄວນສົ່ງເສີມໃຫ້ມີການຕິດຕໍ່ພົວພັນລະຫວ່າງບັນດາສະຖາບັນ ແລະການຈັດຕັ້ງ ທີ່ມີຄວາມຊ່ຽວຊານ ທາງຖ່າຍທອດເຕັກໂນໂລຊີ, ທັງນີ້ກໍເພື່ອ ຊ່ວຍສະຖາບັນແຫ່ງຊາດຕ່າງໆ ໃນການຕໍ່ລອງ ຂໍຄວາມຮູ້ເຕັກໂນໂລຊີ ສຳລັບວຽກງານ ການອະນຸລັກ, ກຳນົດຄູນລັກສະນະພິເສດ, ແລະ ການນຳໃຊ້ແບບຍືນຍົງ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ

ແລະ ການກະສິກຳ ແລະການປຸງແຕ່ງຂໍ້ມູນທີ່ກ່ຽວຂ້ອງນັ້ນ, ໂດຍຈະເອົາໃຈໃສ່ເລື່ອງໃຫ້ມີເງື່ອນໄຂ ເພື່ອ ຮັບປະກັນ ຄວາມຍຸດຕິທຳ ແລະໃຫ້ຜົນດີສຸດ ຊຶ່ງລວມທັງ ຂໍ້ຄວາມເງື່ອນໄຂ ທີ່ຜ່ອນຜັນ ແລະ ໃຫ້ສິດທິ ພິເສດ ເທົ່າ ທີ່ຕ່າງຝ່າຍຂອງ ການຕໍ່ລອງຈະຕົກລົງນຳກັນ. ໃນກໍລະນີ ເຕັກໂນໂລຊີໂດຍ ຄຳນຶງ ເຖິງເລື່ອງສິດທິບັດ ແລະບັນຫາສິດ ທິຕໍ່ຊັບສິນທາງປັນຍາ, ຄວນໃຫ້ສາມາດເຂົ້າເຖິງ ແລະ ຖ່າຍທອດເຕັກໂນໂລຊີໃຕ້ເງື່ອນໄຂ ທີ່ຮັບຮູ້ ແລະ ຍຶດໝັ້ນ ຕໍ່ບັນຫາປົກປ້ອງສິດຊັບສິນທາງ ປັນຍາ ຢ່າງພຽງພໍ ແລະມີປະສິດຕິຜົນ.

**234.ຄວາມສາມາດ:** ບ່ອນທີ່ເຫັນເໝາະສົມ, ເມື່ອໃດຫາກມີການຂໍຮ້ອງ, ຄວນໃຫ້ການສະໜັບ ສະໜູນເພື່ອອຳນວຍຄວາມສະດວກແກ່ການວາງແຜນແຫ່ງຊາດແບບປົກກະຕິ ແລະການກຳນົດບູ ລິມະສິດ. ຄວນໃຫ້ບູລິມະສິດສູງໃນວຽກງານຕີລາຄາ ແລະປັບປຸງວຽກງານ ການ ຄຸ້ມຄອງໃນສະ ຖາບັນ ເຊັ່ນ ທະນາຄານ ເຊື້ອພັນ ແລະໜ່ວຍງານຄົ້ນຄ້ວາ.

235.ມາດຕະການອື່ນໆ ທີ່ຕ້ອງການ ເພື່ອ ພັດທະນາ ແຜນງານຕ່າງໆແຫ່ງຊາດ ແບບມີປະສິດຕິ ຜົນ ນັ້ນ ຈະເຫັນຢູ່ໃນຂໍ້ສະເໜີພົວພັນ ກັບກິດຈະກຳອື່ນໆ.

236.ກິດຈະກຳຄົ້ນຄ້ວາໃນແຜນງານແຫ່ງຊາດ ໂດຍທົ່ວໄປແມ່ນສຸມໃສ່ການຄົ້ນຄ້ວາ ທາງວິທະຍາ ສາດ ແລະ ວິຊາການເທົ່ານັ້ນ ຊຶ່ງໄດ້ເວົ້າເຖິງໃຕ້ຂົງເຂດກິດຈະກຳອື່ນໆ. ແຕ່ຍັງມີຄວາມຕ້ອງການ ຄົ້ນຄ້ວາ ກ່ຽວກັບພາລະ ແລະ ການບໍລິຫານຄຸ້ມຄອງ ແຜນງານແຫ່ງຊາດ ຕ່າງໆ ດ້ານ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ລວມທັງຄວາມຕ້ອງການທົດສອບ ເບິ່ງກອບງານ ຂອງສະຖາບັນ; ການຄົ້ນຄ້ວາກ່ຽວກັບ ການປະເມີນຕີລາຄາ ການນຳໃຊ້ ແລະ ປະ ສິດຕິພາບ ຂອງວິທີການ ຕອບໂຕ້ຕ່າງໆ; ຄົ້ນຄ້ວາດ້ານບໍລິຫານຄຸ້ມຄອງຖານຂໍ້ມູນ ແລະ ດ້ານປະ ສິດຕິພາບ ທາງເສດຖະກິດຂອງແຕ່ ລະແບບວິທີເຮັດວຽກດ້ານການອະນຸລັກ.

237.ບາງນະໂຍບາຍ, ປະເດັນບັນຫາຕ່າງໆດ້ານກົດໝາຍ ແລະສະຖາບັນ, ນອກຈາກສິ່ງອື່ນໆ, ຈຳພວກທີ່ພົວພັນ ກັບການຖືກຳມະສິດ, ຊັບສິນທາງປັນຍາ, ການແລກປ່ຽນ, ຖ່າຍທອດ ແລະຄ້າ ຊັບພະຍາກອນພັນທຸກຳພືດ, ທັງໝົດນັ້ນກຳລັງເປັນບັນຫານັບມື້ເພີ່ມທະວີ ຊຶ່ງແຜນງານແຫ່ງຊາດ ພວມປະສົບຢູ່. ການປະສານງານໃນບັນດາແຜນງານແຫ່ງຊາດແມ່ນຈຳເປັນ ເພື່ອຈະໄດ້ຂໍ້ມູນຂ່າວ ສານ ກ່ຽວກັບ ປະເດັນບັນຫາເລົ່ານີ້, ທັງນີ້ກໍເພື່ອຈະໄດ້ຕີລາຄາ ຜົນກະທົບຂອງການພັດທະນາ ສາ ກົນໃນຂົງເຂດຕ່າງໆ ເລົ່ານີ້ ທີ່ມີຕໍ່ວຽກອະນຸລັກ ແລະແລກປ່ຽນຊັບພະຍາກອນພັນທຸກຳພືດ, ແລະ ເພື່ອຈະໄດ້ນຳເອົາການພັດທະນາການຄົ້ນຄ້ວາໃໝ່ ສອດເຂົ້າໃນລະບົບ ແຫ່ງຊາດ ແລະ ການປະ ຕິບັດຕົວຈິງ ເທົ່າທີ່ເຫັນວ່າເໝາະສົມ.

**238.ການປະສານງານ/ຄຸ້ມຄອງ:** ປະຕິບັດບັນດາກົນໄກປະສານງານພາຍໃນປະເທດແນໃສ່ຮັບປະກັນໃຫ້ການກຳນົດບູລິມະສິດມີປະສິດຕິຜົນທີ່ສຸດ ເພື່ອຈະພິຈາລະນາໃນການນຳໃຊ້ທຶນ ແລະ ຊັບພະຍາກອນອື່ນໆ. ລັດຖະບານທັງຫຼາຍຄວນທົບທວນເບິ່ງນະໂຍບາຍຂອງຕົນເປັນໄລຍະໆ ເພື່ອປະເມີນເບິ່ງປະສິດຕິຜົນປະຕິບັດ ການ ແບບປະສານສົມທົບ ແລະມີບູລິມະສິດລະດັບຊາດຄວນໄປຄຽງຄູ່ ແລະຊ່ວຍຊູດ້ວຍລະບົບສາກົນ ຊຶ່ງໄດ້ມີການປະສານສົມທົບ ແລະກຳນົດບູລິມະສິດເຊັ່ນດຽວ. ການປະສານຮ່ວມມືສາກົນ ແມ່ນຄວາມຈຳເປັນໃນໂລກ ທີ່ຊຸມປະເທດຕ່າງກໍເພິ່ງພາອາໃສກັນ ແລະໃນເມື່ອ ວ່າບັນດາປະເທດ ຢາກສ້າງແບບວິທີເຮັດວຽກທີ່ໃຊ້ໄດ້ໃນພາກປະຕິບັດ. ສົມເຫດສົມຜົນແລະເສດຖະກິດເພື່ອຈະໄດ້ອະນຸລັກຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານ ແລະການກະສິກຳ, ເສີມຂະຫຍາຍ ຄຸນປະໂຫຍດດ້ານການນຳໃຊ້, ສົ່ງເສີມໃຫ້ມີການເຂົ້າເຖິງ ແລະເພື່ອແບ່ງປັນຜົນປະໂຫຍດນຳກັນ.

239.ຕາໜ່າງ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ແລະກອງປະຊຸມສາກົນ (ນອກຈາກອື່ນໆ ແລ້ວກໍມີກຳມາທິການ ອົງການອາຫານ ແລະການກະເສດ ຊັບພະຍາກອນພັນທຸກຳເພື່ອອາຫານ ແລະກະເສດ, ກອງປະຊຸມບັນດາພາຄີຂອງສົນທິສັນຍາຊີວະນາໆພັນ, ແຜນງານ ດ້ານສິ່ງແວບລ້ອມ,ແຜນງານ ການພັດທະນາ ຂອງອົງການສະຫະປະຊາຊາດ, ອົງການດ້ານການສຶກສາ,ວິທະຍາສາດສັງຄົມ ຂອງ ສະຫະປະຊາຊາດ, ແລະ ຄະນະ ກຳມາທິການ ເພື່ອການ ພັດທະນາ ສະໜອງກົນໄກເປັນປະໂຫຍດຕ່າງໆ ຊຶ່ງບັນດາປະເທດ ສາມາດປະສານ ບັນດາກິດຈະກຳ ແລະ ພ້ອມກັນຕົກລົງ ກ່ຽວກັບ ນະໂຍບາຍ ຊຶ່ງເປັນ ເອກະພາບ ນຳກັນ, ແລ້ວ ແຕ່ຄວາມເໝາະສົມ.

**240.ກິດຈະກຳນີ້ແມ່ນພົວພັນໃກ້ຊິດກັບ:**

- ກິດຈະກຳອື່ນໆ ທັງຫຼາຍ

## 16. ສົ່ງເສີມຕາໜ່າງ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ

**241.ການຕີລາຄາ:** ຕາໜ່າງແມ່ນຈຸດສຳຄັນໆ ເພື່ອໃຫ້ມີການແລກປ່ຽນດ້ານວິທະຍາສາດ, ການແບ່ງປັນຂໍ້ມູນຂ່າວສານການຖ່າຍທອດເຕັກໂນໂລຊີ, ການປະສານງານດ້ານຄົ້ນຄ້ວາ, ແລະເພື່ອກຳນົດ ແລະແບ່ງປັນຄວາມຮັບຜິດຊອບຕ່າງໆ ສຳລັບກິດຈະກຳ ເຊັ່ນ ວຽກງານ ການ ເກັບຕົວຢ່າງແນວພັນ, ການອານຸລັກ, ການແຈກຢາຍ,ການປະເມີນຕີລາຄາ ແລະ ການສົ່ງເສີມທາງກ້ວາງ ດ້ານພັນທຸກຳ. ຜ່ານການສ້າງຕັ້ງສາຍພົວພັນຕິດຕໍ່ກັນລະຫວ່າງພາກສ່ວນເຮັດວຽກອະນຸລັກ, ຄຸ້ມຄອງ, ພັດທະນາ ແລະນຳໃຊ້ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະການກະສິກຳ, ຕາໜ່າງຕ່າງໆ ສາມາດສົ່ງເສີມໃຫ້ມີການແລກປ່ຽນວັດຖຸພັນ ໂດຍອີງຕາມເງື່ອນໄຂທີ່ຕ່າງຝ່າຍຕ່າງໄດ້ຕົກລົງ ແລະເສີມຂະຫຍາຍການນຳໃຊ້ ແນວພັນພືດ. ນອກຈາກນັ້ນແລ້ວ ກໍສາມາດນຳໃຊ້ມັນເພື່ອຊ່ວຍໃນການກຳນົດວຽກງານໃດໜຶ່ງ; ພັດທະນານະໂຍບາຍ, ແລະ

ສະໜອງວິທີການຕ່າງໆ ຊຶ່ງແນວຄວາມຄິດດ້ານພືດສະເພາະ ຊະນິດແນວພັນ ແລະ ແນວຄິດຂອງ ຂົງເຂດ ສາມາດໄປຮອດໄປເຖິງ ອົງການຈັດຕັ້ງ ແລະສະຖາບັນຕ່າງໆໄດ້.

242.ປັດຈຸບັນຍັງມີຕາໜ່າງພາກພື້ນ ຂົງເຂດທີ່ອີງໃສ່ພືດເປັນຫຼັກຈຳນວນນຶ່ງ ຊຶ່ງດຳເນີນການຢູ່. ແຕ່ກໍມີຈຳນວນນຶ່ງອີກ, ສະເພາະຢ່າງຍິ່ງຕາໜ່າງພືດ ບາງຢ່າງ, ແມ່ນບໍ່ສາມາດເຮັດວຽກໄດ້ແບບ ເຕັມສ່ວນ. ຕາໜ່າງດັ່ງກ່າວນີ້ຕ້ອງ ການໃຫ້ມີຄວາມເຂັ້ມແຂງ. ຕາໜ່າງໃໝ່ໆຈຳນວນນຶ່ງຊຳ້ຈຳ ຕ້ອງມີການຈັດຕັ້ງຄັກແນ່ ເພື່ອຮັບປະກັນໃຫ້ໄດ້ຮັບຜົນປະໂຫຍດລວມຈາກ ການມີຕາໜ່າງໃນຂົງ ເຂດ ທີ່ຍັງປະຕິບັດໜ້າທີ່ກວມເອົາພືດ/ຕົ້ນໄມ ທີ່ມີຄວາມສຳຄັນ ສຳລັບຂົງເຂດ. ການເຂົ້າຮ່ວມ ຂອງບັນດາປະເທດ ຊຶ່ງມີຄວາມສາມາດ ລະດັບາດ ຈຳກັດໃນດ້ານ ຊັບພະຍາ ກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ (ຊຶ່ງນອກຈາກອື່ນໆ ແລ້ວກໍມີບັນດາປະເທດ ທີ່ພັດທະນາ ໜ້ອຍທີ່ ສຸດ ແລະບັນດາລັດທີ່ເປັນເກາະດອນນ້ອຍ) ມີຄວາມສຳຄັນພິເສດຍ້ອນວ່າປະເທດເລົ່ານີ້ ຈະສາ ມາດເຂົ້າເຖິງຂໍ້ມູນຂ່າວສານ, ເຕັກ ໂນໂລຊີ ແລະວັດຖຸພັນ.

**243ບັນດາຈຸດປະສົງໄລຍະຍາວ:** ເພື່ອຮັບປະກັນວ່າທຸກໆປະເທດຈະໄດ້ຮັບຜົນປະໂຫຍດຈາກຕາ ໜ່າງຂົງເຂດ ແລະສາກົນທີ່ເອົາການເອົາງານ ແລະ ກາຍເປັນຕາໜ່າງ ພືດ ລັກສະນະ ຫົວຂໍ້ ສະ ເພາະໃນການອະນຸລັກ ໃນຖິ່ນກຳເນີດ ທີ່ເໝາະສົມສາມາດ ຊ່ວຍຊູກັນໄດ້.

244.ໂດຍຖືວ່າມັນເປັນບູລິມະສິດສູງອັນນຶ່ງ, ຈະຕ້ອງສົ່ງເສີມການປະສານງານ, ການວາງແຜນ ແລະ ການກຳນົດບູລິມະສິດ ໃນລະດັບຂົງເຂດ ເພື່ອຫຼີກລ້ຽງວຽກແບບຊຳ້ຊ້ອນ, ເພື່ອເສີມຂະ ຫຍາຍ ແລະ ເຮັດໃຫ້ວຽກງານ ຊັບພະຍາກອນ ພັນທຸກຳພືດ ເພື່ອອາຫານແລະການກະສິກຳ ໃນ ປັດຈຸບັນ ມີປະສິດຕິພາບກວ່າເກົ່າ,ແນໃສ່ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນວຽກງານອະນຸລັກ ແລະ ການນຳໃຊ້.

245.ເພື່ອອຳນວຍຄວາມສະດວກໃຫ້ແກ່ການກຳນົດບັນດາເປົ້າໝາຍ ແລະບູລິມະສິດຂອງຂົງເຂດ ແລະເພື່ອຄວາມສະດວກໃນການປະຕິບັດວຽກດັ່ງກ່າວ ໂດຍຜ່ານບັນດາສະຖາບັນແຫ່ງຊາດ ແລະ ຂົງເຂດທີ່ມີຢູ່ປັດຈຸບັນ.

246.ເພື່ອອຳນວຍຄວາມສະດວກໃຫ້ແກ່ການພິຈາລະນາຮັບເອົາວິທີການຕ່າງໆ ຄຳນຶງເຖິງບັນຫາ ນິເວດໃນຂົງເຂດແບບປະສົມປະສານສຳລັບການອະນຸລັກ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ ລວມທັງ ສາຍພັນພືດປ່າ.

**247.ບັນດາຈຸດປະສົງໄລຍະກາງ:** ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຕາໜ່າງຂົງເຂດສະ ເພາະ ດ້ານຫົວຂໍ້ ໃນຂົງເຂດທີ່ມີຢູ່.

248.ເພື່ອກໍ່ສ້າງບັນດາຕາໜ່າງຂົງເຂດທີ່ໃຊ້ງານໄດ້ ແຕ່ບໍ່ໄດ້ກວມເອົາວຽກດັ່ງກ່າວ ເພື່ອກໍ່ສ້າງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ 5-15 ຕາໜ່າງສາກົນ ສະເພາະດ້ານພືດ, ລວມທັງຕາໜ່າງການອະນຸລັກ ໃນຖິ່ນກຳເນີດ ຊຶ່ງມີລັກສະນະ ເປີດກ້ວາງ, ເປີດໃຫ້ທຸກໆປະເທດ.

249.ເພື່ອອຳນວຍຄວາມສະດວກ ແລະສົ່ງເສີມໃຫ້ປະເທດຕ່າງໆເຂົ້າຮ່ວມ.

**250.ນະໂຍບາຍ/ຍຸດທະສາດ:** ໂດຍໃຫ້ຖືວ່າເປັນນະໂຍບາຍ, ລັດຖະບານທັງຫຼາຍຄວນສະໜັບສະໜູນ ການເຂົ້າຮ່ວມຢ່າງຕັ້ງໜ້າຂອງບັນດາສະຖາບັນລັດ ແລະເອກະຊົນໃນຕາໜ່າງ ຫົວຂໍ້ ພືດໃນຂົງເຂດ. ຄ່າໃຊ້ຈ່າຍ ຂອງຕາໜ່າງດັ່ງກ່າວ ຈະແມ່ນອີງການເຂົ້າຮ່ວມເປັນຜູ້ປະກອບໃຫ້ຕາມຄວາມສາມາດຂອງຕົນ ພ້ອມກັນນັ້ນ ທາງລັດຖະບານ ແລະແຫຼ່ງອື່ນໆກໍຈະປະກອບໃຫ້ຕາມຄວາມເໝາະສົມ. ການເຂົ້າຮ່ວມ ຄວນຖືວ່າ ເປັນຜົນປະໂຫຍດ ສຳລັບປະເທດ ແລະ ເປັນວິທີການລວມພະລັງ ຄວາມພະຍາຍາມລະຫວ່າງຊຸມປະເທດ ທີ່ປະເຊີນໜ້າກັບສິ່ງທ້າທາຍຄ້າຍຄືກັນ ແລະເປັນການສົ່ງເສີມໃຫ້ມີ ການແບ່ງປັນຜົນປະໂຫຍດໃຫ້ຊຸມປະເທດ ນຳກັນ. ການປະກອບສ່ວນ ຂອງລັດຖະບານແກ່ຕາໜ່າງ ຕ່າງໆ ໃນຮູບເງິນ ແລະວັດຖຸ ຄວນຖືວ່າໃຊ້ໄດ້ ຖືວ່າໄດ້ເຮັດຫຼ້ອນພັນທະຕົນ ພ້ອມທັງຖືວ່າໄດ້ປະກອບ ແກ່ການປະຕິບັດແຜນດຳ ເນີນງານໂລກ. ບັນດາປະເທດຄວນທຳການກວດກາ ເບິ່ງຄວາມເໝາະສົມ ການປະຕິບັດກິດຈະກຳຕ່າງໆພາຍໃຕ້ການອຸປະຖຳຂອງຕາໜ່າງ ຊັບພະຍາກອນ ພັນທຸກຳພືດເພື່ອອາຫານແລະການກະສິກຳ.

251.ບັນດາລັດຖະບານ, ສະຖາບັນຄົ້ນຄ້ວາແຫ່ງຊາດ, ສູນຄົ້ນຄ້ວາກະສິກຳສາກົນ, ສະເພາະຢ່າງຍິ່ງ ສະຖາບັນ ນານາຊາດ ດ້ານຊັບພະຍາກອນ ພັນທຸກຳພືດ ແລະ / ຫຼືອົງການຈັດຕັ້ງວິທະຍາສາດ ລົງເລິກພືດສະເພາະອາດ ຮຽກປະຊຸມບັນດາ ຕາໜ່າງທີ່ມີຢູ່ປັດຈຸບັນ ແລະ/ຫຼືຕາໜ່າງໃໝ່ ຫຼືລົງເລິກສະເພາະຫົວຂໍ້/thematic ແລະ/ຫຼືບໍ່ກໍອຳນວຍຄວາມສະດວກໃຫ້ແກ່ສະຖາບັນເຫຼົ່ານີ້. ບັນດາຕາໜ່າງ ອາດຮ່ວມມືກັນ ຢ່າງໃກ້ຊິດ, ໂດຍຈະໃຫ້ການແນະນຳ ຕາມຄວາມເໝາະສົມໃຫ້ແກ່ບັນດາ ສູນຄົ້ນຄ້ວາກະສິກຳສາກົນ ແລະ ສະຖາບັນໃນຂົງເຂດ ທັງນີ້ແມ່ນເພື່ອຮັບປະກັນໃຫ້ມີການສື່ສານ ພົວພັນໃນລະດັບສູງກວ່າເກົ່າ ແລະ ເພື່ອໃຫ້ມີຄວາມຮັບຜິດຊອບ ແລະຜົນໄດ້ລວມຍອດ.

252.ບັນດາຕາໜ່າງຄວນຊອກຮູ້ໃຫ້ໄດ້ກາລະໂອກາດທີ່ເໝາະ ເພື່ອເຮັດວຽກກັບອົງການບໍ່ສັງກັດລັດ ແລະພັດທະນາກິດຈະກຳເປັນຮູບປະທຳ ສະເພາະຢ່າງຍິ່ງໃນຂົງເຂດການອົບຮົມ, ການເຂົ້າເຖິງວັດຖຸພັນປັບປຸງພັນ, ການປະສານງານ ກິດຈະກຳທ້ອງຖິ່ນ, ວຽກງານຂ່າວສານ ແລະສ້າງຈິດສຳນຶກ ໃຫ້ຊຸມຊົນ.

**253.ຄວາມສາມາດ:** ການສ້າງຕາໜ່າງມັນຮຽກຮ້ອງບໍ່ພຽງແຕ່ຄວາມຊຳນານດ້ານເຕັກນິກ, ແຕ່ຕ້ອງມີທັກສະຫຼາຍ ສົມຄວນໃນທາງສື່ສານ ແລະການຈັດຕັ້ງ. ກ່ອນອື່ນໝົດມັນແມ່ນບັນຫາທາງການຈັດການ, ການປະສານ ແລະອຳນວຍຄວາມສະດວກ. ຄວນກຳນົດ ຊັບພະຍາກອນໃຫ້ແກ່ ກິດຈະກຳຕ່າງໆ ເຊັ່ນ: ການສື່ສານຕິດຕໍ່, ລວມທັງຄ່າເດີນທາງ, ຈັດກອງປະຊຸມ, ການພິມເຜີຍແຜ່ຂອງຕາໜ່າງ ເຊັ່ນ ພິມໃບຂ່າວ ແລະບົດລາຍງານກອງປະຊຸມ; ການບໍລະການ ແລະສ້າງຄວາມເຂັ້ມແຂງໃຫ້ແກ່ຕາໜ່າງ.

254.ສຳລັບຕາໜ່າງ ໃນຂົງເຂດ, ຄວນໃຫ້ບູລິມະສິດແກ່ວຽກສ້າງຄວາມເຂັ້ມແຂງໃຫ້ແກ່ຕາໜ່າງທີ່ມີຢູ່ ຫຼືລວມເອົາບັນດາປະເທດ ຊຶ່ງປັດຈຸບັນບໍ່ໄດ້ຮັບບໍລິການ, ແລ້ວສ້າງຕັ້ງຕາໜ່າງໃໝ່ໃນຂົງເຂດຂ້າງລຸ່ມນີ້:

(ກ) ປາຊີຟິກ
(ຂ) ທະເລ ຄາຣິມບຽນ
(ຄ) ບັນດາລັດ CIS ໃນອາຊີກາງ
(ງ) ອາຟຣິກາຕາເວັນຕົກ ແລະກາງ
(ຈ) ອາຟຣິກາຕາເວັນອອກ
(ສ) ໝູ່ດອນມະຫາສະໝຸດ ອິນເດຍ
(ຊ) ທະເລດຳ, ຫຼື ໂຄກົສ ແລະຂົງເຂດອື່ນໆ, ເມື່ອເຫັນຈຳເປັນ.

**255.ການຄົ້ນຄ້ວາ/ເຕັກໂນໂລຊີ:** ຕາໜ່າງສະໜອງ ພາຫະນະ ເພື່ອປະຕິບັດ ການຄົ້ນຄ້ວາແບບມີການປະສານງານ ກັນໃນຂົງເຂດບູລິມະສິດຕ່າງໆ ທີ່ພ້ອມກັນເຫັນດີ. ເທົ່າທີ່ເຫັນວ່າເໝາະສົມ ແລະເປັນໄປໄດ້, ຄວນວາງແຜນ ແລະ/ຫຼືປະຕິບັດການຄົ້ນຄ້ວາ, ຝຶກອົບຮົມ ແລະຖ່າຍທອດ ເຕັກໂນໂລຊີ ໃນການປະສານສົມທົບ ໃນຕາໜ່າງນັ້ນ.

**256.ການປະສານງານ/ຄຸ້ມຄອງ:** ຄວນມີຊັບພະຍາກອນເພື່ອສືບຕໍ່ໃຫ້ບັນດາຕາໜ່າງທີ່ມີຢູ່ ດັ່ງທີ່ເຫັນວ່າເໝາະສົມ ພ້ອມທັງຈັດຕັ້ງ ແລະອຳນວຍຄວາມສະດວກ ແກ່ການພັດທະນາ ບັນດາຕາໜ່າງໃໝ່ໃນ ຂົງເຂດ ແລະຕາໜ່າງ ພົດທີ່ເປັນພື້ນຖານ.

**257.ກິດຈະກຳນີ້ແມ່ນພົວພັນໃກ້ຊິດກັບ:**

- ກິດຈະກຳອື່ນໆທັງໝົດ.

## 17.ກໍ່ສ້າງບັນດາລະບົບຂໍ້ມູນຂ່າວສານຄົບຊຸດດ້ານ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ

**258.ການຕີລາຄາ:** ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ຫຼາຍໆຢ່າງໃນໂລກແມ່ນບໍ່ພຽງພໍ ແລະ/ຫຼື ໄດ້ຖືກບັນທຶກໄວ້ເອກະສານແບບບໍ່ຄ່ອຍດີພໍ ເມື່ອທຽບໃສ່ຕົວຈິງທີ່ເຮົາຄວນຈະຮູ້ ເພື່ອຜົນສຳເລັດສູງສຸດໃນ ດ້ານວຽກ ການອະນຸລັກ, ການເຂົ້າເຖິງ ແລະນຳໃຊ້ການບັນທຶກກ່ຽວກັບ ສາຍພັນພືດປ່າ ແລະເລື່ອງຊັບພະຍາກອນພັນທຸກຳ ທີ່ຟາມພົບພໍ້ຢູ່ ການອະນຸລັກໃນຖິ່ນກຳເນີດ ແມ່ນໄດ້ມີການເກັບກຳກໍ່ຍິ່ງໄດ້ຖືກບັນທຶກແບບບໍ່ໄດ້ເລື້ອງທີ່ສຸດ. ສຳລັບ ການເກັບຕົວຢ່າງພືດ ນອກຖິ່ນກຳເນີດ, ຂໍ້ຄວາມພື້ນຖານ ເຊັ່ນ ໝາຍເລກ ຕົວຢ່າງແນວພັນ, ຊື່ ການຈັດສັນ ປະເພດແນວພັນ ຈາກບ່ອນເອົາວັດຖຸພັນມາ ແລະໄດ້ມາແນວໃດ, ຂໍ້ຄວາມອະທິບາຍ ຄຸນລັກສະນະພື້ນຖານ ໂດຍອີງໃສ່ ຮູບຮ່າງພາຍນອກຂອງພືດ ແລະຄຸນລັກສະນະ ດ້ານກະເສດ; ຜົນໄດ້ຈາກການທົດລອງ ການຈະເລີນເຕີບໂຕຂອງພືດ ໃນປັດຈຸບັນ; ຮອບການປູກຟື້ນຊີບ; ບ່ອນທີ່ ເຮັດ ການແຈກຢາຍວັດຖຸພັນ; ແລະຂໍ້ມູນສຳຄັນ ກ່ຽວຂ້ອງດ້ານພືດ ແລະ ການໃຊ້ແນວພັນໃນບາງສັງຄົມ, ຄວາມຮູ້ຂອງຊາວໄຮ່ນາ ແລະຊາວພື້ນເມືອງ, ຂໍ້ມູນທັງໝົດເຫຼົ່ານີ້ຍັງຖືກຮັກສາໄວ້ຢູ່ນຳວັດຖຸພັນທີ່ໄດ້ອະນຸລັກ. ທະນາຄານເຊື້ອພັນ ຫຼືແຜນງານ ອະນຸລັກ ນອກຖິ່ນກຳເນີດ ທີ່ຂາດພະນັກງານທີ່ໄດ້ຮັບການອົບຮົມຢ່າງພຽງພໍ, ຂາດໂຄງລ່າງ ຫຼືຊັບພະຍາກອນ ຍືນຍົງ ເພື່ອຄຸ້ມຄອງຂໍ້ມູນຊັບພະຍາກອນພັນທຸກຳ ຈະບໍ່ສາມາດອະນຸລັກ ຫຼືສົ່ງເສີມໃຫ້ມີການນຳໃຊ້ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳໄດ້ຢ່າງເຕັມປ່ຽມໄດ້. ສະພາບດັ່ງກ່າວນີ້ ຍິ່ງໜັກໜ່ວງ ຍ້ອນວ່າໃນລະດັບຊາດ ແລະສະຖາບັນ, ສ່ວນຫຼາຍເພິ່ນບໍ່ໄດ້ໃຫ້ບູລິມະສິດສູງ ແລະກໍບໍ່ມີການ ປະກອບງົບປະມານໃຫ້ແກ່ກິດຈະກຳຄຸ້ມຄອງຂໍ້ມູນ ແລະເອກະສານ. ໃນຮູບການປົກກະຕິຂອງມັນແລ້ວ, ຂໍ້ມູນນັ້ນບໍ່ພຽງແຕ່ຖືກນຳໄປໃຊ້ໃນວຽກອະນຸລັກເທົ່ານັ້ນ, ແຕ່ຍັງຊ່ວຍ "ເສີມຄຸນຄ່າ" ໃຫ້ແກ່ວຽກງານ ຊັບພະຍາກອນພັນ
ທຸກຳພືດ ເພື່ອອາຫານແລະການກະສິກຳ ອີກດ້ວຍ.

259.ເບິ່ງທາງດ້ານປະຫວັດສາດແລ້ວ, ໃນວຽກງານພັດທະນາກະສິກຳນີ້ ເພິ່ນບໍ່ຄ່ອຍເຫັນຄວາມສຳຄັນໃນວຽກສ້າງໂຄງ ຂອງການສື່ສານຕິດຕໍ່, ການນຳໃຊ້ ແລະບໍລິຫານຄຸ້ມຄອງຂໍ້ມູນຂ່າວສານ. ໃນເມື່ອວ່າໄດ້ມີ ການວິວັດທະນາການແບບໄວວາໃນ ດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ຄືແນວນີ້ແລ້ວ, ການພັດທະນາໃນຂະແໜງດັ່ງກ່າວ ສາມາດເຮັດໄດ້ຢ່າງໄວກວ່າ ໂດຍໃຫ້ເຂົ້າເຖິງການຕິດຕໍ່ສື່ສານ ແລະຂໍ້ມູນຂ່າວສານແບບຍືນຍົງ. ການບໍ່ສາມາດເຂົ້າເຖິງມັນຈະເຮັດໃຫ້ບຸກຄົນ ແລະສະຖາບັນຖືກໂດດດ່ຽວບໍ່ອະນຸຍາດໃຫ້ເຂົາໄດ້ຢູ່ໃນກອບວຽກ ທີ່ໃຜໆກໍເຫັນຊຶ່ງຖ້າຢູ່ວຽກງານສະຖາບັນເຫຼົ່ານີ້ກໍຈະກາຍເປັນອົງປະກອບທີ່ບໍ່ຖືກຕັດແຍກ.

**260.ບັນດາຈຸດປະສົງໄລຍະຍາວ:** ເພື່ອອໍານວຍຄວາມສະດວກໃນການເພີ່ມທະວີການເຂົ້າເຖິງການຄຸ້ມຄອງ ແລະນໍາໃຊ້ ຊັບພະຍາກອນພັນທຸກໍາພືດ ເພື່ອອາຫານແລະການກະສິກໍາ ໄດ້ດີກວ່າໂດຍຜ່ານການຮ່ວມປະຊຸມ, ແລກປ່ຽນ ແລະສະໜອງຂ່າວສານທີ່ເປັນປະໂຫຍດ.

261.ເພື່ອສ້າງຕາໜ່າງແລກປ່ຽນຂໍ້ມູນຂ່າວສານດ້ານ ຊັບພະຍາກອນພັນທຸກໍາພືດ ເພື່ອອາຫານແລະການກະສິກໍາ ໂດຍຜ່ານການພັດທະນາ ຄວາມຊໍານານ ແລະໂຄງລ່າງໃນລະດັບໂລກ , ຂົງເຂດ, ຊາດ ແລະ ລະດັບສະຖາບັນ.

262.ເພື່ອຊ່ວຍບັນດາປະເທດໃຫ້ສາມາດເກັບກໍາ ແລະ ຄຸ້ມຄອງຂໍ້ມູນຂ່າວສານທີ່ມີຢູ່ປັດຈຸບັນໃຫ້ດີກວ່າເກົ່າ ແລະ ເພື່ອອໍານວຍ ຄວາມສະດວກໃຫ້ບັນດາ ປະເທດເຂົ້າເຖິງຂໍ້ມູນ ທີ່ມີຢູ່ໃນລະດັບສາກົນ ແລະຂົງເຂດ.

**263.ບັນດາຈຸດປະສົງໄລຍະກາງ:** ເພື່ອເກັບກໍາເອົາຂໍ້ມູນຂ່າວສານທີ່ມີຢູ່ໃຫ້ຢູ່ໃນສະພາບສາມາດນໍາໃຊ້ໄດ້ສະດວກ ໂດຍ ຈະມີການນໍາໃຊ້ ວິທີການທີ່ມີປະສິດຕິຜົນກໍຄືນໍາໃຊ້ຖານຂໍ້ມູນ ແລະ ລະບຽບ ຂັ້ນຕອນ ທີ່ແນ່ນອນ.

264.ເພື່ອສ້າງຕັ້ງຕາໜ່າງແລກປ່ຽນ ແລະ ຄຸ້ມຄອງຂໍ້ມູນຂ່າວສານ ລົງເລິກທາງ ດ້ານ ພືດພື້ນຖານເພື່ອແລກປ່ຽນລະຫວ່າງທະນາຄານເຊື້ອພັນ ແລະຄູ່ຮ່ວມງານອື່ນໆ ໃນແຜນງານຊັບພະຍາກອນພັນທຸກໍາພືດ ທັງນີ້ເພື່ອຊ່ວຍໃນດ້ານສະໜອງລະບົບເກັບກໍາເອກະສານ ແລະ ການຝຶກອົບຮົມກໍ່ສ້າງພະນັກງານ.

265.ເພື່ອພັດທະນາບັນດາຍຸດທະສາດລະບົບຂໍ້ມູນ ແລະການເກັບກໍາຂໍ້ມູນຂ່າວສານ ພ້ອມໆກັນກັບທະນາຄານເຊື້ອພັນ ແລະຄູ່ຮ່ວມງານອື່ນໆ ໃນແຜນງານຊັບພະຍາກອນພັນທຸກໍາພືດ ແລະແຜນງານປັບປຸງພັນ ທັງນີ້ກໍເພື່ອຊ່ວຍສະຖາບັນຕ່າງໆ ເລົ່ານີ້ ແລະ ເພື່ອສ້າງຕັ້ງ ລະບົບຄຸ້ມຄອງຖານຂໍ້ມູນທະນາຄານເຊື້ອພັນ ຢູ່ທີ່ທະນາຄານເຊື້ອພັນ ທີ່ເໝາະສົມເທົ່າທີ່ເປັນໄປໄດ້.

266.ເພື່ອສະໜັບສະໜູນເຂົ້າເຖິງໂຄງລ່າງສື່ສານ ເອເລັກໂຕນິກສາກົນ ໂດຍຊຸມທະນາຄານເຊື້ອພັນ ແລະຄູ່ຮ່ວມງານອື່ນໆ ຂອງແຜນງານ ຊັບພະຍາກອນພັນທຸກໍາພືດ ແລະແຜນງານປັບປຸງພັນ.

**267.ນະໂຍບາຍ / ຍຸດທະສາດ:** ຄວນໃຫ້ບູລິມະສິດສູງສໍາລັບ ແຕ່ລະລະດັບເພື່ອພັດທະນາ, ປະກອບ ບຸກຄະລາກອນ ແລະ ສືບຕໍ່ໃຫ້ມີລະບົບ ເກັບກໍາຂໍ້ມູນຂ່າວສານເພື່ອ ສະດວກໃນການນໍາໃຊ້.

268.ລະບົບເກັບກຳຂໍ້ມູນຂ່າວສານ ແລະເຜີຍແຜ່ຊຶ່ງຄຸ້ມຄ່າທັງດ້ານການໃຊ້ຈ່າຍ ແລະເຂົ້າເຖິງຢ່າງງ່າຍດາຍ ຄວນຈະໄດ້ຮັບການພັດທະນາ ທັງນີ້ເພື່ອຄວາມສະດວກໃນການຖ່າຍທອດເຕັກໂນໂລຊີ.

269.ຈະຕ້ອງການຂໍ້ມູນຂ່າວສານກ່ຽວກັບ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະການກະສິກຳ ທັງນີ້ເພື່ອເຜີຍແຜ່ ວຽກງານ ດັ່ງຂໍ້ຮຽກຮ້ອງໃນມາດຕາ 8 (J) ຂອງສົນທິສັນຍາກ່ຽວກັບຊີວະນາໆພັນ.

**270.ຄວາມສາມາດ:** ຄວນສະໜອງການຊ່ວຍເຫຼືອດ້ານການສ້າງແຜນໃຫ້ແກ່ບັນດາແຜນງານແຫ່ງຊາດ ເພື່ອສົ່ງເສີມໃຫ້ມີການພັດທະນາຍຸດທະສາດຕ່າງໆ ທີ່ສົມເຫດສົມຜົນ ແລະສອດຄ່ອງເພື່ອຈະໄດ້ໃຊ້ໃນການຄຸ້ມຄອງຂໍ້ມູນຂ່າວສານ. ບັນດາຍຸດທະສາດເລົ່ານັ້ນບໍ່ຈຳເປັນຈະຕ້ອງມີການລະບົບເອເລັກໂຕນິກ ຫຼືຄອມພິວເຕີ ແຕ່ວ່າເປົ້າໝາຍສຸດທ້າຍຂອງຫຼາຍໆສິ່ງອຳນວຍຄວາມສະດວກດັ່ງກ່າວ ກໍຈະຕ້ອງບຸກບືນເພື່ອໃຫ້ມີລະບົບຄອມພິວເຕີ ແລະເຊື່ອມຕໍ່ກັບສະຖາບັນ ແລະແຜນງານອື່ນໆ ໂດນຜ່ານລະບົບຄອມພິວເຕີ.

271.ຂໍ້ມູນ ແລະຂ່າວສານທີ່ມີຢູ່ປັດຈຸບັນຄວນຖືກເກັບກຳ ແລະຈັດລຽງໃນຮູບແບບນຳໃຊ້ ແລະເຂົ້າເຖິງໄດ້ງ່າຍພ້ອມທັງສະດວກໃນການກວດກາຄືນ. ຂໍ້ມູນເລົ່ານີ້ປົກກະຕິແລ້ວ ຈະມີຢູ່ທີ່ທະນາຄານເຊື້ອພັນ ແລະຢູ່ທີ່ໜ່ວຍງານຄົ້ນຄ້ວາ ເຊັ່ນ ໃນປື້ມບັນທຶກ ແລະລາຍງານຂອງນັກວິທະຍາສາດຫຼືບໍ່ກໍຢູ່ໃນລະບົບຫຼ້າສະໃໝທີ່ບໍ່ສາມາດເຂົ້າເຖິງ.

272.ຄວນອຳນວຍຄວາມສະດວກໃຫ້ແກ່ແຜນງານແຫ່ງຊາດ ໃນການເຂົ້າເຖິງຂໍ້ມູນຂ່າວສານພື້ນຖານດ້ານວິທະຍາສາດ, ການຄົ້ນຄ້ວາ ແລະກ່ຽວກັບປື້ມຕ່າງໆ.

273.ທະນາຄານເຊື້ອພັນຄວນມີພະນັກງານຢ່າງພຽງພໍ ເພື່ອຄຸ້ມຄອງຂໍ້ມູນຂ່າວສານ ແລະບໍລິການຜູ້ຊົມໃຊ້ໄດ້ຢ່າງກ້ວາງຂວາງ ໂດຍສອດຄ່ອງ ກັບເປົ້າໝາຍຂອງຊາດ. ການສຶກສາ ແລະຝຶກອົບຮົມດ້ານຄຸ້ມຄອງຂໍ້ມູນ ແລະສື່ສານທາງ ເອເລັກໂຕນິກ ຄວນຈະຈັດຂຶ້ນໃນລະດັບທະນາຄານເຊື້ອພັນໂດຍເນັ້ນໃສ່ບັນຫາຄຸ້ມຄອງ ແລະວິເຄາະຂໍ້ມູນ, ການເຊື່ອມຕໍ່ ແລະແລກປ່ຽນຂໍ້ມູນ. ກິດຈະກຳດັ່ງກ່າວນັ້ນ (ລວມທັງການອົບຮົມພະນັກງານ) ຄວນໄດ້ຮັບການສະໜັບສະໜູນເທົ່າທີ່ເຫັນສົມຄວນແລະເປັນໄປໄດ້ ແລະໃນຂະນະດຽວກັນກໍຕ້ອງຄຳນຶງເຖິງບັນຫາສົມເຫດສົມຜົນໃນວຽກງານຊັບພະຍາກອນພັນທຸກຳໃນລະດັບໂລກ ແລະຂົງເຂດ.

274.ຄວນພັດທະນາຄູ່ມືສອນ ຕົນເອງ -ແບບເໝາະສົມ ແລ້ວແຕ່ຄວາມຕ້ອງການ. ຄວນໃຫ້ມີການສະໜັບສະໜູນດ້ານວິຊາການແບບຕໍ່ເນື່ອງ ເພື່ອປັບປຸງຄວາມສາມາດ ດ້ານຄຸ້ມຄອງຂໍ້ມູນຂ່າວສານ ແລະ ອະນຸຍາດໃຫ້ສາມາດຮັບ ເອົາເຕັກໂນໂລຊີໃໝ່ ແລະ ເໝາະສົມ.

**275.ການຄົ້ນຄ້ວາ/ເຕັກໂນໂລຊີ:** ຄວນສະໜັບສະໜູນການຄົ້ນຄ້ວາເພື່ອ:

(ກ) ພັດທະນາຮູບແບບວິການທີ່ເໝາະສົມ ແລະບໍ່ແພງພ້ອມທັງເຕັກໂນໂລຊີຕ່າງໆ ເພື່ອເກັບກຳ ແລະແລກປ່ຽນຂໍ້ມູນ;

(ຂ) ພັດທະນາວິທີການເພື່ອຮັບເອົາເຕັກໂນໂລຊີເລົ່ານີ້ໃນລະດັບທ້ອງຖິ່ນແລ້ວແຕ່ຄວາມເໝາະສົມ.

(ຄ) ພັດທະນາວິທີການເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງແບບງ່າຍດາຍ ແລະນຳໃຊ້ຂໍ້ມູນທາງເອເລັກໂຕນິກ ແລະຜ່ານອິນເຕີເນັດ;

(ງ) ພັດທະນາຮູບແບບ ແລະວິທີການຕ່າງໆ ແລະເພື່ອໃຫ້ມີຂໍ້ມູນຂ່າວສານທີ່ເປັນປະໂຫຍດສຳລັບຄົນທົ່ວໄປ ທີ່ບໍ່ແມ່ນ ຊ່ຽວຊານສາມາດນຳໃຊ້ໄດ້ຢ່າງສະດວກ, ລວມໃນນັ້ນກໍມີອົງການບໍ່ສັງກັດລັດ, ການຈັດຕັ້ງຂອງຊາວໄຮ່ນາ ແລະຄົນພື້ນເມືອງ.

**276.ການປະສານງານ/ຄຸ້ມຄອງ:** ການປະສານງານ ແລະຮ່ວມມືຄວນໄດ້ຮັບການພັດທະນາເພີ່ມເຕີມພາຍໃຕ້ວຽກງານຂໍ້ມູນຂ່າວສານໂລກ ແລະລະດັບເຕືອນໄພແຕ່ທົວທີຊຶ່ງກຳລັງຖືກພັດທະນາຂຶ້ນໂດຍອົງການ ອາຫານ ແລະການກະເສດ ແລະພ້ອມກັນນັ້ນກໍເສີມຂະຫຍາຍຄວາມຊຳນິຊຳນານທີ່ມີແລ້ວໃນແຜນງານແຫ່ງຊາດ ກໍຄືໃນຂໍ້ລິເລີ່ມ ເຄືອຄາຍ ລະບົບ ຂໍ້ມູນຂ່າວສານ ດ້ານຊັບພະຍາກອນພັນທຸກຳພາຍໃຕ້ແຜນງານ ຂອງ ຄະນະທີ່ປຶກສາ ດ້ານ ການຄົ້ນຄວ້າ ກະສິກຳນານາຊາດ), ວຽກງານການສ້າງເອກະສານ ຊຶ່ງພວມພັດທະນາໃນລະດັບຂົງເຂດໂດຍ ສະຖາບັນນານາຊາດ ດ້ານຊັບພະຍາກອນພັນທຸກຳພືດ , ລະບົບຂໍ້ມູນຂ່າວສານພູມສາດຂອງ ແຜນງານສິ່ງແວບລ້ອມ ຂອງ ສະຫະປະຊາຊາດ , ລະບົບຂໍ້ມູນຂ່າວສານດ້ານພູມສາດ ຂອງ ບາຍໂອສາເຟຍ ຂອງອົງການ UNESCO's F ວຽກງານກຳລັງ ດຳເນີນຢູ່ໂດຍຜ່ານ ສົນທິສັນຍາຊີວະນາໆພັນ. ໃນການປະສານສົມທົບຄວນຮຽກຮ້ອງໃຫ້ມີການເຂົ້າຮ່ວມຂອງຕາໜ່າງຂົງເຂດ ແລະພິດກໍຄືການມີສ່ວນຂອງຜູ້ຊົມໃຊ້ ແລະຜູ້ອານຸລັກ ຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ ລວມທັງພາກສ່ວນເອກະຊົນ ແລະອົງການບໍ່ສັງກັດລັດອື່ນໆ ໃນນາມເປັນຜູ້ເຂົ້າຮ່ວມທີ່ຂະຫຍັນຂັນແຂງ ແລະເປັນຄູ່ຮ່ວມງານ.

277.ການຕີລາຄາ, ຕິດຕາມກວດກາວາງແຜນ ແລະປະສານງານໃນລະດັບໂລກ ແລະຂົງເຂດແມ່ນຈຳເປັນ ເພື່ອສົ່ງເສີມປະສິດຕິພາບ ແລະປະສິດຕິຜົນໃນດ້ານການໃຊ້ຈ່າຍ.

**278.ກິດຈະກຳນີ້ແມ່ນພົວພັນຢ່າງໃກ້ຊິດກັບ:**

- ທຸກກິດຈະກຳອື່ນໆ.

## 18.ພັດທະນາບັນດາລະບົບຕິດຕາມ ແລະເຕືອນໄພແຕ່ທົ່ວທີ່ກ່ຽວກັບການສູນເສຍຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ

**279.ການຕີລາຄາ:** ການຊຸດໂຊມຂອງ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະການກະສິກຳ ສາມາດ ເກີດຂຶ້ນໄດ້ໃນ ການເກັບຕົວຢ່າງ ອະນຸລັກ ນອກຖິ່ນກຳເນີດ, ໃນທົ່ງນາຂອງກະສິກອນ ແລະໃນທຳມະຊາດ. ຊາວໄຮ່ນາອີງອາໃສຄຸນນະພາບຂອງວັດຖຸພັນທີ່ໄດ້ເກັບໄວ້ໃນຕອນຕົ້ນໃຕ້ເງື່ອນໄຂທີ່ວ່າ ວັດຖຸພັນເລົ່ານັ້ນຈະຢູ່ໃນສະພາບເດີມ ແລະສາມາດຂະຫຍາຍພັນໄດ. ການສູນເສຍ ສາຍພັນພືດປ່າ ສາມາດເກີດຂຶ້ນໄດ້ຍ້ອນມີການສູນເສຍທີ່ຢູ່ ຫຼືທີ່ຢູ່ຖືກລົບກວນ ຫຼືຍ້ອນມີໄພພິບັດທຳມະຊາດ. ການສູນເສຍຊັບພະຍາກອນພັນທຸກຳໃນພືດຕ່າງໆ ຕົ້ນຕໍເກີດຂຶ້ນຍ້ອນມີການນຳໃຊ້ພືດໃໝ່ ຫຼືແນວພັນໃໝ່ອັນເຮັດໃຫ້ມີການປະປ່ອຍພືດດັ້ງເດີມໃນທີ່ສຸດ ໂດຍບໍ່ມີມາດຕະການອະນຸລັກທີ່ເໝາະສົມ.

280.ປັດໃຈຕ່າງໆທາງທຳມະຊາດກໍຄືພັນໄດ້ຮັບຈາກການກະທຳຂອງມະນຸດ ລວມທັງການຂະຫຍາຍຕົວເມືອງ, ຄວາມທັນສະໄໝຂອງການກະສິກຳ, ການແກງແຍງທາງສັງຄົມ ແລະໄພສົງຄາມ ສາມາດເຮັດໃຫ້ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະການກະສິກຳ ຕົກໃນຄວາມສ່ຽງ. ຍ້ອນປັດໃຈເລົ່ານີ້ມີຫຼາຍປະເທດບໍ່ສາມາດ ລົງລາຍງານຂອງປະເທດ ຫຼືຮ່ວມໃນຂະຫຍາຍການກະກຽມເພື່ອກອງປະຊຸມເຕັກນິກສາກົນ. ເຖິງແມ່ນວ່າຈະມີຄວາມເຂົ້າໃຈເຊັ່ນ ນັ້ນກໍຕາມ ກໍຍັງບໍ່ມີກົນໄກຕ່າງໆ ເປັນທາງການເພື່ອຕິດຕາມ ສະພາບການດັ່ງກ່າວ ກໍຄືເກັບກຳຂໍ້ມູນຂ່າວສານ ແລະມີຂໍ້ລິເລີ່ມອັນເໝາະສົມ.

**281.ບັນດາຈຸດປະສົງໄລຍະຍາວ:** ເພື່ອຫຼຸດຜ່ອນການເຊື່ອມຄຸນທາງດ້ານພັນທຸກຳ ແລະຜົນກະທົບຂອງມັນຕໍ່ການກະເສດແບບຍືນຍົງ ໂດຍມີການຕິດຕາມປັດໃຈ ທີ່ເປັນກຸນແຈຂອງວຽກງານອະນຸລັກຊັບພະຍາກອນພັນຖຸກຳທີ່ເຮັດໃຫ້ເກີດການເຊື່ອມຄຸນດ້ານພັນຖຸກຳ, ແລະເກັບກຳຂໍ້ມູນຂ່າວສານເພື່ອຈະສາມາດແກ້ໄຂ ແລະປ້ອງກັນ.

**282.ບັນດາຈຸດປະສົງໄລຍະກາງ:** ເພື່ອກຳໄດ້ຕົ້ນເຫດຕ່າງໆ ທີ່ຢູ່ໃຕ້ການເຊື່ອມຄຸນດ້ານພັນຖຸກຳ. ເພື່ອສົ່ງເສີມການຕິດຕາມໃນລະດັບຊາດ, ຂົງເຂດ ແລະໃນໂລກ. ເພື່ອສ້າງຕັ້ງບັນດາກົນໄກທີ່ຮັບປະກັນວ່າຂໍ້ມູນຂ່າວສານໄດ້ຖືກຖ່າຍທອດໄປຍັງຈຸດທີ່ຖືກແຕ່ງຕັ້ງໃຫ້ຮັບຜິດຊອບວຽກງານວິເຄາະປະສານງານ ແລະປະຕິບັດການ.

**283.ນະໂຍບາຍ/ຍຸດທະສາດ:** ໂດຍສອດຄອງກັບວາລະທີ່ 21 (agenda 21), ບັນດາລັດຖະບານຄວນທົບທວນເປັນໄລຍະໆ ແລະລາຍງານສະພາບ ຊັບພະຍາກອນ ພັນທຸກຳ ພືດ ເພື່ອ ອາ ຫານ

ແລະ ການກະສິກຳ. ລັດຖະບານຄວນແຕ່ງຕັ້ງ / ກ່າວຢ້ຳຈຸດປະສານງານເພື່ອລວບລວມຂໍ້ມູນນີ້ໃຫ້ແກ່ ອົງການ ອາຫານ ແລະ ການກະເສດ, ກອງປະຊຸມພາຄີສົນທິສັນຍາຊີວະນາໆພັນ ແລະອົງການກ່ຽວຂ້ອງອື່ນໆ.

284.ຂໍ້ມູນຂ່າວສານໄດ້ຈາກການປະເມີນ ແລະການຕີລາຄາຜົນກະທົບດ້ານສິ່ງແວດລ້ອມຂອງໂຄງການພັດທະນາສຳຄັນໆ ຊຶ່ງອາດມີຜົນກະທົບຫຼາຍຕໍ່ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ຄວນສາມາດນຳໃຊ້ໄດ້ຢ່າງສະດວກໂດຍອົງການຂອງຊາດທີ່ກ່ຽວຂ້ອງ.

**285.ຄວາມສາມາດ:** ພະນັກງານແຜນງານແຫ່ງຊາດ ແລະ ຜູ້ຮ່ວມງານທີ່ລະດັບທ້ອງຖິ່ນຄວນໄດ້ຮັບການອົບຮົມໄລຍະສັ້ນ ກ່ຽວກັບວິທີເກັບກຳ ແລະ ຕີລາຄາຂໍ້ມູນກ່ຽວກັບຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ ແລະໄພຂົ່ມຂູ່ຕ່າງໆທີ່ມີຕໍ່ຊັບພະຍາກອນເລົ່ານີ້.

286.ໃນເມື່ອຮູ້ເຖິງຄວາມສຳຄັນ ຂອງວຽກງານຕິດຕາມ ແລະການເຕືອນຕົວແຕ່ຫົວທີໃນລະດັບໂລກກ່ຽວກັບການສູນເສຍ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານ ແລະ ການກະສິກຳ , ຄວນປະເມີນຕີລາຄາປະສິດຕິພາບ, ຈຸດປະສົງ ແລະຄຸນຄ່າຂອງລະບົບຂໍ້ມູນໂລກ ແລະການເຕືອນໄພໃນ ຕອນຕົ້ນຂອງອົງການອາຫານ ແລະການກະເສດ. ອີງຕາມຜົນໄດ້ຮັບຈາກການທົບທວນນັ້ນລະບົບ ຂໍ້ມູນໂລກ ແລະການເຕືອນໄພໃນ ຕອນຕົ້ນຂອງອົງການອາຫານ ແລະ ການ ກະເສດກໍຄວນໄດ້ຮັບການປັບປຸງ.

**287.ການຄົ້ນຄ້ວາ/ເຕັກໂນໂລຊີ:** ການຄົ້ນຄ້ວາເພື່ອກຳນົດວ່າອັນໃດຄືຕົ້ນເຫດ ແລະປະຕິກິລິຍາຂອງການເຊື່ອມຄຸນດ້ານພັນທຸກຳ. ການຄົ້ນຄ້ວາເພື່ອແນໃສ່ປັບປຸງວິທີການເພື່ອສຳຫຼວດ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ ກໍຈະເປັນປະໂຫຍດ ສຳລັບລະບົບເຕືອນໄພແຕ່ຫົວທີ.

288.ຜູ້ຊ່ຽວຊານວິຊາການ, ຕາງໜ້າຂອງແຜນງານແຫ່ງຊາດ, ແຜນງານສິ່ງແວບລ້ອມ ຂອງອົງການສະຫະປະຊາຊາດ, ຫ້ອງການປະສານງານ ຂອງອົງການ ສະຫະປະຊາຊາດດ້ານໄພພິບັດ, ຄະນະທີ່ປຶກສາ ດ້ານການກະສິກຳ ສາກົນອົງການອະນຸລັກໂລກ, ອົງການບໍ່ສັງກັດລັດ ແລະພາກສ່ວນເອກະຊົນຄວນໄດ້ຮັບເຊີ່ງໂດຍ ອົງການອາຫານ ແລະການກະເສດ ເພື່ອເຂົ້າຮ່ວມ ແລະປະກອບແກ່ການສົນທະນາກ່ຽວກັບການພັດທະນາລະບົບເຕືອນໄພແຕ່ຫົວທີ.

289. ຄວາມເປັນປະໂຫຍດ ແລະການນຳໃຊ້ເຕັກໂນໂລຊີ ຣີໂມດເຊັນຊິງ ຄວນໄດ້ຮັບການສຶກສາຄົ້ນຄ້ວາ.

**290.ການປະສານງານ/ການຄຸ້ມຄອງບໍລິຫານ:ຂໍ້ມູນຂ່າວສານໂລກ ແລະລະບົບເຕືອນໄພຕໍ່ບັນດາແຫລ່ງຊັບພະຍາກອນພັນທຸກໍາພືດ** ຄວນຮ່ວມປະສານຮ່ວມມືຢ່າງໃກ້ຊິດກັບບຸກຄົນໃຈກາງລະດັບຊາດກໍຄືຜູ້ປະສານງານລະດັບຊາດຕາໜ່າງຊີງເຂດ ແລະພືດ, ສູນຄົ້ນຄ້ວາກະສິກໍາສາກົນ, ແຜນງານສິ່ງແວບລ້ອມໂລກຫ້ອງການປະສານງງານ ດ້ານໄພພິບັດ ແລະອົງການຈັດຕັ້ງກ່ງວຂ້ອງອື່ນໆ

291.ບັນດາລັດຖະບານ ແລະອົງກອນຊ່ວຍເຫຼືອຄວນຮັບປະກັນໃຫ້ມີການສື່ສານຕິດຕໍ່ ແລະຮ່ວມມືລະຫວ່າງແຜນງານຊັບພະຍາກອນພັນທຸກໍາພືດ, ແຜນງານພັດທະນາຕ່າງໆ ແລະອົງການຈັດຕັ້ງພ້ອມທັງອົງກອນ ເຊັ່ນ ທະນາຄານໂລກ, ອົງການ ອາຫານ ແລະການກະເສດ, ອົງການສະຫະປະຊາຊາດເພື່ອການພັດທະນາ, ແຜນງານສິ່ງແວບລ້ອມ ຂອງສະຫະປະຊາຊາດ, ອົງການດ້ານການສຶກສາ,ວິທະຍາສາດສັງຄົມຂອງສະຫະປະຊາຊາດ, ກອງທຶນກະສິກໍາເພື່ອການພັດທະນາ ແລະ ຄະນະ ທີ່ປຶກສາດ້ານການຄົ້ນຄວ້າ ກະສິກໍາ ສາກົນ.

**292.ກິດຈະກໍານີ້ພົວພັນຢ່າງໃກ້ຊິດກັນ:**

- ສໍາຫຼວດ ແລະຂຶ້ນບັນຊີ ຊັບພະຍາກອນພັນທຸກໍາພືດ ເພື່ອອາ ຫານແລະການກະສິກໍາ .
- ສະໜັບສະໜູນການເກັບ ຊັບພະຍາກອນພັນທຸກໍາພືດ ເພື່ອອາ ຫານແລະການກະສິກໍາ ທີ່ໄດ້ວາງແຜນ ແລະມີເປົ້າໝາຍ.
- ກໍ່ສ້າງລະບົບຂໍ້ມູນຂ່າວສານຢ່າງຄົບສຸດ ສໍາລັບ ຊັບພະຍາກອນພັນທຸກໍາພືດ ເພື່ອອາ ຫານແລະການກະສິກໍາ .

## 19. ການຂະຫຍາຍ ແລະ ການປັບປຸງການສຶກສາ ແລະການຝຶກອົບຮົມ

**293.ການຕີລາຄາ:** ຄວາມສໍາຄັນຂອງການຝຶກອົບຮົມເພື່ອບັນລຸການປັບປຸງແບບຍືນຍົງໃນວຽກງານອະນຸລັກ ແລະນໍາໃຊ້ ຊັບພະຍາກອນພັນທຸກໍາພືດ ເພື່ອອາ ຫານແລະການກະສິກໍາ ແມ່ນໄດ້ມີການຍອມຮັບຢ່າງກວ້າງຂວາງໃນໄລຍະທີ່ມີການສະໜັບສະໜູນທາງການເງິນໃຫ້ແກ່ແຜນງານຕ່າງໆ ນັ້ນຕົກໃນສະພາບສ່ຽງບໍ່ຮັບປະກັນ, ການຂົນຂວາຍທາທຶນ ເພື່ອການອົບຮົມມັກຈະຝືດເຄືອງ. ດ້ານນຶ່ງອີກລັດຖະບານກໍບໍ່ຮັບປະກັນວ່າບຸກຄົນທີ່ໄດ້ຮັບການຝຶກອົບຮົມມາແລ້ວນັ້ນ ໄດ້ຖືກສົ່ງໄປເຮັດວຽກໃນວິຊາທີ່ໄດ້ຮັບການອົບຮົມມາ ແລະເຂົາເຈົ້າເລົ່ານັ້ນບໍ່ໄດ້ຮັບຄ່າຕອບແທນຢ່າງເໝາະສົມ.

294.ຄວາມຂາດແຄນທາງດ້ານພະນັກງານທີ່ໄດ້ຮັບການອົບຮົມດີນັ້ນ ຈະເຫັນໄດ້ຢ່າງຈະແຈ້ງເກືອບວ່າໃນທຸກໆລະດັບ ແລະໃນທັງໝົດຂອງວຽກງານວິຊາສະເພາະໃນຂະແໜງວິທະຍາສາດ ແລະເຕັກນິກຢູ່ໃນຫຼາຍໆປະເທດກໍາລັງພັດທະນາ. ສະພາບດັ່ງກ່າວນີ້ໄດ້ຖືກຍົກຂຶ້ນໃນແຕ່ລະກອງປະຊຸມອະນຸຊີງເຂດໃນຂະບວນການກະກຽມ. ແຜນງານການສອນຂອງມະຫາວິທະຍາໄລ ແລະສຸດ

ອົບຮົມສະເພາະໄລຍະສັ້ນທີ່ຈັດໂດຍສະຖາບັນຕ່າງໆ ມີຄົນເຂົ້າສະໝັກຮຽນຢ່າງລົ້ນເຫຼືອ. ຂົງເຂດຕ່າງໆຈະມີຄວາມແຕກຕ່າງກັນຫຼາຍໃນເລື່ອງໂອກາດດ້ານການສຶກສາ ແລະຝຶກອົບຮົມທີ່ມີຢູ່. ນອກເໜືອຈາກນັ້ນ ປະກົດວ່າແຜນງານອົບຮົມທີ່ລວມເອົາທັງບັນຫາວິຊາການ ແລະການສຳພັດທີ່ຫຼາຍໆຂະແໜງການ ເຊັ່ນ ການຄຸ້ມຄອງບໍລິຫານ, ຂົງເຂດນະໂຍບາຍ ແລະກົດໝາຍ ຊຶ່ງພົວພັນເຖິງເລື່ອງ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ ມັກຈະບໍ່ຄ່ອຍມີ.

**295.ບັນດາເປົ້າໝາຍໄລຍະຍາວ:** ເພື່ອໃຫ້ແຕ່ລະປະເທດໄດ້ຮັບການອົບຮົມໃນທຸກໆບົດບາດການອະນຸລັກ ແລະນຳໃຊ້ກໍຄືເລື່ອງບໍລິຫານຄຸ້ມຄອງນະໂຍບາຍດັ່ງທີ່ຕ້ອງການ ແລະສອດຄ່ອງກັບບູລິມະສິດ.

**296.ບັນດາຈຸດປະສົງໄລຍະກາງ:** ເພື່ອພັດທະນາຄວາມສາມາດໃນຂົງເຂດ ເພື່ອການອົບຮົມລະດັບແຂງ ແລະເພື່ອສ້າງຮູບການຮ່ວມມືທີ່ມີປະສິດຕິຜົນລະຫວ່າງສະຖາບັນກ່ຽວຂ້ອງໃນປະເທດພັດທະນາ ແລະກຳລັງພັດທະນາ.

297.ເພື່ອພັດທະນາຊຸດອົບຮົມ ແລະແບບສອນໃນຫົວຂໍ້ທີ່ໄດ້ຖືກກຳນົດພາຍໃນຂົງເຂດ.

298.ເພື່ອສົ່ງເສີມຄວາມສາມາດເຂົ້າເຖິງການຮ່ຳຮຽນຢູ່ຕ່າງປະເທດ ສຳລັບປະເທດທີ່ຂາດສະຖາບັນ.

299.ເພື່ອສົ່ງເສີມສະຖາບັນຕ່າງໆໃຫ້ເອົາບັນຫາ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານ ແລະການກະສິກຳ ເຂົ້າໃນຊຸດອົບຮົມ ແລະ ແຜນງານສອນເລື່ອງຊີວະວິທະຍາ.

**300.ນະໂຍບາຍ/ຍຸດທະສາດ:** ລັດຖະບານຄວນຮັບຮູ້ຄວາມເໝາະສົມ ແລະຄວາມສຳຄັນຂອງການສຶກສາທີ່ພົວພັນເຖິງ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ ໃນລະດັບ.

301.ລັດຖະບານ ແລະສະຖາບັນຄວນຕັດສິນໃຈເປີດການອົບຮົມ ແລະໃຫ້ໂອກາດດ້ານ ການ ສຶກສາໃນລະດັບສູງໃຫ້ແກ່ພະນັກງານທີ່ມີຢູ່.

**302.ຄວາມສາມາດ:** ເທົ່າທີ່ເປັນໄປໄດ້ຄວນ ໃຫ້ການສະໜັບສະໜູນ ແກ່ການພັດທະນາສະຖາບັນຕ່າງໆ ແລະ/ຫຼືແຜນງານຕ່າງໆໃນແຕ່ລະຂົງເຂດ, ຊຶ່ງສາມາດຈັດການສຶກສາ ອົບຮົມລະດັບສູງກ່ຽວກັບ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ ແລະການປັບປຸງພັນ. ນອກຈາກນັ້ນຄວນໃຫ້ການສະໜັບສະໜູນໃຫ້ແກ່ນັກສຶກສາ ເພື່ອສຳເລັດໂຄງການສຶກສາລະດັບ

ປະລິນຍາ ທີ່ສະຖາບັນເລົ່ານີ້ ຫຼືຈົບແຜນຮຽນອື່ນໆ. ບັນດາສະຖາບັນສຶກສາໃນປະເທດພັດທະນາ ແລະກຳລັງພັດທະນາຄວນຮ່ວມມືກັນ ແລະສົ່ງເສີມໃຫ້ມີການຝຶກງານໃນຂະແໜງກ່ຽວຂ້ອງອີກດ້ວຍ. ຄວນສ້າງໂອກາດໃຫ້ສາມາດເຂົ້າເຖິງການສຶກສາ ແລະຄວນນໍາໃຊ້ລະບົບ ອິນເຕີເນັດ ເພື່ອສື່ສານຕິດຕໍ່ດ້ານວິຊາການ ແລະເພື່ອຊອກຫາຂໍ້ມູນຂ່າວສານ.

303.ໃນຄະນະທີ່ ສະຖາບັນຂົງເຂດຕ່າງໆ ກຳລັງໄດ້ຮັບການປັບປຸງໃຫ້ເຂັ້ມແຂງຢູ່ນັ້ນ ບັນດາປະເທດທີ່ ພັດທະນາແລ້ວ ທີ່ມີເງື່ອນໄຂຄວນສະໜັບສະໜູນ ບັນດາປະເທດກຳລັງ ພັດທະນາໃຫ້ສອດຄ່ອງ ກັບຄວາມຕ້ອງການຕົວຈິງ.

304.ນອກເໜືອຈາກຄວາມພະຍາຍາມໃນປັດຈຸບັນແລ້ວ ຄວນພັດທະນາ ແລະຈັດຝຶກອົບຮົມພິເສດສຳລັບແຕ່ລະຂົງເຂດໃນຫົວຂໍ້ວິຊາການຈຳນວນໜຶ່ງ ເຊັ່ນ ການຄຸ້ມຄອງບໍລິຫານ, ນະໂຍບາຍ ແລະການສ້າງຈິດສຳນຶກໃຫ້ມະຫາຊົນ.

305.ຄວນເສີມຂະຫຍາຍເຕັກໂນໂລຊີຖ່າຍທອດຄວາມຊຳນິຊຳນານທີ່ພົວພັນກັບວຽກງານອານຸລັກ, ກຳນົດຄູນລັກສະນະພິເສດຂອງແນວພັນ ແລະ ການນຳໃຊ້ແບບຍືນຍົງ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ , ສະເພາະຢ່າງຍິ່ງໃນບັນດາປະເທດກຳລັງພັດທະນາ. ສະຖາບັນແຫ່ງຊາດ ທັງຢູ່ໃນປະເທດພັດທະນາ ແລະ ກຳລັງພັດທະນາ ພ້ອມທັງການຈັດຕັ້ງສາກົນລ້ວນແຕ່ມີບົດບາດ ສຳຄັນຫຼາຍໃນການອຳນວຍ ຄວາມສະດວກໃນຂະບວນການດັ່ງກ່າວນີ້.

306.ຄວນພິຈາລະນາ ພັດທະນາ ຝຶກອົບຮົມໃນຮູບແບບໂມດູນ ຫຼືເປັນບົດສອນເພື່ອແນໃສ່ໃຫ້ສາມາດນຳໃຊ້ໄດ້ໃນຫຼາຍຂົງເຂດເກົ່າ ພ້ອມກັນນັ້ນກໍສາມາດດັດປັບເພື່ອໃຫ້ມີລັກສະນະເຂດທ້ອງຖິ່ນສະເພາະ. ຖ້າເປັນໄປໄດ້ຊຸດອົບຮົມນີ້ຄວນໃຊ້ພາສາທີ່ເໝາະກັບທ້ອງຖິ່ນຂົງເຂດ.

307.ຄວນພິຈາລະນາເພື່ອຈັດຊຸດອົບຮົມພິເສດກັບທີ່ ສຳລັບແມ່ຍິງຊົນນະບົດ ຍ້ອນວ່າພວກເຂົາເຈົ້າມີບົດບາດສຳຄັນແຕ່ຫາກວ່າມີບາງຄັ້ງບົດບາດໃນການຮັກສາ ແລະພັດທະນາ ຊັບ ພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ ນີ້ ແລະຄວາມຮູ້ ແລະ ປະເພນີທີ່ໃກ້ຄຽງນັ້ນບໍ່ໄດ້ຖືກຮັບຮູ້.

308.ໃນລະດັບສາກົນຄວນເສີມຂະຫຍາຍຄວາມສາມາດ ເພື່ອພັດທະນາວັດຖຸພັນ ເພື່ອການອົບຮົມ ແລະສະໜອງປະສານສົມທົບໃຫ້ເກີດບັນດາຊຸດອົບຮົມນັ້ນ.

**309.ການຄົ້ນຄວ້າ/ເຕັກໂນໂລຊີ:** ສະຖາບັນຕ່າງໆ ຄວນສູ້ຊົນສ້າງ ສາຍພົວພັນ ລະຫວ່າງການຝຶກອົບຮົມ ແລະ ການຄົ້ນຄ້ວາ ທີ່ດຳເນີນຢູ່.

**310.ການປະສານງານ/ຄຸ້ມຄອງບໍລິຫານ:** ຊຸດອົບຮົມຄວນຖືກພັດທະນາ ແລະຈັດຂຶ້ນໂດຍຈະມີການປະສານ ສົມທົບຢ່າງໃກ້ຊິດ ກັບຕາໜ່າງ ພາກພື້ນ ແລະແຜນງານແຫ່ງຊາດຕ່າງໆ. ອີກດ້ານນຶ່ງຄວນພັດທະນາແຜນງານລະດັບສູງ ໂດຍການຮ່ວມມືກັບ ເຄືອຄາຍ ຫຼືສະມາຄົມ ວິທະ ຍາ ສາດ ຂອງພາກພື້ນ ທີ່ກ່ຽວຂ້ອງ.

**311.ກິດຈະກຳນີ້ແມ່ນພົວພັນຢ່າງໃກ້ຊິດກັບ:**

- ກິດຈະກຳອື່ນໆ ທັງໝົດ.

## 20.ສົ່ງເສີມການສ້າງຈິດສຳນຶກໃຫ້ມວນຊົນກ່ຽວກັບຄຸນຄ່າຂອງການອານຸລັກ ແລະການນຳໃຊ້ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ

**312.ການຕີລາຄາ:** ການສ້າງຈິດສຳນຶກໃຫ້ມະຫາຊົນຖືວ່າເປັນຂໍກຸນແຈ ສຳລັບລະດົມແນວຄວາມຄິດຂອງມະຫາຊົນ ແລະພ້ອມທັງສືບຕໍ່ໃຫ້ມີປະຕິບັດການ ດ້ານການເມືອງທີ່ເໝາະພາຍໃນປະເທດ ແລະສາກົນ. ຄວາມສາມາດສື່ສານ ເຮັດຄວາມເຂົ້າໃຈກັບກຸ່ມ ເປົ້າໝາຍກ່ຽວກັບຜົນກະທົບຂອງກິດຈະກຳຕ່າງໆ ດ້ານຊັບພະຍາກອນພັນທຸກຳ ຖືວ່າມີຄວາມສຳຄັນຫຼາຍເພື່ອຮັບປະກັນໃຫ້ແຜນງານອະນຸລັກປະສົບຜົນສຳເລັດ.

313.ແຜນງານສ້າງຈິດສຳນຶກທີ່ມີເປົ້າໝາຍ ສາມາດສົ່ງເສີມການພັດທະນາສາຍພົວພັນ ແລະກົນໄກຮ່ວມມືສາກົນ ເຊັ່ນ ຕາໜ່າງຕ່າງໆ. ພາຍໃນປະເທດ ເອງການສ້າງຈິດ ສຳນຶກໃຫ້ມະຫາຊົນ ສາມາດອຳນວຍຄວາມສະດວກ ໃຫ້ແກ່ວຽກງານ ທີ່ອາໃສໃຫ້ຊຸມຊົນ ແລະອີງການຈັດຕັ້ງທ້ອງຖິ່ນ ແລະບໍ່ສັງກັດລັດມີສ່ວນຮ່ວມເຂົ້າໃນກິດຈະກຳແຫ່ງຊາດ ກ່ຽວກັບຊັບພະຍາກອນພັນທຸກຳ, ຮັບປະກັນໃຫ້ມີຖານຂໍ້ມູນອັນກ້ວາງຂວາງສຳລັບວຽກງານອານຸລັກ. ສາຍພົວພັນກ່ຽວໂຍງລະຫວ່າງວຽກງານສ້າງຈິດສຳນຶກໃຫ້ມະຫາຊົນ ຊຶ່ງປະຕິບັດໂດຍອົງການສາກົນ ແລະແຜນງານ ແລະການຈັດຕັ້ງແຫ່ງຊາດ ສາມາດເພີ່ມທະວີ ປະສິດຕິຜົນ ແລະຫຼຸດຜ່ອນຄ່າໃຊ້ຈ່າຍ.

**314.ຈຸດປະສົງສຸດທ້າຍ:** ເພື່ອນຳເອົາບັນຫາສ້າງຈິດສຳນຶກມະຫາຊົນເຂົ້າໃຈກິດຈະກຳແຜນງານລະດັບທ້ອງຖິ່ນ, ຊາດ, ຂົງເຂດ, ແລະສາກົນ.

**315.ບັນດາຈຸດປະສົງໄລຍະກາງ:** ເພື່ອສະໜັບສະໜູນບັນດາກົນໄກ ເພື່ອກິດຈະກຳສ້າງ ຈິດສຳນຶກ ແບບມີການປະສານສົມທົບໃນທຸກໆລະດັບ ສະເພາະຢ່າງຍິ່ງໃນປະເທດກຳລັງພັດ ທະນາ .

**316.ນະໂຍບາຍ/ຍຸດທະສາດ:** ນະໂຍບາຍແຫ່ງຊາດ ແລະ ການວາງແຜນ ຄວນຮັບຮູ້ບົດບາດ ຄວາມສຳນຶກຂອງມະຫາຊົນ ໃນການສ້າງພື້ນຖານ ອັນແໜ້ນໜາສຳລັບ ວຽກງານອານຸລັກ ແລະ ການນຳໃຊ້ຊັບພະຍາກອນ ພັນທຸກຳແບບຍືນຍົງ. ໃນການພັດທະນາກິດຈະກຳຕ່າງໆ ຂອງ ແຜນງານໃຫ້ຊາດ ຄວນຄຳນຶງເຖິງບັນຫາສ້າງຈິດສຳນຶກໃຫ້ມະຫາຊົນ.

317.ຍຸດທະສາດແຫ່ງຊາດ ຄວນກຳນົດບັນດາຈຸດປະສົງ ແລະ ຍຸດທະສາດຂອງວຽກງານສ້າງຈິດສຳນຶກໃຫ້ມວນຊົນ ພ້ອມທັງກຳນົດນິຍາມ ກ່ຽວກັບກຸ່ມເປົ້າໝາຍ ຄູ່ຮ່ວມງານ ແລະເຄື່ອງມືສຳລັບເຮັດວຽກງານນີ້. ລັດຖະບານຄວນຮັບຮູ້ ແລະສົ່ງເສີມ ອົງການບໍ່ສັງກັດລັດໃນການສ້າງຈິດສຳນຶກຂອງມວນຊົນ.

318.ຄວນພິຈາລະນາໃຫ້ຖີ່ຖ້ວນພຽງພໍກ່ຽວກັບ ການຜະລິດວັດຖຸພັນ ເພື່ອສ້າງຈິດສຳນຶກໃຫ້ແກ່ມວນຊົນ ໂດຍການນຳໃຊ້ ວິທີການທີ່ເໝາະສົມເພື່ອ ຄວາມສະດວກໃນການນຳໃຊ້ແນວພັນ ຢ່າງກ້ວາງຂວາງພາຍໃນປະເທດ.

**319.ຄວາມສາມາດ:** ແຜນງານຊັບພະຍາກອນພັນທຸກຳ ຄວນມີບຸກຄົນໃຈກາງ ເພື່ອເຮັດວຽກສ້າງຈິດສຳນຶກໃຫ້ມະຫາຊົນ. ພະນັກງານ ເຮັດວຽກຊັບພະຍາກອນ ພັນທຸກຳຄວນພັດທະນາຄວາມສາມາດ ສະແດງຄວາມຄິດເຫັນ ກ່ຽວກັບຄວາມສຳຄັນ ຂອງເປົ້າໝາຍ ແລະ ກິດຈະກຳຂອງ ແຜນງານໂດຍເບິ່ງລວມໃຕ້ຂອບເຂດ ການກະສິກຳ ແລະ ການພັດທະນາແບບຍືນຍົງ. ພວກເຂົາເຈົ້າເລົ່ານີ້ຄວນ ສາມາດສື່ສານ ແລະ ເຮັດ ຄວາມເຂົ້າໃຈກັບຜູ້ມີສ່ວນກ່ຽວຂ້ອງທັງໝົດໃນບັນຫານີ້ ໂດຍນຳໃຊ້ເຄື່ອງມືທີ່ຜູ້ຊ່ຽວຊານດ້ານສ້າງຈິດສຳນຶກໃຫ້ມະຫາຊົນໄດ້ ສ້າງ ຂຶ້ນມາ.

320.ແຜນງານຊັບພະຍາກອນພັນທຸກຳພືດ ຄວນພິຈາລະນາ ບັນຫາ ເອົາບຸກຄົນ ທີ່ມີຊື່ສຽງ ແລະ ອິດທິພົນ ເຂົ້າມາຮ່ວມ ທັງນີ້ແມ່ນ ເພື່ອເພີ່ມທະວີໂອກາດເຂົ້າເຖິງ ສື່ມວນຊົນ ແລະເພີ່ມຄວາມສົນໃຈໃຫ້ຂະບວນການ.

321.ແຜນງານຊັບພະຍາກອນພັນທຸກຳແຫ່ງຊາດ ຄວນນຳໃຊ້ເຄື່ອງມືສ້າງຈິດສຳນຶກ ກໍຄືເຕັກໂນໂລຊີ ທີ່ໄດ້ສ້າງຂຶ້ນມາສຳລັບວຽກງານອື່ນໆ ໃນລະດັບ ພາກພື້ນ ແລະ ສາກົນ. ເຄື່ອງມືເລົ່ານີ້ ແລະ ຂໍ້ຄວາມຕ່າງໆອາດ ຈະຕ້ອງໄດ້ດັດປັບ ເພື່ອສະທ້ອນ ໃຫ້ເຫັນບູລິມະສິດ ແລະເງື່ອນໄຂຕ່າງໆຂອງຊາດ. ເຖິງຢ່າງໃດກໍຕາມ ອາດເປັນໄປໄດ້ວ່າຂໍ້ຄວາມ ແລະໃຈຄວາມຕ່າງໆ ທີ່ໃຊ້ໃນລະດັບພາກພື້ນ ແລະໃນໂລກອາດຈະມີປະໂຫຍດ ໃນການສະໜັບສະໜູນ ບັນດາຍຸດທະສາດ ແລະ ກິດຈະກຳ ດ້ານສ້າງຈິດສຳນຶກໃຫ້ມະຫາຊົນ. ວິທີການ ດັ່ງກ່າວຈະຫຼຸດຜ່ອນຄ່າໃຊ້ຈ່າຍຂອງແຜນງານແຫ່ງຊາດໄດ້ຫຼາຍສົມຄວນ.

322.ຄວາມຮັບຮູ້ຄຸນຄ່າຂອງ ຊັບພະຍາກອນພັນທຸກຳພືດ ເພື່ອອາ ຫານແລະການກະສິກຳ ແລະ ບົດບາດຂອງ ນັກວິທະຍາສາດ, ນັກປັບປຸງພັນ, ຊາວໄຮ່ນາ ແລະ ຊຸມຊົນໃນການຮັກສາ ແລະ ປັບປຸງຊັບພະຍາກອນນັ້ນ ຄວນຖືກສົ່ງເສີມໃນໂຮງຮຽນໃນທຸກລະດັບ ກໍຄືໃນສະຖາບັນຄົ້ນຄ້ວາກະສິກຳ ສະເພາະດ້ານ.

**323.ການຄົ້ນຄ້ວາ/ເຕັກໂນໂລຊີ:** ການຄົ້ນຄ້ວາ ຫຼືພິຈາລະນາ ຄວາມຮຽກຮ້ອງຕ້ອງການ ດ້ານຂໍ້ມູນຂ່າວສານ ຂອງກຸ່ມເປົ້າໝາຍ ຄວນໄດ້ດຳເນີນກ່ອນຈະໄດ້ເລີ່ມຕົ້ນດຳເນີນຂໍ້ລິເລີ່ມດ້ານສ້າງແນວຄິດ ມະຫາຊົນທີ່ສຳຄັນໆ. ໃນລະດັບສາກົນ ມັນກໍຈຳເປັນຕ້ອງດຳເນີນ ການຄົ້ນຄ້ວາກ່ຽວກັບການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານໃໝ່ ເພື່ອຕອບສະໜອງ ຄວາມຮຽກຮ້ອງຕ້ອງການດ້ານລະດົມຈິດສຳນຶກມວນຊົນ.

**324.ການປະສານງານ ແລະບໍລິຫານຄຸ້ມຄອງ:** ໃນລະດັບສາກົນມັນມີຄວາມຕ້ອງການປະສານງານ ແລະອຳນວຍຄວາມສະດວກໃນ ການຕີລາຄາດ້ວຍເຫດ ແລະຜົນ ແລະເຮັດໃຫ້ມະຫາຊົນໄດ້ຮູ້ເຖິງການໃຊ້ຈ່າຍທີ່ມີປະສິດຕິພາບ. ບັນດາແຜນງານແຫ່ງຊາດ ແລະອື່ນໆ ສາມາດສວຍໃຊ້ ທ່າໄດ້ປຽບທີ່ເພິ່ນໄດ້ສ້າງວັດຖຸພັນ ສຳລັບ ລະດັບສາກົນມາແລ້ວ ເຊັ່ນຕົວຢ່າງ ວັດຖຸ ພັນທີ່ນຳໃຊ້ໂດຍເຈົ້າໜ້າທີ່ສ້າງຈິດສຳນຶກໃຫ້ແກ່ມະຫາຊົນໃນການຈັດຕັ້ງເຊັ່ນ ອົງການອາຫານແລະການກະເສດ, ແຜນງານສິ່ງແວບລ້ອມ ຂອງ ອົງການສະຫະປະຊາຊາດ, ລະບົບ ຄະນະທີ່ປຶກສາດ້ານການຄົ້ນຄວ້າ ກະສິກຳສາກົນ, ການມີສາຍພົວພັນລະຫວ່າງ ອົງການສາກົນ ແລະອົງການບໍ່ສັງກັດລັດຈະອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນແບ່ງປັນຂໍ້ມູນກ່ຽວກັບເນື້ອໃນຈິດໃຈ ແລະການກຳນົດ ຄວາມພ້ອມ ທັງການກຳນົດ ກາລະໂອກາດເພື່ອສ້າງກິດຈະກຳຮ່ວມມື.

**325.ກິດຈະກຳນີ້ພົວພັນໃກ້ຊິດກັບ:**

- ທຸກກິດຈະກຳອື່ນໆ.

# ການຈັດຕັ້ງປະຕິບັດ ແລະ ການເງິນຂອງແຜນດຳເນີນງານໂລກ[1]

1.ກອງປະຊຸມໄດ້ຮັບຮູ້ວ່າແຜນດຳເນີນງານໂລກແມ່ນອົງປະກອບສຳຄັນຂອງລະບົບໂລກ ກ່ຽວກັບຊັບພະຍາກອນພັນທຸກຳພືດ ເພື່ອ ອາຫານ ແລະ ການກະສິກຳ ແລະມັນອາດເປັນສິ່ງຕົ້ນຕໍອັນໜຶ່ງທີ່ຈະປະກອບສ່ວນ ອຳນວຍຄວາມສະດວກໃຫ້ແກ່ ການປະຕິບັດ ວາລະ 21 / Agenda 21 ກໍຄືສົນທິສັນຍາດ້ານຊີວະນາໆພັນ.

2.ຂະບວນການທີ່ຕິດຕາມມາ ແມ່ນຮຽກຮ້ອງໃຫ້ມີ ການປະຕິບັດການໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ສາກົນຮຽກຮ້ອງໃຫ້ທຸກພາກສ່ວນທີ່ມີສ່ວນພົວພັນ ກັບການກະກຽມ ກອງປະຊຸມສາກົນດ້ານວິຊາການ ຊຶ່ງໃນນັ້ນກໍມີລັດຖະບານແຫ່ງຊາດ, ອຳນາດການປົກຄອງທ້ອງຖິ່ນ ແລະພາກພື້ນ, ອົງການຈັດຕັ້ງຂອງພາກພື້ນ ແລະສາກົນ, ອົງການຈັດຕັ້ງລະຫວ່າງລັດຖະບານ ແລະບໍ່ສັງກັດລັດ, ຊຸມຊົນນັກວິທະຍາສາດ, ພາກສ່ວນເອກະຊົນ, ຊຸມຊົນ ແລະຊາວໄຮ່ນາທ້ອງຖິ່ນ ພ້ອມທັງຜູ້ຜະລິດຂະແໜງກະສິກຳອື່ນໆ ແລະສະມາຄົມຂອງເຂົາເຈົ້າ. ການປະຕິບັດແຜນດຳເນີນງານຂອງໂລກນີ້ຄວນຈັດໃຫ້ມີຂຶ້ນໂດຍຖືເປັນສ່ວນໜຶ່ງຂອງລະບົບໂລກ ເພື່ອອານຸລັກເພື່ອນຳໃຊ້ຊັບພະຍາກອນພັນທຸກຳພືດ ເພື່ອອາຫານ ແລະ ການກະສິກຳ ແລະຈະສອດຄ່ອງກົມກຽວກັບສົນທິສັນຍາ ກ່ຽວກັບຊີວະນາໆພັນ.

3.ເພື່ອຮັບປະກັນໃຫ້ມີການເຂົ້າຮ່ວມ ແລະສະໜັບສະໜູນຢ່າງກ້ວາງຂວາງທີ່ສຸດ ເພື່ອປະຕິບັດແຜນດຳເນີນງານໂລກ, ສົມຄວນລາຍງານຜົນໄດ້ຮັບຈາກກອງປະຊຸມ ລົບຊີກ ໃຫ້ອົງການສຳຄັນຕ່າງໆໄດ້ຮູ້ນຳ, ເຊັ່ນ: ອົງການສາກົນ, ຂົງເຂດ ແລະແຫ່ງຊາດ ພ້ອມທັງກອງປະຊຸມຕ່າງໆ ທີ່ເວົ້າເຖິງອາຫານ ແລະວຽກງານກະສິກຳ, ບັນຫາຊີວະນາໆພັນລວມໃນນັ້ນກໍເຜີຍແຜ່ໃຫ້ກອງປະຊຸມເຊັ່ນ: ກອງປະຊຸມ FAO, ກອງປະຊຸມພາຄີສົນທິສັນຍາດ້ານຊີວະນາໆພັນ, ກຳມາທິການກ່ຽວກັບການພັດທະນາແບບຍືນຍົງຂອງສະຫະປະຊາຊາດ, ແລະ ບັນດາຄະນະ ບໍລິຫານຄຸ້ມຄອງ ຂອງແຜນງານສິ່ງແວດລ້ອມ ຂອງສະຫະປະຊາຊາດ, ອົງກອນອຳນວຍຄວາມສະດວກສຳລັບສິ່ງແວດລ້ອມໂລກ, ອົງການ UNDP, ກອງທຶນສາກົນ ເພື່ອພັດທະນາກະສິກຳ, ທະນາຄານໂລກ, ກອງທຶນລວມເພື່ອສິນຄ້າໃຊ້ສອຍ, ທະນາຄານພັດທະນາຂົງເຂດ ແລະກຸ່ມປຶກສາຫາລືກ່ຽວກັບການຄົ້ນຄ້ວາ ກະສິກຳສາກົນ, ເຊື້ອເຊີນສະມາຊິກທີ່ມາຈາກການຈັດຕັ້ງເລົ່ານີ້ໃຫ້ສົ່ງເສີມ ແລະເຂົ້າຮ່ວມ ເທົ່າທີ່ເຫັນສົມຄວນ ໃນການປະຕິບັດ ແຜນດຳເນີນງານ ຂອງໂລກ. ພ້ອມດຽວກັນນັ້ນ ກໍຄວນລາຍງານໃຫ້ແກ່ກອງປະຊຸມ ສຸດຍອດ ອາຫານໂລກ ຢູ່ທີ່ ກຸງໂຣມ ເດືອນພະຈິກ 1996.

---

[1] ຖອດມາຈາກລາຍງານກອງປະຊຸມວິຊາການສາກົນກ່ຽວກັບປະຊາກອນພັນທຸກຳພືດ, ວັກ 18-28. ພ້ອມດຽວກັນນັ້ນກອງປະຊຸມຍັງໄດ້ຮັບຮູ້ການຄິດໄລ່ຂອງຫ້ອງການເລຂາ FAO ກ່ຽວກັບຄ່າໃຊ້ຈ່າຍ ເພື່ອປະຕິບັດແຜນດຳເນີນງານໂລກ ແລະການກຳນົດແຫຼ່ງການເງິນທີ່ມີຢູ່ປັດຈຸບັນ ແລະອາດມີໄດ້ໃນອານາຄົດ. ເມື່ອເຫັນວ່າມີການປ່ຽນແປງຕ່າງໆ ດັ່ງທີ່ໄດ້ຍົກຂຶ້ນມາໃນກອງປະຊຸມໃນຫຼາຍໆກ່ຽວກັບກິດຈະກຳບູລິມະສິດຕ່າງໆ, ກອງປະຊຸມຊຶ່ງຮຽກຮ້ອງໃຫ້ຄະນະເລຂາຈົ່ງໄດ້ທຳການຄິດໄລ່ຄາດຄະເນຄ່າໃຊ້ຈ່າຍ, (ຖອດມາຈາກວັກ 17 ຂອງບົດລາຍງານ).

4.ຄວາມຄືບໜ້າທົ່ວໄປໃນການປະຕິບັດ ແຜນດຳເນີນງານໂລກ ກໍຄືກິດຈະກຳ ທີ່ຕາມມາ ທີ່ກ່ຽວຂ້ອງຈະຖືກຕິດຕາມ ແລະ ຊີ້ນຳໂດຍລັດຖະບານແຫ່ງຊາດ ແລະ ສະມາຊິກຂອງ ອົງການ FAO ໂດຍຜ່ານ ກຳມາທິການກ່ຽວກັບ ຊັບພະຍາກອນພັນທຸກຳ ສຳລັບອາຫານ ແລະ ກະເສດເພື່ອະຕິບັດໜ້າທີ່ດັ່ງກ່າວນີ້, ກຳມາທິການດັ່ງກ່າວສາມາດພັດທະນາແຜນງານເປັນຂັ້ນຕອນ ພ້ອມທັງ ສະເລ່ຍຄ່າໃຊ້ຈ່າຍອັນເໝາະສົມ ແລະຂັ້ນຕອນເພື່ອທົບທວນແຜນດຳເນີນງານໂລກ. ການທົບທວນດັ່ງກ່າວຄວນພິຈາລະນາຄວາມຄືບໜ້າລະດັບຊາດ, ຂົງເຂດ, ແລະສາກົນກ່ຽວກັບການປະຕິບັດ, ການຫັນເປັນລະອຽດ ແລະດັດປັບເທົ່າທີ່ເຫັນສົມຄວນແຜນງານດັ່ງກ່າວ, ທັງນີ້ແມ່ນເພື່ອສ້າງແຜນ “ຕໍ່ເນື່ອງ” ດັ່ງທີ່ວາລະ ອາເຈັນດາ 21 ໄດ້ສະເໜີ. ການທົບທວນຄັ້ງທຳອິດຄວນຈັດໃຫ້ມີພາຍໃນ 4 ປີ.

5.ເພື່ອຈຸດປະສົງດັ່ງກ່າວນີ້ ກຳມາທິການກ່ຽວກັບຊັບພະຍາກອນພັນທຸກຳ ເພື່ອອາຫານ ແລະກະເສດຄວນກຳນົດຮູບແບບວິທີຮັບເອົາລາຍງານຄວາມຄືບໜ້າມາຈາກທຸກພາກສ່ວນກ່ຽວຂ້ອງພ້ອມທັງກຳນົດ ເງື່ອນໄຂປັດໃຈ ແລະໂຕຊີ້ວັດ ເພື່ອຕີລາຄາຄວາມຄືບໜ້າ. ໂດຍອີງຕາມຂໍ້ຄົ້ນພົບກຳມາທິການ ຈະສະຫຼຸບຄວາມເຫັນ ເພື່ອລາຍງານໃຫ້ລັດຖະບານ ແລະອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງໄດ້ຊາບ ເພື່ອແກ້ໄຂ ຄວາມບໍ່ດຸ່ນດ່ຽງ ຫຼື ການຂາດການປະສານງານ ແລະເພື່ອພິຈາລະນາກ່ຽວກັບຂໍ້ລິເລີ່ມ ຫຼືກິດຈະກຳໃໝ່ຕ່າງໆ. ຂໍ້ສະຫຼຸບຕ່າງໆຂອງກຳມາທິການທີ່ມີຄວາມໝາຍສຳຄັນໃນແງ່ການເມືອງຄວນຈະນຳເອົາໄປລາຍງານໃຫ້ກອງປະຊຸມສະພາ FAO, ແລະກອງປະຊຸມ FAO ດັ່ງທີ່ໄດ້ປະຕິບັດມາໃນເມື່ອກ່ອນກັບຄະນະ ເຊັ່ນ ກຳມາທິການຊັບພະຍາກອນພັນທຸກຳພືດ, ແລະກອງປະຊຸມພາຄີສົນທິສັນຍາຊີວະນາໆພັນ ແລະ/ຫຼື ກຳມາທິການກ່ຽວກັບການພັດທະນາຍືນຍົງ ເພື່ອແນໃສ່ໃຫ້ມີປະຕິບັດການ, ການສະໜັບສະໜູນ ຫຼືເພື່ອໃຫ້ຂໍ້ມູນຂ່າວສານດັ່ງທີ່ຕາມຄວາມເໝາະສົມ.

6.ກອງປະຊຸມໄດ້ຮັບຮູ້ເຖິງຄວາມຕ້ອງການທາງດ້ານການເງິນ ເພື່ອປະຕິບັດແຜນດຳເນີນງານໂລກ ແລະຮັບຮູ້ວ່າເພື່ອປະຕິບັດແຜນການນັ້ນໄດ້ຢ່າງເຕັມປ່ຽມ ມັນຈະຮຽກຮ້ອງໃຫ້ເພີ່ມທະວີລະດັບກິດຈະກຳຂຶ້ນຫຼາຍສົມຄວນ ເມື່ອທຽບໃສ່ລະດັບປັດຈຸບັນ. ກອງປະຊຸມໄດ້ຮັບຮູ້ວ່າແຜນດຳເນີນງານໂລກ ຈະໄດ້ຖືກນຳໄປປະຕິບັດຢ່າງຕໍ່ເນື່ອງ ແລະ ຮັບຮູ້ວ່າຈະຕ້ອງມີແຫຼ່ງທຶນ ຢ່າງພຽງພໍ ເພື່ອປະຕິບັດໃຫ້ສົມສ່ວນ ກັບຂອບເຂດວຽກງານ ຂອງແຜນດຳເນີນງານໂລກ ຊຶ່ງກໍໝາຍຄວາມວ່າຈະຕ້ອງ ລະດົມແຫຼ່ງທຶນ. ແຕ່ລະປະເທດຈະຕ້ອງ ຕົກລົງໃຈເອົາເອງກ່ຽວກັບບູລິມາສິດ ທັງຫຼາຍຂອງຕົນ ໂດຍອີງຕາມສິ່ງທີ່ໄດ້ຕົກລົງກັນໃນແຜນດຳເນີນງານໂລກ ແລະພາຍໃຕ້ກອບ ຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາ ດ້ານອາຫານ ແລະກະເສດ.

7.ກອງປະຊຸມ ໄດ້ຮັບຮູ້ວ່າ ການ ປະກອບທຶນຈຳນວນຫຼວງຫຼາຍ ແຕ່ບໍ່ແນ່ນອນສຳລັບວຽກງານ ຊັບພະຍາກອນພັນທຸກຳພືດ ເພື່ອອາຫານແລະການກະສິກຳ ປັດຈຸບັນແມ່ນໄດ້ມາຈາກລັດຖະບານແຫ່ງຊາດ ແລະແຫຼ່ງທຶນພາຍໃນອື່ນໆ ກໍຄືມາຈາກອົງການຫຼາຍຝ່າຍ ສອງຝ່າຍ ແລະແຫຼ່ງທຶນພາຍໃນຂົງເຂດ.

8.ໂດຍຮັບຮູ້ເຖິງຄວາມສຳຄັນຂອງການປະກອບສ່ວນພາຍໃນປະເທດ ຊຶ່ງມາຈາກພາກສ່ວນລັດ ແລະເອກະຊົນ ກອງປະຊຸມຈຶ່ງໄດ້ສະເໜີຢ່າງໜັກແໜ້ນວ່າ ແຕ່ລະປະເທດຕ້ອງໃຊ້ຄວາມພະຍາຍາມທີ່ສຸດ ໃນການສະໜອງການສະໜັບສະໜູນດ້ານການເງິນ ກໍຄືຂໍ້ລິເລີ່ມຕ່າງໆ ຊຶ່ງນອນຢູ່ໃຕ້ກິດຈະກຳແຫ່ງຊາດ ຊຶ່ງຢູ່ໃນແຜນຈະຕ້ອງບັນລຸ ຈຸດປະສົງ ຕ່າງໆ ຂອງແຜນດຳເນີນງານໂລກ ເທົ່າທີ່ມີຄວາມສາມາດ ຊຶ່ງທັງໝົດນັ້ນ ຈະສອດຄ່ອງກັບ ແຜນການ, ບູລິມະສິດ ແລະແຜນງານແຫ່ງຊາດ.

9.ກອງປະຊຸມໄດ້ເນັ້ນໜັກ ຄືນວ່າ ການຮ່ວມມືສາກົນ ເພື່ອວຽກງານອານຸລັກ ແລະນຳໃຊ້ຊັບພະຍາກອນພັນທຸກຳພືດເພື່ອ ອາຫານ ແລະການກະສິດຳ ແບບຍືນຍົງນັ້ນຄວນຖືກເສີມຂະຫຍາຍໃຫ້ແຂງແຮງ ສະເພາະຢ່າງຍິ່ງເພື່ອຈະໄດ້ສະໜັບສະໜູນ ແລະສົມທົບແບບກົມກຽວ. ກັບຄວາມພະຍາຍາມຕ່າງໆ ຂອງບັນດາປະເທດກຳລັງພັດທະນາ ແລະ ຊຸມປະເທດທີ່ມີ ເສດຖະກິດໃນໄລຍະຂ້າມຜ່ານ.

10.ກອງປະຊຸມໄດ້ຢ້ຳຄືນກ່ຽວກັບ ເງິນທຶນໃໝ່ເພີ້ມເຕີມ ທີ່ໄດ້ກຳນົດໄວ້ໃນ ວາລະ ອາເຈັນດາ 21 ໂດຍກອງປະຊຸມ ຂອງສະຫະປະຊາຊາດດ້ານສິ່ງແວດລ້ອມ ແລະການພັດທະນາ ແລະໂດຍພາຄີສົນທິສັນຍາດ້ານຊີວະນາໆພັນ. ກອງທຶນດັ່ງກ່າວນັ້ນ ຄວນຈະມາຈາກບັນດາປະເທດພັດທະນາແລ້ວ ແລະ/ຫຼືຈາກແຫຼ່ງອື່ນໆ, ແລະຖ້າເປັນໄປໄດ້ຄວນສະແຫວງຫາການສະໜັບສະໜູນຈາກແຫຼ່ງທຶນ ແລະກົນໄກອື່ນໆ ແລະຊ່ວຍປະເທດຕ່າງໆ ໃນການປະຕິບັດແຜນດຳເນີນງານໂລກ. ຕ້ອງພະຍາຍາມສຸດຂີດເພື່ອຊອກຫາແຫຼ່ງທຶນໃໝ່ເພີ້ມເຕີມ ແລະ ຂະບວນການສ້າງສັນ ທີ່ນອນຢູ່ໃຕ້ ການປະຕິບັດແຜນດຳເນີນງານໂລກ.

11.ການວິເຄາະຂໍ້ມູນຂ່າວສານ ກ່ຽວກັບກິດຈະກຳ ຊັບພະຍາກອນ ພັນທຸກຳເພື່ອອາຫານ ແລະການກະສິກຳ ໃນຂອບເຂດທົ່ວໂລກ ແລະ ຜ່ານແຫຼ່ງໃຫ້ທຶນນັ້ນ ຄວນຈະດຳເນີນໄປໃຕ້ການອຸບປະຖຳ ຂອງກຳມາທິການ ກ່ຽວກັບຊັບພະຍາກອນພັນທຸກຳ ເພື່ອອາຫານ ແລະ ການກະເສດ. ວຽກງານນີ້ຄວນຊ່ວຍໃຫ້ມີການນຳໃຊ້ທຶນ ຢ່າງມີປະສິດຕິພາບ ກວ່າເກົ່າ ແລະຊ່ວຍອົງການຈັດຕັ້ງແຫ່ງຊາດ. ຫຼາຍຝ່າຍ, ຂົງເຂດ ແລະ ສອງຝ່າຍໃຫ້ສາມາດພັດທະນາ ແຜນງານທີ່ມີປະສິດທິຜົນ ມັນຄວນເປັນຂະບວນການຕໍ່ເນື່ອງ ເພື່ອການຕິດຕາມ ແລະບໍ່ຄວນຖືວ່າມັນເປັນເງື່ອນໄຂທີ່ຕ້ອງມີບ່ອນການສົມທົບທຶນ ບັນດາສະຖາບັນຫຼາຍຝ່າຍ ແລະສອງຝ່າຍຕົ້ນຕໍທີ່ໃຫ້ທຶນ ແລະການພັດທະ

ນາຄວນຖືກເຊື້ອເຊີນໃຫ້ສຶກສາເບິ່ງ ແບບວິທີການ ຕ່າງໆ ເພື່ອຈະໄດ້ໃຫ້ການສະໜັບສະໜູນ ແກ່ການ ປະຕິບັດແຜນດຳເນີນງານ ຂອງໂລກສະບັບນີ້. ໃນຂະບວນການດັ່ງກ່າວນີ້ ຄວນຮັກສາ ການຮ່ວມມືຢ່າງໃກ້ຊິດ ກັບວຽກງານສົນທິສັນຍາກ່ຽວກັບຊີວະນາພັນໆ.